ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ບົດສະຫຼຸບການຈັດຕັ້ງປະຕິບັດ ແຜນພັດທະນາ ການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ແລະ ແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021

ສິງຫາ 2020

# ສາລະບານ


ສາລະບານ ........ i

ຄຳນຳ ........ iv

ຄຳຂອບໃຈ ........ v

ພາກທີ I ........ 1

1. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2019 – 2020 ........ 1
2. ແຜນງົບປະມານຂອງຂະແໜງການສຶກສາ ແລະ ກິລາ ........ 9
3. ບັນຫາ ແລະ ສິ່ງທ້າທາຍ ........ 10
4. ແຜນວຽກບູລິມະສິດ ສົກຮຽນ 2020-2021 ໃນຂົງເຂດຕ່າງໆ ........ 10

ພາກທີ II ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2020-2021 ຂອງ 10 ຂະແໜງການຍ່ອຍ ........ 13

I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ ........ 14

1.1. ຜົນສຳເລັດ ........ 14

1.2. ບັນຫາ ແລະ ສິ່ງທ້າທາຍ ........ 17

1.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021 ........ 17

II. ຂະແໜງການຍ່ອຍປະຖົມສຶກສາ ........ 19

2.1. ຜົນສຳເລັດ ........ 19

2.2. ບັນຫາ ແລະ ສິ່ງທ້າທາຍ ........ 24

2.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021 ........ 24

III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ ........ 27

3.1. ຜົນສຳເລັດ ........ 27

3.2. ບັນຫາ ແລະ ສິ່ງທ້າທາຍ ........ 29

3.3. ແຜນວຽກບູລິມະສິດ ສົກຮຽນ 2020-2021 ........ 31

IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ ........ 33

4.1. ຜົນສຳເລັດ ........ 33

4.2. ບັນຫາ ແລະ ສິ່ງທ້າທາຍ ........ 35

4.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ........ 35

V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ ........ 37

5.1. ຜົນສຳເລັດ ........ 37

5.2. ບັນຫາ ແລະ ສິ່ງທ້າທາຍ ..... 39
5.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ..... 39
VI. ຂະແໜງການຍ່ອຍການສຶກສາຄູ ..... 42
6.1. ຜົນສຳເລັດ ..... 42
6.2. ບັນຫາ ແລະ ສິ່ງທ້າທາຍ ..... 43
6.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ..... 44
VII. ຂະແໜງການຍ່ອຍ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ..... 46
7.1. ຜົນສຳເລັດ ..... 46
7.2. ບັນຫາ ແລະ ສິ່ງທ້າທາຍ ..... 47
7.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ..... 47
VIII. ຂະແໜງການຍ່ອຍການສຶກສາຊັ້ນສູງ ..... 49
8.1. ຜົນສຳເລັດ ..... 49
8.2. ບັນຫາ ແລະ ສິ່ງທ້າທາຍ ..... 50
8.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ..... 50
IX. ຂະແໜງການຍ່ອຍ ກິລາ-ກາຍຍະກຳ ..... 53
9.1. ກິລາມວນຊົນ ..... 53
9.2. ກິລາລະດັບສູງ ..... 55
9.3. ກິລາໃນໂຮງຮຽນ ..... 58
9.4. ວຽກງານ ກິລາໂອລິມປິກ ..... 59
X. ຂະແໜງການຍ່ອຍ ການບໍລິຫານ ແລະ ຄຸ້ມຄອງການສຶກສາ ..... 61
10.1. ວຽກງານຈັດຕັ້ງ ແລະ ພະນັກງານ ..... 61
10.2. ວຽກງານການພັດທະນາການບໍລິຫານການສຶກສາ ..... 62
10.3. ວຽກງານສະຖິຕິ ແລະ ແຜນການ ..... 64
10.4. ວຽກງານການເງິນ ..... 65
10.5. ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ..... 67
10.6. ວຽກງານພົວພັນຕ່າງປະເທດ ..... 69
10.7. ວຽກງານພັດທະນາຊຸມຊົນເຂດອາຊີຕາເວັນອອກສ່ຽງໃຕ້ ..... 71
10.8. ວຽກງານຫ້ອງການເລຂາຄະນະກຳມາທິການ ແຫ່ງຊາດລາວເພື່ອອຸຍແນັດສະໂກ ..... 72
10.9. ວຽກງານ ໄອຊີທີ ..... 74
10.10. ວຽກງານສາມສ້າງ ..... 76

XI. ການສຶກສາຮຽນຮ່ວມ ..... 78
11.1. ຜົນສຳເລັດ ..... 78
11.2. ບັນຫາ ແລະ ສິ່ງທ້າທາຍ ..... 78
11.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021 ..... 79
ພາກທີ III ການເງິນຂອງຂະແໜງການສຶກສາ ແລະ ກິລາ ..... 80
I. ສະພາບການເງິນສຳລັບຂະແໜງການສຶກສາ ແລະ ກິລາ ປີ 2020 ..... 80
II. ຄວາມຕ້ອງການດ້ານການເງິນສຳລັບປີ 2021 ..... 81
ພາກທີ IV ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ ..... 82
I. ມາດຕະການໃນການຈັດຕັ້ງປະຕິບັດ ..... 82
II. ການຕິດຕາມ ແລະ ປະເມີນ ..... 82
ມະຕິ ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2019-2020 ..... 83

## ສາລະບານຕາຕະລາງ ແລະ ຮູບພາບ

ຕາຕະລາງທີ 1 : ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກລັດ ..... 7
ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກເອກະຊົນ ..... 7
ຕາຕະລາງທີ 3: ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ ..... 7
ຕາຕະລາງທີ 4: ການຂະຫຍາຍໂອກາດໃນການເຂົ້າຮຽນ ສຳລັບການສຶກສາກ່ອນໄວຮຽນ ..... 15
ຕາຕະລາງທີ 5: ຕົວຊີ້ບອກຊັ້ນປະຖົມສຶກສາ ..... 22
ຕາຕະລາງທີ 6: ຕົວຊີ້ບອກໃນຊັ້ນ ມັດທະຍົມຕອນຕົ້ນ ..... 28
ຕາຕະລາງທີ 7 : ຕົວຊີ້ບອກຊັ້ນມັດທະຍົມສຶກສາຕອນປາຍ ..... 33
ຕາຕະລາງທີ 8: ນັກຮຽນທີ່ເຂົ້າຮຽນໃນແຕ່ລະສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ..... 42
ຮູບພາບທີ 1: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນປະຖົມສຶກສາ ..... 8
ຮູບພາບທີ 2: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນ ມ.ຕົ້ນ ..... 9
ຮູບພາບທີ 3: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນມັດທະຍົມຕອນປາຍ ..... 9
ຮູບພາບທີ 4: ການເພີ່ມຂຶ້ນຂອງເດັກໃນຊັ້ນການສຶກສາກ່ອນໄວຮຽນ ລະຫວ່າງພາກລັດ ແລະ ເອກະຊົນ ..... 14
ຮູບພາບທີ 5: ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕໍ່າກວ່າ 60% ໃນສົກຮຽນ 2019-20 ..... 16
ຮູບພາບທີ 6: ອັດຕາເຂົ້າຮຽນສຸດທິຊັ້ນປະຖົມໃນລະດັບແຂວງ ແລະ ທົ່ວປະເທດ ..... 19
ຮູບພາບທີ 7: ເມືອງທີ່ມີອັດຕາຄ້າງຫ້ອງຂັ້ນ ປ.1 ສູງກວ່າ 14% ..... 20
ຮູບພາບທີ 8: ເມືອງທີ່ມີອັດຕາປະລະ ສູງກວ່າ 6% ທຽບລະຫວ່າງ 2018-19 ແລະ 2019-20 ..... 21
ຮູບພາບທີ 9: ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃນລະດັບແຂວງ ..... 27
ຮູບພາບທີ 10: ອັດຕາປະລະຊັ້ນ ມ.ຕົ້ນ ສົກຮຽນ 2018-19 ແລະ 2019-20 ..... 29
ຮູບພາບທີ 11: ອັດຕາເຂົ້າຮຽນລວມໃນຊັ້ນ ມັດທະຍົມຕອນປາຍ ສົກຮຽນ 2019-2020 ..... 34

# ຄຳນຳ

ການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສົກຮຽນ 2019-2020 ແມ່ນເປັນການຈັດຕັ້ງປະຕິບັດໄລຍະສຸດທ້າຍ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020), ຊຶ່ງເຫັນໄດ້ວ່າມີຜົນສຳເລັດຫຼາຍດ້ານ ບໍ່ວ່າຈະເປັນດ້ານການເຂົ້າເຖິງການສຶກສາແຕ່ ຊັ້ນອະນຸບານ ຈົນຮອດມະຫາວິທະຍາໄລ ແລະ ປະສິດທິພາບພາຍໃນຂອງການສຶກສາ ກໍ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ນອກຈາກນັ້ນ ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ແຕ່ສູນກາງຮອດທ້ອງຖິ່ນກໍ່ໄດ້ຮັບການປັບປຸງດີຂຶ້ນ ໂດຍໄດ້ມີການປັບປຸງກົງຈັກການຈັດຕັ້ງໃຫ້ເໝາະສົມກັບສະພາບຄວາມເປັນຈິງ, ການຄຸ້ມຄອງແຜນການ, ງົບປະມານ, ການຄຸ້ມຄອງຂໍ້ມູນຂ່າວສານ ແລະ ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ ກໍ່ໄດ້ຮັບການປັບປຸງໃຫ້ເປັນລະບົບດີກ່ອນເກົ່າ. ວຽກງານກິລາ-ກາຍຍະກຳ ບໍ່ວ່າຈະເປັນກິລາກາຍຍະກຳມວນຊົນ, ກິລາໃນໂຮງຮຽນ ກໍ່ຄືກິລາ-ກາຍຍະກຳອາຊີບ ກໍ່ໄດ້ຮັບການຮ່ວມມືຈາກສັງຄົມ ແລະ ຊຸມຊົນຫຼາຍຂຶ້ນ ອັນເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ.

ເຖິງຢ່າງໃດກໍ່ຕາມ, ຄຽງຄູ່ກັບດ້ານຕັ້ງໜ້າທີ່ກ່າວມານັ້ນ ກໍ່ຍັງມີສິ່ງທ້າທາຍຫຼາຍຢ່າງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນສະເພາະໜ້າ ແລະ ຍາວນານ ໂດຍສະເພາະຜົນການຮຽນຂອງນັກຮຽນຊັ້ນປະຖົມສຶກສາຕໍ່າ, ການປະລະການຮຽນ ຂອງນັກຮຽນໃນຊັ້ນມັດທະຍົມສຶກສາ, ບັນຫາຄວາມແຕກໂຕນກັນໃນການພັດທະນາການສຶກສາຢູ່ໃນແຕ່ລະທ້ອງຖິ່ນ, ປະສິດທິພາບໃນການນຳໃຊ້ຊັບພະຍາກອນທີ່ມີຈຳກັດ ແລະ ອື່ນໆ.

ເພື່ອແກ້ໄຂບັນຫາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍທີ່ເປັນອຸປະສັກຕໍ່ການພັດທະນາການສຶກສາໃນໄລຍະຜ່ານມາ, ກະຊວງສຶກສາທິການ ແລະ ກິລາ ໄດ້ພັດທະນາ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ທີ່ສອດຄ່ອງກັບບູລິມະສິດໃນການພັດທະນເສດຖະກິດ-ສັງຄົມແຫ່ງຊາດ, ໂດຍໄດ້ກຳນົດບັນດາບູລິມະສິດທີ່ຈະຕ້ອງໄດ້ສຸມໃສ່ແກ້ໄຂໃນໄລຍະ 5 ປີ ຕໍ່ໜ້າ ເປັນຕົ້ນແມ່ນ ການປັບປຸງຄຸນນະພາບການຮຽນການສອນ, ການປັບປຸງປະສິດທິພາບໃນການນຳໃຊ້ຊັບພະຍາກອນທີ່ມີ ແລະ ການສ້າງຂີດຄວາມສາມາດ ແລະ ຄວາມເປັນເຈົ້າການຂອງຜູ້ບໍລິຫານການສຶກສາທຸກຂັ້ນ.

ເພື່ອເປັນການຜັນຂະຫຍາຍບູລິມະສິດດັ່ງກ່າວ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021 ຈຶ່ງໄດ້ກຳນົດບັນດາຈຸດປະສົງ, ຄາດໝາຍ ແລະ ວຽກຈຸດສຸມ ສຳລັບແຕ່ລະຂະແໜງການຍ່ອຍ. ລວມທັງວຽກຈຸດສຸມທີ່ບັນດາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ສະຖານການສຶກສາຕ່າງໆ ທີ່ຈະຕ້ອງຈັດຕັ້ງປະຕິບັດ.

ດັ່ງນັ້ນ, ໃນນາມການນຳຂອງກະຊວງສຶກສາທິການ ແລະ ກິລາ ຂ້າພະເຈົ້າຈຶ່ງຮຽກຮ້ອງໃຫ້ບັນດາຜູ້ບໍລິຫານການສຶກສາ ແລະ ກິລາ ທຸກລະດັບແຕ່ສູນກາງຮອດທ້ອງຖິ່ນ ລວມທັງຜູ້ອຳນວຍການໂຮງຮຽນ ແລະ ຄູສອນທຸກຂັ້ນ, ທຸກຊັ້ນ, ທຸກສາຍໃນທົ່ວປະເທດ ຈົ່ງນຳເອົາບັນດາຈຸດປະສົງ, ຄາດໝາຍ ແລະ ວຽກງານຈຸດສຸມ ລວມທັງມະຕິຂອງກອງປະຊຸມ ທີ່ກຳນົດໃນເອກະສານແຜນການສະບັບນີ້ ເປັນບ່ອນອີງໃນການຄົ້ນຄວ້າ ແລະ ຜັນຂະຫຍາຍອອກເປັນແຜນກິດຈະກຳລະອຽດ ເພື່ອໄປຈັດຕັ້ງປະຕິບັດໃນຂັ້ນຂອງຕົນໃຫ້ປະກົດຜົນເປັນຈິງຕາມພາລະບົດບາດຂອງໃຜລາວ. ພ້ອມນັ້ນ, ກໍ່ໃຫ້ເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານຄວາມຄືບໜ້າໃຫ້ກະຊວງສຶກສາທິການ ແລະ ກິລາ ຊາບເປັນປົກກະຕິ ໃນແຕ່ລະໄລຍະ.

**ລັດຖະມົນຕີ**

ນ.ແສງເດືອນ ຫຼ້າຈັນທະບູນ

# ຄຳຂອບໃຈ

ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ໃນນາມຄະນະຮັບຜິດຊອບເນື້ອໃນຂອງບົດສະຫຼຸບຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020 ແລະ ຮັບຜິດຊອບສ້າງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021, ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງຍິ່ງຕໍ່ບັນດາກົມ, ສູນ, ສະຖາບັນ, ຫ້ອງການ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ສະຖາບັນການສຶກສາຕ່າງໆ ຕະຫຼອດເຖິງບຸກຄົນທີ່ໄດ້ສະໜອງຂໍ້ມູນ ແລະ ປະກອບຄຳຄິດຄຳເຫັນທີ່ມີຄຸນຄ່າເຂົ້າໃນເນື້ອໃນຂອງເອກະສານສະບັບນີ້.

ພິເສດ, ຂໍສະແດງຄວາມຮູ້ບຸນຄຸນຕໍ່ຄະນະນຳກະຊວງສຶກສາທິການ ແລະ ກິລາ ແລະ ຜູ້ແທນກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທຸກທ່ານ ທີ່ໄດ້ປະກອບຄຳຄິດເຫັນ; ຂໍ້ສະເໜີແນະນຳທີ່ມີຄວາມໝາຍ; ເປັນປະໂຫຍດຕໍ່ເນື້ອໃນບົດສະຫຼຸບ ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສະບັບນີ້.

ເອກະສານທີ່ມີຄວາມໝາຍຄວາມສຳຄັນສະບັບນີ້ ຈະໄດ້ນຳອອກແຈກຢາຍ ແລະ ເຜີຍແຜ່ໄດ້ ກໍ່ຍ້ອນໄດ້ຮັບການສະໜັບສະໜູນທາງດ້ານການເງິນ ໃນການຈັດພິມຈາກສະຫະພາບເອີຣົບ (European Union) ປະຈຳ ສປປ ລາວ. ດັ່ງນັ້ນ, ໃນນາມຕາງໜ້າໃຫ້ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງລົ້ນເຫຼືອ ຕໍ່ສະຫະພາບເອີຣົບ (European Union) ປະຈຳ ສປປ ລາວ ທີ່ໃຫ້ທຶນສະໜັບສະໜູນອັນລໍ້າຄ່າໃນການຈັດພິມເອກະສານສະບັບນີ້.

**ກົມແຜນການ**

# ພາກທີ I
# ຜົນສໍາເລັດຂອງການຈັດຕັ້ງປະຕິບັດແຜນພັດທະນາ ຂະແໜງການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020

## I. ພາກສະເໜີ

ເຖິງວ່າສົກຮຽນ 2019-2020 ເປັນປີສຸດທ້າຍໃນການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020), ແຕ່ກໍ່ຍັງເຫັນໄດ້ວ່າມີບາງນະໂຍບາຍ, ຍຸດທະສາດ ແລະ ວຽກຈຸດສຸມທີ່ກໍານົດຢູ່ໃນແຜນດັ່ງກ່າວ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ອັນເນື່ອງມາຈາກສະພາບທີ່ ສປປ ລາວ ເຮົາກໍາລັງປະເຊີນກັບຂໍ້ຫຍຸ້ງຍາກທາງການເງິນ ຍ້ອນໄດ້ຮັບຜົນກະທົບຈາກໄພພິບັດ ແລະ ການລະບາດຂອງພະຍາດອັກເສບປອດ ໂຄວິດ 19. ເຖິງຢ່າງໃດກໍ່ຕາມ, ລັດຖະບານ ເວົ້າລວມ, ເວົ້າສະເພາະ ກະຊວງສຶກສາທິການ ແລະ ກິລາ ກໍ່ຍັງສືບຕໍ່ສຸມທຸກຊັບພະຍາກອນທີ່ມີ ເຂົ້າໃສ່ການຂະຫຍາຍການສຶກສາກ່ອນໄວຮຽນ, ສົ່ງເສີມການເຂົ້າເຖິງການສຶກສາຂັ້ນພື້ນຖານ ແລະ ເອົາໃຈໃສ່ໃນການປັບປຸງຄຸນນະພາບການສຶກສາ ເພື່ອໃຫ້ເດັກມີຄວາມພ້ອມສືບຕໍ່ຮຽນໃນຊັ້ນທີ່ສູງຂຶ້ນໄປ, ພ້ອມທັງປັບປຸງຄຸນນະພາບຂອງການສຶກສາຫຼັງຂັ້ນພື້ນຖານ, ສົ່ງເສີມການສ້າງສີມືແຮງງານ ແລະ ນັກວິຊາການ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ, ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ແຕ່ສູນກາງຮອດທ້ອງຖິ່ນ ແລະ ສົ່ງເສີມໃຫ້ປະຊາຊົນທຸກເພດທຸກໄວ ຫັນມາໃສ່ໃຈການອອກກໍາລັງກາຍເພື່ອສຸຂະພາບ ແລະ ສົ່ງເສີມໃຫ້ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກໍາໃຫ້ກາຍເປັນນັກກິລາອາຊີບ. ກະຊວງສຶກສາທິການ ແລະ ກິລາ ໄດ້ສືບຕໍ່ກໍານົດ 15 ຄາດໝາຍຫຼັກ ເພື່ອຕິດຕາມເຖິງຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020. ລາຍລະອຽດຂອງຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ວຽກຈຸດສຸມຕ່າງໆ, ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ແລະ ວິທີການແກ້ໄຂບັນຫາຕ່າງໆ ໄດ້ກໍານົດໄວ້ຂ້າງລຸ່ມນີ້:

### 1. ຜົນສໍາເລັດການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ສົກຮຽນ 2019-2020

### 1.1. ຜົນການຈັດຕັ້ງປະຕິບັດ 15 ຄາດໝາຍ

ຜ່ານການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020 ສະແດງໃຫ້ເຫັນໄດ້ ໃນຈໍານວນ 15 ຄາດໝາຍຫຼັກທີ່ກໍານົດໄວ້ໃນແຜນປີຜ່ານມາ ມີ 6 ຄາດໝາຍທີ່ສາມາດບັນລຸໄດ້ຕາມແຜນ, 3 ຄາດໝາຍ ທີ່ມີຄວາມກ້າວໜ້າ ເມື່ອທຽບໃສ່ປີຜ່ານມາ ແລະ 6 ຄາດໝາຍ ທີ່ບໍ່ສາມາດບັນລຸໄດ້ຕາມແຜນ, ດັ່ງລາຍລະອຽດລຸ່ມນີ້:

➢ **ຄາດໝາຍທີ່ບັນລຸ**

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຂຶ້ນ ຈາກ 79,4% ເປັນ 82,7% (ຄາດໝາຍ: 80%);
2) ຈໍານວນເມືອງທີ່ມີອັດຕາເຂົ້າຮຽນ ຂອງເດັກ 5 ປີ ສູງກວ່າ 60% ເພີ່ມຈາກ 135 ເມືອງ ເປັນ 142 ເມືອງ (ຄາດໝາຍ: 140 ເມືອງ);
3) ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ ບັນລຸໄດ້ 99% (ຄາດໝາຍ: 99%);
4) ອັດຕາຄ້າງຫ້ອງ ຂອງນັກຮຽນຂັ້ນ ປ.1 ຫຼຸດລົງຈາກ 8,4% ເປັນ 6,3% (ຄາດໝາຍ: 8%);
5) ອັດຕາຄ້າງຫ້ອງ ຂອງນັກຮຽນຊັ້ນປະຖົມ ຫຼຸດລົງຈາກ 3,8% ເປັນ 3,1% (ຄາດໝາຍ: 3,5%);

6) ສິ່ງເສີມທຸກເພດ, ທຸກໄວ ເຂົ້າຮ່ວມຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເພື່ອກາຍຍະກຳ ເພີ່ມຂຶ້ນຈາກ 26% ເປັນ 30% (ຄາດໝາຍ: 30%).

➢ **ຄາດໝາຍທີ່ມີຄວາມກ້າວໜ້າເມື່ອທຽບໃສ່ປີຜ່ານມາ**

1) ອັດຕາລອດເຫຼືອຮອດ ປ.5 ເພີ່ມຂຶ້ນຈາກ 82,0% ເປັນ 82,1% (ຄາດໝາຍ: 83%);
2) ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນເພີ່ມຂຶ້ນຈາກ 82,8% ເປັນ 83,3% (ຄາດໝາຍ: 84%);
3) ນັກຮຽນຈົບຊັ້ນມັດທະຍົມຕອນຕົ້ນເຂົ້າຮຽນຕໍ່ສາຍອາຊີວະສຶກສາເພີ່ມຂຶ້ນຈາກ 3,3% ເປັນ 3,8% (ຄາດໝາຍ: 5%).

➢ **ຄາດໝາຍທີ່ບໍ່ປ່ຽນແປງ ແລະ ຖົດຖອຍ**

1) ອັດຕາປະລະການຮຽນຂອງນັກຮຽນ ຂັ້ນ ປ.1 ເພີ່ມຂຶ້ນຈາກ 6,3% ເປັນ 6,4% (ຄາດໝາຍ: 6%);
2) ອັດຕາປະລະຂອງນັກຮຽນຊັ້ນປະຖົມ ຄົງທີ່ຢູ່ທີ່ 4,3 % (ຄາດໝາຍ: 4%);
3) ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ ຄົງທີ່ຢູ່ທີ່ 54,8% (ຄາດໝາຍ: 56%);
4) ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມ ຕໍ່າກວ່າ 6% ຫຼຸດລົງຈາກ 118 ເມືອງ ເປັນ 112 ເມືອງ (ຄາດໝາຍ: 123 ເມືອງ);
5) ອັດຕາປະລະນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຈາກ 9,5% ເປັນ 10,3% (ຄາດໝາຍ: 9%);
6) ສົ່ງເສີມນັກຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ສືບຕໍ່ຮຽນທັງພາຍໃນ ແລະ ຕ່າງປະເທດ 56,6%[1].

## 1.2. ສັງລວມຜົນສຳເລັດການຈັດຕັ້ງປະຕິບັດວຽກງານຂອງແຕ່ລະຂະແໜງການຍ່ອຍໂດຍຫຍໍ້.

### 1.2.1. ຂະແໜງການສຶກສາກ່ອນໄວຮຽນ:

ກະຊວງສຶກສາທິການ ແລະ ກິລາ ຍັງສືບຕໍ່ຂະຫຍາຍຕາໜ່າງການສຶກສາກ່ອນໄວຮຽນ ເປັນບູລິມະສິດໃຫ້ແກ່ເດັກນ້ອຍ ໃນການເສີມສ້າງພັດທະນາການ ແລະ ກຽມຄວາມພ້ອມໃຫ້ເດັກ ກ່ອນເຂົ້າຮຽນຊັ້ນປະຖົມສຶກສາ, ເຊິ່ງໃນທຸກປີ ໂຮງຮຽນອະນຸບານຈະເພີ່ມຂຶ້ນ (ທັງພາກລັດ ແລະ ເອກະຊົນ) ເຊິ່ງລັດຖະບານ ໄດ້ເອົາໃຈໃສ່ສົ່ງເສີມເອກະຊົນລົງທຶນຊ່ວຍໃນການພັດທະນາການສຶກສາ. ໃນສົກຮຽນ 2019-2020 ໂຮງຮຽນອະນຸບານມີທັງໝົດ 3.496 ແຫ່ງ, ເພີ່ມຂຶ້ນເຖິງ 64 ແຫ່ງ ທຽບໃສ່ປີຜ່ານມາ, ໃນນີ້ ໂຮງຮຽນລັດເພີ່ມຂຶ້ນເຖິງ 11 ແຫ່ງ ແລະ ເອກະຊົນເພີ່ມຂຶ້ນເຖິງ 53 ແຫ່ງ. ໃນທົ່ວປະເທດ ມີນັກຮຽນໃນທຸກຮູບແບບການສຶກສາກ່ອນໄວຮຽນທັງໝົດເພີ່ມຂຶ້ນຈາກ 243.960 ຄົນ ເປັນ 249.357 ຄົນ[2] ເຊິ່ງໄດ້ເຮັດໃຫ້ອັດຕາເຂົ້າຮຽນຂອງເດັກ 3-5 ປີ ເພີ່ມຂຶ້ນຈາກ 59% ເປັນ 61,3%, ອັດຕາເຂົ້າຮຽນຂອງເດັກ 5 ປີ ກໍ່ເພີ່ມຈາກ 79,4% ເປັນ 82,7%. ໃນຂະນະດຽວກັນ, ໃນ 40 ເມືອງດ້ອຍໂອກາດທາງການສຶກສາ ກໍ່ເຫັນໄດ້ວ່າມີທ່າອ່ຽງທີ່ດີຂຶ້ນ, ອັດຕາເຂົ້າຮຽນຂອງເດັກ 3-5 ປີ ໄດ້ເພີ່ມຈາກ 43,3% ເປັນ 46,6% ແລະ ອັດຕາເຂົ້າຮຽນຂອງເດັກ 5 ປີ ກໍ່ເພີ່ມຈາກ 66,2% ເປັນ 70,8% ເຊິ່ງໃນຈຳນວນ 40 ເມືອງນັ້ນ, ຍັງເຫຼືອພຽງ 6 ເມືອງທີ່ຍັງມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕໍ່າກວ່າ 60% ຄື: ເມືອງເຊໂປນ, ເມືອງນອງ ແຂວງສະຫວັນນະເຂດ; ເມືອງກະລຶມ ແຂວງເຊກອງ; ເມືອງໂຂງ ແຂວງຈຳປາສັກ, ເມືອງສານໄຊ ແຂວງອັດຕະປື ແລະ ເມືອງຮົ່ມ ແຂວງໄຊສົມບູນ. ສ່ວນທາງດ້ານຄວາມສະເໝີພາບຍິງ-ຊາຍ ການເຂົ້າຮຽນຂອງເດັກ 3-5 ປີ ແລະ ເດັກ 5 ປີ ເຫັນວ່າມີຄວາມສະເໝີພາບ ເຊິ່ງດັດສະນີຢູ່ລະຫວ່າງ 0,99 - 1. ຄຽງຄູ່ກັນນັ້ນ ການສຶກສາກ່ອນໄວ

---

[1] ຈຳນວນນັກຮຽນຈົບປີ 2018 ແມ່ນ 65.655 ຄົນ, ນັກຮຽນເຂົ້າສາຍຕ່າງໆ 31.856 ຄົນ ແລະ ນັກຮຽນຈົບມປາຍ ໄປຮຽນຕ່າງປະເທດ 4.662 ຄົນ (ສັງລວມແຕ່ເດືອນກັນຍາ 2019 ເຖິງ ມິຖຸນາ 2020).

[2] ຕົວເລກທັງສອງສົກຮຽນນີ້ແມ່ນໄດ້ນັບເອົາ ເດັກໃນກຸ່ມຫຼິ້ນເຂົ້ານຳ ສົກຮຽນ 2018-19 ເກນອາຍຸ 3-5 ປີ ມີ 3.576 ຄົນ ແລະ ສົກຮຽນ 2019-20 ມີ 3.508 ຄົນ.

ຮຽນ ໄດ້ເອົາໃຈໃສ່ການສົ່ງເສີມວຽກງານນໍ້າ ແລະ ສຸຂະອະນາໄມ ມາຮອດປີ 2020 ໂຮງຮຽນອະນຸບານຈຳນວນ 1.317 ແຫ່ງ ມີອ່າງລ້າງມື-ຖູແຂ້ວ 954 ແຫ່ງ ສາມາດປະຕິບັດກິດຈະກຳລ້າງມື-ຖູແຂ້ວ ທຸກມື້ (ວັນຈັນ-ວັນສຸກ ແລະ ຖືກປະເມີນຈຳນວນ 228 ແຫ່ງ ມີໂຮງຮຽນຖືກຈັດລະດັບ 3 ດາວ ຈຳນວນ 8 ແຫ່ງ, 2 ດາວ 20 ແຫ່ງ ແລະ 1 ດາວ ຈຳນວນ 46 ແຫ່ງ. ໂຮງຮຽນອະນຸບານ ຈຳນວນ 1.732 ແຫ່ງ ມີວິດຖ່າຍ (ຖືກນຳໃຊ້) ແລະ ໄດ້ສະໜອງນໍ້າໃຊ້ໃຫ້ໂຮງຮຽນອະນຸບານຈຳນວນ 1.968 ແຫ່ງ.

### 1.2.2. ການສຶກສາຊັ້ນປະຖົມ

ຂະແໜງການສຶກສາຊັ້ນປະຖົມ ແມ່ນຂະແໜງການໜຶ່ງທີ່ມີຄວາມສຳຄັນທີ່ສຸດ ໃນການກຽມຄວາມພ້ອມໃຫ້ເດັກ ເພື່ອມີທັກສະພື້ນຖານໃຫ້ສາມາດສືບຕໍ່ຮຽນໃນຊັ້ນທີ່ສູງຂຶ້ນໄປ. ໃນສົກຮຽນ 2019-2020 ສະພາບການພັດທະນາການສຶກສາຊັ້ນປະຖົມເຫັນວ່າມີທ່າອ່ຽງທີ່ດີເມື່ອທຽບໃສ່ຫຼາຍປີຜ່ານມາ, ລັດຖະບານໄດ້ເອົາໃຈໃສ່ຊຸກຍູ້ຕິດຕາມການຮຽນ-ການສອນ, ປັບປຸງຫຼັກສູດ, ພ້ອມທັງຝຶກອົບຮົມຄູໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ ຂັ້ນ ປ.1 ແລະ ປ.2 ລວມທັງໄດ້ສະໜອງປຶ້ມແບບຮຽນ ແລະ ອຸປະກອນຮັບໃຊ້ການສິດສອນ ໃຫ້ແກ່ບັນດາໂຮງຮຽນປະຖົມໃນທົ່ວປະເທດ ໂດຍສະເພາະໃນ 40 ເມືອງທີ່ທຸກຍາກ. ດັ່ງນັ້ນ, ໃນສົກຮຽນ 2019-20, ອັດຕາເຂົ້າຮຽນສຸດທິຄົງທີ່ຢູ່ 99% ແລະ ອັດຕາຄ້າງຫ້ອງປະຖົມມີທ່າອ່ຽງດີຂຶ້ນ ເຊິ່ງຫຼຸດລົງຈາກ 3,8% ເປັນ 3,1%. ສ່ວນດັດຊະນີຄວາມສະເໝີພາບຍິງ- ຊາຍໃນຊັ້ນປະຖົມສຶກສາ ກໍ່ມີຄວາມສະເໝີພາບກັນຢູ່ທີ່ 0,98. ແຕ່ໃນຂະນະດຽວກັນຍັງເຫັນວ່າ ບາງຄາດໝາຍມີທ່າອ່ຽງຖົດຖອຍ, ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມແມ່ນ 4,3% ເຫັນວ່າເທົ່າເດີມເມື່ອທຽບໃສ່ປີຜ່ານມາ. ເຖິງແມ່ນວ່າອັດຕາປະລະໃນທົ່ວປະເທດຈະຄົງທີ່ ທຽບໃສ່ປີຜ່ານມາ, ແຕ່ເມື່ອເບິ່ງລົງຮອດຂັ້ນເມືອງ ເຫັນວ່າມີທ່າອ່ຽງຖົດຖອຍ ສະແດງໃຫ້ເຫັນໄດ້ ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມສຶກສາຕໍ່າກວ່າ 6% ຫຼຸດຈາກ 118 ເມືອງ ເປັນ 112 ເມືອງ ເຊິ່ງຄາດໝາຍໄດ້ວາງໄວ້ 123 ເມືອງ.

### 1.2.3. ການສຶກສາຊັ້ນມັດທະຍົມ (ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ)

ສົກຮຽນ 2019-2020 ເຖິງວ່າໄດ້ມີການຂະຫຍາຍໂຮງຮຽນມັດທະຍົມອອກຕື່ມຈຳນວນ 24 ແຫ່ງ ໃນທົ່ວປະເທດ ອັນເຮັດໃຫ້ມີຈຳນວນໂຮງຮຽນທັງໝົດ 1.816 ແຫ່ງ ແຕ່ຈຳນວນນັກຮຽນທັງຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ພັດຫຼຸດລົງເຖິງ 25.126 ຄົນ ຖ້າທຽບໃສ່ປີຜ່ານມາ. ແຕ່ເນື່ອງຈາກ ຈຳນວນປະຊາກອນໃນເກນອາຍຸ 11-14 ປີ ແມ່ນຫຼຸດຈາກປີທີ່ຜ່ານມາ ຈຶ່ງເຮັດໃຫ້ອັດຕາເຂົ້າຮຽນລວມຊັ້ນມັດທະຍົມສຶກສາຕອນຕົ້ນເພີ່ມຂຶ້ນຈາກ 82,8% ເປັນ 83,3%. ດັດຊະນີຄວາມສະເໝີພາບລະຫວ່າງຍິງ-ຊາຍໃນຊັ້ນມັດທະຍົມຕອນຕົ້ນ ຢູ່ທີ່ 0,97.

ຄຽງຄູ່ກັບການເຂົ້າຮຽນທີ່ມີທ່າອ່ຽງດີຂຶ້ນນັ້ນ ເຫັນວ່າປະສິດທິພາບພາຍໃນມີທ່າອ່ຽງທົດຖອຍ ເຫັນໄດ້ຈາກອັດຕາປະລະຊັ້ນມັດທະຍົມຕອນຕົ້ນ ທີ່ເພີ່ມຂຶ້ນຈາກ 9,5% ເປັນ 10,3% ທຽບໃສ່ປີຜ່ານມາ. ໂດຍສະເພາະເມື່ອທຽບໃນຂັ້ນເມືອງ ມີເຖິງ 116 ເມືອງ ທີ່ມີອັດຕາປະລະຊັ້ນມັດທະຍົມຕອນຕົ້ນຍັງສູງກວ່າຄາດໝາຍທີ່ວາງໄວ້ 7,5% (ຄາດໝາຍ 2020), ສູງກວ່າໝູ່ແມ່ນເມືອງ ໄຊຈຳພອນ ສູງເຖິງ 24,28% ຖັດລົງມາແມ່ນເມືອງສະໜ້ວຍ 21,92% ແລະ ເມືອງ ເລົ່າງາມ 20,41% ແຂວງ ສາລະວັນ. ສ່ວນອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍຍັງຄົງທີ່ຢູ່ 54,8% ແລະ ດັດຊະນີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນມັດທະຍົມຕອນປາຍ ເຫັນວ່າ ເດັກຊາຍໄດ້ເຂົ້າຫຼາຍກວ່າເດັກຍິງ ເຫັນໄດ້ຈາກດັດຊະນີຄວາມສະເໝີພາບຢູ່ທີ່ 0,9. ໂດຍລວມແລ້ວເຫັນວ່າ ບັນຫາອັດຕາປະລະຊັ້ນມັດທະຍົມສຶກສາແມ່ນສືບຕໍ່ເພີ່ມຂຶ້ນ ແຕ່ການແກ້ໄຂບັນຫາດັ່ງກ່າວ ຍັງບໍ່ທັນປະຕິບັດດີເທົ່າທີ່ຄວນ ແລະ ສາຍເຫດທີ່ແທ້ຈິງຂອງການປະລະການຮຽນຂອງນັກຮຽນ ຍັງບໍ່ໄດ້ຮັບການສຶກສາວິໄຈຢ່າງມີວິທະຍາສາດ ແລະ ເປັນລະບົບເທື່ອ.

### 1.2.4. ການສຶກສານອກໂຮງຮຽນ

ໃນສົກຮຽນ 2019-2020 ການຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ໃນຂອບເຂດທົ່ວປະເທດ ຈຶ່ງເຮັດໃຫ້ຈຳນວນປະຊາກອນກຸ່ມເປົ້າໝາຍໃນເກນ ອາຍຸ 6-14 ປີ ແລະ ອາຍຸ 15-40 ປີ ທີ່ບໍ່ໄດ້ເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ກຸ່ມເປົ້າໝາຍໃນເກນ ອາຍຸ 15-35 ປີ ທີ່ຍັງຮຽນບໍ່ຈົບຊັ້ນມັດທະຍົມ ແມ່ນມີທ່າອຽງຫຼຸດລົງເມື່ອທຽບໃສ່ປີຜ່ານມາ. ມາຮອດປັດຈຸບັນ ສາມາດປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງໄດ້ 147 ເມືອງ ແລະ ປະກາດເປັນແຂວງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງ 10 ແຂວງ ແລະ ນະຄອນຫຼວງວຽງຈັນ. ຄຽງຄູ່ກັບການຂະຫຍາຍໂອກາດການສຶກສານອກໂຮງຮຽນ ຍັງໄດ້ປັບປຸງຄຸນນະພາບໄປພ້ອມກັນ ໂດຍໄດ້ພັດທະນາຫຼັກສູດ, ຕຳລາຮຽນ ແລະ ສະໜອງອຸປະກອນ, ສື່ການຮຽນ-ການສອນ ໃຫ້ສະຖານການສຶກສານອກໂຮງຮຽນທຸກຂັ້ນ; ລວມທັງປັບປຸງວິທີການສິດສອນ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ເພື່ອຮັບປະກັນດ້ານປະສິດທິພາບ ແລະ ສາມາດເຊື່ອມໂຍງເຂົ້າກັບສາຍວິຊາຊີບອາຊີວະສຶກສາໄດ້.

### 1.2.5. ການສຶກສາຄູ

ໃນສົກຮຽນ 2019-2020 ການຮັບນັກຮຽນເຂົ້າຮຽນຄູໃນພາກປົກກະຕິຂອງທຸກຊັ້ນທຸກສາຍ ໃນສະຖາບັນສ້າງຄູ 16 ແຫ່ງ ໄດ້ຫຼຸດຕົວເລກລົງ ແຕ່ການຍົກລະດັບວຸດທິການສຶກສາໃນພາກປົກກະຕິ ແລະ ພາກພັກສົ້ນປີຮຽນແມ່ນເພີ່ມຂຶ້ນ. ການຄັດເລືອກນັກຮຽນເຂົ້າຮຽນຄູ ທັງໃນແຜນ ແລະ ສອບເສັງຄັດເລືອກ ໄດ້ປະຕິບັດຕາມມະຕິກອງປະຊຸມຜູ້ບໍລິຫານສະຖານການສ້າງຄູປະຈຳປີ 2019 ໂດຍໃຫ້ສະຖານການສ້າງຄູທຸກແຫ່ງ ປະຕິບັດແຜນຮັບນັກຮຽນນັກສຶກສາຄູຕາມອັດຕາສ່ວນສອບເສັງ 80%, ຕົວເລກແບ່ງປັນ 20% ເຊິ່ງໃນນັ້ນ 10% ໄດ້ຮັບເບ້ຍລ້ຽງໂດຍແມ່ນແຂວງເປັນຜູ້ຄັດເລືອກ ແລະ ອີກ 10% ແມ່ນວິທະຍາໄລຄູເປັນຜູ້ເລືອກໂດຍອີງຕາມຜົນການສອບເສັງຄັດເລືອກເຂົ້າຮຽນ. ຈາກແຜນຕົວເລກຮັບນັກຮຽນ ແລະ ພະນັກງານເຂົ້າຮຽນຄູ ຈຳນວນ 4.145 ຄົນ, ການຈັດຕັ້ງປະຕິບັດຕົວຈິງແມ່ນ 3.139 ຄົນ, ຍິງ 2.041 ຄົນ (ເຊິ່ງຫຼຸດແຜນ 24,27%). ມີນັກຮຽນຄູທີ່ຮຽນຢູ່ໃນປີສຸດທ້າຍຂອງສົກຮຽນ 2019-2020 ປະມານ 3.100 ຄົນ[3] ເຊິ່ງຄາດວ່າຈະເປັນນັກຮຽນຈົບສຳລັບສົກຮຽນດັ່ງກ່າວ. ນອກຈາກການຂະຫຍາຍໂອກາດແລ້ວ ຍັງໄດ້ປັບປຸງຄຸນນະພາບ ໂດຍການພັດທະນາເນື້ອໃນຄູ່ມືການຍົກລະດັບຄູສຶກສານິເທດຊັ້ນປະຖົມສຶກສາ, ຝຶກອົບຮົມວຽກງານສຶກສານິເທດ (ໂມດຸນ 1) ໃຫ້ແກ່ຄູສຶກສານິເທດຂັ້ນແຂວງ, ວິທະຍາໄລຄູ ແລະ ຂັ້ນເມືອງ.

### 1.2.6. ວຽກງານອາຊີວະສຶກສາ

ໃນສົກຮຽນ 2019-2020 ສະຖານອາຊີວະສຶກສາ ທັງພາກລັດ ແລະ ເອກະຊົນ ທີ່ຂຶ້ນກັບການຄຸ້ມຄອງທາງດ້ານວິຊາການຂອງກົມອາຊີວະສຶກສາ ມີທັງໝົດ 89 ແຫ່ງ, ມີພະນັກງານ-ຄູອາຈານ ທັງໝົດ 4.249 ຄົນ, ຍິງ 1.531 ຄົນ ແລະ ມີນັກຮຽນ-ນັກສຶກສາທັງໝົດ 52.252; ຍິງ 23.194 ຄົນ. ສະຖານອາຊີວະສຶກສາທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ພາກລັດ ມີທັງໝົດ 25 ແຫ່ງ, ມີພະນັກງານ-ຄູອາຈານທັງໝົດ 2.165 ຄົນ, ຍິງ 823 ຄົນ ແລະ ມີນັກຮຽນ-ນັກສຶກສາທັງໝົດ 34.606 ຄົນ; ຍິງ 13.589 ຄົນ. ມີນັກຮຽນທີ່ຮຽນຢູ່ໃນປີສຸດທ້າຍຂອງສົກຮຽນ 2019-2020 ປະມານ 16.000 ຄົນ ເຊິ່ງຄາດວ່າຈະເປັນນັກຮຽນຈົບສຳລັບສົກຮຽນດັ່ງກ່າວ. ມີສະຖານອາຊີວະສຶກສາພາກເອກະຊົນ ທັງໝົດ 67 ແຫ່ງ, ມີພະນັກງານຄູອາຈານທັງໝົດ 2.084 ຄົນ, ຍິງ 708 ຄົນ ແລະ ມີນັກຮຽນ-ນັກສຶກສາທັງໝົດ 17.646 ຄົນ; ຍິງ 9.605 ຄົນ. ພ້ອມນັ້ນ ຍັງໄດ້ເອົາໃຈໃສ່ຂະຫຍາຍພື້ນຖານໂຄງລ່າງ ແລະ ປະກອບອຸປະກອນເຕັກນິກ, ສື່ການຮຽນ-ການສອນໃຫ້ສະຖານອາຊີວະສຶກສາຈຳນວນໜຶ່ງ,

---

[3] ເນື່ອງຈາກຍັງບໍ່ສາມາດເກັບກຳຂໍ້ມູນນັກຮຽນຈົບຕົວຈິງໃນສົກຮຽນ 2019-20 ໄດ້. ດັ່ງນັ້ນ ຈຶ່ງໄດ້ນຳໃຊ້ຕົວເລກຄາດຄະເນ ເຊິ່ງແມ່ນຈຳນວນນັກຮຽນຄູໃນປີສຸດທ້າຍຂອງສົກ 2019-20 ເປັນນັກຮຽນທີ່ຈະຈົບ.

ຍົກລະດັບໃຫ້ພະນັກງານຄູອາຈານທາງດ້ານລະດັບວິຊາສະເພາະລະດັບປະລິນຍາໂທ, ປະລິນຍາຕີ ແລະ ຊັ້ນສູງຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນ 325 ຄົນ, ຍິງ 152 ຄົນ; ໄດ້ຝຶກອົບຮົມວິຊາສະເພາະໃຫ້ຄູອາຈານ ແລະ ພະນັກງານຈຳນວນ 883 ຄົນ, ຍິງ 330 ຄົນ, ຝຶກອົບຮົມດ້ານວິຊາຄູໃຫ້ຄູສອນຈຳນວນ 1.016 ຄົນ, ຍິງ 391 ຄົນ; ໄດ້ພັດທະນາຫຼັກສູດວິຊາຊີບໄດ້ຈຳນວນ 41 ຫຼັກສູດ ແລະ ທົບທວນຫຼັກສູດວິຊາຊີບ 20 ຫຼັກສູດ.

### 1.2.7. ວຽກງານການສຶກສາຊັ້ນສູງ

ໃນສົກຮຽນ 2019-2020 ກະຊວງສຶກສາທິການ ແລະ ກິລາ ຍັງສືບຕໍ່ໃຫ້ທຶນການສຶກສາ ສຳລັບນັກຮຽນເກັ່ງ ແລະ ຜູ້ດ້ອຍໂອກາດ ໃນສັດສ່ວນ 20% ຂອງແຜນຮັບນັກສຶກສາທັງໝົດ ແລະ ອີກ 80% ແມ່ນຜ່ານການສອບເສັງຄັດເລືອກ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ. ໃນສົກຮຽນ 2019-2020 ນັກສຶກສາທີ່ເຂົ້າໃໝ່ໃນການສຶກສາຊັ້ນສູງ ລວມທັງປະລິນຍາເອກ, ປະລິນຍາໂທ ແລະ ປະລິນຍາຕີ ໃນ 5 ມະຫາວິທະຍາໄລ ມີຈຳນວນທັງໝົດ 11.039 ຄົນ[4] ແລະ ຈຳນວນນັກຮຽນທັງໝົດໃນ 5 ມະຫາວິທະຍາໄລ ມີ 39.277 ຄົນ. ພ້ອມນີ້ ການສຶກສາຊັ້ນສູງຍັງໄດ້ມີການພັດທະນາຫຼັກສູດ, ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການໃຫ້ແກ່ສັງຄົມ, ສ້າງຂອບວຸດທິການສຶກສາຊັ້ນສູງແຫ່ງຊາດ ແລະ ບັນຈຸລັດຖະກອນຄູ.

### 1.2.8. ວຽກງານກິລາ - ກາຍຍະກຳ (ລະດັບສູງ, ມວນຊົນ, ກິລາໃນໂຮງຮຽນ ແລະ ວຽກງານໂອລິມປິກ)

ຂະແໜງການຍ່ອຍກິລາ-ກາຍະກຳ ເປັນຂະແໜງການຍ່ອຍໜຶ່ງຂອງກະຊວງສຶກສາທິການ ແລະ ກິລາທີ່ເຮັດໜ້າທີ່ໃນການສົ່ງເສີມການອອກກຳລັງກາຍຂອງທົ່ວປວງຊົນລາວ ລວມທັງເຮັດໜ້າທີ່ສົ່ງເສີມກິລາອາຊີບ. ໃນສົກຮຽນຜ່ານມາ ໄດ້ຈັດຕັ້ງຂະບວນການອອກກຳລັງກາຍໃນວັນສຳຄັນຕ່າງໆ ໂດຍໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ ຈັດການແຂ່ງຂັນກິລາລະດັບນາໆຊາດ, ແຂ່ງຂັນກິລາປະຈຳປີ, ຊີງຂັນຜູ້ນຳ ພັກ-ລັດ ແລະ ສະຫຼອງວັນສຳຄັນຂອງຊາດ, ດັ່ງລາຍລະອຽດລຸ່ມນີ້:

1) ເຂົ້າຮ່ວມການແຂ່ງຂັນກິລາ ທີ່ມີຊາຍແດນຕິດຈອດກັນ (ປະເທດບ້ານໃກ້ເຮືອນຄຽງ)ຄື: ສປ. ຈີນ, ສສ. ຫວຽດນາມ, ປະເທດໄທ ມີຈຳນວນ 13 ແຂວງ/ນະຄອນຫຼວງ;
2) ສົ່ງນັກກິລາຄົນພິການ ເຂົ້າຮ່ວມການແຂ່ງຂັນຄັດເລືອກນັກກິລາຄົນພິການ ມາດຕະຖານລະດັບສາກົນ (Qualification Event IPC) ເພື່ອສະສົມຄະແນນ ໃຫ້ນັກກິລາຄົນພິການຜູ້ທີ່ເກັ່ງ ໄດ້ມີເງື່ອນໄຂເຂົ້າຮ່ວມການແຂ່ງຂັນລະດັບສາກົນ ບັນລຸໄດ້ 8 ປະເພດກິລາ ພ້ອມທັງນັກກິລາຄົນພິການ ໄດ້ເຂົ້າຮ່ວມແຂ່ງຂັນຄັດເລືອກທັງໝົດ 30 ຄັ້ງ ໃນຈຳນວນ 12 ປະເທດ;
3) ປັບປຸງນິຕິກຳລຸ່ມກົດໝາຍ ກິລາ-ກາຍຍະກຳ ໃຫ້ບັນລຸໄດ້ 07 ສະບັບ ແລະ ປັບປຸງ ປຶ້ມຄູ່ມືກິລາ-ກາຍຍະກຳມວນຊົນ ຈຳນວນ 18 ປະເພດ ກິລາ;
4) ສຳເລັດການສ້າງຫຼັກສູດສ້າງຄູຝຶກ ແລະ ກຳມະການຕັດສິນກິລາລະດັບຊາດ ຈຳນວນ 7 ປະເພດກິລາ ຄື: ກິລາມວຍ, ມວຍສາກົນ, ຢູໂດ, ເປຕັງ, ບານເຕະ, ເທຄວັນໂດ ແລະ ກະຕໍ້ ແລະ ສຳເລັດການສ້າງຄູ່ມືຕົ້ນສະບັບສຳລັບຄູຝຶກ ແລະ ກຳມະການຕັດສິນ ຈຳນວນ 14 ສະບັບ;
5) ສຳເລັດການຝຶກອົບຮົມຄູຝຶກ ແລະ ກຳມະການການກິລາລະດັບຊາດໃນ 9 ປະເພດກິລາ ຈຳນວນ 148 ທ່ານ;
6) ຜູ້ບໍລິຫານການກິລາລະດັບສູງຈຳນວນ 289 ຄົນໄດ້ຮັບການຝຶກອົບຮົມ; ຄູຝຶກກິລາ ຈຳນວນ 252 ຄົນ; ກຳມະການຕັດສິນຈຳນວນ 463 ຄົນ; ນັກກິລາພອນສະຫວັນ ຈຳນວນ 161 ຄົນ; ນັກກິລາທີມຊາດຈຳນວນ 957 ຄົນ, ນັກວິຊາການກິລາທີ່ໄດ້ຮັບການຍົກລະດັບ ຈຳນວນ 16 ຄົນ;

[4] ຈຳນວນນັກຮຽນມັດທະຍົມປາຍ ທີ່ເຂົ້າໃໝ່ໃນ 5 ມະຫາວິທະຍາໄລ ຊັ້ນປະລິນຍາຕີ ມີຈຳນວນ 10.087 ຄົນ

7) ສຳເລັດການເຂົ້າຮ່ວມແຂ່ງງານມະຫາກຳກິລາຊີເກມຄັ້ງທີ 30 ທີ່ປະເທດຟີລິບປິນເປັນເຈົ້າພາບ, ມີ 25 ປະເພດກິລາເຂົ້າຮ່ວມ ສາມາດຍາດໄດ້ 1 ຫຼຽນຄຳ, 5 ຫຼຽນເງິນ, 29 ຫຼຽນທອງ ລວມທັງໝົດ 35 ຫຼຽນ ຈັດຢູ່ໃນອັນດັບທີ 10 ໃນ 11 ປະເທດເຂົ້າຮ່ວມ;

8) ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ຕາມການເຊື້ອເຊີນ ໄດ້ເຂົ້າຮ່ວມ ຈຳນວນທັງໝົດ 71 ຄັ້ງ, ມີ 26 ປະເພດກິລາ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 851 ຄົນ, ສາມາດຍາດໄດ້ 18 ຫຼຽນຄຳ, 24 ຫຼຽນເງິນ ແລະ 47 ຫຼຽນທອງ ພິເສດເດັ່ນກວ່າໝູ່ແມ່ນ ເຂົ້າຮ່ວມການແຂ່ງຂັນກິລາຊິງແຊມ ໂລກຄື: ກິລາ ອໍທອງດນາມ ສາມາດຍາດໄດ້ 1 ຫຼຽນຄຳ, 2 ຫຼຽນເງິນ, 16 ຫຼຽນທອງ ຢູ່ປະເທດກຳປູເຈຍ; ກິລາເປຕັງຍາດໄດ້ 3 ຫຼຽນເງິນ ຢູ່ປະເທດກຳປູເຈຍ. ແຂ່ງຂັນກິລາລະດັບອານຸພາກພື້ນຄື: ກິລາບານເຕະຍິງ ລຸ້ນອາຍຸ 19 ປີ ສາມາດຍາດໄດ້ 1 ຫຼຽນຄຳ ໃນລາຍການຊິງຂັນບານເຕະເຈົ້າຊີວິດຢູ່ປະເທດບັງກາລາເທດ, U-15 AFF ສາມາດຍາດໄດ້ 1 ຫຼຽນເງິນ, ກິລາແລ່ນ-ລານ ສາມາດຍາດໄດ້ 1 ຫຼຽນຄຳໃນລາຍການໄທແລນ ໂອເພັນ, ສາມາດຍາດໄດ້ 1 ຫຼຽນເງິນ ແລະ 1 ຫຼຽນທອງ;

9) ສຳເລັດການເຂົ້າຮ່ວມແຂ່ງຂັນກິລານັກຮຽນ ອາຊຽນ ຄັ້ງທີ 11 ທີ່ປະເທດອິນໂດເນເຊຍ, ມີ 5 ປະເພດກິລາ ເຂົ້າຮ່ວມ, ສາມາດຍາດໄດ້ 1 ຫຼຽນເງິນ ແລະ 7 ຫຼຽນທອງ ຈັດຢູ່ອັນດັບທີ 8 ໃນ 10 ປະເທດເຂົ້າຮ່ວມ.

### 1.2.9. ການບໍລິຫານ ແລະ ຄຸ້ມຄອງການສຶກສາ

ວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ແລະ ກິລາ ເປັນປັດໄຈຕັດສິນ ເພື່ອເຮັດໃຫ້ລະບົບການສຶກສາ ໄດ້ຮັບການປັບປຸງດີຂຶ້ນ ບໍ່ວ່າຈະເປັນການຄຸ້ມຄອງການຮຽນ-ການສອນ, ຄຸ້ມຄອງຄູສອນ ແລະ ພະນັກງານ, ຄຸ້ມຄອງການເງິນ ກໍ່ຄືຄຸ້ມຄອງການຈັດຕັ້ງປະຕິບັດແຜນນະໂຍບາຍໃນການພັດທະນາການສຶກສາ ແລະ ກິລາ. ໃນສົກຮຽນຜ່ານມາ ໄດ້ມີຫຼາຍກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາ ແຕ່ສູນກາງຮອດທ້ອງຖິ່ນ ເຊັ່ນ:

1) ສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ ແລະ ປະກາດໃຊ້ ຈຳນວນ 21 ສະບັບ;
2) ໄດ້ສຳເລັດການບັນຈຸບຸກຄະລາກອນໃໝ່ ຕາມຕົວເລກທີ່ລັດຖະບານໄດ້ສະໜອງໃຫ້ ຄື 1.040 ຕົວເລກ ໃນນີ້ ມີບໍລິຫານຈຳນວນ 30 ຕົວເລກ;
3) ໄດ້ສ້າງແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ ຮອດປີ 2025 ໄດ້ຮັບຮອງ ແລະ ປະກາດໃຊ້;
4) ໄດ້ສ້າງຄວາມເຂັ້ມແຂງໃຫ້ຜູ້ອຳນວຍການໂຮງຮຽນ ແລະ ກຸ່ມໂຮງຮຽນ ໂດຍສະເພາະຢູ່ 40 ເມືອງເປົ້າໝາຍສາມສ້າງ ຂອງກະຊວງສຶກສາທິການ ແລະ ກິລາ;
5) ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດສັນງົບປະມານບໍລິຫານໃຫ້ແກ່ບັນດາເມືອງ ເພື່ອໃຫ້ມີຄວາມຍຸດຕິທຳເທົ່າທຽມ ເພື່ອແນໃສ່ຫຼຸດຜ່ອນຄວາມແຕກໂຕນກັນ;
6) ໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານການສຶກສາໃນຫົວຂໍ້ ການສ້າງແຜນພັດທະນາຂະແໜງການສຶກສາ ໃຫ້ແກ່ຄະນະກົມ ແລະ ຫົວໜ້າພະແນກ ຂັ້ນກະຊວງ ແລະ ຮອງພະແນກສຶກສາທິການ ແລະ ກິລາແຂວງ ໃນທົ່ວປະເທດ;
7) ປັບປຸງລະບົບການຄຸ້ມຄອງຂໍ້ມູນຂ່າວສານ ເປັນຕົ້ນແມ່ນຖານຂໍ້ມູນຕິດຕາມການນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA), ຖານຂໍ້ມູນຄຸ້ມຄອງແຜນການ ແລະ ການເງິນ ແລະ ຖານຂໍ້ມູນຄຸ້ມຄອງບຸກຄະລາກອນ;

8) ໄດ້ສ້າງຕັ້ງໂທລະພາບສຶກສາ ແລະ ກິລາ ຊ່ອງ 8 (Lao ESTV) ແລະ ໄດ້ຈັດການຮຽນ-ການສອນຜ່ານດາວທຽມ ແລະ ທາງອອນລາຍ;

## 1.3. ຂໍ້ມູນດ້ານການເຂົ້າຮຽນ ໃນສົກຮຽນ 2018-19 ແລະ 2019-20

### 1.3.1. ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນ

**ຕາຕະລາງທີ 1 : ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກລັດ**

| ລ/ດ | | 2018-2019 | | | | 2019-2020 | | | |
|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| 1 | ລ້ຽງເດັກ | 374 | | | 6.156 | 377 | | | 6.095 |
| 2 | ອານຸບານ | 5.657 | 2.923 | 7.739 | 140.097 | 5.716 | 2.934 | 7.609 | 141.639 |
| 3 | ກຽມປະຖົມ | 2.335 | | 2.496 | 45.008 | 2.316 | | 2.468 | 45.406 |
| 4 | ປະຖົມສຶກສາ | 32.074 | 8.570 | 33.533 | 717.853 | 31.128 | 8.517 | 32.214 | 704.605 |
| 5 | ມັດທະຍົມຕອນຕົ້ນ | 12.312 | 897 | 26.228 | 426.822 | 12.509 | 901 | 24.678 | 412.015 |
| 6 | ມັດທະຍົມຕອນປາຍ | 5.840 | 34 | 12.272 | 211.686 | 5.772 | 34 | 11.387 | 199.821 |
| 7 | ມັດທະຍົມສົມບູນ | | 748 | | | | 762 | | |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

**ຕາຕະລາງທີ 2: ຈຳນວນຫ້ອງຮຽນ, ໂຮງຮຽນ ແລະ ນັກຮຽນພາກເອກະຊົນ**

| ລ/ດ | | 2018-2019 | | | | 2019-2020 | | | |
|---|---|---|---|---|---|---|---|---|---|
| | | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ | ຫ້ອງຮຽນ | ໂຮງຮຽນ | ຄູສອນ | ນັກຮຽນ |
| 1 | ລ້ຽງເດັກ | 593 | | | 9.052 | 670 | | | 10.124 |
| 2 | ອານຸບານ | 1.732 | 509 | 3.818 | 39.875 | 1.880 | 562 | 4.097 | 42.399 |
| 3 | ກຽມປະຖົມ | 11 | | 17 | 196 | 11 | | 15 | 186 |
| 4 | ປະຖົມສຶກສາ | 1.918 | 284 | 2.358 | 52.806 | 2.098 | 305 | 2.529 | 55.961 |
| 5 | ມັດທະຍົມຕອນຕົ້ນ | 591 | 64 | 1.186 | 16.034 | 644 | 66 | 1.245 | 17.135 |
| 6 | ມັດທະຍົມຕອນປາຍ | 197 | | 395 | 5.308 | 222 | | 429 | 5.753 |
| 7 | ມັດທະຍົມສົມບູນ | | 49 | | | | 53 | | |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 1.3.2. ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ

**ຕາຕະລາງທີ 3: ອັດຕາເຂົ້າຮຽນໃນແຕ່ລະຊັ້ນການສຶກສາ**

| | 2018-2019 | | | 2019-2020 | | |
|---|---|---|---|---|---|---|
| | ລວມ | ຍິງ | ຊາຍ | ລວມ | ຍິງ | ຊາຍ |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 3 - 5 ປີ (%) | 59,0 | 59,1 | 58,8 | 61,3 | 61,3 | 61,3 |
| ອັດຕາເຂົ້າຮຽນ ກຸ່ມ ອາຍຸ 5 ປີ (%) | 79,4 | 79,5 | 79,4 | 82,7 | 82,5 | 82,8 |
| ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ (%) | 98,2 | 97,9 | 98,4 | 98,5 | 98,4 | 98,6 |

| | | | | | | |
|---|---|---|---|---|---|---|
| ອັດຕາເຂົ້າຮຽນສຸດທິຊັ້ນປະຖົມສຶກສາ (%) | 99,1 | 98,8 | 99,3 | 98,9 | 98,7 | 99,0 |
| ອັດຕາເຂົ້າຮຽນໃໝ່ລວມຊັ້ນປະຖົມສຶກສາ (%) | 109,2 | 107,8 | 110,4 | 108,8 | 107,7 | 109,8 |
| ອັດຕາເຂົ້າຮຽນລວມຊັ້ນປະຖົມສຶກສາ (%) | 108,2 | 107,0 | 109,4 | 106,5 | 105,4 | 107,5 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນ (%) | 82,8 | 81,2 | 84,3 | 83,3 | 81,9 | 84,6 |
| ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ (%) | 54,8 | 52,0 | 57,5 | 54,8 | 52,0 | 57,5 |
| ອັດຕາເຂົ້າຮຽນລວມຊັ້ນມັດທະຍົມ (%) | 70,9 | 68,8 | 73,0 | 71,3 | 69,3 | 73,2 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 1.3.3. ຂໍ້ມູນກ່ຽວກັບປະສິດທິພາບພາຍໃນ

#### 1.3.3.1. ຊັ້ນປະຖົມສຶກສາ

**ຮູບພາບທີ 1: ອັດຕາເລື່ອນຂັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນປະຖົມສຶກສາ ສົກຮຽນ 2017-18, 2018-19 ແລະ 2019-20**




ຮູບພາບທີ 1 ສະແດງໃຫ້ເຫັນວ່າ ໃນ 3 ປີທີ່ຜ່ານມາ ອັດຕາຄ້າງຫ້ອງໃນຊັ້ນປະຖົມມີທ່າອ່ຽງຫຼຸດລົງ ໃນຂະນະທີ່ ອັດຕາປະລະ ມີທ່າອ່ຽງເພີ່ມຂຶ້ນ. ແຕ່ຖ້າເບິ່ງທັງສອງອັດຕາລວມກັນ ເຫັນວ່ານັກຮຽນທີ່ຄ້າງຫ້ອງ ແລະ ປະລະ ຫຼຸດຈາກ 8,1% ໃນປີ 2018 ມາເປັນ 7,4% ໃນປີ 2020 ເຊິ່ງເຮັດໃຫ້ ອັດຕາເລື່ອນຂັ້ນ-ຈົບຊັ້ນປະຖົມ ເພີ່ມຂຶ້ນເຖິງ 0,7%. ເຊິ່ງການເພີ່ມຂຶ້ນຂອງການເລື່ອນຂັ້ນ ແລະ ຫຼຸດລົງຂອງການຄ້າງຫ້ອງ ໄດ້ສົ່ງຜົນໃຫ້ອັດຕາລອດເຫຼືອໃນຊັ້ນປະຖົມເພີ່ມຂຶ້ນ. ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຕ້ອງໄດ້ສືບຕໍ່ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດບັນດາວຽກງານທີ່ຊຸກຍູ້ໃຫ້ການເລື່ອນຂັ້ນເພີ່ມຂຶ້ນຕື່ມ ເພື່ອໃຫ້ສາມາດບັນລຸການຈົບຊັ້ນປະຖົມໄດ້ 100% ເຊິ່ງເປັນພື້ນຖານໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

ເຖິງຢ່າງໃດກໍ່ຕາມ, ໃນສົກຮຽນ 2019-2020 ເຖິງແມ່ນວ່າອັດຕາຄ້າງຫ້ອງຊັ້ນປະຖົມສຶກສາຫຼຸດລົງຈາກ 3,8% ເປັນ 3,1% ທຽບໃສ່ປີຜ່ານມາ, ແຕ່ໃນຂັ້ນເມືອງ ຍັງເຫັນວ່າ ຄວາມແຕກໂຕນກັນລະຫວ່າງເມືອງ ຍັງມີສູງ. ອັດຕາຄ້າງຫ້ອງສູງກວ່າໝູ່ ແມ່ນເມືອງກະລຶມ ແຂວງເຊກອງ 14,74%, ຖັດມາແມ່ນເມືອງໄຊສະຖານ ແຂວງໄຊຍະບູລີ 12,89% ແລະ ເມືອງດັກຈຶງ ແຂວງເຊກອງ 12,47%.

ໃນທາງກົງກັນຂ້າມເຫັນວ່າ ອັດຕາປະລະຊັ້ນປະຖົມຍັງຄົງທີ່ຢູ່ 4,3% ທຽບໃສ່ປີຜ່ານມາ, ເມື່ອເບິ່ງລົງເຖິງຂັ້ນເມືອງ ຈະເຫັນວ່າອັດຕາປະລະຊັ້ນປະຖົມສູງກວ່າ 6% ມີເຖິງ 37 ເມືອງ ແລະ ສູງກວ່າໝູ່ ແມ່ນເມືອງນອງ, ເມືອງເຊໂປນ ແຂວງສະຫວັນນະເຂດ 19,49%, 16,65% ຕາມລຳດັບ ແລະ ຖັດມາ ແມ່ນເມືອງ ຕະໂອ້ຍ ແຂວງສາລະວັນ 13,5%.

### 1.3.3.2. ຊັ້ນມັດທະຍົມສຶກສາຕອນຕົ້ນ

**ຮູບພາບທີ 2: ອັດຕາເລື່ອນຊັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນ ມ.ຕົ້ນ ສົກຮຽນ 2017-18, 2018-19 ແລະ 2019-20**




ຈາກຮູບພາບທີ 2 ຂ້າງນີ້ ສະແດງໃຫ້ເຫັນເຖິງ ອັດຕາກະແສນັກຮຽນຢູ່ໃນຊັ້ນ ມ.ຕົ້ນ ນັບແຕ່ ປີ 2018 ຫາ 2020. ເຫັນໄດ້ວ່າ, ບັນຫາທີ່ຕໍ່ເນື່ອງຢູ່ໃນຊັ້ນ ມ.ຕົ້ນ ທີ່ບໍ່ໄດ້ຮັບການແກ້ໄຂໄດ້ດີເທົ່າທີ່ຄວນ ແມ່ນອັດຕາປະລະ ເຊິ່ງຈາກຮູບພາບ ແມ່ນເພີ່ມຂຶ້ນຈາກ 9,2% ໃນປີ 2018 ເປັນ 10,3% ໃນປີ 2020. ຄຽງຄູ່ກັນນັ້ນ ການຄ້າງຫ້ອງກໍ່ຍັງມີລັກສະນະຄົງທີ່ ບໍ່ສາມາດປະຕິບັດໄດ້ດີຂຶ້ນ ຈິ່ງເຮັດໃຫ້ການເລື່ອນຊັ້ນຫຼຸດລົງ ແລະ ການລອດເຫຼືອກໍ່ຍິ່ງຕໍ່າ. ດັ່ງນັ້ນ, ບັນຫາທີ່ເຮົາຄວນສຸມໃສ່ແກ້ໄຂໃນຕໍ່ໜ້າ ຄືການແກ້ໄຂບັນຫາການປະລະໃນຊັ້ນ ມ.ຕົ້ນ ເຮັດແນວໃດໃຫ້ສາມາດຮັກສານັກຮຽນໃຫ້ຢູ່ໃນລະບົບເພື່ອໃຫ້ພວກເຂົາສາມາດຮຽນຈົບຊັ້ນ ມ.ຕົ້ນ ເຊິ່ງໄດ້ຖືກກຳນົດເປັນການສຶກສາພາກບັງຄັບ ໃນກົດໝາຍການສຶກສາ ແລະ ຍັງໃຫ້ສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງອີກດ້ວຍ.

**ຮູບພາບທີ 3: ອັດຕາເລື່ອນຊັ້ນ, ອັດຕາຄ້າງຫ້ອງ ແລະ ອັດຕາປະລະ ໃນຊັ້ນມັດທະຍົມຕອນປາຍ ສົກຮຽນ 2017-18, 2018-19 ແລະ 2019-20**




ສຳລັບການສຶກສາຊັ້ນມັດທະຍົມຕອນປາຍ ແມ່ນມີລັກສະນະໃກ້ຄຽງກັບ ຊັ້ນ ມ.ຕົ້ນ ຄືໃນສົກຮຽນທີ່ຜ່ານມາ ການປະລະເພີ່ມສູງຂຶ້ນທຸກປີ, ຈາກປີ 2018 ຫາ 2020 ອັດຕາປະລະ ແມ່ນເພີ່ມຂຶ້ນເຖິງ 1,7%. ເຖິງແມ່ນວ່າ ການສຶກສາຊັ້ນມັດທະຍົມຕອນປາຍ ບໍ່ແມ່ນການສຶກສາພາກບັງຄັບ ແຕ່ລັດ ຖະບານເອງກໍ່ໄດ້ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນ ມ. ຕົ້ນ ໄດ້ໄປຮຽນຕໍ່ໃນຊັ້ນມັດທະຍົມຕອນປາຍ ຄຽງຄູ່ກັບການໄປຮຽນຕໍ່ໃນສາຍອາຊີວະ ເພື່ອເປັນພື້ນຖານທີ່ດີ ແລະ ມີຄຸນນະພາບ ສຳລັບການຮຽນໃນຊັ້ນທີ່ສູງຂຶ້ນໄປ ແລະ ອອກສູ່ຕະຫຼາດແຮງງານ. ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈະຕ້ອງໄດ້ສືບຕໍ່ປັບປຸງການຄຸ້ມຄອງປະສິດ ທິພາບພາຍໃນ ໂດຍສະເພາະໃນໂຮງຮຽນ ເພື່ອເຮັດແນວໃດ ໃຫ້ເດັກນ້ອຍທີ່ໄດ້ເຂົ້າຮຽນແລ້ວສືບຕໍ່ຮຽນຈົນຈົບການສຶກສາຢ່າງມີປະສິດທິພາບ.

## 2. ແຜນງົບປະມານຂອງຂະແໜງການສຶກສາ ແລະ ກິລາ

ແຜນງົບປະມານປະຈຳປີ 2020 ຂອງຂະແໜງສຶກສາ ແລະ ກິລາ ທີ່ໄດ້ຮັບຮອງຈາກສະພາແຫ່ງຊາດ ແລະ ແຈ້ງການຈາກກະຊວງການເງິນໃນເບື້ອງຕົ້ນມີທັງໝົດ: 4.192,88 ຕື້ກີບ ເທົ່າກັບ 2,36% ທຽບໃສ່ GDP ແລະ ເທົ່າ

ກັບ 11,74% ທຽບກັບລາຍຈ່າຍລັດຖະບານ. ໃນນີ້ ງົບປະມານບໍລິຫານປົກກະຕິ: 3.484,91 ຕື້ກີບ (ລາຍຈ່າຍວິຊາການ: 95,01 ຕື້ກີບ) ແລະ ງົບປະມານການລົງທຶນ: 707,96 ຕື້ກີບ (ໃນນີ້ມີງົບປະມານລົງທຶນພາຍໃນ: 152,26 ຕື້ກີບ ແລະ ລົງທຶນຕ່າງປະເທດ: 555,70 ຕື້ກີບ). ງົບປະມານທັງໝົດນີ້ ສູນກາງຄຸ້ມຄອງ: 1.310,55 ຕື້ກີບ (ກະຊວງສຶກສາທິການ ແລະ ກິລາ, ມະຫາວິທະຍາໄລແຫ່ງຊາດ) ແລະ ທ້ອງຖິ່ນຄຸ້ມຄອງ 2.882,70 ຕື້ກີບ (ພະແນກສຶກສາທິການ ແລະ ກິລາແຂວງ ແລະ 3 ມະຫາວິທະຍາໄລ).

ຍ້ອນການແຜ່ລະບາດຂອງພະຍາດ ໂຄວິດ 19 ໃນປີ 2020 ນີ້, ດັ່ງນັ້ນ ລັດຖະບານຈຶ່ງໄດ້ສຸມງົບປະມານເຂົ້າໃສ່ໃນການແກ້ບັນຫາດັ່ງກ່າວ. ໃນຂະນະດຽວກັນ ສະພາບເສດຖະກິດກໍ່ຝືດເຄືອງ ເຮັດໃຫ້ລັດຖະບານຕັດສິນໃຈປັບປຸງແຜນງົບປະມານປະຈໍາປີ ໂດຍໄດ້ຫຼຸດລາຍຈ່າຍຂອງບັນດາຂະແໜງການຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ. ດັ່ງນັ້ນ, ແຜນງົບປະມານຂອງຂະແໜງການສຶກສາ ແລະ ກິລາ ຈຶ່ງໄດ້ປັບປຸງຫຼຸດລົງຈາກ 4.192,88 ຕື້ກີບ ເປັນ 3.744,06 ຕື້ກີບ[5] ຊຶ່ງເທົ່າກັບ 11,3% ທຽບໃສ່ລາຍຈ່າຍລັດຖະບານ (ອີງໃສ່ມະຕິຂອງສະພາແຫ່ງຊາດສະບັບເລກທີ 02/ສພຊ, ລົງວັນທີ 25/6/2020).

## 3. ບັນຫາ ແລະ ສິ່ງທ້າທາຍ

ເຖິງວ່າກະຊວງສຶກສາທິການ ແລະ ກິລາ ໄດ້ມີການກໍານົດວຽກງານຈຸດສຸມທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດ ແນໃສ່ໃຫ້ບັນລຸບັນດາຄາດໝາຍ ແລະ ນະໂຍບາຍທີ່ກໍານົດໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2019-2020 ກໍ່ຄືຄາດໝາຍທີ່ສະພາແຫ່ງຊາດຮັບຮອງ, ແຕ່ກໍ່ຍັງມີຫຼາຍບັນຫາທີ່ຍັງຄົງຄ້າງ ໂດຍສະເພາະແມ່ນການປະລະການຮຽນໃນແຕ່ລະຊັ້ນຮຽນທີ່ມີທ່າອຽງສູງຂຶ້ນທຸກປີ ອັນເນື່ອງມາຈາກສາຍເຫດ ແລະ ປັດໄຈດັ່ງນີ້:

1) ຂີດຄວາມສາມາດ ແລະ ຄວາມເປັນເຈົ້າການຂອງຜູ້ດູແລເດັກ, ຄູສອນ ແລະ ຜູ້ອໍານວຍການໂຮງຮຽນຍັງຕໍ່າ ທັງນີ້ ກໍ່ຍ້ອນຂາດການຝຶກອົບຮົມທາງດ້ານວິຊາການ ແລະ ການບໍລິຫານຄຸ້ມຄອງໂຮງຮຽນ;
2) ຄຸນນະພາບການສຶກສາຊັ້ນປະຖົມສຶກສາຕໍ່າ ໂດຍສະເພາະທັກສະການອ່ານ, ການຂຽນພາສາລາວ ແລະ ທັກສະການຄິດໄລ່ເລກພື້ນຖານ ຍັງເປັນບັນຫາທີ່ຕ້ອງສືບຕໍ່ແກ້ໄຂໃນຊຸມປີຕໍ່ໜ້າ;
3) ລະບົບການປະເມີນຄູສອນ ຍັງບໍ່ໄດ້ຖືເອົາຜົນການຮຽນຂອງນັກຮຽນທີ່ຄູສິດສອນ ເປັນເງື່ອນໄຂສໍາຄັນ ແລະ ການລົງຕິດຕາມຂອງຄູສຶກສານິເທດຈໍານວນໜຶ່ງແມ່ນໄປກວດກາການແຕ່ງບົດສອນຂອງຄູ ແທນທີ່ຈະໄປຮ່ວມໂມງສອນ ເພື່ອໃຫ້ການແນະນໍາ ຫຼື ນິເທດການສອນ;
4) ບັນຫາການຮຽນຈົບແລ້ວບໍ່ມີວຽກເຮັດງານທໍາ ແລະ ການຫຼຸດລົງຂອງໂກຕ້າລັດຖະກອນ ກໍ່ເປັນສາເຫດໜຶ່ງທີ່ເຮັດເດັກບໍ່ຢາກຮຽນຕໍ່;
5) ໂຮງຮຽນຊັ້ນມັດທະຍົມຕອນປາຍຕັ້ງຢູ່ຫ່າງໄກຈາກກຸ່ມບ້ານ ເຮັດໃຫ້ເດັກຢູ່ໃນຄອບຄົວທຸກຍາກບໍ່ສາມາດໄປຮຽນໄດ້ ຍ້ອນຂາດຫໍພັກ ແລະ ຂາດທຶນການສຶກສາ;
6) ຂີດຄວາມສາມາດ ແລະ ຄວາມເປັນເຈົ້າການຕໍ່ວຽກງານທີ່ຕົນຮັບຜິດຊອບຂອງພະນັກງານວິຊາການ ແລະ ຜູ້ບໍລິຫານການສຶກສາຈໍານວນໜຶ່ງຍັງຈໍາກັດ. ດັ່ງນັ້ນ, ຄວນມີລະບົບການປະເມີນທີ່ເປັນມາດຕະຖານ ແລະ ມີປະສິດທິພາບ.

## 4. ແຜນວຽກບູລິມະສິດ ສົກຮຽນ 2020-2021 ໃນຂົງເຂດຕ່າງໆ

### 4.1. ຈຸດປະສົງ

1) ເພື່ອສືບຕໍ່ສົ່ງເສີມ ແລະ ຂະຫຍາຍການສຶກສາກ່ອນໄວຮຽນໃຫ້ກວ້າງຂວາງ ພ້ອມທັງຮັບປະກັນດ້ານຄຸນນະພາບ;

[5] ຕົວເລກງົບປະມານລົງທຶນທ້ອງຖິ່ນຄຸ້ມຄອງ ທີ່ຖືກເລື່ອນຈ່າຍຍັງບໍ່ຊັດເຈນ

2) ປັບປຸງຄຸນນະພາບການຮຽນ-ການສອນໃນຊັ້ນປະຖົມສຶກສາ ໂດຍແນໃສ່ໃຫ້ນັກຮຽນທີ່ຮຽນຈົບແຕ່ລະຂັ້ນສາມາດອ່ານອອກຂຽນໄດ້ ຕາມຈຸດປະສົງຂອງຫຼັກສູດ;
3) ເພື່ອຍົກສູງຄຸນນະພາບຂອງການສຶກສາຊັ້ນມັດທະຍົມສຶກສາ ແລະ ການສຶກສາຫຼັງຊັ້ນມັດທະຍົມໃຫ້ດີຂຶ້ນໂດຍເນັ້ນໃສ່ການສ້າງສີມືແຮງງານ ແລະ ນັກວິຊາການ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ;
4) ສົ່ງເສີມໃຫ້ປະຊາຊົນທຸກເພດທຸກໄວຫັນມາໃສ່ໃຈການອອກກຳລັງກາຍເພື່ອສຸຂະພາບ ແລະ ສົ່ງເສີມໃຫ້ຜູ້ທີ່ມີພອນສະຫວັນດ້ານກິລາ-ກາຍຍະກຳ ໃຫ້ກາຍເປັນນັກກິລາອາຊີບ;
5) ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການບໍລິຫານ ແລະ ຄຸ້ມຄອງການສຶກສາແຕ່ສູນກາງຮອດທ້ອງຖິ່ນ.

## 4.2. ຄາດໝາຍຫຼັກ

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດໃຫ້ເພີ່ມຂຶ້ນຈາກ 82,7% ໃຫ້ບັນລຸສູງກວ່າ 83%;
2) ເປີເຊັນນັກຮຽນເຂົ້າໃໝ່ ປ. 1 ທີ່ຜ່ານ ອະນຸບານ 3 ຫຼື ຫ້ອງກຽມປະຖົມ ຫຼື ກຸ່ມຮຽນຜ່ານການຫຼິ້ນ ໃຫ້ເພີ່ມຂຶ້ນຈາກ 69,8% ໃຫ້ໄດ້ສູງກວ່າ 70%;
3) ອັດຕາເຂົ້າຮຽນໃໝ່ລວມ ປ. 5 ໃຫ້ບັນລຸສູງກວ່າ 99%;
4) ສູ້ຊົນໃຫ້ອັດຕາປະລະການຮຽນ ຂອງນັກຮຽນ ປ. 1 ຫຼຸດລົງ, ແຕ່ບໍ່ໃຫ້ເກີນ 6,4%;
5) ອັດຕາຈົບຊັ້ນປະຖົມຕາມກະແສນັກຮຽນ ໃຫ້ເພີ່ມຂຶ້ນຈາກ 79,8% ເປັນ 80%;
6) ອັດຕາການເລື່ອນຊັ້ນ ປ. 5 ຫາ ມ. 1 ໃຫ້ເພີ່ມຈາກ 85,1% ບັນລຸໄດ້ 85,5%;
7) ສູ້ຊົນໃຫ້ອັດຕາປະລະຂອງນັກຮຽນຊັ້ນປະຖົມຫຼຸດລົງ, ແຕ່ບໍ່ໃຫ້ເກີນ 4,3%;
8) ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາການເລື່ອນຊັ້ນ ປ. 5 ຫາ ມ. 1 ໃຫ້ບັນລຸໄດ້ ລະຫວ່າງ 0,97-1,03;
9) ອັດຕາເຂົ້າຮຽນໃໝ່ລວມ ມ. 4 ໃຫ້ເພີ່ມຂຶ້ນຈາກ 71,6% ເປັນ 72%;
10) ສູ້ຊົນເຮັດໃຫ້ອັດຕາປະລະຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເພີ່ມຂຶ້ນເກີນ 10,3%;
11) ລົບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາລະດັບຕ່າງໆໃຫ້ແກ່ກຸ່ມເປົ້າໝາຍຢູ່ນອກໂຮງຮຽນໃຫ້ໄດ້ 30.000 ຄົນ;
12) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມໃຫ້ໄດ້ 10% ຂອງຈຳນວນຄູທັງໝົດ;
13) ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ບໍ່ໃຫ້ຫຼຸດ 3,2%;
14) ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເທັກໂນໂລຊີ, ວິສາວະກຳ ແລະ ຄະນິດສາດໃຫ້ໄດ້ປະມານ 2.500 ຄົນ;
15) ສືບຕໍ່ສົ່ງເສີມມວນຊົນທຸກເພດ, ທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາເພື່ອສຸຂະພາບ, ເຂົ້າຮ່ວມການສ້າງຂະບວນການເຄື່ອນໄຫວຈັດກິດຈະກຳການແຂ່ງຂັນກິລາປະຈຳປີ, ກິລາວັນບຸນປະເພນີ ແລະ ກິລາວັນບຸນສຳຄັນຕ່າງໆຂອງຊາດ ແລະ ສາກົນ ໃຫ້ເພີ່ມຈາກ 30% ເປັນ 34% ຂອງພົນລະເມືອງລາວ.

### 4.3. ວຽກຈຸດສຸມ

1) ສຸມໃສ່ຂະຫຍາຍຫ້ອງກຽມປະຖົມຢູ່ບັນດາເມືອງທຸກຍາກ ແລະ ເມືອງທີ່ມີເດັກຊົນເຜົ່າຫຼາຍ ພ້ອມທັງສືບຕໍ່ສະໜອງກຸ່ມຫຼິ້ນໃນຊຸມຊົນ ແລະ ການສອນຄວບອາຍຸ ເພື່ອກຽມຄວາມພ້ອມໃຫ້ເດັກດັ່ງກ່າວກ່ອນເຂົ້າຮຽນ ຊັ້ນປະຖົມສຶກສາ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;
2) ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຝຶກອົບຮົມໃຫ້ແກ່ຄູສອນຊັ້ນປະຖົມສຶກສາ ໃນການນຳໃຊ້ຫຼັກສູດໃໝ່;
3) ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບນິເທດການສຶກສາໃນແຕ່ລະຊັ້ນການສຶກສາ;
4) ສຸມໃສ່ການປັບປຸງຄຸນນະພາບການສຶກສາຊັ້ນປະຖົມ ແລະ ມັດທະຍົມ ໂດຍສຸມໃສ່ການຕິດຕາມ, ຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອຄູສອນ;
5) ເຜີຍແຜ່ນິຕິກຳກ່ຽວກັບການສ້າງຕັ້ງກຸ່ມໂຮງຮຽນ ພ້ອມຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ແລະ ຖືກຕ້ອງຕາມຫຼັກວິຊາການ.
6) ປັບປຸງວິທີການຈັດຕັ້ງປະຕິບັດການເລື່ອນຊັ້ນແບບຕໍ່ເນື່ອງໃຫ້ທົ່ວເຖິງ ແລະ ຮັບປະກັນໃຫ້ມີຄຸນນະພາບ;
7) ຍົກລະດັບໃຫ້ຜູ້ອຳນວຍການໂຮງຮຽນ ກ່ຽວກັບການຄຸ້ມຄອງທີ່ອີງໃສ່ໂຮງຮຽນເປັນຫຼັກ;
8) ສືບຕໍ່ສະໜອງການສຶກສານອກໂຮງຮຽນ ແລະ ອົບຮົມວິຊາຊີບຂັ້ນພື້ນຖານໃຫ້ຜູ້ໃຫຍ່ ແລະ ຊາວໜຸ່ມ ໃຫ້ກວ້າງຂວາງ;
9) ການຮັບນັກຮຽນເຂົ້າຮຽນຄູ ໃຫ້ເນັ້ນໃສ່ສາຍທີ່ຍັງຂາດເຂີນຄູ ແລະ ຮັບປະກັນໃຫ້ໄດ້ນັກຮຽນເກັ່ງໄດ້ເຂົ້າຮຽນໃນສະຖາບັນສ້າງຄູຕ່າງໆ ພ້ອມປັບປຸງການປະສານງານລະຫວ່າງສະຖາບັນສ້າງຄູ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລຕ່າງໆ;
10) ສືບຕໍ່ສະໜອງການສຶກສາສາຍອາຊີວະສຶກສາທີ່ມີຄຸນນະພາບ ແລະ ຫຼາກຫຼາຍ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ໃຊ້ແຮງງານ ແລະ ຜູ້ປະກອບການໃນແຕ່ລະທ້ອງຖິ່ນ;
11) ຍົກສູງຄຸນນະພາບຂອງການສຶກສາລະດັບມະຫາວິທະຍາໄລ ໂດຍຖືເອົາວຽກງານປະກັນຄຸນນະພາບເປັນສຳຄັນ;
12) ພິຈາລະນາເພີ່ມການຮັບນັກສຶກສາເຂົ້າຮຽນໃນລະດັບມະຫາວິທະຍາໄລ ໂດຍສະເພາະໃນຄະນະວິຊາທີ່ມີຄວາມພ້ອມດ້ານບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອພ້ອມຮັບນັກຮຽນທີ່ບໍ່ສາມາດໄປສຶກສາຢູ່ທີ່ຕ່າງປະເທດ;
13) ກະກຽມການຈັດການແຂ່ງຂັນມະຫາກຳກິລາແຫ່ງຊາດຄັ້ງໃໝ່ ພ້ອມທັງສຸມໃສ່ການຄົ້ນຫານັກກິລາທີ່ມີພອນສະຫວັນໃນແຕ່ລະປະເພດ ເພື່ອສ້າງເປັນນັກກິລາອາຊີບ;
14) ສືບຕໍ່ປັບປຸງປະສິດທິພາບໃນການຄຸ້ມຄອງຄູ ແລະ ບຸກຄະລາກອນທາງການສຶກສາ ແລະ ການນຳໃຊ້ງົບປະມານຂອງຂະແໜງການໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
15) ສືບຕໍ່ປັບປຸງລະບົບຂໍ້ມູນດ້ານການສຶກສາ ແລະ ກິລາ ແລະ ລະບົບການຕິດຕາມ, ປະເມີນຜົນ ແລະ ການລາຍງານຢູ່ທຸກລະດັບ;
16) ສືບຕໍ່ປັບປຸງນິຕິກຳ, ປັບປຸງຕຳແໜ່ງງານ ແລະ ກົງຈັກການຈັດຕັ້ງໃນແຕ່ລະຂັ້ນໃຫ້ເໝາະສົມ;
17) ສຸມໃສ່ການເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ລວມທັງແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ໃຫ້ທົ່ວເຖິງທັງລະດັບສູນກາງ ແລະ ລະດັບທ້ອງຖິ່ນ, ທັງພາຍໃນຂະແໜງການສຶກສາ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ.

# ພາກທີ II

# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳສົກຮຽນ 2020-2021 ຂອງ 10 ຂະແໜງການຍ່ອຍ

# I. ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ

## 1.1. ຜົນສຳເລັດ

### 1.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນຊຸມປີຜ່ານມາ ການຂະຫຍາຍໂອກາດໃຫ້ແກ່ເດັກນ້ອຍ ໃນການເສີມສ້າງພັດທະນາການ ແລະ ກຽມຄວາມພ້ອມ ໃນຊັ້ນການສຶກສາກ່ອນໄວຮຽນ ແມ່ນມີການຂະຫຍາຍຕົວທີ່ດີຂຶ້ນເທື່ອລະກ້າວ. ໃນສົກຮຽນ 2019-2020 ເຊິ່ງເປັນປີສຸດທ້າຍໃນການຈັດຕັ້ງປະຕິບັດ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ເຫັນວ່າ ເມື່ອທຽບໃສ່ສົກຮຽນ 2018-19 ໃນທົ່ວປະເທດ ມີຫ້ອງລ້ຽງເດັກ ເພີ່ມຂຶ້ນ 80 ແຫ່ງ (ປັດຈຸບັນມີ 1.047 ຫ້ອງ), ໂຮງຮຽນອະນຸບານເພີ່ມຂຶ້ນ 64 ແຫ່ງ (ປັດຈຸບັນມີ 3.496 ແຫ່ງ), ສ່ວນຫ້ອງກຽມປະຖົມ ແມ່ນຫຼຸດລົງຈາກປີຜ່ານມາ 19 ແຫ່ງ. ຄຽງຄູ່ກັບການສະໜອງການສຶກສາກ່ອນໄວຮຽນໃນຮູບແບບດັ່ງກ່າວແລ້ວ, ການຮຽນຜ່ານການຫຼິ້ນ ກໍ່ໄດ້ສືບຕໍ່ສະໜອງໃນເຂດທີ່ບໍ່ມີເງື່ອນໄຂໃນການຂະຫຍາຍຫ້ອງກຽມ ແລະ ໂຮງຮຽນອະນຸບານ ເຊິ່ງເມື່ອທຽບໃສ່ປີຜ່ານມາ ເຮັດໃຫ້ ມີເດັກນ້ອຍໄດ້ເຂົ້າຮຽນໃນຮູບແບບຕ່າງໆ ເພີ່ມຂຶ້ນເຖິງ 5.397 ຄົນ (ຈາກ 243.960 ເປັນ 249.357 ຄົນ[7]).

**ຮູບພາບທີ 4: ການເພີ່ມຂຶ້ນຂອງເດັກໃນຊັ້ນການສຶກສາກ່ອນໄວຮຽນ ຂອງພາກລັດ ແລະ ເອກະຊົນ ລະຫວ່າງສົກຮຽນ 2018-19 ແລະ 2019-20**




| | ພາກລັດ | ພາກເອກະຊົນ | ລວມທັງໝົດ |
|---|---|---|---|
| 2019 | 194.837 | 49.123 | 243.960 |
| 2020 | 196.648 | 52.709 | 249.357 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

ຄຽງຄູ່ກັບການລົງທຶນ ໃນການຂະຫຍາຍໂອກາດ ໃນການເຂົ້າເຖິງການສຶກສາກ່ອນໄວຮຽນ ຂອງລັດຖະບານແລ້ວ, ກະຊວງສຶກສາທິການ ແລະ ກິລາ ກໍ່ຍັງມີນະໂຍບາຍສົ່ງເສີມພາກເອກະຊົນ ໃນການລົງທຶນເຂົ້າໃນຊັ້ນການສຶກສາດັ່ງກ່າວຢ່າງກວ້າງຂວາງ ເຊິ່ງເຫັນໄດ້ຈາກການເພີ່ມຂຶ້ນຂອງນັກຮຽນໃນພາກເອກະຊົນ ສູງເຖິງ 3.586 ຄົນ ກວມເອົາຫຼາຍກວ່າ 50% ຂອງນັກຮຽນເພີ່ມຂຶ້ນທັງໝົດ (ເພີ່ມຂຶ້ນທັງໝົດ 5.397 ຄົນ ທຽບໃສ່ສົກຮຽນຜ່ານມາ). ມາຮອດປີ 2020 ແມ່ນມີນັກຮຽນເອກະຊົນ ກວມເອົາ 21,1% ທຽບໃສ່ນັກຮຽນທັງໝົດ ເທົ່າກັບ 52.709 ຄົນ. ຜ່ານການຈັດຕັ້ງປະຕິບັດຂ້າງເທິງນັ້ນ, ໃນທົ່ວປະເທດ ໄດ້ເຮັດໃຫ້ອັດຕາການເຂົ້າຮຽນຂອງເດັກອາຍຸ 3-5 ປີ ບັນລຸໄດ້ 61,3% ແລະ

[7] ນັບທັງເດັກໃນກຸ່ມຫຼິ້ນ

ເດັກອາຍຸ 5 ປີ ບັນລຸໄດ້ 82,7% ໃນສົກຮຽນ 2019-20 ເຊິ່ງໃນນັ້ນ, ທັງເດັກຍິງ ແລະ ເດັກຊາຍກໍ່ມີຄວາມສະເໝີພາບກັນໃນການເຂົ້າຮຽນ ສະແດງອອກຜ່ານດັດຊະນີຄວາມສະເໝີພາບຍິງຊາຍ ເທົ່າກັບ 1. ເມື່ອເບິ່ງພິ ເສດ ໃນ 40 ເມືອງບູລິມະສິດຂອງຂະແໜງການສຶກສາ ແລະ ກິລາແລ້ວ, ເຫັນໄດ້ວ່າ ເມື່ອທຽບໃສ່ປີຜ່ານມາ ອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຂຶ້ນເຖິງ 4,6% (ຈາກ 66,2% ເປັນ 70,8%) ແລະ ອັດຕາເຂົ້າຮຽນຂອງເດັກ 3-5 ປີ ເພີ່ມຂຶ້ນ 2,8% (ຈາກ 43,8% ເປັນ 46,6%). ໃນນັ້ນ, ມີເຖິງ 33 ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ເພີ່ມຂຶ້ນພົ້ນເດັ່ນທີ່ສຸດ ເຊິ່ງມີເມືອງຮຸນ ແຂວງອຸດົມໄຊ (ເພີ່ມ 24,4% ບັນລຸໄດ້ 80,5%), ເມືອງໄຊບົວທອງ ແລະ ເມືອງບົວລະພາ ແຂວງຄຳມ່ວນ (ເພີ່ມ 16,4% ບັນລຸໄດ້ 70% ແລະ 15,6% ບັນລຸໄດ້ 60,8% ຕາມລຳດັບ) ແລະ ເມືອງ ພະລານໄຊ ແຂວງສະຫວັນນະເຂດ (15,5% ບັນລຸໄດ້ 75%) ເຊິ່ງທັງ 4 ເມືອງເຫຼົ່ານີ້ ກໍ່ລ້ວນແລ້ວແຕ່ມີອັດຕາເຂົ້າຮຽນ ຂອງເດັກ 5 ປີ ຕ່ຳກວ່າ 60% ໃນສົກຮຽນຜ່ານມາ.

ເຖິງຢ່າງໃດກໍ່ຕາມ, ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍ່ຍັງສັງເກດເຫັນວ່າ ການຂະຫຍາຍຕົວຂອງການສຶກສາ ກ່ອນໄວຮຽນຍັງຄົງມີຄວາມແຕກໂຕນກັນລະຫວ່າງເມືອງ ໂດຍສະເພາະຢູ່ບັນດາເມືອງທີ່ຢູ່ໃກ້ຊາຍແດນຫວຽດນາມ, ເຂດທີ່ມີຊົນເຜົ່າສ່ວນໜ້ອຍ ແລະ ເມືອງພູດອຍ ເຊິ່ງຍັງມີອັດຕາດັ່ງກ່າວຕ່ຳ ເປັນຕົ້ນ ເມືອງກະລຶມ ແຂວງເຊກອງ, ເມືອງນອງ , ເມືອງເຊໂປນ ແຂວງສະຫວັນນະເຂດ ແລະ ອື່ນໆ. ຈາກສະຖິຕິໃນສົກຮຽນ 2019-2020 ເຫັນໄດ້ວ່າ ຈຳນວນເມືອງທີ່ມີອັດຕາການເຂົ້າຮຽນຂອງເດັກ 5 ປີ ຕ່ຳກວ່າ 60% ຍັງເຫຼືອ 6 ເມືອງ, ຫຼຸດລົງ 7 ເມືອງເມື່ອທຽບໃສ່ສົກຮຽນຜ່ານມາ ເຊິ່ງສ່ວນໃຫຍ່ແມ່ນເມືອງຈາກແຂວງພາກໃຕ້. ຮູບພາບທີ 5 ລຸ່ມນີ້ ຍັງສະແດງໃຫ້ເຫັນອີກວ່າ ໃນບັນດາ 6 ເມືອງນັ້ນ ມີ 4 ເມືອງທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ແຕ່ອີກ 2 ເມືອງແມ່ນມີອັດຕາດັ່ງກ່າວຫຼຸດລົງ ແລະ ຍັງຫຼຸດລົງຕ່ຳກວ່າ 60% ຈາກສົກຮຽນທີ່ຜ່ານມາ ແມ່ນບັນລຸ 60% ແລ້ວ (ເມືອງຮົ່ມ ແຂວງວຽງຈັນ ແລະ ເມືອງໂຂງ ແຂວງຈຳປາສັກ).

**ຕາຕະລາງທີ 4: ການຂະຫຍາຍໂອກາດໃນການເຂົ້າຮຽນ ສຳລັບການສຶກສາກ່ອນໄວຮຽນ ສົກຮຽນ 2018-19 ແລະ 2019-20**

| ຕົວຊີ້ບອກ | ສົກຮຽນ 2018 -2019 | | ສົກຮຽນ 2019 -2020 | |
|---|---|---|---|---|
| | | ດັດຊະນີ ຄວາມສະເໝີພາບ | | ດັດຊະນີ ຄວາມສະເໝີພາບ |
| ຫ້ອງລ້ຽງເດັກ | 967 | | 1.047 | |
| ຈຳນວນຫ້ອງຮຽນອະນຸບານ | 7.389 | | 7.596 | |
| ຈຳນວນຫ້ອງກຽມ | 2.346 | | 2.310 | |
| ຈຳນວນນັກຮຽນທັງໝົດ (ລ້ຽງເດັກ, ອະນຸບານ, ກຽມປະຖົມ ແລະ ກຸ່ມຫຼິ້ນ) | 243.960<br>(ຍິງ: 121.199) | | 249.357<br>(ຍິງ: 23.594) | |
| ອັດຕາເຂົ້າຮຽນຂອງເດັກ 0-2 ປີ | 4,8% | 0,95 | 5,2% | 0,94 |
| ອັດຕາເຂົ້າຮຽນຂອງເດັກ 3-4 ປີ (%) | 47,8% | 1,01 | 49,9% | 1,01 |
| ອັດຕາເຂົ້າຮຽນຂອງເດັກ 3-5 ປີ (%) | 59,0% | 1,00 | 61,3% | 1,00 |
| ອັດຕາເຂົ້າຮຽນຂອງເດັກ 5 ປີ (%) | 79,4% | 1,01 | 82,7% | 1,00 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

**ຮູບພາບທີ 5: ເມືອງທີ່ມີອັດຕາເຂົ້າຮຽນຂອງເດັກ 5 ປີ ຕ່ຳກວ່າ 60% ໃນສົກຮຽນ 2019-20 (ສົມທຽບອັດຕາ ລະຫວ່າງ 2018-19 ແລະ 2019-20)**




ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 1.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ການປັບປຸງຄຸນນະພາບຂອງການສຶກສາກ່ອນໄວຮຽນ ແມ່ນເປັນວຽກງານໜຶ່ງທີ່ສຳຄັນ ເພື່ອໃຫ້ເດັກມີພັດທະນາການທີ່ດີ ໂດຍລັດຖະບານໄດ້ເອົາໃຈໃສ່ ສ້າງຄວາມເຂັ້ມແຂງໃຫ້ນັກວິຊາການ ດ້ານການສຶກສາກ່ອນໄວຮຽນໄດ້ມີໂອກາດປັບປຸງຄວາມຮູ້ ແລະ ຍົກລະດັບຂີດຄວາມສາມາດຂອງຕົນ ໂດຍສະເພາະວຽກງານລ້ຽງເດັກ, ອະນຸບານ, ການກວດກາ, ຕິດຕາມ ແລະ ປະເມີນຜົນ, ການສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະນາການ ເຊິ່ງມີກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ໄດ້ທົດລອງນຳໃຊ້ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນອະນຸບານສຶກສາ, ຫ້ອງກຽມປະຖົມ ແລະ ກຸ່ມຮຽນຜ່ານການຫຼິ້ນ; ໄດ້ໃຫ້ການແນະນຳ ການນຳໃຊ້ແຜນການລ້ຽງດູສຶກສາອົບຮົມເດັກອາຍຸ 3-36 ເດືອນ ໂດຍມີຫຼັກສູດ, ແຜນຈັດປະສົບການຊັ້ນອະນຸບານສຶກສາ, ຫ້ອງກຽມປະຖົມ ແລະ ການສອນຫ້ອງຄວບອາຍຸ (3-5 ປີ) ໃຫ້ແກ່ຄູສອນຈຳນວນ 256 ຄົນ, ໄດ້ຮັບການແນະນຳ ການນຳໃຊ້ແຜນການລ້ຽງດູສຶກສາອົບຮົມເດັກອາຍຸ 3-36 ເດືອນ ໃຫ້ແກ່ວິຊາການຂະແໜງການສຶກສາກ່ອນໄວຮຽນ ຈາກພະແນກສຶກສາທິການ ແລະ ກິລາແຂວງ ແລະ ໜ່ວຍງານການສຶກສາກ່ອນໄວຮຽນ ຈາກຫ້ອງການສຶກສາທິການ ແລະ ກິລາເມືອງ. ນອກນັ້ນ, ກໍ່ໄດ້ມີການປັບປຸງປຶ້ມແບບຮຽນ ແລະ ຄູ່ມືຄູອີກຈຳນວນໜຶ່ງ.

### 1.1.3. ການບໍລິຫານ ແລະ ຄຸ້ມຄອງ

ກະຊວງສຶກສາທິການ ແລະ ກິລາ ໄດ້ສືບຕໍ່ເອົາໃຈໃສ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານແຕ່ລະຂັ້ນນັບແຕ່ສູນກາງຮອດທ້ອງຖິ່ນ ໂດຍໄດ້ ມີການສະໜອງການຝຶກອົບຮົມໃນຫົວຂໍ້ຕ່າງໆ ໃຫ້ແກ່ຜູ້ອຳນວຍການໂຮງຮຽນກໍ່ຄືຜູ້ບໍລິຫານການສຶກສາກ່ອນໄວຮຽນ ເຊັ່ນ: ໄດ້ຝຶກອົບຮົມ ກ່ຽວກັບການສ້າງແຜນພັດທະນາການສຶກສາ ໃຫ້ແກ່ຜູ້ບໍລິຫານການສຶກສາກ່ອນໄວຮຽນ, ຝຶກອົບຮົມວຽກງານສົ່ງເສີມສຸຂະພາບ, ສຸຂະອະນາໄມ ແລະ ໂພຊະນາການ ໃນສະຖານການສຶກສາກ່ອນໄວຮຽນ ໃຫ້ແກ່ຜູ້ອຳນວຍການໂຮງຮຽນຈຳນວນໜຶ່ງ. ພ້ອມດຽວກັນນີ້ ກໍ່ໄດ້ມີການພັດທະນາເຄື່ອງມື ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາການສຶກສາກ່ອນໄວຮຽນ.

### 1.2. ບັນຫາ ແລະ ສິ່ງທ້າທາຍ

1) ການສະໜອງຄູມີຈຳກັດ ຈຶ່ງເຮັດໃຫ້ໂອກາດເຂົ້າເຖິງການພັດທະນາເດັກກ່ອນໄວຮຽນຍັງຈຳກັດ ໂດຍສະເພາະຢູ່ບັນດາເມືອງທີ່ຢູ່ເຂດຫ່າງໄກສອກຫຼີກ;
2) ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ຍັງຂາດການວາງແຜນໄລຍະຍາວ ໃນການຂະຫຍາຍການສຶກສາກ່ອນໄວຮຽນ ໃຫ້ຮອງຮັບກັບສະພາບການສຶກສາພາຍໃນເມືອງ, ສະຖານການສຶກສາກ່ອນໄວຮຽນ ສ່ວນຫຼາຍ ຍັງບໍ່ທັນມີແຜນພັດທະນາໂຮງຮຽນຂອງຕົນເອງ;
3) ນິຕິກຳທີ່ໃຊ້ໃນການຄຸ້ມຄອງສະຖານການສຶກສາກ່ອນໄວຮຽນພາກເອກະຊົນ ຍັງບໍ່ທັນໄດ້ກຳນົດເນື້ອໃນລະອຽດ ແລະ ຄົບຖ້ວນ;
4) ຜູ້ບໍລິຫານຂັ້ນໂຮງຮຽນຫຼາຍແຫ່ງຂອງສະຖານການສຶກສາກ່ອນໄວຮຽນ ຍັງບໍ່ທັນໄດ້ຮັບການຝຶກອົບຮົມການສ້າງຄວາມເຂັ້ມແຂງດ້ານການບໍລິຫານ-ຄຸ້ມຄອງ, ບຸກຄະລາກອນທີ່ຮັບຜິດຊອບວຽກງານການສຶກສາ ກ່ອນໄວຮຽນ ແຕ່ລະຂັ້ນຍັງບໍ່ມີຄວາມຮູ້ ແລະ ປະສົບການດ້ານການສຶກສາກ່ອນໄວຮຽນຫຼາຍ ແລະ ເລິກເຊິ່ງ;
5) ອາຄານ ແລະ ສະຖານທີ່ ຍັງບໍ່ທັນໄດ້ມາດຕະຖານ, ສະພາບແວດລ້ອມຂອງຫ້ອງຮຽນ ແລະ ໂຮງຮຽນຍັງບໍ່ທັນອຳນວຍຄວາມສະດວກໃຫ້ແກ່ການຮຽນການສອນ, ພ້ອມກັນນັ້ນ ເຄື່ອງຫຼິ້ນຕ່າງໆ ໃນຫ້ອງ ແລະ ນອກຫ້ອງຮຽນ ມີບໍ່ພຽງພໍຕາມຄວາມຕ້ອງການ; ການແຈກຢາຍປຶ້ມຮຽນຊັ້ນອະນຸບານສຶກສາ ບໍ່ຄົບຖ້ວນຕາມການກຳນົດຂອງຫຼັກສູດ ແລະ ບໍ່ທົ່ວເຖິງ ທັງພາກລັດ ແລະ ເອກະຊົນ;
6) ຄູສອນຈຳນວນໜຶ່ງ ຍັງບໍ່ທັນເອົາໃຈໃສ່ ຕໍ່ການສິດສອນ ດູແລເບິ່ງແຍງເດັກ;
7) ການລົງຕິດຕາມ ຊຸກຍູ້ຊ່ວຍເຫຼືອຄູສອນ ຂອງວິຊາການ ຂັ້ນແຂວງ ແລະ ຂັ້ນເມືອງ ຍັງບໍ່ທັນຕໍ່ເນື່ອງ ແລະ ບໍ່ທັນມີຄູສຶກສານິເທດ ການສຶກສາກ່ອນໄວຮຽນ.

### 1.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

#### 1.3.1. ຈຸດປະສົງ

1) ເພື່ອຂະຫຍາຍການສຶກສາກ່ອນໄວຮຽນໄປຍັງບັນດາເມືອງ ທີ່ມີອັດຕາເຂົ້າຮຽນຕໍ່າ;
2) ເພື່ອເຮັດໃຫ້ເດັກໄດ້ກຽມຄວາມພ້ອມໃນທຸກດ້ານກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ແລະ ເພື່ອຫຼຸດອັດຕາການຄ້າງຫ້ອງ ແລະ ປະລະ ຂັ້ນປ.1;
3) ເພື່ອສະໜອງສິ່ງອຳນວຍຄວາມສະດວກໃນການຮຽນການສອນ ແລະ ສຸຂະອະນາໄມ ໃນຊັ້ນການສຶກສາກ່ອນໄວຮຽນ ໃຫ້ພຽງພໍຂັ້ນພື້ນຖານ;
4) ສົ່ງເສີມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດລົງທຶນໃສ່ການສຶກສາກ່ອນໄວຮຽນ.

#### 1.3.2. ຄາດໝາຍ

1) ອັດຕາເຂົ້າຮຽນຂອງເດັກອາຍຸ 0-2 ປີໃຫ້ໄດ້ 6,16%;
2) ອັດຕາເຂົ້າຮຽນຂອງເດັກອາຍຸ 3 - 5 ປີ ໃຫ້ໄດ້ 63%;
3) ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ໃຫ້ໄດ້ 83%;
4) ເປີເຊັນນັກຮຽນເຂົ້າໃໝ່ ປ.1 ທີ່ຜ່ານ ອະນຸບານ 3 ຫຼື ຫ້ອງກຽມປະຖົມ ຫຼື ກຸ່ມຮຽນຜ່ານການຫຼິ້ນ ໃຫ້ບັນລຸ 71%;
5) ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60 %ໃຫ້ໄດ້ສູງກວ່າ 145 ເມືອງ.

### 1.3.3. ວຽກຈຸດສຸມ

1) ສືບຕໍ່ຂະຫຍາຍການສຶກສາກ່ອນໄວຮຽນໃນຮູບແບບໃດໜຶ່ງຕາມຄວາມເໝາະສົມກັບທ້ອງຖິ່ນ ແລະ ສືບຕໍ່ສະໜອງຄູໃຫ້ພຽງພໍຕາມຄວາມຕ້ອງການ; ພ້ອມທັງຍົກລະດັບຄວາມສາມາດທາງດ້ານການຈັດການຮຽນ-ການສອນໃຫ້ຄູ ແລະ ຜູ້ດູແລເດັກ;
2) ໂຄສະນາປູກຈິດສຳນຶກໃຫ້ແກ່ຊຸມຊົນໃຫ້ເຂົ້າໃຈຄວາມສຳຄັນຂອງການສຶກສາກ່ອນໄວຮຽນ, ສົ່ງເສີມໃຫ້ພໍ່ແມ່-ຜູ້ປົກຄອງ ຊຸກຍູ້ໃນວຽກງານການຮຽນຮູ້ຂອງເດັກ ເພື່ອກຽມຄວາມພ້ອມໃນການຮຽນໃຫ້ມີຄຸນນະພາບ. ພ້ອມທັງ ສົ່ງເສີມການມີສ່ວນຮ່ວມ ຂອງທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນ ໃນການພັດທະນາການສຶກສາກ່ອນໄວຮຽນ;
3) ປັບປຸງຄຸນນະພາບການສຶກສາກ່ອນໄວຮຽນ ໂດຍຜ່ານການສ້າງໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານຕົວແບບຂັ້ນເມືອງ/ນະຄອນ;
4) ປັບປຸງຄຸນນະພາບການລ້ຽງດູ-ສຶກສາອົບຮົມເດັກ ອາຍຸ 3-36 ເດືອນ ໂດຍມີຫຼັກສູດ ແລະ ມາດຕະຖານຄຸນນະພາບການບໍລິຫານ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
5) ສະໜອງອາຫານທ່ຽງທີ່ມີໂພຊະນາການທີ່ດີ ໃນສະຖານການສຶກສາກ່ອນໄວຮຽນ ຕາມເງື່ອນໄຂທີ່ເໝາະສົມກັບແຕ່ລະທ້ອງຖິ່ນ;
6) ສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ແກ່ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ຕົວແບບຂັ້ນເມືອງ;
7) ພັດທະນາຖານເກັບກຳຂໍ້ມູນ ການເຂົ້າຮຽນ ແລະ ການເລື່ອນ ຕາມແຕ່ລະຂັ້ນ ແລະ ຊັ້ນຮຽນ ຂອງການສຶກສາກ່ອນໄວຮຽນ;
8) ສົ່ງເສີມເດັກຍິງ ແລະ ເດັກຊາຍ ລວມທັງເດັກທີ່ມີຄວາມພິການ ໄດ້ຮັບການກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມສຶກສາ ແລະ ໄດ້ເຂົ້າຮ່ວມການເຄື່ອນໄຫວກິດຈະກຳທີ່ໂຮງຮຽນຈັດຂຶ້ນ ຢ່າງເທົ່າທຽມ;
9) ສືບຕໍ່ສ້າງມາດຕະຖານຄຸນນະພາບຂັ້ນພື້ນຖານ ແລະ ຄູ່ມືແນະນຳການນຳໃຊ້ມາດຕະຖານ ສຳລັບການສຶກສາກ່ອນໄວຮຽນ;
10) ຍົກສູງຄຸນນະພາບ ການບໍລິຫານ-ຄຸ້ມຄອງ ສະຖານການສຶກສາກ່ອນໄວຮຽນ ທັງພາກລັດ ແລະ ເອກະຊົນ ໂດຍສະເພາະໃນ 40 ເມືອງດ້ອຍໂອກາດ;
11) ພັດທະນາລະບົບການກວດກາ, ຕິດຕາມ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດວຽກງານການສຶກສາກ່ອນໄວຮຽນທຸກຮູບແບບ;
12) ສົ່ງເສີມຄຸນນະພາບການບໍລິຫານ-ຄຸ້ມຄອງ ວຽກງານນ້ຳ, ສຸຂະອະນາໄມ ແລະ ໂພຊະນາການ ໃນສະຖານການສຶກສາກ່ອນໄວຮຽນ;
13) ສ້າງມາດຕະຖານ ແລະ ຄູ່ມືນຳໃຊ້ມາດຕະຖານ ໃນການບໍລິຫານ-ຄຸ້ມຄອງສະຖານການສຶກສາກ່ອນໄວຮຽນ ແລະ ປັບປຸງຄຸນນະພາບການຄຸ້ມຄອງການນຳໃຊ້ເງິນບໍລິຫານໂຮງຮຽນ;
14) ລົງຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອຄູສອນຫ້ອງກຽມໃນ 5 ເມືອງ ພາຍຫຼັງຝຶກອົບຮົມການແນະນຳ ການນຳໃຊ້ຫຼັກສູດຫ້ອງກຽມ;
15) ສ້າງ ແລະ ປັບປຸງການສຶກສາທົດລອງການສຶກສາກ່ອນໄວຮຽນ;
16) ສ້າງຄວາມເຂັ້ມແຂງດ້ານການບໍລິຫານການ-ຄຸ້ມຄອງໃຫ້ອຳນວຍການໂຮງຮຽນ;
17) ລົງຕິດຕາມຊຸກຍູ້ວຽກອາຫານກາງວັນ, ການກິນຢາຂ້າແມ່ທ້ອງຂັ້ນໂຮງຮຽນໃນແຕ່ລະເມືອງ.

# II. ຂະແໜງການຍ່ອຍປະຖົມສຶກສາ

## 2.1. ຜົນສຳເລັດ

### 2.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນໄລຍະຜ່ານມາ, ກະຊວງສຶກສາທິການ ແລະ ກິລາໄດ້ເອົາໃຈໃສ່ ໃຫ້ບູລິມະສິດແກ່ການຂະຫຍາຍໂອກາດໃນການເຂົ້າເຖິງຊັ້ນປະຖົມສຶກສາ ຢ່າງທົ່ວເຖິງ ແລະ ເທົ່າທຽມ ໂດຍຜ່ານການຮ່ວມມືກັບຫຼາຍພາກສ່ວນລວມທັງພາກລັດເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາໃນການປັບປຸງຄຸນນະພາບການສຶກສາ, ສະໜອງສິ່ງອຳນວຍຄວາມສະດວກ, ປັບປຸງສະພາບແວດລ້ອມຂອງໂຮງຮຽນ ແລະ ປັບປຸງພັດທະນາພື້ນຖານໂຄງລ່າງໃຫ້ເປັນທີ່ດຶງດູດຂອງນັກຮຽນຫຼາຍຂຶ້ນ. ໃນປີ 2020 ມີໂຮງຮຽນປະຖົມພາກລັດທີ່ມີນ້ຳໃຊ້ ແລະ ວິດຖ່າຍ (WASH) ເພີ່ມຂຶ້ນຈາກ 69,6% ເປັນ 72,1% ແລະ ໂຮງຮຽນປະຖົມທີ່ມີນ້ຳໃຊ້ຕະຫຼອດປີ ເພີ່ມຂຶ້ນຈາກປີຜ່ານມາຈຳນວນ 185 ແຫ່ງ (ຈາກ 4.529 ເປັນ 4.714 ແຫ່ງ) ກວມເອົາ 53,4% ທຽບໃສ່ຈຳນວນໂຮງຮຽນທັງໝົດ.

ເນື່ອງຈາກໄດ້ມີການສົມທົບກັບຊຸມຊົນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອຊຸກຍູ້ ແລະ ລະດົມໃຫ້ເດັກໃນເກນອາຍຸ ໄດ້ເຂົ້າເຖິງການສຶກສາຊັ້ນປະຖົມຢ່າງທົ່ວເຖິງ ຈຶ່ງເຮັດໃຫ້ໃນປີ 2020 ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມ ເພີ່ມຂຶ້ນ ຈາກ 98,2% ເປັນ 98,5% ສ່ວນອັດຕາເຂົ້າຮຽນສຸດທິ ແມ່ນຍັງຄົງທີ່ປະມານ 99%. ຮູບພາບທີ 6 ລຸ່ມນີ້ ສະແດງໃຫ້ເຫັນ ການສົມທຽບອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມ ລະຫວ່າງ ສົກຮຽນ 2018-19 ແລະ 2019-2020. ເຫັນໄດ້ວ່າ ໃນທົ່ວປະເທດ ມີ 8 ແຂວງທີ່ມີອັດຕາດັ່ງກ່າວຫຼຸດລົງ, ມີ 1 ແຂວງເທົ່າເດີມ ແລະ 9 ແຂວງທີ່ເພີ່ມຂຶ້ນ ແລະ ແຂວງທີ່ຫຼຸດລົງຫຼາຍກວ່າໝູ່ແມ່ນແຂວງຄຳມ່ວນ (ຫຼຸດລົງ ເກືອບ 4%). ສ່ວນທາງດ້ານຄວາມສະເໝີພາບຍິງ-ຊາຍ ຖືວ່າໃນຊັ້ນປະຖົມສຶກສາມີຄວາມສະເໝີພາບສູງ ສະແດງອອກຜ່ານດັດຊະນີຄວາມສະເໝີພາບຍິງ-ຊາຍ ເທົ່າ 1,00. ຄຽງຄູ່ກັບການສຶກສາພາກລັດ, ການສຶກສາພາກເອກະຊົນ ກໍ່ໄດ້ປະກອບສ່ວນຫຼາຍສົມຄວນເຂົ້າໃນການພັດທະນາການສຶກສາຊັ້ນປະຖົມ. ໃນສົກຮຽນ 2019-2020 ນັກຮຽນຊັ້ນປະຖົມພາກເອກະຊົນກວມ 7,4% ຂອງຈຳນວນນັກຮຽນທັງໝົດ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 0,5%.

**ຮູບພາບທີ 6: ອັດຕາເຂົ້າຮຽນສຸດທິຊັ້ນປະຖົມໃນລະດັບແຂວງ ແລະ ທົ່ວປະເທດ ສົມທຽບສົກ ຮຽນ 2018-2019 ແລະ 2019-2020**




ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

### 2.1.2. ປະສິດທິພາບພາຍໃນ

ໃນສົກຮຽນ 2018-2019 ເຫັນໄດ້ວ່າປະສິດທິພາບພາຍໃນຂອງການສຶກສາຊັ້ນປະຖົມ ແມ່ນພົບບັນຫາພໍສົມຄວນ ທັງອັດຕາປະລະທີ່ເພີ່ມຂຶ້ນ ແລະ ອັດຕາຄ້າງຫ້ອງທີ່ຍັງສູງ ຈຶ່ງເຮັດໃຫ້ອັດຕາລອດເຫຼືອຮອດຂັ້ນ ປ.5 ຫຼຸດລົງ. ມາເຖິງສົກຮຽນ 2019-2020, ເນື່ອງຈາກໄດ້ມີການສຸມໃສ່ ແລະ ແກ້ໄຂບາງບັນຫາ ເຮັດໃຫ້ອັດຕາກະແສນັກຮຽນມີທ່າອ່ຽງດີຂຶ້ນ ໂດຍສະເພາະແມ່ນ ອັດຕາຄ້າງຫ້ອງໃນຊັ້ນປະຖົມ ເຊິ່ງຫຼຸດຈາກ 3,8% ເປັນ 3,1%. ເມື່ອສັງເກດໃນຂັ້ນເມືອງ ເຫັນວ່າ ຈຳນວນເມືອງທີ່ມີອັດຕາຄ້າງຫ້ອງເພີ່ມຂຶ້ນມີ 44 ເມືອງ ເມື່ອທຽບໃສ່ປີຜ່ານມາ (74 ເມືອງ) ແລະ ເມືອງທີ່ມີອັດຕາຄ້າງຫ້ອງສູງທີ່ສຸດໃນສົກຮຽນ 2019-2020 ແມ່ນເມືອງກະລຶມ ແຂວງເຊກອງ (ເພີ່ມຈາກ 13,9% ເປັນ 14,7%) ຖັດມາແມ່ນເມືອງໄຊສະຖານ ແຂວງໄຊຍະບູລີ (ຫຼຸດຈາກ 16,4% ເປັນ 12,9%) ແລະ ເມືອງດາກຈຶງ ແຂວງເຊກອງ (ຫຼຸດຈາກ 14,1% ເປັນ 12,5%). ແຕ່ທີ່ໜ້າສັງເກດ ໃນສົກຮຽນນີ້ແມ່ນ ເມືອງນອງ ແຂວງສະຫວັນນະເຂດ ມີອັດຕາຄ້າງຫ້ອງຊັ້ນປະຖົມຫຼຸດລົງເຖິງ 20,5% (ຈາກ 23,1% ເປັນ 2,6%) ເຊິ່ງສາເຫດແມ່ນເນື່ອງຈາກ ແຂວງ ແລະ ເມືອງ ໄດ້ລົງຕິດແທດກັບໂຮງຮຽນ ເພື່ອຈັດການເລື່ອນຂັ້ນແບບຕໍ່ເນື່ອງ ແລະ ບຳລຸງນັກຮຽນອ່ອນໃຫ້ສາມາດເລື່ອນຂຶ້ນຫ້ອງໄດ້ ແຕ່ການເລື່ອນຂັ້ນດັ່ງກ່າວ ກໍ່ບໍ່ໄດ້ຮັບປະກັນເຖິງຄຸນນະພາບຂອງການຮຽນຂອງນັກຮຽນໄດ້ ເຊິ່ງຍັງເປັນສິ່ງທ້າທາຍທີ່ຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ. ຄືດັ່ງທີ່ຜ່ານມາ ການຄ້າງຫ້ອງສູງທີ່ສຸດແມ່ນຢູ່ໃນຂັ້ນ ປ.1, ໃນສົກຮຽນ 2019-2020 ເຫັນໄດ້ວ່າ ອັດຕາຄ້າງຫ້ອງໃນຂັ້ນ ປ.1 ເຖິງຈະສູງກວ່າຂັ້ນອື່ນ ແຕ່ກໍ່ໄດ້ຫຼຸດລົງເຖິງ 2,1% (ຈາກ 8,4% ເປັນ 6,3%). ເມື່ອເບິ່ງຂັ້ນເມືອງ ເຫັນໄດ້ວ່າຈຳນວນເມືອງທີ່ມີອັດຕາຄ້າງຫ້ອງ ປ.1 ສູງກວ່າ 14% ຍັງເຫຼືອພຽງ 11 ເມືອງ ຫຼຸດລົງ 9 ເມືອງທຽບໃສ່ປີຜ່ານມາ. ສ່ວນເມືອງນອງແຂວງສະຫວັນນະເຂດ ທີ່ມີອັດຕາຄ້າງຫ້ອງ ປ.1 ສູງທີ່ສຸດໃນປີຜ່ານມາ, ມາຮອດປີນີ້ ແມ່ນຫຼຸດລົງເຖິງ 34,1% (ຈາກ 38,7% ເປັນ 4,6%).

**ຮູບພາບທີ 7: ເມືອງທີ່ມີອັດຕາຄ້າງຫ້ອງຂັ້ນ ປ.1 ສູງກວ່າ 14%**




ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

ເຫັນໄດ້ຈາກສະຖິຕິວ່າ ການຄ້າງຫ້ອງໃນຊັ້ນປະຖົມສຶກສາ ມີທ່າອ່ຽງຫຼຸດລົງ, ແຕ່ໃນຂະນະດຽວກັນ ອັດຕາປະລະພັດບໍ່ມີທ່າອ່ຽງທີ່ດີຂຶ້ນ ເມື່ອທຽບໃສ່ປີຜ່ານມາ. ອັດຕາປະລະການຮຽນຢູ່ຊັ້ນປະຖົມແມ່ນ 4,3% ເມື່ອທຽບໃສ່ປີຜ່ານມາແມ່ນຍັງເທົ່າເກົ່າ ບໍ່ມີການເໜັງຕີງ. ເມື່ອເບິ່ງລະອຽດໃນທຸກເມືອງ ເຫັນວ່າ ເມື່ອທຽບໃສ່ແຕ່ປີ 2018 ຮອດປະຈຸບັນ, ມີ 28 ເມືອງ ທີ່ອັດຕາດັ່ງກ່າວສືບຕໍ່ຫຼຸດລົງ, ມີ 35 ເມືອງ ທີ່ສືບຕໍ່ເພີ່ມຂຶ້ນ ແລະ 85 ເມືອງ ທີ່ມີການ

ເໜັງຕີງໃນລະຫວ່າງ 2 ສົກຮຽນ. ໃນສົກຮຽນຜ່ານມາ, ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມສູງກວ່າ ຫຼື ເທົ່າ 6% ມີ 30 ເມືອງໃນທົ່ວປະເທດ, ແຕ່ເມື່ອມາເຖິງສົກຮຽນ 2019-2020 ພັດຍິ່ງເພີ່ມຂຶ້ນເປັນ 37 ເມືອງ. ຮູບພາບທີ 8 ລຸ່ມນີ້ ສະແດງໃຫ້ເຫັນເມືອງທີ່ມີການປ່ຽນແປງຂອງອັດຕາປະລະຊັ້ນປະຖົມຄື: ມີ 15 ເມືອງ ທີ່ປີຜ່ານມາມີອັດຕາດັ່ງກ່າວຕ່ຳກວ່າ 6% ແຕ່ພັດມາເພີ່ມຂຶ້ນໃນປີ 2020 ແລະ ມີ 22 ເມືອງ ທີ່ມີອັດຕາຫຼຸດລົງ ແຕ່ຍັງສູງກວ່າ 6% ໃນປີ 2020.

**ຮູບພາບທີ 8: ເມືອງທີ່ມີອັດຕາປະລະ ສູງກວ່າ 6% ທຽບລະຫວ່າງ 2018-19 ແລະ 2019-20**




ແຫຼ່ງຂໍ້ມູນ: ສູນສະຖິຕິການສຶກສາ ແລະ ກິລາ

ການປະລະຢູ່ຊັ້ນປະຖົມສ່ວນຫຼາຍນັ້ນແມ່ນຢູ່ໃນຂັ້ນ ປ.1 ເຊິ່ງເມື່ອທຽບໃສ່ປີຜ່ານມາ ແມ່ນເພີ່ມຈາກ 6,3% ເປັນ 6,4% ແລະ ເມືອງທີ່ມີອັດຕາປະລະ ປ.1 ສູງກວ່າໝູ່ແມ່ນເມືອງນອງ ແຂວງສະຫວັນນະເຂດ ສູງເຖິງ 24,2%, ເມືອງບົວລະພາ ແຂວງຄຳມ່ວນ 23,7%, ເມືອງເຊໂປນ ແຂວງສະຫວັນນະເຂດ 20,9%. ທຽບໃສ່ປີຜ່ານມາມີເຖິງ 66 ເມືອງທີ່ອັດຕາປະລະ ປ.1 ເພີ່ມຂຶ້ນ ແລະ ເພີ່ມຂຶ້ນຫຼາຍທີ່ສຸດແມ່ນເມືອງທຸລະຄົມ ແຂວງວຽງຈັນ (ເພີ່ມຈາກ 3,7% ເປັນ 19,5%), ຖັດມາແມ່ນເມືອງນອງ (ເພີ່ມຈາກ 11,1% ເປັນ 24,2%) ແລະ ເມືອງຊະນະສົມບູນ ແຂວງຈຳປາສັກ (ເພີ່ມຈາກ 2% ເປັນ 10,1%). ຖ້າສັງເກດກໍລະນີຂອງເມືອງນອງ, ເຫັນວ່າ ອັດຕາຄ້າງຫ້ອງ ໃນຂັ້ນ ປ.1 ໄດ້ຫຼຸດລົງເຖິງ 34,1% ທຽບໃສ່ປີຜ່ານມາ ເນື່ອງຈາກມີການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ແຕ່ມັນມີຄວາມຈຳເປັນຕ້ອງໄດ້ກວດກາຄືນວ່າຍ້ອນສາເຫດອັນໃດຈຶ່ງເຮັດໃຫ້ ອັດຕາປະລະ ເພີ່ມຂຶ້ນເຖິງ 13,1% ໝາຍຄວາມວ່າ ສູນເສຍນັກຮຽນອອກໄປຈາກລະບົບ ໃນສົກຮຽນ 2019-2020.

ຈາກອັດຕາຄ້າງຫ້ອງໃນຊັ້ນປະຖົມທີ່ຫຼຸດລົງ ແລະ ອັດຕາປະລະເພີ່ມຂຶ້ນເລັກໜ້ອຍນັ້ນ ຈຶ່ງເຮັດໃຫ້ໃນສົກຮຽນ 2019-2020 ອັດຕາລອດເຫຼືອຮອດ ປ.5 ເພີ່ມຂຶ້ນ ຈາກ 82% ເປັນ 82,1% ແລະ ອັດຕາຈົບຊັ້ນປະຖົມຕາມກະແສຮຸ່ນນັກຮຽນ ສູງຂຶ້ນເລັກໜ້ອຍເປັນ 79,9%. ເຖິງແນວໃດກໍ່ຕາມ, ເຫັນວ່າທາງດ້ານປະສິດທິພາບພາຍໃນຂອງການຄຸ້ມຄອງລະບົບການສຶກສາ ຍັງມີຄວາມແຕກໂຕນກັນລະຫວ່າງເມືອງ ແລະ ຍັງມີການເໜັງຕີງລະຫວ່າງປີ ຂ້ອນຂ້າງສູງໃນບາງເມືອງ. ດັ່ງນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ລວມທັງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ຕ້ອງໄດ້ເອົາໃຈໃສ່ຊີ້ນຳຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ແກ້ໄຂບັນຫາຕ່າງໆ ທີ່ສະແດງໃຫ້ເຫັນໃນອັດຕາຕ່າງໆທີ່ໄດ້ກ່າວມາຂ້າງເທິງ

ນັ້ນ ໂດຍເນັ້ນໜັກໃຫ້ການຊຸກຍູ້, ຊ່ວຍເຫຼືອຢ່າງໃກ້ຊິດໃນການປະຕິບັດໜ້າທີ່ຂອງຜູ້ອໍານວຍການໂຮງຮຽນ ແລະ ຄູສອນເປັນປະຈໍາ ພ້ອມກັນນັ້ນ ກໍ່ຍັງຕ້ອງໄດ້ເອົາໃຈໃສ່ໃກ້ຊິດຕິດແທດ ກັບຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອເພີ່ມທະວີແກ້ໄຂບັນຫາການປະລະ ແລະ ຄ້າງຫ້ອງຂອງນັກຮຽນ.

**ຕາຕະລາງທີ 5: ຕົວຊີ້ບອກຊັ້ນປະຖົມສຶກສາ**

| ຕົວຊີ້ບອກ | 2018-2019 | ປະຕິບັດໄດ້ 2019-2020 |
|---|---|---|
| ຈໍານວນຫ້ອງຮຽນ (ຫ້ອງ) | 33.991 | 33.226 |
| ຈໍານວນນັກຮຽນທັງໝົດ (ຄົນ) | 770.683 | 760.566 |
| ອັດຕາເຂົ້າຮຽນໃໝ່ສຸດທິ (%) | 98,1 | 98,5 |
| ອັດຕາເຂົ້າຮຽນສຸດທິ (%) | 99,0 | 98,9 |
| ອັດຕາເຂົ້າຮຽນໃໝ່ລວມ (%) | 109,1 | 108,8 |
| ອັດຕາເຂົ້າຮຽນລວມ (%) | 108,2 | 106,5 |
| ອັດຕາຄ້າງຫ້ອງ ປ 1 (%) | 8,4 | 6,3 |
| ອັດຕາປະລະ ປ 1 (%) | 6,3 | 6,4 |
| ອັດຕາຄ້າງຫ້ອງ (%) | 3,8 | 3,1 |
| ອັດຕາປະລະ (%) | 4,3 | 4,3 |
| ອັດຕາລອດເຫຼືອຮອດ ປ.5 (%) | 82,0 | 82,1 |
| ສັດສ່ວນນັກຮຽນເອກະຊົນທຽບໃສ່ນັກຮຽນທັງໝົດ (%) | 7 | 7,4 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 2.1.3. ຄຸນນະພາບ ແລະ ຄວາມສອດຄ່ອງ

➢ **ດ້ານຫຼັກສູດ**

ໃນສົກຮຽນ 2019-2020, ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໄດ້ເອົາໃຈໃສ່ສືບຕໍ່ປັບປຸງຄຸນນະພາບການສຶກສາໃນຊັ້ນປະຖົມໃຫ້ດີຂຶ້ນ ພ້ອມທັງໄດ້ສອດແຊກບາງຫຼັກສູດທີ່ເຫັນວ່າມີຄວາມຈໍາເປັນ ໃຫ້ເດັກນ້ອຍໃນຊັ້ນປະຖົມໄດ້ຮຽນຮູ້ ເຊັ່ນ: ຫຼັກສູດລະເບີດບໍ່ທັນແຕກ ວຽກງານສົ່ງເສີມສຸຂະພາບ, ວຽກງານເພດສຶກສາ ແລະ ທັກສະຊີວິດ. ສໍາລັບການສະໜອງປຶ້ມ ກໍ່ໄດ້ສໍາເລັດການຮຽບຮຽງ ແລະ ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູ ໃນຂັ້ນ ປ.1, ປ.2 ແລະ ປ.3 ຈໍານວນໜຶ່ງ. ນອກຈາກນັ້ນ, ກໍ່ໄດ້ສໍາເລັດການສະໜອງປຶ້ມແບບຮຽນໃໝ່ ໃຫ້ນັກຮຽນຂັ້ນ ປ.1 ຈໍານວນ 1 ຊຸດ ຕໍ່ 1 ຄົນ, ຄູ່ມືຄູ ແລະ ອຸປະກອນຕ່າງໆ ໃຫ້ແກ່ຄູໃນທົ່ວປະເທດໃນຂັ້ນ ປ.1. ສ່ວນໃນຂັ້ນ ປ.2 ແມ່ນໄດ້ສະໜອງປຶ້ມແບບຮຽນໃໝ່ ແລະ ຄູ່ມືຄູວິຊາຄະນິດສາດ ໃນທົ່ວປະເທດ ພ້ອມທັງໄດ້ຮັບການຝຶກອົບຮົມກ່ຽວກັບຫຼັກສູດໃໝ່ດັ່ງກ່າວ. ພ້ອມດຽວກັນ ກໍ່ຍັງໄດ້ມີການຮຽບຮຽງ ແລະ ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູຝຶກເວົ້າພາສາລາວ ຂັ້ນ ປ.1 ຈໍານວນ 1.370 ຫົວ ພ້ອມທັງລົງຕິດຕາມການຮຽນ-ການສອນ ຢູ່ໃນ 4 ແຂວງທົດລອງ ເພື່ອເປັນການແກ້ໄຂບັນຫາກ່ຽວກັບ ການນໍາໃຊ້ພາສາລາວສໍາລັບເດັກຊົນເຜົ່າ ເຊິ່ງເຫັນວ່າເປັນສາເຫດໜຶ່ງຂອງການຄ້າງຫ້ອງ ແລະ ການປະລະໃນຊັ້ນປະຖົມສຶກສາ.

➢ **ດ້ານບຸກຄະລາກອນ**

ໃນການປັບປຸງຄຸນນະພາບການສຶກສາ, ຜູ້ບໍລິຫານ ແລະ ຄູສອນ ເປັນປັດໄຈຫຼັກ ທີ່ຕັດສິນດ້ານຄຸນນະພາບຂອງການຮຽນ-ການສອນ ແລະ ການຄຸ້ມຄອງໃນໂຮງຮຽນ. ດັ່ງນັ້ນ, ໃນສົກຮຽນຜ່ານມາ ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ສະໜັບສະໜູນ, ຕິດຕາມ ແລະ ຊຸກຍູ້ ຂັ້ນທ້ອງຖິ່ນໃນດ້ານ

ຕ່າງໆ ຄື: ໄດ້ມີການປະເມີນ ແລະ ຕີລາຄາຕໍາແໜ່ງວິຊາການຄູຈໍານວນໜຶ່ງຈາກຂັ້ນສູນກາງ; ໃນຂັ້ນ ປ.1 ຄູສອນໄດ້ຮັບການຝຶກອົບຮົມຫຼັກສູດໃໝ່ໃນຂອບເຂດທົ່ວປະເທດ; ຄູສອນ ປ.2 ໄດ້ຮັບການຝຶກອົບຮົມວິຊາຄະນິດສາດຕາມຫຼັກສູດໃໝ່ ແລະ ໄດ້ຖອດຖອນບົດຮຽນຈໍານວນໜຶ່ງ; ຜູ້ອໍານວຍການໂຮງຮຽນປະຖົມ 88 ເມືອງ ບູລິມະສິດໄລຍະທີ 1 ໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານ-ຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ (SBM) ສະໜັບສະໜູນໂດຍໂຄງການ GPE II . ສໍາລັບວຽກງານສຶກສານິເທດ ກໍ່ໄດ້ຮັບການເອົາໃຈໃສ່ຫຼາຍຂຶ້ນ ໂດຍໄດ້ຮັບການສະໜັບສະໜູນຈາກອົງການ UNICEF ໃນການຝຶກອົບຮົມຄູນິເທດໃນ 9 ແຂວງເປົ້າໝາຍ (ໂມດູນ 1), ສໍາເລັດການປັບປຸງ ແລະ ຮຽບຮຽງຄືນໃໝ່ ກ່ຽວກັບ ເອກະສານຄູ່ມືການຝຶກອົບຮົມຄູສຶກສານິເທດ ຊັ້ນປະຖົມ ໂມດູນ 2 ແລະ ສໍາເລັດການຝຶກອົບຮົມຄູນິເທດໃນແຂວງ ຜົ້ງສາລີ, ຫົວພັນ ແລະ ຊຽງຂວາງ. ນອກນັ້ນ, ຄູສຶກສານິເທດ ເມືອງເປົ້າໝາຍຂອງອົງການ ບີກົວ ຢູ່ແຂວງ ສະຫວັນນະເຂດ ແລະ ແຂວງ ສາລະວັນ ກໍ່ໄດ້ຮັບຝຶກອົບຮົມກ່ຽວກັບການເກັບກໍາຂໍ້ມູນໃນການລົງຕິດຕາມການສອນຂອງຄູ ທີ່ຜ່ານການຝຶກອົບຮົມຫຼັກສູດໃໝ່ ປ.1 (ໂປຼແກມ KOBO).

- **ດ້ານຜົນການຮຽນຂອງນັກຮຽນ**

ການສອບເສັງນັກຮຽນເກັ່ງສົກຮຽນ 2019-2020 ແມ່ນແຂວງຮັບຜິດຊອບຈັດຕັ້ງປະຕິບັດ 16 ແຂວງ ແລະ 1 ນະຄອນຫຼວງວຽງຈັນ (ແຂວງຫົວພັນບໍ່ໄດ້ຈັດຕັ້ງປະຕິບັດ) ເຊິ່ງມີນັກຮຽນເຂົ້າຮ່ວມການແຂ່ງຂັນຄັ້ງນີ້ທັງໝົດ 697 ຄົນ, ຍິງ 466 ຄົນ, ການສອບເສັງມີ 3 ວິຊາຄື: ວິຊາພາສາລາວ, ຄະນິດສາດ ແລະ ໂລກອ້ອມຕົວເຮົາ. ຜ່ານການສອບເສັງສາມາດສະຫຼຸບໄດ້ດັ່ງນີ້: ຄະແນນຕໍ່າສຸດຂອງການສອບເສັງທັງ 3 ວິຊາ ແມ່ນຄະແນນ 0, ຄະແນນສູງສຸດ ວິຊາພາສາລາວ 9,7; ຄະນິດສາດ 9,3 ແລະ ໂລກອ້ອມຕົວເຮົາ ແມ່ນສາມາດຍາດໄດ້ຄະແນນເຕັມ 10 ຊຶ່ງໄດ້ຈາກນັກສອບເສັງແຂວງເຊກອງ, ໃນນັ້ນ ມີຈໍານວນນັກສອບເສັງທີ່ໄດ້ຄະແນນ 7 ຂຶ້ນໄປ 61 ຄົນ ເທົ່າກັບ 8,76% ເພີ່ມຂຶ້ນຈາກສົກຜ່ານມາ 2,46%. ສ່ວນວຽກງານກ່ຽວກັບການວິເຄາະຂໍ້ມູນ ການປະເມີນຜົນສໍາເລັດຂອງນັກຮຽນ (SEA-PLM) ແລະ ການປະເມີນຜົນການຮຽນຂອງນັກຮຽນ ຂັ້ນ ປ.5 ໃນທົ່ວປະເທດແມ່ນບໍ່ທັນໄດ້ຈັດຕັ້ງປະຕິບັດສາເຫດເນື່ອງຈາກ ການລະບາດຂອງພະຍາດປອດອັກເສບ COVID-19.

### 2.1.4. ການບໍລິຫານ ແລະ ການຄຸ້ມຄອງ

ໃນປີ 2020 ກະຊວງສຶກສາທິການ ແລະ ກິລາ ໄດ້ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງຂໍ້ຕົກລົງວ່າດ້ວຍການນິເທດການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ; ໄດ້ສໍາເລັດປັບປຸງ ແລະ ພັດທະນາຄູ່ມືປະກັນຄຸນນະພາບການສຶກສາຂັ້ນພື້ນຖານ ສໍາລັບຊັ້ນປະຖົມສຶກສາ. ນອກນັ້ນ, ຂໍ້ຕົກລົງ ວ່າດ້ວຍມາດຕະຖານນໍ້າ ແລະ ສຸຂະອະນາໄມໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ, ຄູ່ມືການຈັດຕັ້ງ ແລະ ເຄື່ອນໄຫວກຸ່ມໂຮງຮຽນປະຖົມໄດ້ຖືກຮັບຮອງ ແລະ ເຜີຍແຜ່ຢ່າງເປັນທາງການໃຫ້ແກ່ພະແນກສຶກສາທິການ ແລະ ກິລາ/ນະຄອນຫຼວງ ເພື່ອເປັນບ່ອນອີງ ແລະ ນໍາໃຊ້ເຂົ້າໃນການຝຶກອົບຮົມໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນເມືອງ, ຂັ້ນໂຮງຮຽນ ແລະ ຄູ ໃນຂອບເຂດທົ່ວປະເທດ.

ເພື່ອຮັບປະກັນໃຫ້ການບໍລິຫານ-ຄຸ້ມຄອງໂຮງຮຽນມີປະສິດທະພາບ ແລະ ປະສິດທິຜົນດີຂຶ້ນ, ໃນປີ 2020 ລັດຖະບານໄດ້ສືບຕໍ່ສະໜອງເງິນບໍລິຫານສະຖານການສຶກສາສໍາລັບຊັ້ນປະຖົມ ລວມທັງຫ້ອງກຽມປະຖົມ. ແຕ່ການສະໜອງເງິນດັ່ງກ່າວ ແມ່ນບໍ່ໄດ້ຕາມແຜນ ເນື່ອງຈາກສະພາບການເງິນຂອງລັດຖະບານມີຄວາມຫຍຸ້ງຍາກ ຍ້ອນຜົນກະທົບຈາກ ພະຍາດໂຄວິດ 19.

ເຖິງຢ່າງໃດກໍ່ຕາມ ລັດຖະບານກໍ່ຍັງຕ້ອງການ ການຊ່ວຍເຫຼືອ ແລະ ການຮ່ວມມືຈາກອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາທັງພາຍໃນ ແລະ ຕ່າງປະເທດ ໃນການປັບປຸງພື້ນຖານໂຄງລ່າງ, ການບໍລິຫານ-ຄຸ້ມຄອງ, ການຈັດການຮຽນ-ການສອນ, ເພື່ອຮັບປະກັນໃຫ້ນັກຮຽນມີຜົນການຮຽນດີຂຶ້ນເທື່ອລະກ້າວ.

## 2.2. ບັນຫາ ແລະ ສິ່ງທ້າທາຍ

ເຖິງວ່າລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ສຸມທັງການຊ່ວຍເຫຼືອທາງດ້ານວິຊາການ ແລະ ດ້ານງົບປະມານ ເຂົ້າໃສ່ການພັດທະນາການສຶກສາຊັ້ນປະຖົມ ເພື່ອໃຫ້ມີຄຸນນະພາບ ແຕ່ໃນການຈັດຕັ້ງປະຕິບັດຕົວຈິງກໍ່ປັດສະຈາກບໍ່ໄດ້ກັບບັນຫາ ແລະ ສິ່ງທ້າທາຍທີ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດ, ດັ່ງລາຍລະອຽດລຸ່ມນີ້:

1) ການປະເມີນຄູສອນທ້າຍປີ ເນັ້ນໃສ່ການແຕ່ງບົດສອນຫຼາຍເກີນໄປ ແລະ ບໍ່ໄດ້ເນັ້ນໜັກໃສ່ຜົນການຮຽນຂອງນັກຮຽນເທົ່າທີ່ຄວນ;
2) ໂຮງຮຽນສ່ວນຫຼາຍເປັນໂຮງຮຽນມູນ, ໂຮງຮຽນຂະໜາດນ້ອຍ ແລະ ບ້ານຢູ່ຫ່າງໄກໂຮງຮຽນສົມບູນ;
3) ການດຳລົງຊີວິດຂອງປະຊາຊົນຍັງຢູ່ກະແຈກກະຈາຍ, ບໍ່ມີອາຊີບຄົງທີ່, ຮອດລະດູການຜະລິດຈຳເປັນຕ້ອງເອົາລູກຫຼານອອກໄປອາໄສຢູ່ໄຮ່ຢູ່ສວນນຳ ເຮັດໃຫ້ຮຽນບໍ່ຄົບຫຼັກສູດ ແລ້ວກໍ່ປະລະການຮຽນ;
4) ຜູ້ອຳນວຍການໂຮງຮຽນ ແລະ ຄູສອນຈຳນວນໜຶ່ງ ຂາດຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ;
5) ຄູຈຳນວນໜຶ່ງຍັງບໍ່ເຂົ້າໃຈ ແລະ ພົບຄວາມຫຍຸ້ງຍາກໃນການສອນຫຼັກສູດໃໝ່ ປ.1 ແລະ ຄະນິດສາດ ປ.2;
6) ການລົງຕິດຕາມ, ຊຸກຍູ້ ຂອງຄູສຶກສານິເທດ ແລະ ຜູ້ບໍລິຫານຂັ້ນແຂວງ/ຂັ້ນເມືອງ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ ແລະ ບໍ່ໄດ້ດີເທົ່າທີ່ຄວນເນື່ອງຈາກງົບປະມານມີຈຳກັດ;
7) ການສະໜອງເງິນບໍລິຫານໂຮງຮຽນ ສຳລັບຊັ້ນປະຖົມຍັງຊັກຊ້າ ບໍ່ທັນກັບສະພາບການຈັດຕັ້ງປະຕິບັດ;
8) ການປະສານງານລະຫວ່າງ ໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ/ຊຸມຊົນ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

## 2.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

### 2.3.1. ຈຸດປະສົງ

1) ເພື່ອປັບປຸງຄຸນນະພາບການຮຽນ-ການສອນ ໃນຊັ້ນປະຖົມໃຫ້ດີຂຶ້ນ ພ້ອມທັງຫຼຸດຜ່ອນອັດຕາປະລະ ແລະ ອັດຕາຄ້າງຫ້ອງ;
2) ຮັບປະກັນໃຫ້ເດັກທີ່ຮຽນຈົບຊັ້ນປະຖົມມີຄວາມຮູ້, ມີຄວາມສາມາດ, ທັກສະໃນການອ່ານ, ການຂຽນໄດ້ ແລະ ຄິດໄລ່ເລກຂັ້ນພື້ນຖານໄດ້;
3) ເພື່ອປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງໂດຍເນັ້ນໃສ່ໂຮງຮຽນເປັນຫຼັກ.

### 2.3.2. ຄາດໝາຍ

1) ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ ໃຫ້ບັນລຸໄດ້ສູງກວ່າ 99%;
2) ຫຼຸດຜ່ອນອັດຕາຄ້າງຫ້ອງ ຂອງນັກຮຽນ ປ.1 ໃຫ້ຍັງເຫຼືອຕໍ່າກວ່າ 6%;
3) ຫຼຸດຜ່ອນອັດຕາປະລະການຮຽນ ຂອງນັກຮຽນ ປ.1 ໃຫ້ຍັງເຫຼືອຕໍ່າກວ່າ 6%;
4) ຫຼຸດຜ່ອນອັດຕາຄ້າງຫ້ອງຂອງນັກຮຽນຊັ້ນປະຖົມສຶກສາໃຫ້ຍັງເຫຼືອຕໍ່າກວ່າ 3%;
5) ຫຼຸດຜ່ອນອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມສຶກສາໃຫ້ຍັງເຫຼືອຕໍ່າກວ່າ 4%;
6) ອັດຕາເຂົ້າຮຽນລວມໃໝ່ ປ.5 ໃຫ້ບັນລຸ 100%;
7) ອັດຕາລອດເຫຼືອ ຮອດ ປ.5 ໃຫ້ບັນລຸສູງກວ່າ 82,5%;
8) ອັດຕາຈົບຊັ້ນປະຖົມຕາມກະແສນັກຮຽນໃຫ້ບັນລຸໄດ້ 81%;

9) ເປີເຊັນຂອງນັກຮຽນ ປ.3 ທີ່ບັນລຸມາດຕະຖານການຮຽນຮູ້ວິຊາພາສາລາວ ໃຫ້ໄດ້ 50% ແລະ ວິຊາຄະນິດສາດ ໃຫ້ໄດ້ 30%.

**2.3.3. ວຽກຈຸດສຸມ**

1) ສືບຕໍ່ເອົາໃຈໃສ່ໃຫ້ນັກຮຽນຍິງ ແລະ ນັກຮຽນຊາຍ ໄດ້ເຂົ້າເຖິງການສຶກສາດ້ວຍຄວາມເທົ່າທຽມກັນ ໂດຍບໍ່ເລືອກເພດ, ເຜົ່າ, ສາດສະໜາ, ຖານະທາງສັງຄົມ ບໍ່ວ່າຢູ່ໃນຕົວເມືອງ ກໍ່ຄືຊົນນະບົດ ລວມທັງນັກ ຮຽນທີ່ມີຄວາມຕ້ອງການຊ່ວຍເຫຼືອພິເສດ;
2) ສືບຕໍ່ສົມທົບກັບອໍານາດການປົກຄອງທ້ອງຖິ່ນ ເພື່ອປຸກລະດົມພໍ່ແມ່ຜູ້ປົກຄອງ ໃຫ້ຮັບຮູ້ຄວາມໝາຍຄວາມສໍາຄັນຂອງການສຶກສາຂັ້ນພື້ນຖານ, ເອົາໃຈໃສ່ສົ່ງລູກຫຼານຂອງຕົນມາຮຽນໃຫ້ເປັນປົກກະຕິພ້ອມທັງຕິດຕາມການຮຽນຂອງລູກເວລາຢູ່ບ້ານ;
3) ສ້າງຕັ້ງກຸ່ມໂຮງຮຽນ ເພື່ອໃຫ້ຄູໄດ້ມີໂອກາດລະດົມສະໝອງ, ແລກປ່ຽນບົດຮຽນນໍາກັນ ແລະ ສືບຕໍ່ປັບປຸງລະບົບກຸ່ມໂຮງຮຽນຄືນໃໝ່ ພ້ອມທັງຈັດກອງປະຊຸມຝຶກອົບຮົມການນໍາໃຊ້ຄູ່ມືແນະນໍາການຈັດຕັ້ງ ແລະ ເຄື່ອນໄຫວກຸ່ມໂຮງຮຽນປະຖົມ;
4) ສືບຕໍ່ຈັດຕັ້ງປະຕິບັດການຮຽນ-ການສອນຕາມໂຄງການຫຼັກສູດຂອງກະຊວງສຶກສາທິການ ແລະ ກິລາ ກໍານົດໄວ້ພ້ອມທັງປະເມີນການຮຽນ-ການສອນຂອງຄູ ແລະ ນັກຮຽນ;
5) ກວດກາຄືນຄວາມເໝາະສົມ ແລະ ຄວາມຈໍາເປັນໃນການດໍາເນີນການສິດສອນຫ້ອງຄວບໂດຍສະເພາະບັນດາໂຮງຮຽນປະຖົມສົມບູນ, ດໍາເນີນການປະເມີນຄວາມຮູ້ຄວາມສາມາດ ແລະ ຈັນຍາບັນຂອງຄູປະຖົມ ແລະ ຍົກລະດັບໃຫ້ແກ່ຄູປະຈໍາການໂດຍສະເພາະຜູ້ທີ່ບໍ່ໄດ້ມາດຖານ;
6) ສະໜອງອຸປະກອນ/ສື່ການຮຽນການສອນ ແລະ ສິ່ງອໍານວຍຄວາມສະດວກສໍາລັບນັກຮຽນພິການ ແລະ ເດັກທີ່ມີຄວາມຕ້ອງການພິເສດ;
7) ສະໜອງນໍ້າໃຊ້ ແລະ ຫ້ອງນໍ້າແຍກຍິງ-ຊາຍໃຫ້ແກ່ໂຮງຮຽນປະຖົມໃຫ້ທົ່ວເຖິງທັງໃນເຂດສະບານ ແລະ ຊົນນະບົດ ທີ່ມີເງື່ອນໄຂທີ່ເໝາະສົມ. ສືບຕໍ່ປຸກລະດົມຊຸມຊົນປະກອບສ່ວນໃນການສົ່ງເສີມສຸຂະອະນາໄມ, ໂພຊະນາການ, ສຸຂະພິບານ ແລະ ປັບປຸງສະພາບແວດລ້ອມໃນໂຮງຮຽນ;
8) ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ພ້ອມທັງຄູສຶກສານິເທດ ໃຫ້ລົງຕິດຕາມ ແລະ ຊຸກຍູ້ຜູ້ອໍານວຍການໂຮງຮຽນ ແລະ ຄູສອນໂດຍສະເພາະຢູ່ໂຮງຮຽນທີ່ຜົນການຮຽນຂອງນັກຮຽນຕໍ່າ;
9) ສົ່ງເສີມການຈັດການຮຽນ-ການສອນ ວິຊາພາສາລາວ ແລະ ຄະນິດສາດ ໂດຍສະເພາະໃນຂັ້ນ ປ.1 ແລະ ປ.2 ເພື່ອໃຫ້ນັກຮຽນທີ່ຮຽນຈົບຊັ້ນປະຖົມ ສາມາດກຸ້ມຕົນເອງ ອ່ານອອກ, ຂຽນເປັນ ແລະ ຄິດໄລ່ເລກຂັ້ນພື້ນຖານໄດ້ຖືກຕ້ອງ;
10) ລົງຕິດຕາມການປະຕິບັດການຮຽນ-ການສອນຫຼັກສູດໃໝ່;
11) ສືບຕໍ່ທົບທວນຄືນລະບຽບການ ແລະ ວິທີການສອນຫ້ອງຄວບ ແລະ ການຮຽນຮ່ວມ ພ້ອມທັງຖອດຖອນບົດຮຽນການຈັດຕັ້ງປະຕິບັດ;
12) ປັບປຸງ ແລະ ພັດທະນາຄູ່ມືການຈັດຕັ້ງປະຕິບັດວຽກງານຂອງຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ສໍາລັບຊັ້ນປະຖົມສຶກສາ;
13) ປັບປຸງເຄື່ອງມື ການຈັດຕັ້ງປະຕິບັດວຽກງານການວັດຜົນແບບຕໍ່ເນື່ອງ, ທົດລອງ, ເຜີຍແຜ່ ແລະ ຝຶກອົບຮົມວິທີການນໍາໃຊ້;

14) ສ້າງ, ພັດທະນາເຄື່ອງມືປະເມີນຄູສຶກສານິເທດຊັ້ນປະຖົມ ແລະ ຄູ່ມືການນິເທດພາຍໃນຂອງຜູ້ອໍານວຍການໂຮງຮຽນປະຖົມ;
15) ສ້າງ ແລະ ພັດທະນາຄູ່ມືກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວກຸ່ມໂຮງຮຽນຕົວແບບ;
16) ຕິດຕາມ ແລະ ຮ່ວມມືກັບສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໃນການພັດທະນາຫຼັກສູດໃໝ່ຊັ້ນປະຖົມ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຂັ້ນ ປ.3.

# III. ຂະແໜງການຍ່ອຍມັດທະຍົມສຶກສາຕອນຕົ້ນ

## 3.1. ຜົນສຳເລັດ

### 3.1.1. ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ການສຶກສາຊັ້ນມັດທະຍົມຕອນຕົ້ນ (ມ.ຕົ້ນ) ເປັນຂະແໜງການຍ່ອຍໜຶ່ງທີ່ເປັນບຸລິມະສິດ ເຊິ່ງເປັນການສຶກສາພາກບັງຄັບເຊັ່ນດຽວກັບການສຶກສາຊັ້ນປະຖົມ. ສຳລັບການຂະຫຍາຍໂອກາດໃນການເຂົ້າເຖິງການສຶກສາຊັ້ນມັດທະຍົມສຶກສາຕອນຕົ້ນ, ລັດຖະບານ ກໍ່ຄືກະຊວງສຶກສາທິການ ແລະ ກິລາ ໄດ້ຮ່ວມກັບອົງການຈັດຕັ້ງສາກົນ, ຮ່ວມກັບບັນດາຄູ່ຮ່ວມພັດທະນາ, ອຳນາດການປົກຄອງຂັ້ນທ້ອງຖິ່ນ ແລະ ພາກສ່ວນເອກະຊົນ ໄດ້ປັບປຸງສະພາບແວດລ້ອມໂຮງຮຽນ, ສ້າງ ແລະ ສ້ອມແປງໂຮງຮຽນ, ຫ້ອງຮຽນ, ຫໍພັກຄູ, ຫໍພັກນັກຮຽນໃຫ້ແກ່ບັນດາໂຮງຮຽນມັດທະຍົມໃນເຂດຫ່າງໄກສອກຫຼີກ ພ້ອມທັງຊຸກຍູ້ສິ່ງເສີມ ແລະ ສະໜອງສິ່ງອຳນວຍຄວາມສະດວກອື່ນໆ ເຊັ່ນ: ຫ້ອງນໍ້າ, ລະບົບນໍ້າໃຊ້ໃນໂຮງຮຽນຈຳນວນໜຶ່ງ, ສະໜອງເງິນເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ທຸກຍາກດ້ອຍໂອກາດ, ເດັກຍິງຊົນເຜົ່າ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າເຖິງການສຶກສາຫຼາຍຂຶ້ນ.

ແຕ່ເຖິງຢ່າງໃດກໍ່ຕາມ, ເຫັນວ່າການເຂົ້າຮຽນໃນຊັ້ນມັດທະຍົມຕອນຕົ້ນ ຍັງມີລັກສະນະຄົງທີ່. ໃນສົກຮຽນ 2019-2020, ອັດຕາເລື່ອນຊັ້ນຂຶ້ນ ມ.1 ທຽບໃສ່ນັກຮຽນທີ່ຈົບ ປ.5 ແມ່ນເທົ່າເດີມ ທຽບໃສ່ປີຜ່ານມາ (87,9%) ໝາຍຄວາມວ່າ ມີນັກຮຽນປະມານ 12% (ປະມານ 13.900 ຄົນ) ທຽບໃສ່ນັກຮຽນຈົບ ປ.5 ໃນສົກຮຽນ 2018-2019 ທີ່ບໍ່ໄປຮຽນຕໍ່ ມ.1 ໃນສົກຮຽນ 2019-20. ສຳລັບການເຂົ້າຮຽນລວມໃນຊັ້ນມັດທະຍົມຕອນຕົ້ນ ເຫັນວ່າທາງດ້ານຈຳນວນນັກຮຽນ ໃນຊັ້ນມັດທະຍົມຕອນຕົ້ນ ຫຼຸດລົງຈາກປີຜ່ານມາ (ຈາກ 442.856 ຄົນ ເປັນ 429.150 ຄົນ), ແຕ່ເນື່ອງຈາກ ຈຳນວນປະຊາກອນອາຍຸ 11-14 ປີ ຫຼຸດລົງຫຼາຍ ຈຶ່ງເຮັດໃຫ້ ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 82,8% ເປັນ 83,3%. ສ່ວນທາງດ້ານຄວາມສະເໝີພາບລະ ຫວ່າງເພດໃນການເຂົ້າຮຽນກໍ່ເຫັນວ່າເດັກຍິງ ແລະ ເດັກຊາຍໄດ້ເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ເທົ່າທຽມກັນຫຼາຍຂຶ້ນ. ຮູບພາບທີ 9 ລຸ່ມນີ້ ສະແດງໃຫ້ເຫັນອັດຕາເລື່ອນຊັ້ນໃນລະດັບແຂວງ ປຽບທຽບລະຫວ່າງສົກຮຽນ 2018-2019 ແລະ 2019-2020.

**ຮູບພາບທີ 9: ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃນລະດັບແຂວງ ສົກຮຽນ 2018-2019 ແລະ 2019-2020**




ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

ເມື່ອເບິ່ງອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃນລະດັບແຂວງເຫັນວ່າ ມີ 9 ແຂວງທີ່ມີອັດຕາດັ່ງກ່າວຫຼຸດລົງ ແລະ 9 ແຂວງ ທີ່ເພີ່ມຂຶ້ນ. ແຕ່ຖ້າເບິ່ງຈຳນວນຂອງນັກຮຽນເຂົ້າໃໝ່ ມ.1 ນັ້ນ, ເຮົາຈະເຫັນໄດ້ວ່າ ແຂວງສະຫວັນນະເຂດ ທີ່ ມີອັດຕາເລື່ອນຊັ້ນຫຼຸດເປັນອັນດັບ 2 ມີຈຳນວນນັກຮຽນເຂົ້າໃໝ່ຫຼຸດລົງຈາກປີຜ່ານມາຫຼາຍທີ່ສຸດ (ຫຼຸດລົງ 1.234 ຄົນ). ໃນທາງກົງກັນຂ້າມ, ແຂວງຫຼວງພະບາງ ທີ່ມີອັດຕາເລື່ອນຊັ້ນເພີ່ມຂຶ້ນເຖິງ 2,4% ແຕ່ມີນັກຮຽນເຂົ້າໃໝ່ຫຼຸດລົງເປັນອັນດັບທີ 2 ຮອງຈາກແຂວງສະຫວັນນະເຂດ (ຫຼຸດ 623 ຄົນ). ສະນັ້ນ, ຈິ່ງເຫັນໄດ້ວ່າ ໃນການວິເຄາະກ່ຽວກັບການເລື່ອນຊັ້ນຂຶ້ນ ມ.1 ກໍ່ຄືການເຂົ້າຮຽນລວມໃນຊັ້ນ ມັດທະຍົມຕອນຕົ້ນ ເຮົາມີຄວາມຈຳເປັນຕ້ອງໄດ້ວິເຄາະທັງທາງດ້ານອັດຕາ ແລະ ທາງດ້ານຈຳນວນ ເນື່ອງຈາກວ່າ ການຫຼຸດ ຫຼື ເພີ່ມຂອງນັກຮຽນ ລ້ວນແຕ່ມີຜົນຕໍ່ການຈັດສັນຊັບພະຍາກອນຕ່າງໆ ພາຍໃນໂຮງຮຽນ ເປັນຕົ້ນແມ່ນການຈັດສັນຫ້ອງຮຽນ ແລະ ຄູສອນ.

**ຕາຕະລາງທີ 6: ຕົວຊີ້ບອກໃນຊັ້ນ ມັດທະຍົມຕອນຕົ້ນ**

| ຕົວຊີ້ບອກ | 2018-2019 | ປະຕິບັດໄດ້ 2019-2020 |
|---|---|---|
| ຈຳນວນຫ້ອງຮຽນ (ຫ້ອງ) | 12.903 | 13.153 |
| ຈຳນວນນັກຮຽນທັງໝົດ (ຄົນ) | 442.856 | 429.150 |
| ອັດຕາເລື່ອນຊັ້ນຂອງນັກຮຽນຈົບ ປ.5 ຂຶ້ນ ມັດທະຍົມສຶກສາຕອນຕົ້ນ (%) | 87,9 | 87,9 |
| ອັດຕາເຂົ້າຮຽນລວມ (%) | 82,8 | 83,3 |
| ອັດຕາຄ້າງຫ້ອງ (%) | 1,2 | 1,2 |
| ອັດຕາປະລະ (%) | 9,5 | 10,3 |
| ອັດຕາລອດເຫຼືອຮອດ ມ.4 (%) | 71,5 | 68,9 |
| ອັດຕາຈົບຊັ້ນມ.4 ຕາມກະແສຮຸ່ນນັກຮຽນ (%) | 67,2 | 65,2 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 3.1.2. ປະສິດທິພາບພາຍໃນ

ເຖິງວ່າໃນໄລຍະຜ່ານມາ ທັງພາກລັດ, ເອກະຊົນ ແລະ ຄູ່ຮ່ວມພັດທະນາ ໄດ້ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ປັບປຸງຄຸນນະພາບການສຶກສາໃນຊັ້ນມັດທະຍົມຕົ້ນຢ່າງໜັກໜ່ວງກໍ່ຕາມ, ແຕ່ຈາກຂໍ້ມູນສະຖິຕິໃນຕາຕະລາງຂ້າງເທິງນີ້ເຫັນໄດ້ວ່າ ການສຶກສາໃນຊັ້ນມັດທະຍົມຕົ້ນກຳລັງພົບກັບຄວາມທ້າທາຍສູງ ໂດຍສະເພາະແມ່ນທາງດ້ານປະສິດທິພາບພາຍໃນ ໃນການຄຸ້ມຄອງການສຶກສາ. ຈາກຕາຕະລາງສັງເກດໄດ້ວ່າ ອັດຕາຄ້າງຫ້ອງ ແລະ ອັດຕາປະລະໃນຊັ້ນມັດທະຍົມຕົ້ນມີທ່າອ່ຽງເພີ່ມຂຶ້ນ ອັນເປັນສາເຫດໃຫ້ອັດຕາລອດເຫຼືອຮອດ ມ.4 ແລະ ອັດຕາຈົບຊັ້ນ ມ.4 ຫຼຸດລົງ ເຊິ່ງເປັນສິ່ງທ້າທາຍຫຼາຍຕໍ່ການບັນລຸຄາດໝາຍ 4.1 ຂອງເປົ້າໝາຍພັດທະນາແບບຍືນຍົງ.

ໃນສົກຮຽນ 2019-2020, ອັດຕາປະລະໃນຊັ້ນ ມ.ຕົ້ນ ໄດ້ເພີ່ມຂຶ້ນ ຈາກ 9,5% ເປັນ 10,3% ແລະ ໃນຊັ້ນ ມ.1 ເພີ່ມຈາກ 11,3% ເປັນ 12,3%. ຮູບພາບທີ 10 ສະແດງໃຫ້ເຫັນວ່າ ມີ 6 ແຂວງ ທີ່ມີອັດຕາປະລະຊັ້ນມັດທະຍົມຕົ້ນ ຫຼຸດລົງ ແລະ ມີ 12 ແຂວງທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ເມື່ອທຽບໃສ່ສົກຮຽນຜ່ານມາ. ເມື່ອເບິ່ງຂໍ້ມູນໃນລະດັບເມືອງ ເຫັນໄດ້ວ່າ ມີ 84 ເມືອງ ທີ່ມີອັດຕາປະລະເພີ່ມຂຶ້ນ ເຊິ່ງໃນນັ້ນ ມີ 19 ເມືອງ ທີ່ນອນໃນ 40 ເມືອງດ້ອຍໂອກາດທາງການສຶກສາ. ເມືອງທີ່ມີອັດຕາປະລະເພີ່ມຂຶ້ນຫຼາຍທີ່ສຸດຄື: ເມືອງລ້ອງແຈ້ງ ແຂວງໄຊສົມບູນ (ຈາກ 4,7% ເປັນ 14,2%) ແລະ ເມືອງໄຊຈຳພອນ ແຂວງບໍລິຄຳໄຊ (ຈາກ 15,8% ເປັນ 24,3%) ເຊິ່ງທັງສອງເມືອງນອນຢູ່ໃນ 40 ເມືອງບູລິມະສິດ. ສ່ວນເມືອງທີ່ມີອັດຕາປະລະຫຼຸດລົງຫຼາຍທີ່ສຸດ ແມ່ນເມືອງຈຳປາສັກ, ແຂວງຈຳປາສັກ (ຈາກ 21,5% ເປັນ 11,9%), ຖັດມາແມ່ນ ເມືອງປາກທາ ແຂວງບໍ່ແກ້ວ (ຈາກ 14,4% ເປັນ 5,0%).

### ຮູບພາບທີ 10: ອັດຕາປະລະຊັ້ນ ມ.ຕົ້ນ ສົກຮຽນ 2018-19 ແລະ 2019-20




ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 3.1.3. ຄຸນນະພາບການສຶກສາ

ຄຽງຄູ່ກັບການຂະຫຍາຍໂອກາດ ແລະ ປັບປຸງປະສິດທິພາບພາຍໃນໃນການຄຸ້ມຄອງການສຶກສາແລ້ວ, ການປັບປຸງຄຸນນະພາບການສຶກສາເວົ້າລວມ ເວົ້າສະເພາະທາງດ້ານຜົນການຮຽນຂອງນັກຮຽນ ກໍເປັນອີກບັນຫາໜຶ່ງທີ່ຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ ເນື່ອງຈາກ ມັນຈະເປັນພື້ນຖານໃຫ້ນັກຮຽນທີ່ຈົບຊັ້ນ ມ.ຕົ້ນ ສືບຕໍ່ຮຽນໃນຊັ້ນທີ່ສູງຂຶ້ນໄປ. ໃນ ປີ 2019, ກະຊວງສຶກສາທິການ ແລະ ກິລາ ໄດ້ດຳເນີນການປະເມີນຜົນສຳເລັດດ້ານການຮຽນຂອງນັກຮຽນຊັ້ນ ມ.4 (ASLO M4) ໃນກຸ່ມຕົວຢ່າງ 180 ໂຮງຮຽນໃນທົ່ວປະເທດ (ນັກຮຽນ 4.096 ຄົນ, ຄູ 710 ຄົນ ແລະ ຜູ້ອຳນວຍການໂຮງຮຽນ 180 ຄົນ) ເຊິ່ງໃນການປະເມີນ ແມ່ນປະກອບມີທັງແບບທົດສອບ ແລະ ແບບສອບຖາມ. ຈາກຜົນການປະເມີນລະດັບຄວາມສາມາດຂອງນັກຮຽນຊັ້ນ ມ.4 ໃນ 3 ວິຊາ: ພາສາລາວ-ວັນນະຄະດີ, ຄະນິດສາດ ແລະ ວິທະຍາສາດທຳມະຊາດ ເຫັນໄດ້ຜົນການປະເມີນຄືດັ່ງນີ້:

- **ວິຊາພາສາລາວ-ວັນນະຄະດີ:**




ຮູບສະແດງນີ້ ໄດ້ສະແດງໃຫ້ເຫັນວ່າ ມີພຽງແຕ່ 1% ຂອງ ກຸ່ມຕົວຢ່າງ ທີ່ມີຜົນການຮຽນໃນລະດັບເກັ່ງຫຼາຍ, 27,8% ແມ່ນຢູ່ໃນລະດັບເກັ່ງ; 62,5% ມີຄວາມສາມາດໃນລະດັບພື້ນຖານ ແລະ 9,6% ທີ່ຍັງຢູ່ໃນລະດັບຕ່ຳກວ່າລະດັບຂັ້ນພື້ນຖານ.

## ➢ ວິຊາຄະນິດສາດ




ສຳລັບຜົນການຮຽນວິຊາຄະນິດສາດ ເຫັນໄດ້ວ່າ ມີພຽງແຕ່ 0,6% ຂອງນັກຮຽນທີ່ມີຜົນການຮຽນໃນລະດັບເກັ່ງ, ໃນຂະນະທີ່ມີ 5,8% ທີ່ຖືກຈັດຢູ່ໃນ ລະດັບພື້ນຖານ; ໃນຂະນະທີ່ ນັກຮຽນສ່ວນໃຫຍ່ ຄື ປະມານ 92,2% ທີ່ມີຄວາມສາມາດຕໍ່າກວ່າລະດັບພື້ນຖານ.

## ➢ ວິຊາວິທະຍາສາດທຳມະຊາດ




- ມີນັກຮຽນພຽງແຕ່ປະມານ 1% ຢູ່ໃນລະດັບເກັ່ງ;
- ມີນັກຮຽນພຽງ 49,8% ແມ່ນຢູ່ໃນລະດັບພື້ນຖານ; ແລະ
- ມີນັກຮຽນເກືອບ 50% ທີ່ມີຄວາມສາມາດຕໍ່າກວ່າລະດັບພື້ນຖານ.

ຈາກຜົນການປະເມີນ ALSO ມ.4 ທີ່ກ່າວມານີ້, ເຫັນໄດ້ວ່າ ຄວາມຮູ້ຂອງນັກຮຽນ ມ.4 ແມ່ນຢູ່ໃນລະດັບຕໍ່າກວ່າຄາດໝາຍ ໂດຍສະເພາະແມ່ນວິຊາຄະນິດສາດ ແລະ ວິທະຍາສາດທຳມະຊາດ. ນອກນັ້ນ, ຈາກການວິເຄາະຂໍ້ມູນຍັງເຫັນໄດ້ວ່າ ຄວາມສຳເລັດທີ່ແຕກຕ່າງກັນນັ້ນແມ່ນເກີດຈາກຫຼາຍໆປັດໄຈທີ່ແຕກຕ່າງກັນ ເປັນຕົ້ນແມ່ນ ເສດຖະກິດຄອບຄົວ, ລະດັບການສຶກສາຂອງຜູ້ປົກຄອງ, ການມີປຶ້ມແບບຮຽນ ແລະ ອຸປະກອນເປັນຂອງຕົນເອງ ແລະ ການເຂົ້າຮຽນຖືກເກນອາຍຸ. ແຕ່ປັດໄຈທີ່ເຫັນວ່າພົ້ນເດັ່ນທີ່ສຸດທີ່ສາມາດສ້າງຄວາມແຕກຕ່າງໄດ້ຄື: ຄູສອນ, ອຳນວຍການ ແລະ ໂຮງຮຽນ. ຄູສອນທີ່ໃຫ້ນັກຮຽນໄດ້ມີສ່ວນຮ່ວມໃນກິດຈະກຳ, ໄດ້ຖາມ-ຕອບ, ໄດ້ເຮັດບົດຝຶກຫັດ, ໄດ້ເຮັດວຽກບ້ານ ແລະ ຄູກວດຄືນວຽກບ້ານ, ໄດ້ມີການປະຕິບັດຕົວຈິງ ແມ່ນນັກຮຽນຈະມີຜົນການຮຽນດີກວ່ານັກຮຽນທີ່ບໍ່ໄດ້ມີການປະຕິບັດດັ່ງກ່າວ. ນອກຈາກນີ້ແລ້ວ, ຜົນການວິເຄາະຍັງສະແດງໃຫ້ເຮົາເຫັນອີກວ່າ ຄູ ມ.4 ເກືອບ 50% ບໍ່ໄດ້ຮັບການຝຶກອົບຮົມຫຼັກສູດ ແລະ ການສອນໃນວິຊາທີ່ຕົນສອນ, ຫຼາຍກວ່າ 50% ທີ່ບໍ່ເຄີຍເຫັນຄູສຶກສານິເທດ ແລະ ຜູ້ອຳນວຍການໂຮງຮຽນເຂົ້າຮ່ວມໂມງສອນ ແລະ ໃຫ້ການແນະນຳຕົນ ແລະ ຜູ້ອຳນວຍການໂຮງຮຽນກວ່າ 20% ທີ່ບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບ 7ໜ້າວຽກຂອງຜູ້ບໍລິຫານ.

ສະນັ້ນ, ການປະເມີນນັກຮຽນຂັ້ນ ມ.4 ໃນຄັ້ງນີ້ ຈຶ່ງສະແດງໃຫ້ເຮົາເຫັນວ່າ ຄວາມສາມາດຂອງນັກຮຽນເປັນບັນຫາທີ່ສະສົມມາຢ່າງເປັນລະບົບ. ນັກຮຽນມີພື້ນຖານຄວາມຮູ້ ແລະ ທັກສະທີ່ຈຳເປັນບໍ່ໜັກແໜ້ນ ມາແຕ່ຊັ້ນປະຖົມສຶກສາ ແລະ ທັງເປັນການກະກຽມທີ່ບໍ່ພຽງພໍ ເພື່ອສືບຕໍ່ໄປຍັງຊັ້ນມັດທະຍົມຕອນປາຍ ແລະ ການສຶກສາຊັ້ນ

ສູງ ກໍຄືການປະກອບອາຊີບໃນອະນາຄົດ. ດັ່ງນັ້ນ, ຜົນການປະເມີນນັກຮຽນໃນຄັ້ງນີ້ ຈິ່ງເປັນປະໂຫຍດຢ່າງສູງໃນການວາງແຜນພັດທະນາການສຶກສາ ເພື່ອແນໃສ່ປັບປຸງຄຸນນະພາບການຮຽນໃນທຸກຊັ້ນທຸກສາຍ ໂດຍສະເພາະແມ່ນໃນຊັ້ນການສຶກສາກ່ອນໄວຮຽນ ແລະ ຊັ້ນປະຖົມສຶກສາ.

### 3.2. ບັນຫາ ແລະ ສິ່ງທ້າທາຍ

ຄຽງຄູ່ກັບການສົ່ງເສີມໃຫ້ເດັກໄດ້ເຂົ້າຮຽນ ແລະ ເລັ່ງໃສ່ປັບປຸງຄຸນນະພາບຂອງການຮຽນຂອງນັກຮຽນຊັ້ນມັດທະຍົມຕົ້ນເພີ່ມຂຶ້ນນັ້ນ, ເຫັນວ່າໃນການຈັດຕັ້ງປະຕິບັດຕົວຈິງ ກໍ່ຍັງພົບບັນຫາ ແລະ ສິ່ງທ້າທາຍໃນຫຼາຍດ້ານ, ດັ່ງລາຍລະອຽດລຸ່ມນີ້:

1) ສະພາບແວດລ້ອມຂອງໂຮງຮຽນບໍ່ເໝາະສົມ, ຂາດສິ່ງອຳນວຍຄວາມສະດວກຕ່າງໆ ເປັນຕົ້ນແມ່ນບໍ່ມີລະບົບນ້ຳສະອາດ ແລະ ວິດຖ່າຍບໍ່ພຽງພໍ, ບໍ່ມີຫໍພັກທີ່ປອດໄພ ແລະ ຫ້ອງຮຽນແອອັດ;
2) ຜູ້ບໍລິຫານໂຮງຮຽນຈຳນວນໜຶ່ງ ຍັງບໍ່ໄດ້ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ການສອນຂອງຄູ;
3) ການສະໜອງປຶ້ມແບບຮຽນ, ອຸປະກອນການທົດລອງ, ອຸປະກອນຮັບໃຊ້ການຮຽນ-ການສອນ ຊັ້ນມັດທະຍົມສຶກສາຕອນຕົ້ນໃຫ້ແກ່ນັກຮຽນບໍ່ພຽງພໍ ແລະ ໂຮງຮຽນຫຼາຍແຫ່ງບໍ່ມີຫ້ອງທົດລອງວິທະຍາສາດ, ຫ້ອງສະໝຸດ;
4) ຢູ່ເຂດຫ່າງໄກສອກຫຼີກຄູສອນບໍ່ພຽງພໍ, ຄູສອນຜູ້ໜຶ່ງໄດ້ສອນຫຼາຍຕໍາລາ ຄູສອນບໍ່ຖືກຕາມວິຊາສະເພາະທີ່ຮຽນ ແລະ ມີໂຮງຮຽນຫຼາຍແຫ່ງຍັງໃຊ້ຄູອາສາສອນຊ່ວຍ;
5) ການລົງຕິດຕາມ, ຊຸກຍູ້ການຮຽນ-ການສອນ ຂອງຂະແໜງການທີ່ກ່ຽວຂ້ອງ, ນິເທດຂັ້ນແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ຍັງບໍ່ປົກກະຕິ, ບໍ່ຕໍ່ເນື່ອງ ແລະ ບໍ່ທົ່ວເຖິງ.

### 3.3. ແຜນວຽກບຸລິມະສິດ ສົກຮຽນ 2020-2021

#### 3.3.1. ຈຸດປະສົງ

1) ຮັບປະກັນໃຫ້ນັກຮຽນທຸກຄົນ ໄດ້ສືບຕໍ່ຮຽນຈົນຈົບຫຼັກສູດຊັ້ນມັດທະຍົມຕອນຕົ້ນ ຢ່າງມີຄຸນນະພາບ;
2) ຮັບປະກັນໃຫ້ໂຮງຮຽນມັດທະຍົມຕອນຕົ້ນທຸກແຫ່ງ ໄດ້ຮັບການສິດສອນຄົບທຸກວິຊາທີ່ກຳນົດໃນຫຼັກສູດພ້ອມທັງຮັບປະກັນດ້ານຄຸນນະພາບ;
3) ສ້າງໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ມີຄວາມຮູ້ພື້ນຖານດ້ານວິທະຍາສາດ ເພື່ອກະກຽມເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ.

#### 3.3.2. ຄາດໝາຍຫຼັກ

1) ອັດຕາການເລື່ອນຊັ້ນ ປ.5 ຫາ ມ.1 ໃຫ້ບັນລຸໄດ້ 87%
2) ອັດຕາເຂົ້າຮຽນລວມໃໝ່ ມ.4 ໃຫ້ບັນລຸໄດ້ 72%
3) ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ໃຫ້ບັນລຸ ສູງກວ່າ 84%

#### 3.3.3. ວຽກຈຸດສຸມ

1) ສ້າງ ແລະ ປັບປຸງນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການສຶກສາຊັ້ນມັດທະຍົມຕອນຕົ້ນ;
2) ສ້າງ ແລະ ປັບປຸງໂຮງຮຽນ, ຫ້ອງຮຽນ, ຫໍພັກຄູ-ນັກຮຽນ, ຫ້ອງນ້ຳ ແຍກຍິງ-ຊາຍ ພ້ອມທັງປັບປຸງລະບົບນ້ຳສະອາດໃຫ້ເຂດຈຸດສຸມ ທີ່ຢູ່ຫ່າງໄກສອກຫຼີກ ແລະ ບ່ອນທີ່ມີເງື່ອນໄຂ;
3) ອອກຂໍ້ສອບ ແລະ ສ້າງຄັງສອບເສັງນັກຮຽນເກັ່ງຊັ້ນມັດທະຍົມສຶກສາຕອນຕົ້ນລະດັບຊາດ;
4) ສະໜອງເງິນເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ທຸກຍາກ, ເດັກຍິງ, ຊົນເຜົ່າດ້ອຍໂອກາດດ້ວຍງົບປະມານຂອງລັດ;

5) ຕິດຕາມການຈັດຕັ້ງປະຕິບັດຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ;
6) ຝຶກອົບຮົມການນຳໃຊ້ຄູ່ມືມາດຕະຖານດ້ານນ້ຳ ແລະ ສຸຂະອະນາໄມໃນໂຮງຮຽນຕາມຮູບແບບສາມດາວ;
7) ຕິດຕາມ, ຝຶກອົບຮົມ ແລະ ຖອດຖອນບົດຮຽນວຽກງານສົ່ງເສີມສຸຂະພາບໃນໂຮງຮຽນ, ວຽກງານເພດສຶກສາ, ສຸຂະພາບຈະເລີນພັນ ແລະ ທັກສະຊີວິດ;
8) ຕິດຕາມການຮຽນ-ການສອນ, ຝຶກອົບຮົມ ແລະ ຖອດຖອນບົດຮຽນວຽກງານການໃຫ້ຄວາມຮູ້ກ່ຽວກັບອັນຕະລາຍຂອງລະເບີດບໍ່ທັນແຕກ;
9) ຕິດຕາມ, ຖອດຖອນບົດຮຽນ ແລະ ຝຶກອົບຮົມ ການຮຽນ-ການສອນພາສາຕ່າງປະເທດ;
10) ສະໜອງປຶ້ມແບບຮຽນ ແລະ ຄູ່ມືຄູຊັ້ນມັດທະຍົມສຶກສາຕອນຕົ້ນ (ຂັ້ນ ມ.1-ມ.4) ແລະ ສື່ການຮຽນການສອນ, ອຸປະກອນຫ້ອງທົດລອງວິທະຍາສາດ, ອຸປະກອນຫ້ອງສອນຄອມພິວເຕີ, ຫ້ອງຝຶກປະຕິບັດ, ປຶ້ມອ່ານເສີມເຂົ້າຫ້ອງສະໝຸດໃນໂຮງຮຽນ ໃຫ້ທຸກຄົນໄດ້ນຳໃຊ້ຢ່າງທົ່ວເຖິງ;
11) ຈັດການຝຶກອົບຮົມໃຫ້ຄູປະຈຳການຂັ້ນ ມ.1-ມ.4 ວິຊາຄະນິດສາດ, ພາສາລາວ, ວິທະຍາສາດທຳມະຊາດ ແລະ ພາສາອັງກິດ (ສະບັບປັບປຸງ);
12) ພັດທະນາຄູ່ມືແນະນຳການນິເທດພາຍໃນໃຫ້ແກ່ຄູປະຈຳການ ມີຄວາມສາມາດເຮັດການນິເທດພາຍໃນໂຮງຮຽນ ດ້ວຍຕົນເອງ;
13) ເຜີຍແຜ່ ແລະ ລົງຊຸກຍູ້ ໃນການສ້າງກຸ່ມໂຮງຮຽນມັດທະຍົມຕອນຕົ້ນ;
14) ລົງປະເມີນຜູ້ບໍລິຫານໂຮງຮຽນທີ່ໄດ້ຮັບການຝຶກອົບຮົມ ກ່ຽວກັບການບໍລິຫານຄຸ້ມຄອງໂຮງຮຽນ;
15) ປຸກລະດົມໃຫ້ຜູ້ປົກຄອງສົ່ງລູກຫຼານເຂົ້າໂຮງຮຽນໃຫ້ຖືກຕາມເກນ ພ້ອມທັງເອົາໃຈໃສ່ຕິດຕາມຜົນການຮຽນຂອງລູກຕົນເອງ.

# IV. ຂະແໜງການຍ່ອຍມັດທະຍົມສຶກສາຕອນປາຍ

## 4.1. ຜົນສຳເລັດ

### 4.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນຊຸມປີຜ່ານມາ ກະຊວງສຶກສາທິການ ແລະ ກິລາ ໄດ້ເອົາໃຈໃສ່ສືບຕໍ່ຂະຫຍາຍໂອກາດໃຫ້ແກ່ນັກຮຽນ ທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ໄດ້ເຂົ້າຮຽນຕໍ່ຊັ້ນມັດທະຍົມສຶກສາຕອນປາຍ (ມ.ປາຍ), ຄຽງຄູ່ການການຮຽນ-ການສອນລະບົບສາມັນປົກກະຕິ, ກົມສາມັນສຶກສາ ຍັງໄດ້ສຳເລັດການທົດລອງກ່ຽວກັບ ການຈັດການຮຽນການສອນ ຫ້ອງຮຽນສາມັນວິຊາຊີບ ຢູ່ໃນໂຮງຮຽນສາມັນກົນນອນຊົນເຜົ່າ ໃນ 4 ແຂວງຄື: ແຂວງ ອຸດົມໄຊ, ແຂວງຊຽງຂວາງ, ແຂວງວຽງຈັນ ແລະ ແຂວງຄຳມ່ວນ. ໂດຍມີຈຸດປະສົງເພື່ອຮັບປະກັນ ໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ ທີ່ບໍ່ສາມາດຮຽນຕໍ່ການສຶກສາຊັ້ນສູງ ສາມາດປະກອບອາຊີບໃດໜຶ່ງຕາມສາຍວິຊາຊີບທີ່ໄດ້ຮຽນ ແລະ ເພື່ອຜັນຂະຫຍາຍຜົນສຳເລັດ ຂອງການທົດລອງໄປສູ່ແຂວງຕ່າງໆທີ່ມີຄວາມພ້ອມໃນການຈັດຕັ້ງປະຕິບັດການຮຽນ-ການສອນສາມັນວິຊາຊີບ. ໃນສົກຮຽນ 2019-2020, ອັດຕາເລື່ອນຊັ້ນຂຶ້ນ ມ.5 ທຽບໃສ່ນັກຮຽນຈົບ ມ.4 ໃນທົ່ວປະເທດແມ່ນ 82,4% ຫຼຸດລົງ 2,5% ແລະ ອັດຕາເລື່ອນຊັ້ນຈາກ ມ.4 ເຂົ້າສາຍອາຊີວະສຶກສາ ແມ່ນ 3,8% ເພີ່ມຂຶ້ນ 0,5% ເມື່ອທຽບໃສ່ປີຜ່ານມາ.

**ຕາຕະລາງທີ 7 : ຕົວຊີ້ບອກຊັ້ນມັດທະຍົມສຶກສາຕອນປາຍ**

| ຕົວຊີ້ບອກ | 2018-2019 | 2019-2020 |
|---|---|---|
| ຈຳນວນຫ້ອງຮຽນ (ຫ້ອງ) | 6.037 | 13.153 |
| ຈຳນວນນັກຮຽນທັງໝົດ (ຄົນ) | 216.994 | 429.150 |
| ອັດຕາເລື່ອນຊັ້ນຂອງນັກຮຽນຈົບມ.4 ຂຶ້ນມັດທະຍົມສຶກສາຕອນປາຍ (%) | 84,9 | 82,4 |
| ອັດຕາເຂົ້າຮຽນລວມ (%) | 54,8 | 54,8 |
| ອັດຕາຄ້າງຫ້ອງ (%) | 0,6 | 0,6 |
| ອັດຕາປະລະ (%) | 8,1 | 8,8 |

ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

ຮູບພາບທີ 11 ລຸ່ມນີ້ ສະແດງໃຫ້ເຫັນເຖິງ ອັດຕາເຂົ້າຮຽນລວມໃນຊັ້ນມັດທະຍົມຕອນປາຍ ໃນແຕ່ລະແຂວງ ແລະ ທົ່ວປະເທດ ເຊິ່ງໃນສົກຮຽນ 2019-2020 ທົ່ວປະເທດຍັງມີອັດຕາດັ່ງກ່າວເທົ່າເດີມ ທີ່ 54,8% ແຕ່ເມື່ອເບິ່ງໃນລະດັບແຂວງ ຈະເຫັນໄດ້ວ່າ ມີ 2 ແຂວງ ທີ່ໃນປີຜ່ານມາສູງກວ່າລະດັບຊາດ ແຕ່ມາເຖິງປີ 2019-2020 ອັດຕາດັ່ງກ່າວຫຼຸດລົງ ແລະ ຕ່ຳກວ່າສະເລ່ຍທົ່ວປະເທດ ຄື ແຂວງໄຊຍະບູລີ (ຈາກ 58,9% ເປັນ 54,6% ແລະ ບໍລິຄຳໄຊ 57,2% ເປັນ 53%). ໃນການເຂົ້າຮຽນຊັ້ນມັດທະຍົມຕອນປາຍນີ້ ເຫັນໄດ້ວ່າ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນຍັງບໍ່ສູງເທົ່າທີ່ຄວນ, ເພດຊາຍ ຈະໄດ້ເຂົ້າຫຼາຍກວ່າເພດຍິງ ສະແດງໃຫ້ເຫັນຜ່ານ ດັດຊະນີຄວາມສະເໝີພາບຍິງ-ຊາຍ ເທົ່າ 0,9 ນັ້ນໝາຍຄວາມວ່າ ນັກຮຽນຊາຍ 10 ຄົນ ທີ່ໄດ້ເຂົ້າຮຽນມັດທະຍົມຕອນປາຍ ຈະມີນັກຮຽນຍິງທີ່ໄດ້ເຂົ້າຮຽນ 9 ຄົນ.

**ຮູບພາບທີ 11: ອັດຕາເຂົ້າຮຽນລວມໃນຊັ້ນ ມັດທະຍົມຕອນປາຍ ສົກຮຽນ 2019-2020**




ແຫຼ່ງຂໍ້ມູນ:ສູນສະຖິຕິການສຶກສາ ແລະ ກິລາ

### 4.1.2. ປະສິດທິພາບພາຍໃນ

ຈາກຂໍ້ມູນທີ່ສະແດງໃຫ້ເຫັນຢູ່ຂ້າງເທິງ ເຫັນໄດ້ວ່າ ໃນສົກຮຽນ 2019-2020 ການຂະຫຍາຍໂອກາດໃນການສຶກສາຊັ້ນມັດທະຍົມຕອນປາຍໂດຍລວມແມ່ນບໍ່ປ່ຽນແປງ, ໃນຂະນະດຽວກັນ ທາງດ້ານປະສິດທິພາບພາຍໃນມີທ່າອ່ຽງຖົດຖອຍລົງ ເຫັນໄດ້ຈາກອັດຕາຄ້າງຫ້ອງທີ່ປະຕິບັດໄດ້ເທົ່າເດີມ ຄື 0,6% ແລະ ອັດຕາປະລະເພີ່ມຂຶ້ນຈາກ 8,1% ເປັນ 8,8%. ເມື່ອເບິ່ງຂໍ້ມູນແລ້ວ ອັດຕາປະລະແມ່ນມີທ່າອ່ຽງເພີ່ມຂຶ້ນມາຕະຫຼອດ ຈາກ 5,8% ໃນປີ 2017 ມາເປັນ 8,8% ໃນປີ 2020. ໃນລະດັບແຂວງ ເຫັນໄດ້ວ່າ ມີເຖິງ 13 ແຂວງໃນທົ່ວປະເທດ ທີ່ມີອັດຕາປະລະເພີ່ມຂຶ້ນ ເຊິ່ງຫຼາຍສຸດຢູ່ແຂວງສາລະວັນ ເພີ່ມຈາກ 8,4% ເປັນ 12,1%. ໃນລະດັບເມືອງ, ເຫັນວ່າ ມີເຖິງ 98 ເມືອງ ທີ່ມີອັດຕາດັ່ງກ່າວເພີ່ມຂຶ້ນ ເຊິ່ງເພີ່ມຫຼາຍທີ່ສຸດແມ່ນ ເມືອງບາຈຽງຈະເລີນສຸກ ແຂວງຈໍາປາສັກ ຈາກ 2,8% ເປັນ 15,7%, ເມືອງນອງ ແຂວງ ສະຫວັນນະເຂດ ຈາກ 7,2% ເປັນ 19,7% ພ້ອມທັງເປັນເມືອງທີ່ມີອັດຕາປະລະຊັ້ນມັດທະຍົມຕອນປາຍ ສູງທີ່ສຸດ.

ຈາກຂໍ້ມູນທີ່ກ່າວມາ ເຫັນໄດ້ວ່າ ການເຂົ້າຮຽນຕໍ່ໃນຊັ້ນທີ່ສູງຂຶ້ນຂອງນັກຮຽນທີ່ຈົບ ມ.4 ຍັງເປັນສິ່ງທ້າທາຍພໍສົມຄວນ, ເຊິ່ງນັກຮຽນທີ່ຈົບ ມ.4 ແລ້ວໄປຮຽນຕໍ່ ລວມແລ້ວມີ 86,2% (ໄປຕໍ່ຊັ້ນມັດທະຍົມຕອນປາຍມີ 82,4% ແລະ ໄປຕໍ່ສາຍອາຊີວະສຶກສາ ແມ່ນມີ 3,8%). ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຍັງຕ້ອງໄດ້ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງເພື່ອກະຕຸກຊຸກຍູ້ ໃນການຂະຫຍາຍໂອກາດໃນການຮຽນຊັ້ນມັດທະຍົມຕອນປາຍ, ພ້ອມກັນນັ້ນຕ້ອງໄດ້ ແກ້ໄຂບັນຫາການປະລະໃນຊັ້ນມັດທະຍົມຕອນປາຍ ໃຫ້ຫຼຸດລົງໃນແຕ່ລະເຂດ.

### 4.1.3. ຄຸນນະພາບ ແລະ ຄວາມສອດຄ່ອງ

ຄຽງຄູ່ກັບການຂະຫຍາຍໂອກາດ ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ສຸມໃສ່ເພື່ອປັບປຸງຄຸນນະພາບການຮຽນ-ການສອນໃນຊັ້ນມັດທະຍົມຕອນປາຍ, ໂດຍສົມທົບກັບ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ເອົາໃຈໃສ່ລົງຊຸກຍູ້ຕິດຕາມຂະບວນການຮຽນ-ການສອນຢ່າງເປັນປົກກະຕິ, ເອົາໃຈໃສ່ຕິດຕາມການປະເມີນຕໍາແໜ່ງວິຊາການຄູ (ຄູທີ່ໄດ້ນາມມະຍົດ ຄູປະສົບການ), ຊຸກຍູ້ການສອບເສັງນັກຮຽນເກັ່ງຂັ້ນເມືອງ, ຂັ້ນແຂວງ ແລະ ການສອບເສັງຈົບຊັ້ນມັດທະຍົມສຶກສາ, ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການນິເທດພາຍໃນໂຮງຮຽນ. ຄຽງຄູ່ກັບການນໍາໃຊ້ຫຼັກສູດແຫ່ງຊາດແລ້ວ ກະຊວງສຶກສາທິການ ແລະ ກິລາ ໄດ້ມີການຊຸກຍູ້, ສົ່ງເສີມໃຫ້ມີຫຼັກສູດທ້ອງຖິ່ນ, ຫຼັກສູດສອດແຊກອື່ນໆ ເຂົ້າໃນການຮຽນ

ການສອນທີ່ສອດຄ່ອງກັບແຕ່ລະວິຊາ, ແຕ່ລະສະພາບທ້ອງຖິ່ນ ແລະ ເໝາະສົມກັບຜູ້ຮຽນ. ຈົນມາຮອດໄລຍະຕົ້ນພາກຮຽນທີ 2 ກາງເດືອນ ມີນາ ປີ 2020 ກໍ່ໄດ້ມີຄຳສັ່ງໃຫ້ປິດໂຮງຮຽນ ຍ້ອນການລະບາດຂອງພະຍາດຈຸລະໂລກສາຍພັນໃໝ່ ໂຄວິດ-19 ເຮັດໃຫ້ບໍ່ໄດ້ມີການຈັດຕັ້ງການຮຽນ-ການສອນ.

ພ້ອມກັນນັ້ນ, ກໍ່ໄດ້ມີການລົງຕິດຕາມ, ກວດກາ ແລະ ປະເມີນ ຫ້ອງທົດລອງວິທະຍາສາດ ວິຊາຟີຊິກສາດ, ເຄມີສາດ ແລະ ຊີວະວິທະຍາ ພ້ອມທັງອຸປະກອນເຄື່ອງທົດລອງວິທະຍາສາດ ແລະ ເຄື່ອງປະຈັກຕາ ທີ່ສະໜອງໃຫ້ໂຮງຮຽນມັດທະຍົມສຶກສາທີ່ມີຄວາມພ້ອມໃນ 18 ແຂວງ. ການສອບເສັງແຂ່ງຂັນນັກຮຽນເກັ່ງແມ່ນໄດ້ຈັດຕັ້ງປະຕິບັດໃນຂັ້ນເມືອງ ແລະ ຂັ້ນແຂວງ. ເນື່ອງຈາກວ່າປີນີ້ ປະເທດເຮົາ ແລະ ທົ່ວໂລກ ປະສົບບັນຫາການແຜ່ລະບາດຂອງພະຍາດຈຸລະໂລກສາຍພັນໃໝ່ ໂຄວິດ-19 ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ໂຈະການຈັດສອບເສັງແຂ່ງຂັນນັກຮຽນເກັ່ງລະດັບຊາດ.

### 4.2. ບັນຫາ ແລະ ສິ່ງທ້າທາຍ

1) ຄູສອນ ແລະ ຜູ້ອຳນວຍການ ຍັງບໍ່ສາມາດຈັດຕັ້ງການນິເທດພາຍໃນໄດ້ຢ່າງມີປະສິດທິພາບ;
2) ຍ້ອນຂາດງົບປະມານ, ດັ່ງນັ້ນ ຄູສຶກສານິເທດ ຈຶ່ງບໍ່ສາມາດລົງຕິດຕາມ, ກວດກາ, ຊຸກຍູ້ການຮຽນ-ການສອນຂອງຄູປະຈຳການ ຢ່າງເປັນປົກກະຕິ;
3) ຄູປະຈຳການບໍ່ໄດ້ຮັບການຝຶກອົບຮົມຢ່າງທົ່ວເຖິງ;
4) ໂຮງຮຽນມັດທະຍົມສ່ວນຫຼາຍຂາດຄູສອນໃນບາງວິຊາ ເຊັ່ນ: ວິຊາ ພື້ນຖານວິຊາຊີບ, ວິຊາເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ວິຊາ ພະລະສຶກສາ, ວິຊາ ສິລະປະສຶກສາ, ວິຊາ ວິທະຍາສາດທຳມະຊາດ ແລະ ວິຊາພາສາອັງກິດ, ດັ່ງນັ້ນ ຈຶ່ງເຮັດໃຫ້ຄູສອນບໍ່ຖືກຕາມວຸດທິ ແລະ ວິຊາສະເພາະທີ່ຮຽນມາ;
5) ນັກຮຽນຢູ່ບັນດາເມືອງເຂດຊາຍແດນ ແລະ ເຂດຫ່າງໄກສອກຫຼີກ ຍັງມີການປະລະຫຼາຍ ອັນເນື່ອງມາຈາກການອອກໄປຊ່ວຍວຽກຄອບຄົວ ແລະ ຊອກຫາວຽກເຮັດງານທຳ.

### 4.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

#### 4.3.1. ຈຸດປະສົງ

ເພື່ອສ້າງໂອກາດໃຫ້ນັກຮຽນ, ຊາວໜຸ່ມມີຄຸນສົມບັດ, ມີຄວາມຮູ້ດ້ານວິຊາຊີບທີ່ພຽງພໍ ເພື່ອເຂົ້າສູ່ຕະຫຼາດແຮງງານ ແລະ ປະກອບການ ພ້ອມທັງສືບຕໍ່ຮຽນໃນສາຍວິຊາຊີບ ແລະ ການສຶກສາຊັ້ນສູງ.

#### 4.3.2. ຄາດໝາຍຫຼັກ

1) ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍໃຫ້ໄດ້ 55%;

#### 4.3.3. ວຽກຈຸດສຸມ

1) ປະເມີນຄູສຶກສານິເທດ ເພື່ອສ້າງເປັນຄູສຶກສານິເທດທົດແທນ;
2) ສ້າງຂໍ້ຕົກລົງ ແລະ ສ້າງຄູ່ມືກ່ຽວກັບມາດຕະຖານໃນການສ້າງໂຮງຮຽນຕົວແບບ ແລະ ກຸ່ມໂຮງຮຽນຕົວແບບ;
3) ສ້າງຮ່າງປະເມີນການຮຽນ-ການສອນ ສຳລັບຄູປະຈຳການ, ຄູທີ່ໄດ້ຮັບຕຳແໜ່ງວິຊາການ ແລະ ການປະເມີນການສິດສອນຂອງຄູຊັ້ນທະຍົມສຶກສາ ໂດຍອີງໃສ່ມາດຖານການສິດສອນຂອງຄູສອນຊັ້ນມັດທະຍົມສຶກສາ;
4) ສ້າງຄູ່ມືແນະນຳສາຍວິຊາຊີບ ສຳລັບນັກຮຽນທີ່ກຳລັງຈະຈົບຊັ້ນມັດທະຍົມສຶກສາຕອນປາຍ ເພື່ອໃຫ້ເຂົາເຈົ້າຮູ້ຈັກສາຍວິຊາຮຽນທີ່ຈະໄປຮຽນຕໍ່ ໃນການສຶກສາສາຍອາຊີວະ ແລະ ການສຶກສາຊັ້ນສູງ;
5) ປັບປຸງຄູ່ມືການນຳໃຊ້ເຄື່ອງທົດລອງວິຊາວິທະຍາສາດທຳມະຊາດ;

6) ສົມທົບກັບສະຖາບັນວິທະຍາສາດການສຶກສາ, ສະຖາບັນອາຊີວະສຶກສາ, ໂຮງຮຽນເຕັກນິກວິຊາຊີບ ເພື່ອພັດທະນາ, ປັບປຸງ ແລະ ຮຽບຮຽງ ປຶ້ມແບບຮຽນ ແລະ ຄູ່ມືຄູສໍາລັບຫ້ອງຮຽນສາຍສາມັນວິຊາຊີບ ທັງຫຼັກສູດແຫ່ງຊາດ ແລະ ຫຼັກສູດທ້ອງຖິ່ນ ໃຫ້ເໝາະສົມກັບທ່າແຮງ ແລະ ອາຊີບໃນຊຸມຊົນທ້ອງຖິ່ນ ເພື່ອປະກອບເຂົ້າໃນການຮຽນ-ການສອນ ວິຊາຊີບຂັ້ນພື້ນຖານ;

7) ຂະຫຍາຍຫ້ອງຮຽນສາມັນວິຊາຊີບ ໄປສູ່ໂຮງຮຽນຊົນເຜົ່າຢູ່ບັນດາແຂວງ ທີ່ມີຄວາມພ້ອມໃນການຈັດການຮຽນ-ການສອນວິຊາຊີບ;

8) ສໍາຫຼວດຄວາມພ້ອມຂອງໂຮງຮຽນເປົ້າໝາຍທີ່ຈະສ້າງເປັນໂຮງຮຽນຕົວແບບ;

9) ສ້າງ ແລະ ປັບປຸງເຄື່ອງມືການຕິດຕາມ ແລະ ປະເມີນຜົນ ການປະຕິບັດໜ້າທີ່ວຽກງານຂອງຄູ, ຄູສຶກສານິເທດ ແລະ ຄູທີ່ໄດ້ຮັບຕໍາແໜ່ງວິຊາການຄູ;

10) ທົດລອງການນໍາໃຊ້ມາດຕະຖານການສອນ ສໍາລັບຊັ້ນມັດທະຍົມຕອນປາຍ;

11) ເຜີຍແຜ່ມາດຕະຖານການສອນໃຫ້ຄູທຸກຄົນ ໃນແຕ່ລະວິຊາ ໃນຊັ້ນມັດທະຍົມຕອນປາຍ, ຜູ້ອໍານວຍການ, ຫ້ອງການສຶກສາ ແລະ ກິລາເມືອງ/ນະຄອນ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ;

12) ຝຶກອົບຮົມການນໍາໃຊ້ ມາດຕະຖານການສອນໃຫ້ແກ່ຜູ້ອໍານວຍການໂຮງຮຽນ, ວິຊາການຫ້ອງການສຶກສາ ແລະ ກິລາເມືອງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ;

13) ລົງຕິດຕາມການຮຽນການສອນ, ການປະຕິບັດຫຼັກສູດ ແລະ ການປະເມີນຕໍາແໜ່ງວິຊາການຄູໃນຊັ້ນມັດທະຍົມສຶກສາຕອນປາຍ;

14) ພັດທະນາຫຼັກສູດວິຊາຊີບໃຫ້ເໝາະສົມກັບທ່າແຮງ ແລະ ອາຊີບໃນຊຸມຊົນທ້ອງຖິ່ນ ເພື່ອປະກອບເຂົ້າໃນການຮຽນ-ການສອນວິຊາຊີບຂັ້ນພື້ນຖານ;

15) ສ້າງຄວາມເຂັ້ມແຂງໃຫ້ຄູປະຈໍາການ ໃຫ້ມີຄວາມສາມາດໃນການເຮັດການນິເທດພາຍໃນໂຮງຮຽນດ້ວຍຕົນເອງຢ່າງມີຄຸນນະພາບ;

16) ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານໂຮງຮຽນກ່ຽວກັບການຄຸ້ມຄອງບໍລິຫານ, ການຮຽນ-ການສອນວິຊາຊີບໃນຊັ້ນມັດທະຍົມສຶກສາຕອນປາຍ;

17) ປັບປຸງຫຼັກສູດທີ່ມີ ແລະ ວິຊາທີ່ສອນ (60% ສໍາລັບສາຍສາມັນ, 40% ສໍາລັບ ອາຊີວະສຶກສາ ຫຼື ການສຶກສານອກໂຮງຮຽນ).ໂດຍການຮ່ວມມືລະຫວ່າງ ກົມການສຶກສານອກໂຮງຮຽນ, ສວສ, ສູນການຮຽນຮູ້ຊຸມຊົນ ແລະ ສູນພັດທະນາອາຊີວະສຶກສາ;

18) ພັດທະນາສື່ການຮຽນ-ການສອນສໍາລັບຫຼັກສູດອາຊີວະສຶກສາ ໂດຍການຮ່ວມມືລະຫວ່າງ ສວສ, ສູນຮຽນຮູ້ຊຸມຊົນ, ກົມການສຶກສານອກໂຮງຮຽນ, ກົມສາມັນສຶກສາ;

19) ກວດແກ້ ແລະ ຮັບຮອງການພັດທະນາສື່ການຮຽນ-ການສອນ ສໍາລັບຫຼັກສູດອາຊີວະສຶກສາ ໂດຍການຮ່ວມມືລະຫວ່າງ ສວສ, ສູນການຮຽນຮູ້ຊຸມຊົນ, ກົມການສຶກສານອກໂຮງຮຽນ, ກົມສາມັນສຶກສາ;

20) ທົບທວນຄືນ, ພັດທະນາ ແລະ ຮັບຮອງຄູ່ມືການຈັດຕັ້ງປະຕິບັດຫຼັກສູດສາມັນວິຊາຊີບ 60% ແລະ 40%.

# V. ຂະແໜງການຍ່ອຍການສຶກສານອກໂຮງຮຽນ

## 5.1. ຜົນສຳເລັດ

### 5.1.1. ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ການສຶກສານອກໂຮງຮຽນເປັນວຽກງານສຳຄັນ ທີ່ໄດ້ຈັດຕັ້ງປະຕິບັດຄຽງຄູ່ການສຶກສາສາຍສາມັນ. ໃນສົກຮຽນ 2019-2020 ໄດ້ຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມ ແລະ ຊັ້ນມັດທະຍົມ ຢ່າງຕໍ່ເນື່ອງ ໃນຂອບເຂດທົ່ວປະເທດ ຈຶ່ງເຮັດໃຫ້ຈຳນວນປະຊາກອນກຸ່ມເປົ້າໝາຍໃນເກນ ອາຍຸ 6-14 ປີ ແລະ ອາຍຸ 15-40 ປີ ທີ່ບໍ່ໄດ້ເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ກຸ່ມເປົ້າໝາຍໃນເກນອາຍຸ 15-35 ປີ ທີ່ຍັງຮຽນບໍ່ຈົບຊັ້ນມັດທະຍົມ ແມ່ນມີທ່າອຽງຫຼຸດລົງເມື່ອທຽບໃສ່ປີຜ່ານມາ. ເຊິ່ງຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານ, ດັ່ງລາຍລະອຽດລຸ່ມນີ້:

1) ໄດ້ສຳເລັດການເກັບກຳຂໍ້ມູນ ແລະ ຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ໃຫ້ກຸ່ມເປົ້າໝາຍອາຍຸ 6-14 ປີ ຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດບໍ່ມີໂຮງຮຽນ ຈຳນວນ 2.558 ຄົນ, ຍິງ 1.377 ຄົນ ທຽບໃສ່ຄາດໝາຍທີ່ວາງໄວ້ 3.000 ຄົນ ແມ່ນບັນລຸໄດ້ 85,26%;
2) ໄດ້ສຳເລັດການເກັບກຳຂໍ້ມູນກຸ່ມເປົ້າໝາຍ ໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ໄດ້ຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຈົບຊັ້ນປະຖົມ ເຊິ່ງມີຜູ້ຮຽນຈົບຈຳນວນ 6.554 ຄົນ ຍິງ 3.716 ຄົນ ເທົ່າກັບ 81,92% ເທົ່ານັ້ນ;
3) ຈັດຕັ້ງການຮຽນ-ການສອນ ບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນໃຫ້ກັບກຸ່ມເປົ້າໝາຍໄວໜຸ່ມ ແລະ ຜູ້ໃຫຍ່ ອາຍຸ 15-35 ປີ ຈຳນວນ 16.762 ຄົນ, ຍິງ 7.354 ຄົນ; ພ້ອມດຽວກັນນັ້ນ, ກໍ່ໄດ້ດຳເນີນການປະກາດຈົບຊັ້ນມັດທະຍົມຕອນຕົ້ນບຳລຸງທົ່ວເມືອງ ແລະ ທົ່ວແຂວງ ດັ່ງນີ້: 1) ປະກາດຈົບຊັ້ນມັດທະຍົມສຶກສາຕອນຕົ້ນບຳລຸງທົ່ວເມືອງ ໄດ້ສຳເລັດ 12 ເມືອງ; 2) ປະກາດຈົບຊັ້ນມັດທະຍົມສຶກສາຕອນຕົ້ນບຳລຸງທົ່ວແຂວງ ໄດ້ສຳເລັດ 4 ແຂວງ (ແຂວງຫົວພັນ, ຄຳມ່ວນ ອຸດົມໄຊ, ວຽງຈັນ); ໃນປະຈຸບັນຈຳນວນເມືອງທີ່ປະກາດເປັນເມືອງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງແມ່ນເພີ່ມຂຶ້ນເປັນ 147 ເມືອງ ແລະ ປະກາດເປັນແຂວງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງແມ່ນເພີ່ມເປັນ 10 ແຂວງ ແລະ ນະຄອນຫຼວງວຽງຈັນ;
4) ຈັດຕັ້ງການຮຽນ-ການສອນບຳລຸງ, ຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍ ໃຫ້ກັບພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນທົ່ວໄປ ຢູ່ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຈຳນວນ 4.563 ຄົນ; ຍິງ 1.506 ຄົນ.

### 5.1.2. ວຽກງານສົ່ງເສີມວິຊາຊີບຂັ້ນພື້ນຖານ

ໃນຂອບເຂດທົ່ວປະເທດ ມີກຸ່ມເປົ້າໝາຍໃນຂອບເຂດ ຈຳນວນ 2.946 ຄົນ; ຍິງ 1.856 ຄົນ ໄດ້ຮັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານໃນສາຂາຕ່າງໆ ທຽບເປັນເປີເຊັນປະຕິໄດ້ 98,2% (ທຽບໃສ່ແຜນ 3.000 ຄົນ); ເມື່ອທຽບທາງດ້ານຄວາມເທົ່າທຽມກັນທາງດ້ານໂອກາດ ໃນການໄດ້ຮັບການຝຶກອົບຮົມວິຊາຊີບ ລະຫວ່າງເພດຍິງ ແລະ ຊາຍ ເຫັນວ່າ ຈຳນວນເພດຍິງ ມີໂອກາດໄດ້ຮັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານນອກໂຮງຮຽນ ຫຼາຍກວ່າເພດຊາຍ ເນື່ອງຈາກວ່າ ບາງສາຂາວິຊາຊີບນັ້ນ ແມ່ນແທດເໝາະກັບຄວາມຕ້ອງການຂອງເພດຍິງຫຼາຍກວ່າ.

### 5.1.3. ຄຸນນະພາບ ແລະ ຄວາມສອດຄ່ອງ

ການປັບປຸງຄຸນນະພາບການສຶກສານອກໂຮງຮຽນ ກໍ່ເປັນອີກວຽກງານໜຶ່ງທີ່ສຳຄັນ ຄຽງຄູ່ກັບການຂະຫຍາຍໂອກາດໃນການເຂົ້າຮຽນໃຫ້ທົ່ວເຖິງ ແລະ ເທົ່າທຽມ. ໂດຍສະເພາະແມ່ນການປັບປຸງຄຸນນະພາບ ການຮຽນ-ການ

ສອນຜູ້ໃຫຍ່, ສ້າງຂີດຄວາມສາມາດໃຫ້ກັບ ບຸກຄະລາກອນ ແລະ ຄູສອນ ກ່ຽວກັບການຕິດຕາມ ແລະ ປະເມີນຜົນການຮຽນ ແລະ ຝຶກອົບຮົມກ່ຽວກັບທັກສະວິຊາຊີບສະເພາະ. ໃນສົກຮຽນ 2019-2020 ໄດ້ພັດທະນາຫຼັກສູດ, ຕໍາລາຮຽນ ແລະ ສະໜອງອຸປະກອນ, ສື່ການຮຽນ-ການສອນ ໃຫ້ສະຖານການສຶກສານອກໂຮງຮຽນທຸກຂັ້ນ; ລວມທັງປັບປຸງວິທີການສິດສອນ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ເພື່ອຮັບປະກັນດ້ານປະສິດທິພາບ ແລະ ໃຫ້ຍັບເຂົ້າໃກ້ກັບຄຸນນະພາບຂອງການສຶກສາໃນໂຮງຮຽນ ເທື່ອລະກ້າວ ແລະ ສາມາດເຊື່ອມໂຍງເຂົ້າກັບສາຍວິຊາຊີບອາຊີວະສຶກສາໄດ້, ດັ່ງລາຍລະອຽດລຸ່ມນີ້:

1) ຫຼັກສູດວິຊາຊີບສາຂາວິຊາປຸງແຕ່ງອາຫານ ແລະ ຂຽນປຶ້ມແບບຮຽນ ສໍາລັບວິຊາຊີບຊ່າງໄມ້, ຕັດຫຍິບ ແລະ ລ້ຽງສັດ ໃນລະດັບປະກາສະນິຍະບັດລະດັບ 1 ແລະ 2 ຫຼື C 1 ແລະ C 2 ແມ່ນໄດ້ຮັບການອະນຸມັດນໍາໃຊ້ຢ່າງເປັນທາງການ;
2) ໄດ້ສໍາເລັດຂຽນປຶ້ມອ່ານເສີມ ສໍາລັບວິຊາຊີບ ການປູກຝັງ, ລ້ຽງສັດ ແລະ ປຸງແຕ່ງອາຫານ ລວມທັງໝົດຈໍານວນ 14 ເລື່ອງ; ພ້ອມທັງຈັດພິມ ແລະ ແຈກຢາຍໃຫ້ບັນດາສູນການສຶກສານອກໂຮງຮຽນ ຂັ້ນຕ່າງໆ;
3) ເສີມສ້າງທັກສະດ້ານວິຊາຊີບ ແລະ ການຝຶກອົບຮົມຄູຝຶກວິຊາຊີບນອກໂຮງຮຽນ ໃຫ້ແກ່ຄູຝຶກວິຊາຊີບນອກໂຮງຮຽນ ຂັ້ນແຂວງ ຈໍານວນ 32 ທ່ານ; ໃນຈໍານວນ 4 ສາຂາວິຊາຊີບ ຄື: ຕັດຫຍິບ, ປຸງແຕ່ງອາຫານ, ປູກຝັງ ແລະ ລ້ຽງສັດ.

### 5.1.4. ການບໍລິຫານ ແລະ ຄຸ້ມຄອງ

ສໍາລັບການບໍລິຫານຄຸ້ມຄອງວຽກງານການສຶກສານອກໂຮງຮຽນ ແມ່ນໄດ້ເອົາໃຈໃສ່ໃນການວາງແຜນເພື່ອປັບປຸງ ແລະ ພັດທະນາ ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ ແຕ່ລະຂັ້ນ, ພັດທະນານິຕິກໍາທີ່ກ່ຽວຂ້ອງກັບການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດ ລວມເຖິງການປັບປຸງລະບຽບ, ຫຼັກການທີ່ເປັນການສົ່ງເສີມ ແລະ ພັດທະນາວຽກງານການສຶກສານອກໂຮງຮຽນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ດີຂຶ້ນເທື່ອລະກ້າວ ເປັນຕົ້ນແມ່ນ:

1) ທົບທວນຄືນພາລະບົດບາດການເຄື່ອນໄຫວຂອງສູນການສຶກສານອກໂຮງຮຽນ ໂດຍສຸມໃສ່ພັດທະນາໃຫ້ສູນການເປັນສູນແຫ່ງການຮຽນຮູ້, ເປັນສູນກາງໃນການຮັບ-ສົ່ງຂໍ້ມູນຂ່າວສານຂອງຊຸມຊົນ ແລະ ເປັນສະຖານການຝຶກຝົນ ແລະ ພັດທະນາທັກສະອາຊີບຂັ້ນພື້ນຖານ ໃຫ້ກັບຊຸມຊົນ ແລະ ສັງຄົມ;
2) ສ້າງນິຕິກໍາທີ່ກ່ຽວຂ້ອງກັບວຽກງານການສຶກສານອກໂຮງຮຽນດັ່ງນີ້: 1. ສໍາເລັດດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ແລະ ໄດ້ຮັບອະນຸມັດປະກາດນໍາໃຊ້ຢ່າງເປັນທາງການ; 2. ສໍາເລັດຮ່າງຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງສູນຝຶກອົບຮົມວິຊາຊີບພາກເອກະຊົນ;
3) ໄດ້ສັງລວມຂໍ້ມູນສະຖິຕິກ່ຽວກັບບຸກຄະລາກອນ ແລະ ຄູສອນ ສໍາລັບວຽກງານການສຶກສານອກໂຮງຮຽນ ເຊິ່ງປະກອບມີປະເພດ: ຄູສອນອາສາສະໝັກ, ຄູສອນຮັບເຊີນ, ຄູສອນເຄື່ອທີ່, ຜູ້ຊ່ວຍຄູສອນເຄື່ອນທີ່ ແລະ ຄູສອນວິຊາຊີບຂັ້ນພື້ນຖານ ຊຶ່ງມີທັງໝົດ 11.754 ຄົນ, ຍິງ 5.875 ຄົນ.
4) ສ້າງຄວາມເຂັ້ມແຂງໃຫ້ກັບຜູ້ບໍລິຫານ ແລະ ພະນັກງານ ການສຶກສານອກໂຮງຮຽນ ໃນດ້ານການພັດທະນາການເກັບກໍາຂໍ້ມູນ, ການນໍາໃຊ້ ແລະ ວິເຄາະຂໍ້ມູນ ທີ່ເກັບກໍາໄດ້ເພື່ອການວາງແຜນກິດຈະກໍາ ແລະ ສະຫຼຸບລາຍງານ;
5) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ຂະແໜງການການສຶກສານອກໂຮງຮຽນ ຂັ້ນແຂວງ ແລະ ເມືອງ ໃນການນໍາໃຊ້ມາດຕະຖານຄຸນນະພາບການສຶກສານອກໂຮງຮຽນ ເຊັ່ນ: ການລົງເກັບກໍາຂໍ້ມູນ, ການວິເຄາະ ແລະ ສະຫຼຸບສັງລວມຂໍ້ມູນ ຕາມຕົວຊີ້ບອກທີ່ກໍານົດໄວ້.

## 5.2. ບັນຫາ ແລະ ສິ່ງທ້າທາຍ

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນີ້ກໍ່ຍັງມີຫຼາຍບັນຫາ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ຢູ່ໃນແຕ່ລະແຜນງານກໍ່ມີສາຍເຫດເກີດຂຶ້ນ ຍ້ອນອີກບັນຫາໜຶ່ງເກາະກ່າຍກັນເປັນລັກສະນະເປັນຕ່ອງໂສ້ ທີ່ຈະຕ້ອງໄດ້ສຸມຄວາມພະຍາຍາມຄົ້ນຄວ້າຊອກຫາວິທີແກ້ໄຂ ໃນສົກຮຽນຕໍ່ໄປ, ມີລາຍລະອຽດດັ່ງລຸ່ມນີ້:

1) ການບຳລຸງຍົກລະດັບການສຶກສາຊັ້ນປະຖົມ ໃຫ້ກັບກຸ່ມເປົ້າໝາຍເດັກນ້ອຍ ອາຍຸ 6-14 ປີ ແລະ ຜູ້ໃຫຍ່ ອາຍຸ 15-40 ປີ ບໍ່ສາມາດບັນລຸຕາມຄາດໝາຍ ແລະ ຂໍ້ມູນພື້ນຖານຄວາມຕ້ອງການໃນການຝຶກອົບຮົມວິຊາຊີບຍັງບໍ່ທັນເກັບກຳທົ່ວເຖິງ ມາຈາກສາເຫດ ດັ່ງນີ້: 1. ການວາງແຜນເກັບກຳຂໍ້ມູນບໍ່ທັນສອດຄ່ອງກັບສະ ພາບຄວາມເປັນຈິງ, ການວິເຄາະຂໍ້ມູນ ແລະ ປະເມີນ ຍັງບໍ່ເລິກເຊິ່ງ ແລະ ກົມກຽວກັນ ໃນຂັ້ນແຂວງ, ຂັ້ນເມືອງ ແລະ ສູນກາງ; 2. ຍ້ອນສະພາບຄວາມທຸກຍາກ ເຮັດໃຫ້ປະຊາຊົນຖືເອົາການທຳມາຫາກິນສຳຄັນກວ່າວຽກງານການສຶກສາ; 3. ອາຄານສະຖານທີ່ໃນການຈັດການຮຽນ-ການສອນ ຍັງບໍ່ດຶງດູດຄວາມສົນ ໃຈໃຫ້ກຸ່ມເປົ້າໝາຍເຂົ້າຮຽນ;
2) ຂະບວນການກວດກາ, ຕິດຕາມ ແລະ ປະເມີນຜົນວຽກງານການສຶກສານອກໂຮງຮຽນ ຍັງບໍ່ທັນເຮັດເປັນລະບົບຕໍ່ເນື່ອງ, ການປະສານສົມທົບກັນລະຫວ່າງ ຂັ້ນແຂວງ, ຂັ້ນເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ຍັງບໍ່ດີເທົ່າທີ່ຄວນ ຈຶ່ງເຮັດໃຫ້ການລາຍງານຂໍ້ມູນ ບໍ່ຊັດເຈນ, ບໍ່ທັນຕາມກຳນົດເວລາ ແລະ ການຮັບປະກັນດ້ານຄຸນນະພາບບໍ່ທັນສູງ;
3) ການຈັດການຮຽນ-ການສອນບຳລຸງຍົກລະດັບການສຶກສາ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານຢູ່ບາງທ້ອງຖິ່ນ ຍັງບໍ່ໄດ້ປະຕິບັດຕາມຫຼັກສູດທີ່ກຳນົດໄວ້, ຄູສອນບໍ່ຖືກກັບວຸດທິການສຶກສາ ແລະ ວິຊາຮຽນ;
4) ລະບົບການເກັບກຳຂໍ້ມູນສະຖິຕິ ການສຶກສານອກໂຮງຮຽນ ຍັງບໍ່ໄດ້ຮັບການປັບປຸງໃຫ້ເປັນລະບົບ ແລະ ຍັງບໍ່ທັນສອດຄ້ອງກັບສະພາບເງື່ອນໄຂຕົວຈິງ ແລະ ຍັງບໍ່ທັນເຊື່ອມເຂົ້າກັບລະບົບຖານຂໍ້ມູນສຶກສາ ແລະ ກິລາ;
5) ຄູສອນ ແລະ ບຸກຄະລາກອນ ການສຶກສານອກໂຮງຮຽນ ມີຈຳນວນຈຳກັດ ແລະ ບາງຈຳນວນທີ່ມີ ກໍ່ຍັງບໍ່ໄດ້ຮັບການຝຶກອົບຮົມ ກ່ຽວກັບວິທີການສິດສອນ ແລະ ການຝຶກອົບຮົມວິຊາຊີບ ສຳລັບກຸ່ມເປົ້າໝາຍນອກໂຮງຮຽນ ຢ່າງຕໍ່ເນື່ອງ;
6) ການສະໜອງສື່ການຮຽນ-ການສອນ, ອຸປະກອນຮັບໃຊ້ ສຳລັບວຽກງານບຳລຸງຍົກລະດັບການສຶກສາ ແລະ ຝຶກອົບຮົມວິຊາຊີບ ສາຂາຕ່າງໆ ຍັງບໍ່ພຽງພໍ ແລະ ຈຳນວນທີ່ສະໜອງໄປແລ້ວກໍ່ຍັງນຳໃຊ້ບໍ່ທັນແທດເໝາະກັບສະພາບເງື່ອນຄວາມຕ້ອງການຂອງທ້ອງຖິ່ນ;
7) ສູນການສຶກສານອກໂຮງຮຽນທົ່ວປະເທດ ຍັງບໍ່ໄດ້ຮັບການງົບປະມານບໍລິຫານ ຍ້ອນວ່າຂາດການເກັບກຳສະຕິຖິຄູສອນຕໍ່ຫົວໜ່ວຍນັກຮຽນ ແລະ ສູນກໍ່ຍັງບໍ່ໄດ້ຮັບການຂຶ້ນລະຫັດຢູ່ສູນສະຖິຕິແຫ່ງຊາດ.

## 5.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

### 5.3.1. ຈຸດປະສົງ

1) ເພື່ອຂະຫຍາຍໂອກາດໃຫ້ປະຊາກອນກຸ່ມເປົ້າໝາຍ ອາຍຸ 6-14 ປີ ແລະ 15-40 ປີ ທີ່ບໍ່ທັນຈົບຊັ້ນປະຖົມ ແລະ 15-30 ປີ ທີ່ບໍ່ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ ທີ່ພາດໂອກາດໃນການສຶກສາ ໃຫ້ໄດ້ຮັບການສຶກສາຢ່າງທົ່ວເຖິງ, ເທົ່າທຽມກັນ, ມີຄຸນນະພາບ ແລະ ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ສຳລັບທຸກຄົນ;
2) ສົ່ງເສີມໃຫ້ປະຊາຊົນກຸ່ມເປົ້າໝາຍໄດ້ຮັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ທັກສະອາຊີບ ເພື່ອປັບປຸງຄຸນນະພາບຊີວິດ ໃຫ້ດີຂຶ້ນ;
3) ເພື່ອຮັບປະກັນຄຸນນະພາບຂອງວຽກງານການສຶກສານອກໂຮງຮຽນ ໃຫ້ໄດ້ຕາມມາດຕະຖານຄຸນນະພາບການສຶກສານອກໂຮງຮຽນ ທີ່ກຳນົດໄວ້.

**5.3.2. ຄາດໝາຍຫຼັກ**

1) ລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ ສຳລັບກຸ່ມເປົ້າໝາຍ ອາຍຸ 6-14 ປີ ໃຫ້ໄດ້ 3.000 ຄົນ;
2) ບຳລຸງຍົກລະດັບການສຶກສາຊັ້ນປະຖົມ ໃຫ້ກຸ່ມເປົ້າໝາຍ ອາຍຸ 15-40 ປີ ໃຫ້ໄດ້ 12.000 ຄົນ;
3) ບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນຕົ້ນ ສຳລັບກຸ່ມເປົ້າໝາຍ ອາຍຸ 15-35 ປີ ໃຫ້ໄດ້ 28.000 ຄົນ;
4) ບຳລຸງຍົກລະດັບການສຶກສາຊັ້ນມັດທະຍົມຕອນປາຍ ໃຫ້ໄດ້ 5.000 ຄົນ;
5) ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ກຸ່ມເປົ້າໝາຍ ໃຫ້ໄດ້ຈຳນວນ 4.000 ຄົນ;
6) ຝຶກອົບຮົມການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນມັດທະຍົມສຶກສາຕອນປາຍບຳລຸງ ໃຫ້ໄດ້ 80 ຄົນ;
7) ຝຶກອົບຮົມການນຳໃຊ້ມາດຕະຖານການສຶກສານອກໂຮງຮຽນ ເຂົ້າໃນລະບົບການຕິດຕາມ ແລະ ປະເມີນຜົນ ໃຫ້ກັບບຸກຄະລາກອນຂອງສູນ ການສຶກສານອກໂຮງຮຽນ 40 ຄົນ;
8) ສ້າງຄວາມເຂັ້ມແຂງທາງດ້ານວິຊາຊີບ ແລະ ການສອນວິຊາຊີບຂັ້ນພື້ນຖານ ໃຫ້ແກ່ຄູຝຶກຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ໄດ້ 40 ຄົນ;
9) ປັບປຸງຫຼັກສູດບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາຕອນຕົ້ນ ໃຫ້ສຳເລັດໂດຍພື້ນຖານ;
10) ສ້າງຫຼັກສູດວິຊາຊີບຂັ້ນພື້ນຖານ ສາຂາໃໝ່ ໃຫ້ໄດ້ 2 ສາຂາວິຊາ;
11) ສ້າງລະບຽບການ ກ່ຽວກັບການຜັນຂະຫຍາຍວຽກງານການຮຽນຮູ້ຕະຫຼອດຊີວິດ ໃຫ້ໄດ້ໂດຍພື້ນຖານ.

**5.3.3. ວຽກຈຸດສຸມ**

1) ສືບຕໍ່ເກັບກຳຂໍ້ມູນເດັກນ້ອຍກຸ່ມເປົ້າໝາຍອາຍຸ 6-14 ປີ ແລະ ອາຍຸ 15-40 ປີ ທີ່ບໍ່ມີໂອກາດ ເຂົ້າເຖິງການສຶກສາຊັ້ນປະຖົມ ແລະ ກຸ່ມເປົ້າໝາຍໃນເກນ ອາຍຸ 15-35 ປີ ທີ່ຍັງຮຽນບໍ່ຈົບຊັ້ນມັດທະຍົມ ແລະ ສືບຕໍ່ຈັດຕັ້ງການຮຽນ-ການສອນ ໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້ຢ່າງມີຄຸນນະພາບ;
2) ພັດທະນາສະຖານການສຶກສານອກໂຮງຮຽນ ໃຫ້ເປັນທີ່ຈູງໃຈແກ່ຜູ້ຮຽນໂດຍການປັບປຸງອາຄານສະຖານທີ່, ສ້າງສະພາບແວດລ້ອມທີ່ເປັນທີ່ດຶງດູດ ແລະ ສະໜອງສິ່ງອຳນວຍຄວາມສະດວກໃນການຈັດການຮຽນ-ການສອນ;
3) ສົ່ງເສີມການຝຶກອົບຮົມວິຊາຊີບໃຫ້ກັບສູນຝຶກອົບຮົມວິຊາຊີບພາກເອກະຊົນ ໂດຍສະເພາະແມ່ນກຸ່ມເປົ້າໝາຍທີ່ຢູ່ໃນເຂດຕົວເມືອງ ດ້ວຍການຮ່ວມກັນສະຖາບັນອາຊີວະສຶກສາ ແລະ ໂຮງຮຽນວິຊາຊີບ ຂອງພາກລັດ ໃນການວາງແຜນດຳເນີນກິດຈະກຳຕ່າງໆຮ່ວມກັນ;
4) ພັດທະນາລະບົບການຄຸ້ມຄອງສະຖິຕິ ຂໍ້ມູນຂ່າວສານການສຶກສານອກໂຮງຮຽນ ໃຫ້ເປັນແບບອອນລາຍ ແລະ ສາມາດເຊື່ອມເຂົ້າກັບລະບົບຖານຂໍ້ມູນສະຖິຕິ ສຶກສາ ແລະ ກິລາ ໂດຍສົມທົບກັບສູນສະຖິຕິ ຕາມມະຕິຂອງກອງປະຊຸມປະຈຳປີ 2019 ຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ;
5) ສ້າງ, ປັບປຸງ ແລະ ພັດທະນາ ລະບຽບການທີ່ກ່ຽວຂ້ອງກັບວຽກງານການສຶກສານອກໂຮງຮຽນ ແລະ ລວມທັງການສ້າງລະບຽບການປະເມີນ, ການຮັບຮູ້, ການຢັ້ງຢືນ, ທຽບເທົ່າ ແລະ ທຽບໂອນ ຜົນການຮຽນຮູ້ຕະຫຼອດຊີວິດ;
6) ສ້າງຄວາມເຂັ້ມແຂງໃຫ້ກັບຄູສອນ ແລະ ບຸກຄະລາກອນ ທີ່ສິດສອນການສຶກສານອກໂຮງຮຽນ ໃຫ້ເປັນຕາມລະບຽບການ ແລະ ໂຄງຮ່າງຫຼັກສູດແຕ່ລະວິຊາ ແລະ ພ້ອມທັງ ຊຸກຍູ້, ຕິດຕາມ ການຊັບຊ້ອນຄູສອນໃຫ້ຖືກກັບວຸດທິການສຶກສາ ແລະ ສາຂາທີ່ໄດ້ຮຽນມາ;

7) ສ້າງຄວາມເຂັ້ມແຂງໃຫ້ກັບຜູ້ບໍລິຫານ ແລະ ບຸກຄະລາກອນກ່ຽວກັບວຽກງານກວດກາ, ເຄື່ອງມືຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກຈຸດສຸມ ແລະ ແຜນກິດຈະກໍາໃຫ້ບັນດາສູນການສຶກສານອກໂຮງຮຽນທຸກຂັ້ນ;
8) ໂຄສະນາ ແລະ ເຜີຍແຜ່ ວຽກງານການສຶກສານອກໂຮງຮຽນ ໂດຍຜ່ານສື່ຕ່າງໆ ເພື່ອໃຫ້ປະຊາຊົນ, ອໍານາດການປົກຄອງຮັບຮູ້, ເຂົ້າໃຈຫຼາຍຂຶ້ນ ແລະ ໃຫ້ຄວາມສໍາຄັນຕໍ່ວຽກງານການສຶກສາ;
9) ສະໜອງສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ ຢ່າງພຽງພໍ ແລະ ແທດເໝາະກັບການດໍາເນີນກິດຈະກໍາການຮຽນ-ການສອນ ແລະ ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຂອງແຕ່ລະທ້ອງຖິ່ນ;
10) ປັບປຸງລະບຽບການບໍລິຫານ-ຄຸ້ມຄອງ ສູນການສຶກສານອກໂຮງຮຽນແຕ່ລະຂັ້ນ ແລະ ລວມເຖິງການຂຶ້ນເລກລະຫັດ ແລະ ເງິນບໍລິຫານຕໍ່ຫົວໜ່ວຍນັກຮຽນ ຂອງສູນການສຶກສານອກໂຮງຮຽນ.

# VI. ຂະແໜງການຍ່ອຍການສຶກສາຄູ

## 6.1.ຜົນສຳເລັດ

### 6.1.1. ການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນສົກຮຽນ 2019-2020, ການຮັບນັກຮຽນເຂົ້າຮຽນຄູພາກປົກກະຕິ ຂອງທຸກຊັ້ນທຸກສາຍ ໃນສະຖາບັນສ້າງຄູ 16 ແຫ່ງໄດ້ຫຼຸດຕົວເລກລົງ ແຕ່ການຍົກລະດັບວຸດທິການສຶກສາ ໃນພາກປົກກະຕິ ແລະ ພາກພັກສິ້ນປີຮຽນແມ່ນເພີ່ມຂຶ້ນ. ການຄັດເລືອກນັກຮຽນເຂົ້າຮຽນຄູ ທັງໃນແຜນ ແລະ ສອບເສັງຄັດເລືອກ ໄດ້ປະຕິບັດຕາມມະຕິກອງປະຊຸມຜູ້ບໍລິຫານສະຖານການສ້າງຄູ ປະຈຳປີ 2019 ໂດຍເຫັນດີໃຫ້ສະຖານການສ້າງຄູທຸກແຫ່ງປະຕິບັດແຜນຮັບນັກຮຽນນັກສຶກສາຄູສຳລັບສົກຮຽນ 2019-2020 ຢ່າງເຂັ້ມງວດ ຕາມອັດຕາສ່ວນສອບເສັງ 80%, ຕົວເລກແບ່ງປັນ 20%, ໃນນັ້ນ 10% ໄດ້ຮັບເບັ້ຍລ້ຽງໂດຍແມ່ນແຂວງເປັນຜູ້ຄັດເລືອກ ແລະ ອີກ 10% ແມ່ນວິທະຍາໄລຄູເປັນຜູ້ເລືອກ ໂດຍອີງຕາມຜົນການສອບເສັງຄັດເລືອກເຂົ້າຮຽນ. ຈາກແຜນຕົວເລກຮັບນັກຮຽນ ແລະ ພະນັກງານເຂົ້າຮຽນຄູ ຈຳນວນ 4.145 ຄົນ, ການຈັດຕັ້ງປະຕິບັດຕົວຈິງແມ່ນ 3.139 ຄົນ, ຍິງ 2.041 (ຫຼຸດແຜນ 24,27%).

**ຕາຕະລາງທີ 8: ນັກຮຽນທີ່ເຂົ້າຮຽນໃນແຕ່ລະສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ສົກຮຽນ 2019-2020**

| ສາຍການຮຽນ | ຕົວເລກໃນແຜນ | ຕົວເລກຮັບຕົວຈິງ |
|---|---|---|
| ຄູອານຸບານ | 390 | 441 |
| ຄູປະຖົມ | 390 | 388 |
| ຄູມັດທະຍົມ | 840 | 575 |
| ຄູອານຸບານຮຽນຕໍ່ເນື່ອງປົກກະຕິ | 220 | 108 |
| ຄູປະຖົມຮຽນຕໍ່ເນື່ອງປົກກະຕິ | 220 | 127 |
| ຄູມັດທະຍົມຮຽນຕໍ່ເນື່ອງປົກກະຕິ | 275 | 145 |
| ຄູອານຸບານຮຽນພັກສິ້ນປີ | 240 | 281 |
| ຄູປະຖົມຮຽນພັກສິ້ນປີ | 420 | 466 |
| ວິທະຍາໄລສົງ | 180 | 66 |
| ວິທະຍາໄລພາລະ ແລະ ສິລະປະສຶກສາ | 270 | 154 |
| ຄະນະສຶກສາສາດ 4 ແຫ່ງ | 700 | 542 |
| ລວມທັງໝົດ | 4.145 | 3.139 |

ແຫຼ່ງຂໍ້ມູນ: ກົມສ້າງຄູ

### 6.1.2. ວຽກງານຄຸນນະພາບ ແລະ ຄວາມສອດຄ່ອງ

ໃນສົກຮຽນ 2019-2020, ໄດ້ມີການປັບປຸງຄຸນນະພາບໃນກໍ່ສ້າງ ແລະ ບຳລຸງຄູໃນຫຼາຍດ້ານ ທັງຢູ່ພາຍໃນສະຖາບັນສ້າງຄູ ແລະ ໃນໂຮງຮຽນສາມັນສຶກສາຕ່າງໆ ເປັນຕົ້ນແມ່ນ ໄດ້ຝຶກອົບຮົມ-ແນະນຳ ການນຳໃຊ້ຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ ສະບັບປັບປຸງໃໝ່; ພັດທະນາປຶ້ມຄູ່ມືການສອນຫ້ອງຄວບ; ຄູ່ມືການສອນພາສາລາວໃຫ້ເດັກຊົນເຜົ່າ. ພ້ອມດຽວກັນນັ້ນ ກໍ່ໄດ້ຝຶກອົບຮົມການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ທຸກວິຊາໃນຫຼັກສູດຊັ້ນປະຖົມສຶກສາຂັ້ນ ປ.1 ສະບັບປັບປຸງໃໝ່ ໃຫ້ແກ່ຄູ ຂັ້ນ ປ.1 ແລະ ການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາຄະນິດສາດຊັ້ນປະຖົມສຶກສາ ປີທີ 2 ສະບັບປັບປຸງໃໝ່ ໃຫ້ແກ່ຄູສອນ ປ.2 ໃນທົ່ວປະເທດທັງພາກລັດ ແລະ ເອກະຊົນ, ພ້ອມທັງໄດ້ຝຶກອົບຮົມກ່ຽວກັບການສຶກສາການສອນໃຫ້ຄູອາຈານ ສາຍວິທະຍາສາດທຳມະຊາດໃນບັນດາ

ວິທະຍາໄລຄູ ແລະ ຂະແໜງພັດທະນາຄູທົ່ວປະເທດ. ສຳເລັດການພັດທະນາຄູ່ມືວິທີການສອນ ທີ່ຄຳນຶງເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຂົ້າໃນກິດຈະກຳການສອນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳສາດ ແລະ ຄະນິດສາດ (STEM Education) ໃນຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຝຶກອົບຮົມຄູຝຶກຂັ້ນແຂວງທົ່ວປະເທດ ແລະ ຄູສອນຊັ້ນມັດທະຍົມສຶກສາຕອນຕົ້ນ ຮ່ວມກັບອົງການ UNESCO Bangkok;

ເພື່ອແນໃສ່ການປັບປຸງຄຸນນະພາບຂອງການສິດສອນຢູ່ໂຮງຮຽນສາມັນຕ່າງໆ,ກົມສ້າງຄູ ແລະ ກົມສາມັນສຶກສາ ໂດຍການສະໜັບສະໜູນຈາກອົງການ ຢູນິເຊັບ ຍັງໄດ້ພັດທະນາເນື້ອໃນຄູ່ມືການຍົກລະດັບຄູສຶກສານິເທດຊັ້ນປະຖົມສຶກສາ; ພ້ອມທັງໄດ້ຝຶກອົບຮົມໃຫ້ແກ່ ຄູສຶກສານິເທດຂັ້ນເມືອງ, ຂັ້ນແຂວງ ແລະ ວິທະຍາໄລຄູອີກດ້ວຍ.

ຄູອາຈານ ຈຳນວນ 55 ຄົນໄດ້ຍົກລະດັບວຸດທິການສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດໃນລະດັບຕ່າງໆ ຄື: ຊັ້ນສູງ 3 ຄົນ, ປະລິນຍາຕີ 14 ຄົນ, ປະລິນຍາໂທ 30 ຄົນ, ປະລິນຍາເອກ 8 ຄົນ.

### 6.1.3. ວຽກງານບໍລິຫານ ແລະ ຄຸ້ມຄອງ

1) ວິທະຍາໄລຄູ 08 ແຫ່ງ, ວິທະຍາໄລພະລະສຶກສາ ແລະ ວິທະຍາໄລສິລະປະສຶກສາ ໄດ້ປະກາດເປັນວິທະຍາໄລປອດຢາເສບຕິດໃນສົກຮຽນ 2019;
2) ສາມາດຮັບຮອງຕຳແໜ່ງວິຊາການຄູປະຈຳປີ 2018 ໃຫ້ແກ່ຄູສອນໃນວິທະຍາໄລຄູ 08 ແຫ່ງ ແລະ ວິທະຍາໄລສົງ 02 ແຫ່ງ ຈຳນວນ 71 ຄົນ, ຍິງ 34 ຄົນ. ຕຳແໜ່ງຜູ້ຊ່ວຍອາຈານ 49 ຄົນ, ຍິງ 24 ຄົນ ແລະ ຕຳແໜ່ງອາຈານ 22 ຄົນ (ຍິງ 10 ຄົນ);
3) ສຳເລັດການສຶກສາ-ສຳຫຼວດທັດສະນະ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາ ເພື່ອວິເຄາະ-ປະເມີນຄວາມຮູ້ວິຊາສະເພາະ, ທັກສະການສອນຂອງຄູອາຈານ, ຊອກຫາບັນຫາ ແລະ ເພື່ອກຳນົດທິດທາງໃນການປັບປຸງ;
4) ສຳເລັດການສະເໜີຂໍຍົກສະຖານະພາບຂອງວິທະຍາໄລຄູ 08 ແຫ່ງ ເປັນສະຖາບັນການສຶກສາຄູ. ໃນນີ້ ໄດ້ຜ່ານການລົງກວດກາແລ້ວ 02 ແຫ່ງ ແລະ ລໍຖ້າ ການຮັບຮອງ;
5) ສຳເລັດການຕິດຕາມ-ກວດກາ ວຽກງານປະກັນຄຸນນະພາບ ໃນວິທະຍາໄລຄູ 08 ແຫ່ງ ແລະ ວິທະຍາໄລສົງ 02 ແຫ່ງ;
6) ສຳເລັດການປັບປຸງຖານຂໍ້ມູນ ລະບົບ TEMIS ແລະ ເວບໄຊ ຮ່ວມກັບວິທະຍາໄລຄູ 08 ແຫ່ງ, ວິທະຍາໄລສົງ 02 ແຫ່ງ, ວິທະຍາໄລພະລະສຶກສາ ແລະ ສິລະປະສຶກສາ;
7) ສຳເລັດການປະເມີນຄຸນນະພາບຄູພະລະສຶກສາ, ຄູສິລະປະສຶກສາ ແລະ ຕິດຕາມການຮຽນ-ການສອນວິຊາພະລະສຶກສາ, ວິຊາສິລະປະສຶກສາ ຢູ່ໃນວິທະຍາໄລຄູ 8 ແຫ່ງ.

### 6.2. ບັນຫາ ແລະ ສິ່ງທ້າທາຍ

1) ວຸດທິການສຶກສາຂອງຄູຈຳນວນໜຶ່ງ ໃນແຕ່ລະຊັ້ນຮຽນ ຍັງບໍ່ໄດ້ມາດຕະຖານວິຊາຊີບຄູທີ່ກຳນົດໄວ້;
2) ການຝຶກອົບຮົມຄູຍັງບໍ່ມີປະສິດທິພາບສູງ, ກົນໄກຮັບປະກັນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຍັງບໍ່ເຂັ້ມແຂງ ແລະ ການເກັບກຳສະຖິຕິຄູທີ່ເຂົ້າຮັບການບຳລຸງແຕ່ລະຄັ້ງ ຍັງບໍ່ກົງກັບຕົວເລກທີ່ເຂົ້າຮັບການຝຶກອົບຮົມຕົວຈິງ;
3) ໂຕເລກການສະໜອງຄູຈຳກັດ, ການສະໜອງຄູບໍ່ພຽງພໍ ໂດຍສະເພາະແມ່ນເຂດທີ່ຢູ່ຫ່າງໄກສອກຫຼີກ ຈຶ່ງເປັນສາຍເຫດເຮັດໃຫ້ມີການນຳໃຊ້ຄູທີ່ບໍ່ຖືກກັບວຸດທິ ແລະ ສາຍວິຊາສະເພາະທີ່ຮຽນຈົບ; ໃນຂະນະດຽວກັນ ຄູທີ່ຈົບໃໝ່ທີ່ໄດ້ມາດຕະຖານ ແລະ ຄຸນນະພາບ ບໍ່ໄດ້ຮັບການບັນຈຸ;
4) ການຈັດສັນຄູຄືນໃໝ່ ເພື່ອແກ້ໄຂບັນຫາ ຄູເຫຼືອບໍ່ພໍ ລະຫວ່າງໂຮງຮຽນຕໍ່ໂຮງຮຽນ, ລະຫວ່າງເມືອງ ແລະ ແຂວງ ຍັງພົບຄວາມຫຍຸ້ງຍາກ;

5) ການປະສານງານລະຫວ່າງວິທະຍາໄລຄູ ກັບໂຮງຮຽນມັດທະຍົມ ແລະ ກຸ່ມໂຮງຮຽນໃນການນຳໃຊ້ອຸບປະກອນເຄື່ອງທົດລອງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

## 6.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

### 6.3.1. ຈຸດປະສົງ

1) ເພື່ອສືບຕໍ່ຈັດຕັ້ງປະຕິບັດແກ້ໄຂຂໍ້ຄົງຄ້າງໃນແຕ່ລະວຽກຈຸດສຸມ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ (2016-2020) ໃຫ້ສອດຄ່ອງກັບວິໄສທັດຮອດປີ 2030 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ (2021-2025);
2) ເພື່ອປັບປຸງຄຸນນະພາບຂອງການສຶກຊັ້ນປະຖົມ ທີ່ກຳລັງເລັ່ງໃສ່ການປັບປຸງທັກສະການອ່ານ, ການຂຽນ ແລະ ການຄິດໄລ່ເລກພື້ນຖານ ຂອງນັກຮຽນຊັ້ນປະຖົມສຶກສາ ໂດຍເນັ້ນໃສ່ການຝຶກອົບ ຮົມຄູປະຈຳການ, ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສຶກສານິເທດ ແລະ ການພັດທະນາກຸ່ມໂຮງຮຽນເປັນຫຼັກ;
3) ເພື່ອຫຼຸດຜ່ອນການສ້າງຄູໃນສາຍວິຊາທີ່ຄູເຫຼືອ, ເນັ້ນໃສ່ການສ້າງຄູໃນສາຍທຳມະຊາດ ແລະ ການຍົກລະດັບຄູປະຈຳການໃຫ້ໄດ້ມາດຕະຖານ ແລະ ມີວຸດທິຖືກຕ້ອງກັບວິຊາທີ່ສອນ.

### 6.3.2. ຄາດໝາຍຫຼັກ

1) ຮັບນັກຮຽນເຂົ້າຮຽນສາຍສ້າງຄູໃນສົກ 2020-2021 ຈຳນວນ 2.750 ຄົນ;
2) ຈັດຕັ້ງການຝຶກອົບຮົມຄູປະຈຳການໃນການນຳໃຊ້ຫຼັກສູດປະຖົມສຶກສາສະບັບປັບປຸງໃໝ່ ຂັ້ນ ປ.2 ທຸກໆວິຊາ ແລະ ປ.3 ວິຊາຄະນິດສາດ ທົ່ວປະເທດ ໃຫ້ໄດ້ 100% ແລະ ສ້າງຄູສຶກສານິເທດຊັ້ນປະຖົມສຶກສາ ໃຫ້ໄດ້ 70%;
3) ຍົກຖານະວິທະຍາໄລຄູໃຫ້ເປັນສະຖາບັນການສຶກສາຄູ ຢ່າງໜ້ອຍ 2 ແຫ່ງ.

### 6.3.3. ວຽກຈຸດສຸມ

1) ສືບຕໍ່ເສີມຂະຫຍາຍຄວາມຮູ້ ແລະ ແນວຄວາມຄິດ ກ່ຽວກັບຄວາມສະເໝີພາບ ແລະ ຄວາມເທົ່າທຽມ ເຂົ້າໃນການຈັດການຮຽນ-ການສອນ ແລະ ຫຼັກສູດສ້າງຄູແຕ່ລະສາຍ;
2) ສືບຕໍ່ເສີມຂະຫຍາຍຄວາມຮູ້ ແລະ ແນວຄວາມຄິດ ກຽວກັບຄວາມສະເໝີພາບ ແລະ ຄວາມເທົ່າທຽມ ເຂົ້າໃນຫຼັກສູດການຝຶກອົບຮົມຄູປະຈຳການ ໃນທຸກໆໂມດູນ;
3) ສືບຕໍ່ປັບປຸງຫຼັກສູດສ້າງຄູ ທຸກລະດັບ-ສາຂາ ທັງລະບົບປົກກະຕິ ແລະ ລະບົບຕໍ່ເນື່ອງ;
4) ສືບຕໍ່ຕິດຕາມການປັບປຸງເຄືອຂ່າຍການຮ່ວມມືລະຫວ່າງບັນດາສະຖານການສ້າງຄູ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງ ໃນຮູບແບບການສຶກສາການສອນ (Lesson Study) ຮ່ວມກັນລະຫວ່າງ ວິທະຍາໄລຄູ, ໂຮງຮຽນປະຖົມສາທິດ ແລະ ໂຮງຮຽນປະຖົມໃນເຄືອຂ່າຍ;
5) ສືບຕໍ່ແລກປ່ຽນບົດຮຽນທາງດ້ານວິຊາການ ແລະ ຕິດຕາມການຈັດຕັ້ງຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈລະຫວ່າງວິທະຍາໄລຄູດ້ວຍກັນ, ມະຫາວິທະຍາໄລຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
6) ຖອດຖອນບົດຮຽນ ກ່ຽວກັບວຽກງານການຝຶກຫັດວິຊາຊີບຄູ ຂອງບັນດາສະຖາບັນສ້າງຄູ 16 ແຫ່ງ ແລະ ປັບປຸງຄູ່ມືການຝຶກຫັດວິຊາຊີບຄູ;
7) ອອກຂໍ້ແນະນຳ ການນຳໃຊ້ມາດຕະຖານການສອນຂອງຄູ ພ້ອມທັງ ຕິດຕາມ-ປະເມີນ ຜົນການນຳໃຊ້ມາດຕະຖານດັ່ງກ່າວ;

8) ຕິດຕາມການດຳເນີນ ການຮຽນ-ການສອນ ໃນຫຼັກສູດພະລະສຶກສາຊັ້ນສູງ ຢູ່ວິທະຍາໄລຄູປາກເຊ ແລະ ວິທະຍາໄລຄູຄັງໄຂ ພ້ອມທັງປະເມີນຫຼັກສູດດັ່ງກ່າວ;
9) ສືບຕໍ່ປັບປຸງລະບົບຖານຂໍ້ມູນ ແລະ ນິຕິກຳກ່ຽວກັບ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບການບຳລຸງຄູປະຈຳການ ແລະ ການສຶກສານິເທດ;
10) ດຳເນີນການວິໄຈພາກປະຕິບັດ (Action Research) ກ່ຽວກັບຜົນການຮຽນການສອນໃນຊັ້ນປະຖົມສຶກສາ ດ້ວຍການຮ່ວມມືລະຫວ່າງ ກະຊວງສຶກສາທິການ ແລະ ກິລາ, ສະຖາບັນສ້າງຄູ ແລະ ພາກສ່ວນທີ່ກ່ຽວຂ້ອງ;
11) ຝຶກອົບຮົມການປະດິດ ສື່-ອຸປະກອນ ການຮຽນ-ການສອນ ໃຫ້ຄູສອນຄະນິດສາດ ແລະ ວິທະຍາສາດທຳມະຊາດ ໃນວິທະຍາໄລຄູ ແລະ ໂຮງຮຽນປະຖົມ ຮ່ວມກັບອົງການ SEAMEO RECSAM;
12) ສືບຕໍ່ຍົກລະດັບ ຄູສຶກສານິເທດ ຊັ້ນປະຖົມສຶກສາ ທົ່ວປະເທດ (ຕາມຫຼັກສູດ 2 ໂມດູນ) ພ້ອມທັງລົງຕິດຕາມ-ຊ່ວຍເຫຼືອ ແລະ ປະເມີນ ການລົງປະຕິບັດວຽກຕົວຈິງ ຂອງຄູສຶກສານິເທດ ຂັ້ນເມືອງ;
13) ແນະນຳການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາ ປີທີ 2 ສະບັບປັບປຸງໃໝ່ (ທຸກວິຊາ) ແລະ ຄະນິດສາດ ຊັ້ນປະຖົມສຶກສາປີທີ 3 ໃຫ້ຄູສອນ ປ.2 ແລະ ປ.3 ໃນທົ່ວປະເທດ;
14) ຝຶກອົບຮົມວິທີການສອນຫ້ອງຄວບອາຍຸເດັກ 3-5 ປີ ໃຫ້ແກ່ຄູສອນຢູ່ບ້ານເປົ້າໝາຍຂອງໂຄງການ ການສຶກສາກ່ອນໄວຮຽນ ແລະ ຄູສອນໃນເມືອງເປົ້າໝາຍຂອງອົງການ SVA ໃນ ແຂວງຫຼວງພະບາງ;
15) ສືບຕໍ່ພັດທະນາຄູ່ມືວິທີເຮັດວຽກຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມສາທິດ;
16) ປຶກສາຫາລືກ່ຽວກັບ ສູນແຫ່ງການພັດທະນາວິຊາຊີບ CPD ຂອງວິທະຍາໄລຄູ ແລະ ຝຶກອົບຮົມໃຫ້ແກ່ຄູອາຈານ ໃນວິທະຍາໄລຄູ ໃນການໃຫ້ບໍລິການດ້ານວິຊາການໃຫ້ແກ່ຊຸມຊົນ ໂດຍສະເພາະ ວຽກງານການສຶກສານິເທດ;
17) ສືບຕໍ່ຕິດຕາມ ແລະ ປະສານກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການສະເໜີ ຂໍຍົກສະຖານະພາບຂອງວິທະຍາໄລຄູ ເປັນສະຖາບັນການສຶກສາຄູ;
18) ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການປະກັນຄຸນນະພາບ ພາຍໃນສະຖາບັນສ້າງຄູ ແລະ ລົງຕິດຕາມ-ກວດກາ ການປະກັນຄຸນນະພາບພາຍໃນວິທະຍາໄລຄູ 08 ແຫ່ງ ແລະ ວິທະຍາໄລສົງ 02 ແຫ່ງ ປະຈຳຮຽນ 2019-2020;
19) ຕິດຕາມ, ກວດກາ ແລະ ຊຸກຍູ້ການປັບປຸງສູນແຫ່ງການພັດທະນາ ເພື່ອກ້າວສູ່ ສູນແຫ່ງຄວາມເປັນເລີດ ໃນສາຂາວິຊາຄູໃດໜຶ່ງ ຂອງວິທະຍາໄລຄູແຕ່ລະແຫ່ງ;
20) ປະເມີນຂໍ້ແຂ່ງຂັນຮັກຊາດພັດທະນາ (3 ຂໍ້ແຂ່ງຂັນ ແລະ 8 ຂໍ້ແຂ່ງຂັນຂອງວິທະຍາໄລຄູ);
21) ປັບປຸງ ຄູ່ມືການຕິດຕັ້ງ, ນຳໃຊ້ ແລະ ບຳລຸງຮັກສາເວບໄຊບົດຮຽນເອເລັກໂຕຼນິກ ສາຍສ້າງຄູ;
22) ສ້າງນິຕິກຳວ່າດ້ວຍການອອກໃບອະນຸຍາດການສອນໃຫ້ແກ່ຄູ;
23) ປະເມີນຜົນການຈັດຕັ້ງປະຕິບັດວຽກງານສ້າງຄູໄລຍະທ້າຍຂອງແຜນງານ 05 ປີ ຄັ້ງທີ VIII;
24) ຍົກລະດັບຄູສອນໃນສາຍສາມັນ ທີ່ສອນບໍ່ຖືກວຸດທິ ແລະ ບໍ່ຖືກວິຊາສະເພາະ ດ້ວຍຫຼາຍຮູບແບບ;
25) ເກັບກຳຂໍ້ມູນຄູທີ່ຮຽນຈົບຈາກວິທະຍາໄລຄູ ທີ່ຖືກບັນຈຸໃນໂຮງຮຽນສາມັນຂອງເມືອງ, ແຂວງໃນເຂດບໍລິການ ແລະ ຂະແໜງການອື່ນໆ ເພື່ອສຶກສາ, ປະເມີນຄວາມຕ້ອງການຄູ ແລະ ຄຸນນະພາບຂອງນັກສຶກສາຄູທີ່ຜະລິດອອກສູ່ສັງຄົມ;
26) ປັບປຸງນິຕິກຳ ກ່ຽວກັບການຄັດເລືອກນັກຮຽນເຂົ້າຮຽນໃນສາຍສ້າງຄູ.

# VII. ຂະແໜງການຍ່ອຍ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

## 7.1. ຜົນສຳເລັດ

### 7.1.1. ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນສົກຮຽນ 2019-2020 ມີສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນ ທີ່ຂຶ້ນກັບການຄຸ້ມຄອງທາງດ້ານວິຊາການຂອງກົມອາຊີວະສຶກສາມີທັງໝົດ 92 ແຫ່ງ, ມີພະນັກງານ-ຄູອາຈານ ທັງໝົດ 4.263 ຄົນ, ຍິງ 1.532 ຄົນ ແລະ ມີນັກຮຽນ-ນັກສຶກສາທັງໝົດ 52.252 ຄົນ, ຍິງ 23.194 ຄົນ, ເຊິ່ງແຍກພາກລັດ ແລະ ເອກະຊົນ ຄື: 1) ສະຖານອາຊີວະສຶກສາ ພາກລັດທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີທັງໝົດ 25 ແຫ່ງ, ມີພະນັກງານ-ຄູອາຈານ ທັງ ໝົດ 2.179 ຄົນ, ຍິງ 824 ຄົນ ແລະ ມີນັກຮຽນ-ນັກສຶກສາທັງໝົດ 34.606 ຄົນ; ຍິງ 13.589 ຄົນ , 2) ສະຖານອາຊີວະສຶກສາພາກເອກະຊົນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ມີທັງໝົດ 67 ແຫ່ງ, ມີພະນັກງານ-ຄູອາຈານ ທັງໝົດ 2.084 ຄົນ, ຍິງ 708 ຄົນ (ຄູປະຈຳການ 1.098 ຄົນ ແລະ ຄູຮັບເຊີນ 845 ຄົນ) ແລະ ມີນັກຮຽນ-ນັກສຶກສາທັງໝົດ 17.646 ຄົນ; ຍິງ 9.605 ຄົນ. ການຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາໃນ 1 ປີຜ່ານມາ ມີຜົນສຳເລັດດັ່ງນີ້:

1) ສຳເລັດການຂະຫຍາຍພື້ນຖານໂຄງລ່າງໃຫ້ບັນດາສະຖານອາຊີວະສຶກສາຕ່າງໆຈຳນວນໜຶ່ງ ເຊັ່ນ: ການກໍ່ສ້າງໂຮງຊ່າງ, ອາຄານຮຽນ, ຫໍພັກ, ຕະຂ່າຍໄຟຟ້າ, ນໍ້າປະປາ ແລະ ຮົ້ວ ຂອງວິທະຍາໄລ ເຕັກນິກ ລາວ-ເຢຍລະມັນ, ວິທະຍາເຂດບ້ານ ຊຽງດາ ພາຍໃຕ້ທຶນສະໜັບສະໜູນຂອງໂຄງການສະໜັບສະໜູນການເງິນອາຊີວະສຶກສາ (VEFF) ແລະ ທຶນສົມທົບຂອງໂຄງການຂອງລັດຖະບານ;
2) ສຳເລັດການກໍ່ສ້າງໂຮງແຮມຝຶກພາກປະຕິບັດ ຂອງວິທະຍາໄລເຕັກນິກ ແຂວງວຽງຈັນ, ວິທະຍາເຂດເມືອງວັງວຽງ ພາຍໃຕ້ໂຄງການ ທັກສະກ່ຽວກັບວຽກງານທ່ອງທ່ຽວ ລາວ/029;
3) ສຳເລັດການສ້າງສູນຮຽນຮູ້ດ້ານພະລັງງານແສງຕາເວັນ ຮ່ວມກັບບໍລິສັດ ຮາດຊະບູລິກຣຸບ ທີ່ວິທະຍາໄລເຕັກນິກ ແຂວງຄຳມ່ວນ;
4) ສຳເລັດການປັບປຸງ ແລະ ສ້ອມແປງຫໍພັກນັກຮຽນ, ຫໍພັກຄູ ແລະ ກໍ່ສ້າງຫ້ອງການຂະແໜງປູກຝັງຂອງໂຮງຮຽນວິຊາຊີບ ແຂວງໄຊສົມບູນ ໂດຍນຳໃຊ້ການລົງຝຶກງານຂອງນັກຮຽນປີສຸດທ້າຍ ຂອງ 4 ວິທະຍາໄລ;
5) ຍົກລະດັບສູນຝຶກອົບຮົມວິຊາຊີບ ນໍ້າບາກ, ແຂວງຫຼວງພະບາງ ເປັນໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ ນໍ້າບາກ ແຂວງຫຼວງພະບາງ;
6) ສະໜອງອຸປະກອນເຕັກນິກ, ສື່ການຮຽນ-ການສອນ ແລະ ເຟີນີເຈີໃຫ້ແກ່ 08 ວິທະຍາໄລໂດຍການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ໄລຍະ 2 (SSTVET);
7) ສຳເລັດການ ສ້າງສູນຮຽນຮູ້ດ້ານການກະສິກຳແບບຍືນຍົງໃຫ້ແກ່ ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຄຳມ່ວນ ແລະ ໂຮງຮຽນ ເຕັກນິກ-ວິຊາຊີບແບບປະສົມ ແຂວງເຊກອງ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການ TICA;
8) ສຳເລັດການສ້ອມແປງໂຮງຝຶກງານສາຂາຊ່າງໄມ້ ຂອງສະຖາບັນພັດທະນາອາຊີວະສຶກສາ ໂດຍການສະໜັບສະໜູນຈາກໂຄງການຮ່ວມມືລາວ-ເຢຍລະມັນ.

### 7.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ເພື່ອເປັນການປັບປຸງຄຸນນະພາບຂອງການສິດສອນ ຢູ່ບັນດາສະຖານອາຊີວະສຶກສາຕ່າງໆ, ກົມອາຊີວະສຶກສາ ໂດຍສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໄດ້ທົບທວນ, ປັບປຸງ ແລະ ພັດທະນາຫຼັກສູດການຮຽນ-ການ

ສອນຈຳນວນໜຶ່ງເຊັ່ນ: ໄດ້ສ້າງ ແລະ ພັດທະນາຫຼັກສູດວິຊາຊີບຈຳນວນ 41 ຫຼັກສູດ; ສຳເລັດການທົບທວນການຈັດຕັ້ງປະຕິບັດຫຼັກສູດວິຊາຊີບ ຈຳນວນ 20 ຫຼັກສູດ ແລະ ພັດທະນາຮູບແບບການຮຽນ-ການສອນແບບຄວບຄູ່ (DCT) ເຊິ່ງໄດ້ຈັດຕັ້ງປະຕິບັດທົດລອງຢູ່ສະຖານອາຊີວະສຶກສາ 4 ແຫ່ງ. ນອກນັ້ນ ກໍ່ໄດ້ພັດທະນາຮູບແບບການຮຽນ-ການສອນແບບເນັ້ນສະມັດຖະພາບ (CBT) ສາຂາວິຊາ ອາຫານການໂຮງແຮມ ແລະ ການທ່ອງທ່ຽວ, ເຊິ່ງຈັດຕັ້ງປະຕິບັດໃນສະຖານອາຊີວະສຶກສາ 17 ແຫ່ງ.

ເພື່ອປັບປຸງຄຸນນະພາບການສິດສອນ ຢູ່ສະຖານອາຊີວະສຶກສາຕ່າງໆ, ໄດ້ມີການຝຶກອົບຮົມ ແລະ ຍົກລະດັບໃຫ້ພະນັກງານຄູ-ອາຈານທາງດ້ານວິຊາສະເພາະ ແລະ ວິທີການສິດສອນ ຢູ່ພາຍໃນ ແລະ ຕ່າງປະເທດຈຳນວນຫຼາຍສົມຄວນຄື: ລະດັບປະລິນຍາໂທ 37 ຄົນ, ປະລິນຍາຕີ 178 ຄົນ ແລະ ຊັ້ນສູງ 110 ຄົນ; ຝຶກອົບຮົມ ດ້ານວິຊາສະເພາະໃຫ້ພະນັກງານ-ຄູອາຈານ ຢູ່ພາຍໃນ ແລະ ຕ່າງປະເທດ ຈຳນວນ 883 ຄົນ ແລະ ຝຶກອົບຮົມ ວິຊາຄູໃຫ້ຄູສອນຈຳນວນ 1.016 ຄົນ.

### 7.1.3. ການບໍລິຫານ ແລະ ການຄຸ້ມຄອງ

ເພື່ອປັບປຸງລະບົບການຄຸ້ມຄອງວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ, ກົມອາຊີວະສຶກສາ ໄດ້ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ປັບປຸງກົດໝາຍວ່າດ້ວຍອາຊີວະສຶກສາ ພ້ອມທັງໄດ້ດຳເນີນການເຜີຍແຜ່ຢ່າງກວ້າງຂວາງ. ຄຽງຄູ່ກັນນັ້ນກໍ່ໄດ້ມີການປັບປຸງກົງຈັກການຈັດຕັ້ງ ຊຸກຍູ້ບັນດາສະຖານອາຊີວະສຶກສາຈຳນວນໜຶ່ງເປັນຕົ້ນແມ່ນສຳເລັດການປັບປຸງກົງຈັກການຈັດຕັ້ງຂອງວິທະຍາໄລເຕັກນິກປາກປ່າສັກ, ວິທະຍາໄລເຕັກນິກວິຊາຊີບແຂວງຫຼວງພະບາງ, ວິທະຍາໄລ ເຕັກນິກລາວ-ເຢຍລະມັນ, ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຈຳປາສັກ, ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຄຳມ່ວນ, ວິທະຍາໄລ ເຕັກນິກ-ກະສິກຳດົງຄຳຊ້າງ, ວິທະຍາໄລເຕັກນິກສັບພະວິຊາ ແລະ ໂຮງຮຽນເຕັກນິກ-ວິຊາຊີບ ແບບປະສົມ ແຂວງບໍ່ແກ້ວ.

## 7.2. ບັນຫາ ແລະ ສິ່ງທ້າທາຍ

ຄຽງຄູ່ກັບຜົນສຳເລັດໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳຕ່າງໆທີ່ໄດ້ກ່າວມາຂ້າງເທິງນັ້ນ ຍັງມີບັນຫາ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ປັບປຸງ ແລະ ແກ້ໄຂໃຫ້ແທດເໝາະກັບສະພາບຄວາມເປັນຈິງດັ່ງນີ້:

1) ຫຼັກສູດວິຊາຊີບຈຳນວນໜຶ່ງຍັງບໍ່ທັນປັບປຸງ ໃຫ້ທັນກັບຄວາມຕ້ອງການຂອງຕະຫຼາດແຮງງານ;
2) ອຸປະກອນເຕັກນິກ ແລະ ສື່ການສອນຈຳນວນໜຶ່ງ ຍັງບໍ່ທັນສະໄໝຕໍ່ກັບການຂະຫຍາຍຕົວທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
3) ການປະສານງານກັບສະຖານປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທັນເລິກເຊິ່ງ ແລະ ຮ່ວມມືຢ່າງກວ້າງຂວາງ;
4) ພື້ນຖານໂຄງລ່າງທາງດ້ານອິນເຕີເນັດຢູ່ສະຖານອາຊີວະສຶກສາ ຍັງບໍ່ທັນມີຄວາມພ້ອມທີ່ຈະນຳໃຊ້ ICT ເຂົ້າໃນການບໍລິຫານ-ຈັດການ ຂໍ້ມູນ-ຂ່າວສານ ແລະ ນຳໃຊ້ເຂົ້າໃນການຈັດການຮຽນ-ການສອນ;
5) ຜູ້ບໍລິຫານ, ພະນັກງານ, ຄູອາຈານ ຈຳນວນໜຶ່ງ ຍັງຂາດປະສົບການໃນການບໍລິຫານຄຸ້ມຄອງ ແລະ ການສິດສອນ.

## 7.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

### 7.3.1. ຈຸດປະສົງ

1) ສົ່ງເສີມ ແລະ ຂະຫຍາຍການເຂົ້າຮຽນຂອງນັກຮຽນທີ່ຈົບມັດທະຍົມຕົ້ນ ແລະ ມັດທະຍົມປາຍ ເຂົ້າຮຽນສາຍອາຊີວະສຶກສາໃນຮູບແບບຕ່າງໆໃຫ້ຫຼາຍຂຶ້ນ;

2) ເພີ່ມການເຂົ້າຮຽນ ແລະ ປັບປຸງລະບົບການເຂົ້າເຖິງການຮຽນສາຍອາຊີວະສຶກສາ ໃຫ້ເທົ່າທຽມກັນສໍາລັບນັກຮຽນຍິງ, ຊົນເຜົ່າ ແລະ ຜູ້ດ້ອຍໂອກາດຈາກເຂດຫ່າງໄກສອກຫຼີກ ດ້ວຍການໃຫ້ທຶນການສຶກສາ;
3) ຍົກລະດັບສະມັດຖະພາບການຮຽນ-ການສອນໃນສະຖານອາຊີວະສຶກສາ ໃຫ້ທັນສະໄໝ ແລະ ແທດເໝາະກັບການຂະຫຍາຍຕົວທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;
4) ປັບປຸງຫຼັກສູດອາຊີວະສຶກສາ ທີ່ມີຢູ່ແລ້ວ ແລະ ສ້າງຫຼັກສູດໃໝ່ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
5) ຍົກລະດັບສະມັດຖະພາບການຄຸ້ມຄອງ-ບໍລິຫານ, ການຈັດການຮຽນ-ການສອນຂອງຜູ້ບໍລິຫານ ແລະ ຄູສອນໃນສະຖານອາຊີວະສຶກສາ;
6) ສ້າງຄວາມເຂັ້ມແຂງການຮ່ວມມືລະຫວ່າງພາກທຸລະກິດ ແລະ ພາກສ່ວນອື່ນ ໃຫ້ມີສ່ວນຮ່ວມໃນການພັດທະນາມາດຕະຖານອາຊີບ, ພັດທະນາຫຼັກສູດ, ສື່ການຮຽນ-ການສອນ ແລະ ຝຶກອົບຮົມວິຊາຊີບ ໃຫ້ນັບມື້ນັບຫຼາຍຂຶ້ນ;
7) ສ້າງນິຕິກໍາໃຕ້ກົດໝາຍ ເພື່ອຄຸ້ມຄອງອາຊີວະສຶກສາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### 7.3.2. ຄາດໝາຍຫຼັກ

1) ຮັບນັກຮຽນເຂົ້າໃນລະບົບຕ່າງໆ ໃຫ້ໄດ້ 16.000 ຄົນ.
2) ຝຶກອົບຮົມຄູປະຈໍາການທັງພາຍໃນ ແລະ ຕ່າງປະເທດໃຫ້ໄດ້ 660 ເທື່ອຄົນ.
3) ສົ່ງພະນັກງານ ແລະ ຄູອາຈານໄປຍົກລະດັບໃຫ້ໄດ້ 300 ຄົນ.

### 7.3.3. ວຽກຈຸດສຸມ

1) ສືບຕໍ່ປັບປຸງ ແລະ ຂະຫຍາຍ ພື້ນຖານໂຄງລ່າງຂອງສະຖານອາຊີວະສຶກສາ;
2) ສືບຕໍ່ສະໜອງອຸປະກອນເຕັກນິກ ແລະ ສື່ການຮຽນ-ການສອນໃຫ້ສະຖານອາຊີວະສຶກສາ;
3) ປັບປຸງ ແລະ ພັດທະນາຫຼັກສູດວິຊາຊີບໃຫ້ສອດຄ່ອງກັບ ຄວາມຕ້ອງການຂອງຕະຫຼາດແຮງງານ;
4) ສົ່ງເສີມການເຂົ້າຮຽນຂອງນັກຮຽນຈົບມັດທະຍົມຕົ້ນ, ມັດທະຍົມປາຍ, ນັກຮຽນຊົນເຜົ່າ, ຜູ້ດ້ອຍໂອກາດ, ຜູ້ຢູ່ເຂດຫ່າງໄກສອກຫຼີກ ແລະ ນັກຮຽນຍິງ ເຂົ້າເຖິງອາຊີວະສຶກສາ;
5) ສ້າງຄວາມເຂັ້ມແຂງໃຫ້ແກ່ການປະສານງານລະຫວ່າງສະຖານອາຊີວະສຶກສາ ແລະ ສະຖານປະກອບການ;
6) ຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ແລະ ຄູສອນວິຊາຊີບໃຫ້ມີຄຸນນະພາບ, ມີຄວາມສາມາດພຽງພໍ ໃນການຄຸ້ມຄອງບໍລິຫານ ແລະ ຈັດການຮຽນ-ການສອນ;
7) ສືບຕໍ່ສ້າງນິຕິກໍາໃຕ້ກົດໝາຍທີ່ເຫັນວ່າມີຄວາມຈໍາເປັນ.

# VIII. ຂະແໜງການຍ່ອຍການສຶກສາຊັ້ນສູງ

## 8.1. ຜົນສຳເລັດ

### 8.1.1. ວຽກງານຂະຫຍາຍໂອກາດ ແລະ ຄວາມເທົ່າທຽມ

ໃນສົກຮຽນ 2019-2020 ກະຊວງສຶກສາທິການ ແລະ ກິລາ ຍັງສືບຕໍ່ໃຫ້ທຶນການສຶກສາ ແກ່ນັກຮຽນເກັ່ງ ແລະ ຜູ້ດ້ອຍໂອກາດ ໃນສັດສ່ວນ 20% ຂອງແຜນຮັບນັກສຶກສາທັງໝົດ ແລະ ອີກ 80% ແມ່ນຜ່ານການສອບເສັງຄັດເລືອກ ແລະ ຈ່າຍຄ່າຮຽນດ້ວຍຕົນເອງ. ໃນສົກຮຽນ 2019-2020 ນັກສຶກສາທີ່ເຂົ້າໃໝ່ໃນການສຶກສາຊັ້ນສູງ ລວມທັງປະລິນຍາເອກ, ປະລິນຍາໂທ ແລະ ປະລິນຍາຕີ ໃນ 5 ມະຫາວິທະຍາໄລ ມີຈຳນວນ ທັງໝົດ 11.039 ຄົນ ແລະ ຈຳນວນນັກຮຽນທັງໝົດໃນ 5 ມະຫາວິທະຍາໄລ ມີ 39.277 ຄົນ. ພ້ອມນີ້ ການສຶກສາຊັ້ນສູງຍັງໄດ້ມີການພັດທະນາຫຼັກສູດ, ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ ໃຫ້ແກ່ສັງຄົມ, ສ້າງຂອບວຸດທິການສຶກສາຊັ້ນສູງແຫ່ງຊາດ ແລະ ບັນຈຸລັດຖະກອນຄູ.

### 8.1.2. ຄຸນນະພາບ ແລະ ຄວາມສອດຄ່ອງ

ຄຽງຄູ່ກັບການຂະຫຍາຍໂອກາດ ແລະ ຄວາມເທົ່າທຽມກັນ ໄດ້ມີການພັດທະນາຫຼັກສູດ, ສົ່ງເສີມການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ ໃຫ້ແກ່ສັງຄົມ, ເຮັດວຽກງານປະກັນຄຸນນະພາບ, ສ້າງຂອບວຸດທິການສຶກສາຊັ້ນສູງແຫ່ງຊາດ, ບັນຈຸລັດຖະກອນຄູ ຊຶ່ງໄດ້ຮັບຜົນສຳເລັດທີ່ພົ້ນເດັ່ນຄື: ສຳເລັດການຂໍອະນຸມັດນຳໃຊ້ຫຼັກສູດທັງໝົດ 54 ຫຼັກສູດ (ອະນຸປະລິນຍາ 3 ຫຼັກສູດ, ປະລິນຍາຕີ 43 ຫຼັກສູດ, ປະລິນຍາໂທ 05 ຫຼັກສູດ, ລົງເລິກຂະແໜງ 01 ຫຼັກສູດ, ຊ່ຽວຊານຂັ້ນໜຶ່ງ 01 ຫຼັກສູດ ແລະ ຊ່ຽວຊານຂັ້ນສອງ 01 ຫຼັກສູດ). ໄດ້ຈັດສົ່ງພະນັກງານ ແລະ ຄູ-ອາຈານ ຂອງມະຫາວິທະຍາໄລເປົ້າໝາຍໂຄງການ SSHEP ທັງ 04 ແຫ່ງ ໄປຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 100 ຄົນ, ຍິງ 53 ຄົນ. ໃນນັ້ນ, ຮຽນຫຼັກສູດປະລິນຍາໂທຢູ່ພາຍໃນ (ມະຫາວິທະຍາໄລແຫ່ງຊາດ) ຈຳນວນ 53 ຄົນ, ຍິງ 34 ຄົນ, ຮຽນຫຼັກສູດປະລິນຍາໂທຢູ່ຕ່າງປະເທດ 25 ຄົນ, ຍິງ 11 ຄົນ ແລະ ຮຽນຫຼັກສູດປະລິນຍາເອກຢູ່ຕ່າງປະເທດ ຈຳນວນ 22 ຄົນ, ຍິງ 08 ຄົນ.

### 8.1.3. ການບໍລິຫານ ແລະ ຄຸ້ມຄອງ

1) ສຳເລັດການສ້າງ (ຮ່າງ) ກົດໝາຍວ່າດ້ວຍການສຶກສາຊັ້ນສູງ ຊຶ່ງຍົກລະດັບຈາກດຳລັດວ່າດ້ວຍການສຶກສາຊັ້ນສູງ ໂດຍໄດ້ຮັບການຮັບຮອງຈາກກອງປະຊຸມລັດຖະບານ ເພື່ອກະກຽມສະເໜີຕໍ່ກອງປະຊຸມສະໄໝສາ ມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII;
2) ສຳເລັດການປັບປຸງດຳລັດວ່າດ້ວຍຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງ ຊຶ່ງຖືກຮັບຮອງຈາກລັດຖະບານ ເອກະສານສະບັບເລກທີ 03/ລບ, ລົງວັນທີ 10 ມັງກອນ 2020;
3) ສຳເລັດການປະກາດການແຂ່ງຂັນເອົາທຶນການຄົ້ນຄວ້າວິທະຍາສາດ ສຳລັບຄູ-ອາຈານ ຈຳນວນ 41 ຫົວຂໍ້ ແລະ ທຶນກິດຈະກຳນອກຫຼັກສູດ ເພື່ອນະວັດຕະກຳສຳລັບນັກສຶກສາຈຳນວນ 15 ຫົວຂໍ້ ໃນ 04 ມະຫາວິທະຍາໄລເປົ້າໝາຍ ພາຍໃຕ້ການສະໜັບສະໜູນຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ ການສຶກສາຊັ້ນສູງ ໄລຍະສອງ (SSHEP). ນອກຈາກນັ້ນ, ຍັງໄດ້ດຳເນີນການຊຸກຍູ້-ສົ່ງເສີມໃຫ້ຄູ-ອາຈານໃນຢູ່ສະຖາບັນການສຶກສາຊັ້ນສູງ ເພື່ອຍາດແຍ່ງເອົາທຶນຄົ້ນຄວ້າວິທະຍາສາດ ຈາກພາກສ່ວນຕ່າງໆ ເປັນຕົ້ນແມ່ນ: ທຶນລັດຖະບານ, ທຶນພາກສ່ວນອຸດສະຫະກຳ, ອົງການຈັດຕັ້ງສາກົນ ແລະ ອື່ນໆ;
4) ສຳເລັດການປັບປຸງມາດຕະຖານຫຼັກສູດແຫ່ງຊາດໃນລະດັບອະນຸປະລິນຍາຮອດປະລິນຍາເອກ;
5) ສຳເລັດການສ້າງຂໍ້ຕົກລົງວ່າດ້ວຍປະກາສະນິຍະບັດການສຶກສາຊັ້ນສູງ;

6) ສໍາເລັດການຢັ້ງຢືນປະກາສະນິຍະບັດ ໃຫ້ແກ່ນັກສຶກສາທີ່ຈົບຈາກສະຖານການສຶກສາຊັ້ນສູງ ໃນ ສປປ ລາວ ຈໍານວນ 210 ຄົນ ແລະ ທຽບວຸດທິການສຶກສາທີ່ຈົບຈາກສະຖາບັນການສຶກສາຊັ້ນສູງຢູ່ຕ່າງປະເທດ ຈໍານວນ 90 ຄົນ;
7) ໄດ້ດໍາເນີນການສ້າງຖານຂໍ້ມູນລະບົບຄຸ້ມຄອງມະຫາວິທະຍາໄລຂອງ ສປປ ລາວ (LUMS) ຢູ່ 4 ມະຫາວິທະຍາໄລ ເພື່ອເປັນຊ່ອງທາງໃນການເຜີຍແຜ່ການຄົ້ນຄວ້າວິທະຍາສາດ, ການຄຸ້ມຄອງການເງິນ, ການຄຸ້ມຄອງພະນັກງານ ແລະ ຄູ-ອາຈານ ແລະ ພະນັກງານ;
8) ໄດ້ຄົ້ນຄວ້າເອກະສານ ເພື່ອສ້າງນິຕິກໍາຄຸ້ມຄອງການຮຽນ-ການສອນ ຜ່ານສື່ເອເລັກໂຕຣນິກ (E-learning) ໃນສະຖາບັນການສຶກສາຊັ້ນສູງ ສໍາເລັດໂດຍພື້ນຖານ.

## 8.2. ບັນຫາ ແລະ ສິ່ງທ້າທາຍ

ເນື່ອງຈາກຜົນກະທົບ ຈາກການແຜ່ລະບາດຂອງເຊື້ອຈຸລະໂລກສາຍພັນໃໝ່ COVID-19 ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດວຽກງານແມ່ນບໍ່ສາມາດດໍາເນີນໄປຕາມແຜນການທີ່ໄດ້ກໍານົດໄວ້ ຊຶ່ງເຮັດໃຫ້ເກີດເປັນບັນຫາ ແລະ ສິ່ງທ້າທາຍ ດັ່ງນີ້:

1) ການສະເໜີຂໍອະນຸມັດເປີດສອນບາງຫຼັກສູດເຫັນວ່າ ຍັງບໍ່ທັນມີຄວາມພ້ອມທາງດ້ານບຸກຄະລາກອນ ແລະ ສິ່ງອໍານວຍຄວາມສະດວກ;
2) ການຢັ້ງຢືນວຸດທິການສຶກສາໃຫ້ຜູ້ທີ່ຮຽນຈົບຢູ່ພາຍໃນ ແລະ ການທຽບວຸດທິການສຶກສາໃຫ້ຜູ້ທີ່ຮຽນຈົບຈາກຕ່າງປະເທດພົບຄວາມຫຍຸ້ງຍາກ ເປັນຕົ້ນແມ່ນ: ການທຽບວຸດທິການສຶກສາໃຫ້ຜູ້ທີ່ຮຽນຈົບຈາກຕ່າງປະເທດ ຍັງບໍ່ທັນມີນິຕິກໍາ ແລະ ຖານຂໍ້ມູນລວມໃນການຄຸ້ມຄອງ;
3) ການຊຸກຍູ້ໃຫ້ສະຖານການສຶກສາຊັ້ນສູງທຸກແຫ່ງ ມີການປະເມີນຕົນເອງ 01 ຄັ້ງຕໍ່ປີ ຍັງບໍ່ທັນສາມາດປະຕິບັດໄດ້ຢ່າງທົ່ວເຖິງ;
4) ການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນຂອງສະຖາບັນການສຶກສາຊັ້ນສູງ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານເທົ່າທີ່ຄວນ, ຍ້ອນວ່າການຈັດການຮຽນ-ການສອນຍັງຂາດພາກປະຕິບັດຕົວຈິງ ຈຶ່ງເຮັດໃຫ້ນັກສຶກສາບໍ່ມີຄວາມຊໍານານດ້ານການເຮັດຕົວຈິງ ແລະ ແນວຄິດສ້າງສັນ;
5) ການຮ່ວມມືແລກປ່ຽນນັກສຶກສາສ່ວນໃຫຍ່ ແມ່ນສິ່ງອອກຫຼາຍກວ່າຮັບເອົາ ເນື່ອງຈາກງົບປະມານບໍ່ທັນຕອບສະໜອງໄດ້ຢ່າງພຽງພໍ, ບໍ່ມີຫຼັກສູດສາກົນຫຼາກຫຼາຍ ພາໃຫ້ການເຄື່ອນໄຫວແລກປ່ຽນນັກສຶກສາ (Student Mobility) ມີຂອບເຂດຈໍາກັດ;
6) ທິດທາງການສົ່ງເສີມໃຫ້ສະຖານການສຶກສາຊັ້ນສູງ ສ້າງຄວາມເຂັ້ມແຂງທາງດ້ານການເງິນ ແລະ ວິຊາການ ບໍ່ທັນຊັດເຈນເທື່ອ;
7) ການເຜີຍແຜ່ ແລະ ນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດຍັງບໍ່ທັນກວ້າງຂວາງ ຍັງບໍ່ມີຜົນໄດ້ຮັບຢ່າງຈະແຈ້ງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ.

## 8.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

### 8.3.1. ຈຸດປະສົງ

ສືບຕໍ່ພັດທະນາຂະແໜງການຍ່ອຍສຶກສາຊັ້ນສູງ ໃຫ້ໄປຕາມວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ IX (2021-2025).

#### 8.3.2. ຄາດໝາຍຫຼັກ

1) ຮັບນັກຮຽນເຂົ້າໃນຮຽນໃນສາຍ ວິທະຍາສາດທໍາມະຊາດ, ເທັກໂນໂລຊີ, ວິສາວະກໍາ ແລະ ຄະນິດສາດ (STEM) ໃຫ້ໄດ້ 4.000 ຄົນ[8].
2) ມາດຕະຖານຫຼັກສູດແຫ່ງຊາດການສຶກສາຊັ້ນສູງໄດ້ຮັບການປັບປຸງ ແລະ ໄດ້ນໍາໃຊ້ໃນປີ 2021;
3) ສະຖານການສຶກສາຊັ້ນສູງທຸກໆແຫ່ງ ຕ້ອງມີການປະເມີນຕົນເອງຢ່າງໜ້ອຍ 1 ຄັ້ງຕໍ່ປີ;

#### 8.3.3. ວຽກຈຸດສຸມ

1) ສືບຕໍ່ຊີ້ນໍາການກໍ່ສ້າງພື້ນຖານໂຄງລ່າງຢູ່ມະຫາວິທະຍາໄລສະຫວັນນະເຂດ;
2) ພັດທະນາການສຶກສາຊັ້ນສູງໃຫ້ມີສ່ວນຮ່ວມ ທັງພາກລັດ ແລະ ເອກະຊົນ;
3) ສືບຕໍ່ສົ່ງເສີມພະນັກງານຄູ-ອາຈານໄປຍົກລະດັບປະລິນຍາໂທ, ປະລິນຍາເອກຢູ່ພາຍໃນ ແລະ ຕ່າງປະເທດ;
4) ປັງປຸງຫຼັກສູດໃຫ້ມີຄຸນນະພາບທົ່ວສະຖານການສຶກສາຊັ້ນສູງ, ເນັ້ນການສ້າງຫຼັກສູດທີ່ເປັນທ່າແຮງ, ສ້າງຫຼັກສູດໃໝ່ໃຫ້ສອດຄ່ອງກັບສະພາບຄວາມຕ້ອງການຂອງເສດຖະກິດ-ສັງຄົມ;
5) ສືບຕໍ່ຮ່ວມມືກັບອົງການ ຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ;
6) ສືບຕໍ່ປະເມີນວິທະຍາໄລຕ່າງໆທັງພາກລັດ ແລະ ເອກະຊົນ ເພື່ອຍົກສະຖານະເປັນສະຖາບັນການສຶກສາຊັ້ນສູງ;
7) ສ້າງຂໍ້ຕົກລົງວ່າດ້ວຍການສອບເສັງເຂົ້າຮຽນສະຖານການສຶກສາຊັ້ນສູງ;
8) ສືບຕໍ່ປັບປຸງຂໍ້ຕົກລົງວ່າດ້ວຍການຮັບຮູ້ວຸດທິການສຶກສາຊັ້ນສູງ;
9) ຄົ້ນຄວ້າ ແລະ ຮັບຮອງ ຄູ່ມືການຄຸ້ມຄອງການຮຽນ-ການສອນຜ່ານສື່ທາງການສຶກສາ (E-learning) ຂອງສະຖານການສຶກສາຊັ້ນສູງ;
10) ເຜີຍແຜ່ດໍາລັດວ່າດ້ວຍຕໍາແໜ່ງວິຊາການຄູສອນ ຢູ່ສະຖານການສຶກສາຊັ້ນສູງ; ຂໍ້ຕົກລົງວ່າດ້ວຍປະກາສະນິຍະບັດການສຶກສາຊັ້ນສູງ ແລະ ຂໍ້ຕົກລົງວ່າດ້ວຍມາດຕະຖານຫຼັກສູດແຫ່ງຊາດ (ສະບັບປັບປຸງ);
11) ຊຸກຍູ້ ແລະ ສົ່ງເສີມ ໃຫ້ສະຖານການສຶກສາຊັ້ນສູງທີ່ມີທ່າແຮງ ເພື່ອກ້າວໄປເຖິງຄວາມເປັນເຈົ້າຕົນເອງ;
12) ສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງສະຖາບັນເຕັກໂນໂລຊີ;
13) ປຶກສາຫາລືຂໍຄວາມຊ່ວຍເຫຼືອຈາກອົງການໄຈກາ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະວິສະວະກໍາສາດ, ມະຫາວິທະຍາໄລແຫ່ງຊາດ;
14) ຕິດຕາມການສ້າງສູນແຫ່ງຄວາມເປັນເລີດ ໃຫ້ມະຫາວິທະຍາໄລ 04 ແຫ່ງ ທີ່ມີໃຫ້ເກີດປະສິດທິພາບ, ປະສິດທິຜົນ.

❖ **ວຽກງານກິດຈະການນັກສຶກສາ**

**1. ຜົນສໍາເລັດ**

1) ສໍາເລັດການຈັດສົ່ງນັກສຶກສາໄປຮຽນຕໍ່ຕ່າງປະເທດຈໍານວນ 4.662 ຄົນ;
2) ສໍາເລັດການສັງລວມນັກສຶກສາລາວຮຽນຈົບຈາກຕ່າງປະເທດທັງໝົດ 472 ຄົນ.

[8] ຂໍ້ມູນຈາກການຄາດຄະເນແຜນ 5 ປີຄັ້ງທີ 9(2021-2025) ຂອງຂະແໜງການສຶກສາຊັ້ນສູງ

## 2. ບັນຫາ ແລະ ສິ່ງທ້າທາຍ

1) ການປະຕິບັດທຶນການສຶກສາກັບຕ່າງປະເທດສົກຮຽນ 2020-2021 ໄດ້ເລື່ອນໄປຕາມສະພາບຂອງແຕ່ລະປະເທດທີ່ໃຫ້ທຶນການສຶກສາໃນຮູບແບບຕ່າງໆ ເນື່ອງຈາກຜົນກະທົບຂອງພະຍາດໂຄວິດ (COVID-19);
2) ການສ້າງ ແລະ ປັບປຸງນິຕິກຳວ່າດ້ວຍການກຳນົດຫຼັກການ ແລະ ລະບຽບການຄຸ້ມຄອງຄຸ້ມຄອງທຶນການສຶກສາສາກົນ ແລະ ການເອົາພົນລະເມືອງລາວໄປຮຽນຕ່າງປະເທດ, ລະບຽບການຄຸ້ມຄອງນັກສຶກສາຕ່າງ ປະເທດມາຮຽນຢູ່ລາວ ແລະ ຢູ່ພາຍໃນປະເທດຍັງບໍ່ສຳເລັດ;
3) ຂໍ້ມູນທຶນການສຶກສາໄປຮຽນຢູ່ຕ່າງປະເທດ ນອກຈາກ ສສ. ຫວຽດນາມ ແລະ ສປ. ຈີນ ຍັງມີຈຳກັດ;
4) ຈຳນວນພະນັກງານ, ນັກສຶກສາລາວໄປຮຽນຕ່າງປະເທດຍັງບໍ່ໄດ້ຜ່ານກະຊວງສຶກສາທິການ ແລະ ກິລາ, ໃນຊ່ວງໄລຍະພະຍາດໂຄວິດ-19 ລະບາດ ແມ່ນພົບຄວາມຫຍຸ້ງຍາກໃນການເກັບກຳສະຖິຕິ ແລະ ຄຸ້ມຄອງນັກສຶກສາລາວທີ່ຮຽນຢູ່ຕ່າງປະເທດ;
5) ມີນັກສຶກສາຈຳນວນໜຶ່ງ ໄປຮຽນບໍ່ມີຂໍ້ຕົກລົງຂອງກະຊວງສຶກສາທິການ ແລະ ກິລາ ແລະ ໄລຍະຮໍ່າຮຽນຢູ່ປະເທດດັ່ງກ່າວ ຍັງບໍ່ລາຍງານໃຫ້ສະຖານທູດ ແລະ ກົງສູນລາວຮັບຊາບ.

## 3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ສ້າງ ແລະ ປັບປຸງນິຕິກຳຕ່າງໆ;
2) ຖອດຖອນບົດຮຽນ ແລະ ວາງແຜນວຽກງານຄຸ້ມຄອງນັກສຶກສາ ແລະ ທຶນການສຶກສາ;
3) ປະເມີນຜົນການສຳຫຼວດຕິດຕາມການຊອກວຽກເຮັດງານທຳຂອງຜູ້ຮຽນຈົບຢູ່ 04 ມະຫາວິທະຍາໄລ;
4) ພັດທະນາລະບົບການຄຸ້ມຄອງນັກສຶກສາລາວຢູ່ຕ່າງປະເທດ ເພື່ອເຊື່ອມໂຍງກັບບັນດາສະຖານທູດ, ສະຖານກົງສູນລາວ ທີ່ມີນັກສຶກສາຮຽນຢູ່;
5) ສ້າງຖານຂໍ້ມູນເພື່ອເຊື່ອມໂຍງກັບອົງການທີ່ຕາງໜ້າລັດຖະບານລາວ ໄປປະຈຳການຢູ່ບັນດາປະ ເທດຕ່າງໆກ່ຽວກັບການຄຸ້ມຄອງນັກສຶກສາລາວ;
6) ຕິດຕາມສະພາບການຮຽນ-ການດຳລົງຊີວິດຂອງນັກສຶກສາຢູ່ບາງປະເທດທີ່ມີເງື່ອນໄຂ ເຊັ່ນ: ຢູ່ປະເທດກຳປູເຈຍ, ສສ. ຫວຽດນາມ ແລະ ສປ.ຈີນ;
7) ສືບຕໍ່ພັດທະນາສູນບໍລິການນັກສຶກສາໃຫ້ເປັນແຫຼ່ງສະໜອງຂໍ້ມູນຂ່າວສານການສຶກສາ;
8) ສືບຕໍ່ຮ່ວມມື ແລະ ຍາດແຍ່ງທຶນການສຶກສາໃຫ້ນັກສຶກສາລາວໄປຮຽນຕ່າງປະເທດ;
9) ປັບປຸງວິທີການ, ມາດຕະການຄົ້ນຄວ້າຄັດເລືອກເອົານັກສຶກສາລາວໄປຮຽນທີ່ຕ່າງປະເທດເພື່ອຮັບປະກັນດ້ານຄຸນນະພາບ;
10) ສືບຕໍ່ວຽກງານການຕິດຕາມຜູ້ຮຽນຈົບທີ່ເປັນກຸ່ມເປົ້າໝາຍຈາກ 04 ມະຫາວິທະຍາໄລ ໂດຍປັບປຸງແບບ ສອບຖາມ ໃຫ້ດີກວ່າເກົ່າຕາມບັນຫາທີ່ໄດ້ພົບພໍ້ເວລາລົງໄປເຜີຍແຜ່ຕົວຈິງ;
11) ສືບຕໍ່ສົມທົບກັບຂະແໜງການຕ່າງໆຂອງພາກລັດ ໃນການເກັບກຳຂໍ້ມູນກ່ຽວກັບຄວາມຕ້ອງການພະນັກງານ ເພື່ອເປັນບ່ອນອີງໃຫ້ຜູ້ຮຽນຈົບຈາກຕ່າງປະເທດໃນການຊອກວຽກ;
12) ພັດທະນາສູນບໍລິການນັກສຶກສາໃຫ້ເປັນແຫລ່ງຂໍ້ມູນຂ່າວສານການສຶກສາ ເປັນຕົ້ນຂໍ້ມູນກ່ຽວກັບທຶນ ແລະ ແຫຼ່ງທຶນການສຶກສາ.

# IX. ຂະແໜງການຍ່ອຍ ກິລາ-ກາຍຍະກຳ

## 9.1. ກິລາມວນຊົນ

### 9.1.1. ຜົນສຳເລັດ

1) ສຳເລັດການໂຄສະນາເຜີຍແຜ່ ນິຕິກຳລຸ່ມກົດໝາຍກິລາ-ກາຍຍະກຳ ມີຈຳນວນ 06 ສະບັບ ໃຫ້ຜູ້ບໍລິຫານການຄຸ້ມຄອງ ກິລາ-ກາຍຍະກຳມວນຊົນ ຈຳນວນ 18 ແຂວງ ມີຈຳນວນພົນເຂົ້າຮ່ວມທັງໝົດ 90 ຄົນ ຍິງ 35 ຄົນ;
2) ສຳເລັດການສົ່ງເສີມທຸກເພດ, ທຸກໄວ ເຂົ້າຮ່ວມ ການຫັດກາຍຍະບໍລິຫານ, ການອອກກຳລັງກາຍ, ການຫຼິ້ນກິລາ ແລະ ການສ້າງຂະບວນການ ຈັດກິດຈະກຳການແຂ່ງຂັນກິລາ-ກາຍຍະກຳມວນຊົນປະຈຳປີ, ການແຂ່ງຂັນກິລາປະເພນີ ແລະ ຈັດການແຂ່ງຂັນກິລາ ເພື່ອສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ ແລະ ສາກົນ ຈຳນວນທັງໝົດ 1.947.720 ຄົນ ເທົ່າກັບ 30 %;
3) ສຳເລັດການເຜີຍແຜ່ ດ້ານນິຕິກຳ ກ່ຽວກັບປື້ມຄູ່ມື ກຳມະການຕັດສິນ, ຄູຝຶກ ແລະ ປື້ມກົດລະບຽບ, ກະຕິກາກິລາ ຂັ້ນພື້ນຖານ ຈຳນວນ 18 ປະເພດກິລາ ມີຈຳນວນພົນເຂົ້າຮ່ວມ 72 ຄົນ, ຍິງ 11 ຄົນ;
4) ສຳເລັດການກໍ່ສ້າງ, ບຳລຸງ, ສຳມະນາ, ຝຶກອົບຮົມ ຍົກລະດັບຜູ້ບໍລິຫານ, ວິຊາການ, ວິທະຍາສາດການກິລາ-ການແພດ, ກຳມະການຕັດສິນ, ຄູຝຶກ ແລະ ນັກກິລາກາຍຍະກຳມວນຊົນແຕ່ລະປະເພດກິລາ ຢູ່ຂັ້ນແຂວງ/ນະຄອນຫຼວງ ແລະ ຂັ້ນເມືອງມີຈຳນວນ 48 ຄົນ, ຍິງ 20 ຄົນ, ຢູ່ຕ່າງປະເທດ 15 ຄົນ, ຍິງ 6 ຄົນ;
5) ສຳເລັດການບຳລຸງ, ຝຶກອົບຮົມ, ຍົກລະດັບ ກຳມະການຕັດສິນ, ຄູຝຶກ ແລະ ນັກກິລາຄົນພິການ ທີມຊາດລາວ ລະດັບພາກພື້ນ ແລະ ສາກົນ ມີຈຳນວນ 10 ປະເພດກິລາ ຈຳນວນ 52 ຄົນ, ຍິງ 14 ຄົນ (2019-2020);
6) ສຳເລັດ ການສ້າງຕັ້ງໜ່ວຍກິລາ ຂັ້ນບ້ານ/ກຸ່ມບ້ານ, ສະໂມສອນກິລາ ຂັ້ນເມືອງ, ສະໂມສອນກິລາຂັ້ນແຂວງ/ນະຄອນຫຼວງ ໃນຈຳນວນໜ່ວຍກິລາຂັ້ນບ້ານ/ກຸ່ມບ້ານ ມີ 1.425 ໜ່ວຍກິລາ;
7) ສຳເລັດ ການສ້າງຕັ້ງສະໂມສອນກິລາຄົນພິການ 18 ແຂວງ/ນະຄອນຫຼວງ ໃນທົ່ວປະເທດ ມີຈຳນວນ 12 ປະເພດກິລາ ແລະ ສ້າງຕັ້ງສະໂມສອນ;
8) ສຳເລັດຈັດການແຂ່ງຂັນກິລາປະຈຳປີ ມີຈຳນວນຜູ້ເຂົ້າຮ່ວມ 1.084 ຄົນ, ຍິງ 370 ຄົນ; ຈັດການແຂ່ງຂັນກິລາປະເພນີ ມີຈຳນວນຜູ້ເຂົ້າຮ່ວມ 107.474 ຄົນ, ຍິງ 7.872 ຄົນ, ຈັດການແຂ່ງຂັນກິລາເພື່ອສະເຫຼີມສະຫຼອງວັນສຳຄັນຕ່າງໆ ມີຜູ້ເຂົ້າຮ່ວມ 151.138 ຄົນ, ຍິງ 123.062 ຄົນ;
9) ສຳເລັດ ການເຂົ້າຮ່ວມການແຂ່ງຂັນກິລາ ທີ່ມີຊາຍແດນຕິດຈອດກັນ (ປະເທດບ້ານໃກ້ເຮືອນຄຽງ) ມີປະເທດ ສປ.ຈີນ, ສສ.ຫວຽດນາມ, ປະເທດໄທ ມີຈຳນວນ 13 ແຂວງ/ນະຄອນຫຼວງ ມີຈຳນວນຜູ້ເຂົ້າຮ່ວມທັງໝົດ 115 ຄົນ, ຍິງ 35 ຄົນ;
10) ສຳເລັດ ການສົ່ງນັກກິລາຄົນພິການ ເຂົ້າຮ່ວມການແຂ່ງຂັນ ຄັດເລືອກນັກກິລາຄົນພິການ ມາດຕະຖານລະດັບສາກົນ (Qualification Event IPC) ເພື່ອສະສົມຄະແນນ ໃຫ້ນັກກິລາຄົນພິການຜູ້ທີ່ເກັ່ງ ໄດ້ມີເງື່ອນໄຂເຂົ້າຮ່ວມການແຂ່ງຂັນລະດັບສາກົນ ໄດ້ 8 ປະເພດກິລາ.

### 9.1.2. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດຕັ້ງຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ ກິລາ-ກາຍຍະກຳ ຢູ່ບັນດາແຂວງ-ນະຄອນຫຼວງ ຍັງບໍ່ຈັດຕັ້ງປະຕິບັດໄດ້ດີເທົ່າທີ່ຄວນ;

2) ບຸກຄະລາກອນ ຮັບຜິດຊອບວຽກງານຂະແໜງ ກິລາ-ກາຍຍະກຳມວນຊົນ ຍັງມີໜ້ອຍ ແລະ ຈຳກັດ;
3) ອຸປະກອນຮັບໃຊ້ ຂະແໜງກິລາ-ກາຍຍະກຳມວນຊົນ ຢູ່ຂັ້ນທ້ອງຖິ່ນ ຍັງມີຈຳນວນຈຳກັດ;
4) ຂາດນິຕິກຳລຸ່ມກົດໝາຍກິລາ-ກາຍຍະກຳ ກ່ຽວກັບການຄຸ້ມຄອງ ຫົວໜ່ວຍທຸລະກິດ ກິລາ-ກາຍຍະກຳມວນຊົນ ແລະ ນິຕິກຳລຸ່ມກົດໝາຍ ກິລາ-ກາຍຍະກຳ ກ່ຽວກັບມາດຕະຖານ (ຄຸນນະພາບ) ຂອງກິລາ-ກາຍຍະກຳມວນຊົນ;
5) ການສະໜອງງົບປະມານ ຍັງບໍ່ທັນສອດຄ່ອງ ແລະ ບໍ່ພຽງພໍກັບໜ້າວຽກ ຂອງຂະແໜງກິລາ-ກາຍຍະກຳມວນຊົນ (ຕໍ່ຄາດໝາຍຕົວຊີ້ວັດ, ຕໍ່ໜ້າວຽກຈຸດສຸມ ແລະ ໜ້າວຽກກິດຈະກຳ ຕົວຊີ້ບອກ) ທີ່ຕ້ອງການຕົວຈິງຕໍ່ໜ້າວຽກແຜນບູລິມະສິດ ຂອງຂະແໜງກິລາ-ກາຍຍະກຳມວນຊົນ;
6) ການຈັດຕັ້ງປະຕິບັດ ພົບກັບ ສະພາບພະຍາດ ໂຄວິດ 19 (Covid-19) ລະບາດ ແລະ ໄພທຳມະຊາດ.

### 9.1.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ໂຄສະນາມວນຊົນທຸກເພດ, ໄວເຂົ້າຮ່ວມການຫັດກາຍຍະບໍລິຫານ, ອອກກຳລັງກາຍ ແລະ ຫຼິ້ນກິລາໃຫ້ເປັນປົກກະຕິ ບັນລຸໄດ້ 34% ຂອງປະຊາກອນ;
2) ສ້າງຕັ້ງໜ່ວຍກິລາ, ສະໂມສອນກິລາ ຂັ້ນບ້ານ/ກຸ່ມບ້ານ, ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນນະຄອນຫຼວງ ໃຫ້ບັນລຸໄດ້ 31%;
3) ປຸກລະດົມໃຫ້ຄອບຄົວ ມາອອກກຳລັງກາຍ ແລະ ຫຼິ້ນກິລາ-ກາຍຍະກຳມວນຊົນ ໃຫ້ໄດ້ 11%;
4) ສົ່ງເສີມຄົນພິການທຸກເພດ, ທຸກໄວ ອອກມາຫັດກາຍຍະບໍລິຫານ ອອກກຳລັງກາຍ, ຫຼິ້ນກິລາ ແລະ ເຂົ້າຮ່ວມການຈັດການແຂ່ງຂັນກິລາ-ກາຍຍະກຳຄົນພິການ ປະຈຳປີ, ການແຂ່ງຂັນກິລາຄົນພິການ ເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ-ສາກົນ ແລະ ເຂົ້າຮ່ວມງານແຂ່ງຂັນກິລາ ໃນລະດັບພາກພື້ນ ແລະ ສາກົນ ໃຫ້ບັນລຸໄດ້ 11% ຂອງຄົນພິການທົ່ວປະເທດ;
5) ຈັດການແຂ່ງຂັນກິລາປະເພນີ ແລະ ຈັດການແຂ່ງຂັນກິລາເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດສາກົນ, ຂັ້ນເມືອງ, ແຂວງ/ນະຄອນຫຼວງ ແລະ ບັນດາ ກະຊວງ, ບໍລິສັດ, ໂຮງຈັກໂຮງງານ ໃຫ້ໄດ້ 12 ຄັ້ງ;
6) ຈັດການແຂ່ງຂັນກິລາປະຈຳປີ ຢ່າງເປັນປົກກະຕິ ລະຫວ່າງເມືອງຕໍ່ເມືອງ, ແຂວງຕໍ່ແຂວງ ໃນຂອບເຂດທົ່ວປະເທດ 1 ຄັ້ງຕໍ່ປີ; ເຂົ້າຮ່ວມການແຂ່ງຂັນກິລາ ທີ່ມີຊາຍແດນຕິດຈອດກັນ (ປະເທດບ້ານໃກ້ເຮືອນຄຽງ) ແລະ ເຂົ້າຮ່ວມການແຂ່ງຂັນກິລາ ລະດັບພາກພື້ນ ແລະ ສາກົນ 1 ຄັ້ງຕໍ່ປີ;
7) ຈັດການແຂ່ງຂັນ ກິລາຄົນພິການ ທົ່ວປະເທດ ຄັ້ງທີ 3 ປີ 2021;
8) ສ້າງນິຕິກຳ ລຸ່ມກົດໝາຍ ກິລາ-ກາຍຍະກຳ ຈຳນວນ 02 ສະບັບ ຄື 1). ຂໍ້ຕົກລົງ ການຄຸ້ມຄອງຫົວໜ່ວຍທຸລະກິດ ກິລາ-ກາຍຍະກຳມວນຊົນ; 2). ນິຕິກຳ ລຸ່ມກົດໝາຍ ກິລາ-ກາຍຍະກຳ ກ່ຽວກັບມາດຕະຖານ ກິລາ-ກາຍຍະກຳຂັ້ນພື້ນຖານ, ກິລາພື້ນເມືອງ ແລະ ກິລາສັດ;
9) ປັບປຸງ ນິຕິກຳລຸ່ມກົດໝາຍ ກິລາ-ກາຍຍະກຳ ໃຫ້ບັນລຸໄດ້ 07 ສະບັບ ແລະ ປັບປຸງ ປຶ້ມຄູ່ມືກິລາ-ກາຍຍະກຳມວນຊົນ ຈຳນວນ 18 ປະເພດ ກິລາ;
10) ສ້າງ, ບຳລຸງ, ສຳມະນາ, ຝຶກອົບຮົມ ຍົກລະດັບ ຜູ້ບໍລິຫານ, ວິຊາການ, ວິທະຍາສາດການກິລາ-ການແພດ, ກຳມະການຕັດສິນ, ຄູຝຶກ ແລະ ນັກກິລາ-ກາຍຍະກຳມວນຊົນ ແຕ່ລະປະເພດ ຢູ່ຂັ້ນແຂວງ, ຂັ້ນນະຄອນຫຼວງ ແລະ ຂັ້ນເມືອງ ໃຫ້ບັນລຸໄດ້ 100 ຄົນ (2020-2021) ແລະ ໄປບຳລຸງ, ຝຶກອົບຮົມຍົກລະດັບຢູ່ຕ່າງປະເທດ ໃຫ້ບັນລຸໄດ້ 10 ຄົນ (2020-2021);

11) ບຳລຸງຍົກລະດັບ ກຳມະການຕັດສິນ, ຄູຝຶກ ແລະ ນັກກິລາຄົນພິການ ທີມຊາດລາວ ລະດັບພາກພື້ນ ແລະ ສາກົນ ໃຫ້ບັນລຸໄດ້ 10 ປະເພດກິລາ;
12) ເຂົ້າຮ່ວມການແຂ່ງຂັນ ຄັດເລືອກນັກກິລາຄົນພິການ ມາດຕະຖານ ລະດັບສາກົນ (Qualification Event IPC) ເພື່ອສະສົມຄະແນນໃຫ້ນັກກິລາຄົນພິການ ຜູ້ທີ່ເກັ່ງ ໄດ້ມີເງື່ອນໄຂເຂົ້າຮ່ວມການແຂ່ງຂັນລະດັບສາກົນ ມີ 10 ປະເພດກິລາ;
13) ເຂົ້າຮ່ວມແຂ່ງຂັນໃນລະດັບ ອາຊຽນ (ASEAN) ໃຫ້ບັນລຸໄດ້ 10 ປະເພດກິລາ, ລະດັບເອເຊຍ (ASIA) ໃຫ້ບັນລຸໄດ້ 6 ປະເພດກິລາ ແລະ ລະດັບສາກົນ ພາຣາແຣມປິກເກມ (IPC) International paralympic committee ໃຫ້ບັນລຸໄດ້ 04 ປະເພດກິລາ (2020-2021);
14) ສະໜອງ ອຸປະກອນກິລາ-ກາຍຍະກຳມວນຊົນ ໂດຍຕິດພັນກັບວຽກງານ 03 ສ້າງ ໃຫ້ບ້ານ/ກຸ່ມບ້ານ, ເມືອງ ແຂວງ ແລະ ນະຄອນຫຼວງ; ໃຫ້ບັນລຸໄດ້ 01 ແຂວງ (2020-2021);
15) ສ້າງຕັ້ງ ຫົວໜ່ວຍທຸລະກິດກິລາ-ກາຍຍະກຳມວນຊົນປະເພດຕ່າງໆ ແລະ ຄຸ້ມຄອງ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ກິລາ-ກາຍຍະກຳມວນຊົນປະເພດຕ່າງໆ ໃຫ້ຖືກຕ້ອງຕາມລະບຽບຫຼັກການກົດໝາຍທີ່ກ່ຽວຂ້ອງ;
16) ກວດກາ, ຕິດຕາມ-ປະເມີນຜົນ ແລະ ເກັບກຳຂໍ້ມູນ-ສະຖິຕິ ວຽກງານກິລາ-ກາຍຍະກຳມວນຊົນ.

### 9.2. ກິລາລະດັບສູງ

#### 9.2.1. ຜົນສຳເລັດ

1) ສຳເລັດການປັບປຸງກົດໝາຍວ່າດ້ວຍກິລາ-ກາຍຍະກຳ ສະບັບປັບປຸງ ປີ 2012 ແລະໄດ້ຖືກປະກາດນຳໃຊ້ຢ່າງເປັນທາງການໃນຂອບເຂດທົ່ວປະເທດ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
2) ສຳເລັດການທາບທາມຄຳເຫັນຮ່າງດຳລັດວ່າດ້ວຍກອງທຶນກິລາ-ກາຍຍະກຳ, ປັດຈຸບັນຢູ່ໃນຂັ້ນກະຊວງຍຸດຕິທຳເພື່ອລໍຖ້ານຳສະເໜີຕໍ່ກອງປະຊຸມລັດຖະບານ;
3) ສຳເລັດການສ້າງ ແລະ ທາບທາມຮ່າງນິຕິກຳວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມວຽກງານກິລາລະດັບສູງ ຈຳນວນ 3 ສະບັບຄື: ດຳລັດວ່າດ້ວຍກິລາ-ອາຊີບ, ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍເຄື່ອງແບບກິລາທີມຊາດ ແລະ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການບໍລິຫານຄຸ້ມຄອງລະບົບຈັດການແຂ່ງຂັນ;
4) ສຳເລັດການກຳນົດເປົ້າໝາຍແຂວງທີ່ມີທ່າແຮງໃນການສ້າງສູນຝຶກກິລາແຫ່ງຊາດ ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ;
5) ສຳເລັດການໂຮມສູນຝຶກກິລາແຫ່ງຊາດ (ສີເກີດ), ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ ແລະ ພະແນກວິທະຍາສາດການກິລາ ກົມກິລາລະດັບສູງ ຂຶ້ນເປັນສະຖາບັນກິລາ-ກາຍຍະກຳແຫ່ງຊາດ ປະກອບມີ: ສຳນັກສະຖາບັນ, ພາກວິຊາກິລາ-ກາຍຍະກຳ, ສູນຝຶກກິລາແຫ່ງຊາດ, ສູນວິທະຍາສາດການກິລາ ແລະ ໂຮງຮຽນພອນສະຫວັນກິລາ-ກາຍຍະກຳ;
6) ສຳເລັດການປະຕິບັດໂຄງການຮ່ວມມືລາວ-ໄທ ພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດດ້ານການກິລາ ໄດ້ຈັດຕັ້ງການໄປທັດສະນະສຶກສາຢູ່ຕ່າງປະເທດ, ການຝຶກອົບຮົມຫຼັກສູດ ວິທະຍາສາດການກິລາ, ຜູ້ບໍລິຫານສະໜາມກິລາ, ມີຜູ້ຈົບການສຶກສາລະດັບປະລິນຍາເອກດ້ານການກິລາ ຈຳນວນ 2 ຄົນ, ປະລິນຍາໂທ 4 ຄົນ;

7) ສໍາເລັດການສ້າງຫຼັກສູດສ້າງ ຄູຝຶກ ແລະ ກໍາມະການຕັດສິນກິລາລະດັບຊາດ ຈໍານວນ 7 ປະເພດກິລາ ຄື: ກິລາມວຍ, ມວຍສາກົນ, ຢູໂດ, ເປຕັງ, ບານເຕະ, ເທຄວັນໂດ ແລະ ກະຕໍ້ ແລະ ສໍາເລັດການສ້າງຄູ່ມືຕົ້ນສະບັບສໍາລັບຄູຝຶກ ແລະ ກໍາມະການຕັດສິນ ຈໍານວນ 14 ສະບັບ;

8) ສໍາເລັດການຝຶກອົບຮົມຄູຝຶກ ແລະ ກໍາມະການການກິລາລະດັບຊາດ ຄື: ຄູຝຶກກິລາກະຕໍ້ ຈໍານວນ 15 ຄົນ ກໍາມະການຕັດສິນກິລາກະຕໍ້ ຈໍານວນ 15 ຄົນ, ຄູຝຶກກິລາມວຍສາກົນ ຈໍານວນ 23 ຄົນ, ກິລາເປຕັງຈໍານວນ 30 ຄົນ, ຄູຝຶກກິລາເທຄວັນໂດ ຈໍານວນ 24 ຄົນ, ກໍາມະການຕັດສິກິລເທຄວັນໂດ ຈໍານວນ 19 ຄົນຄູຝຶກກິລາຢູໂດ ຈໍານວນ 15 ຄົນ, ກໍາມະການຕັດສິນກິລາຢູໂດຈໍານວນ 11 ຄົນ, ຄູຝຶກກິລາຕາຣາເຕໂດ ຈໍານວນ 15 ຄົນ;

9) ສໍາເລັດການຍົກລະດັບ ແລະ ສ້າງບຸກຄະລາກອນ ແລະ ນັກກິລາ ໂດຍສົມທົບກັບຄະນະກໍາມະການກິລາໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຢູ່ພາຍໃນ ແລະ ຕ່າງປະເທດ 2.138 ຄົນ;

10) ສົມທົບກັບບັນດາສະຫະພັນກິລາແຫ່ງຊາດ ຄັດເລືອກ ແລະ ຈັດບຸລິມະສິດປະເພດກິລາ ທີ່ຈະໄດ້ຮັບການສົ່ງເສີມເປັນກິລາອາຊີບໃນຕໍ່ໜ້າ ມີຄື ປະເພດກິລາປາຍແຫຼມ ປະກອບດ້ວຍ: ກິລາມວຍ, ມວຍສາກົນ, ຢູໂດ, ເປຕັງ, ບານເຕະ, ເທຄວັນໂດ, ກະຕໍ້, ວູຊູ, ກາຣາເຕໂດ, ປັ່ນຈັກສີລັດ, ຍົກນໍ້າໜັກ, ຍິງທະນູ, ແລ່ນ-ລານ, ມວຍປໍ້າ, ເທັນນິດ, ປີງປອງ, ລົດຖີບ;

11) ສໍາເລັດການເຂົ້າຮ່ວມແຂ່ງງານມະຫາກໍາກິລາຊີເກມຄັ້ງທີ 29 ທີ່ປະເທດມາເລເຊຍ ແລະ ຄັ້ງທີ 30 ທີ່ປະເທດຟີລິບປິນສາມາດ ຍາດໄດ້ 1 ຫຼຽນຄໍາ, 5 ຫຼຽນເງິນ, 29 ຫຼຽນທອງ;

12) ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ສາມາດຍາດໄດ້ 18 ຫຼຽນຄໍາ, 24 ຫຼຽນເງິນ ແລະ 47 ຫຼຽນທອງ;

13) ໄດ້ຊຸກຍູ້ ແລະ ສົມທົບກັບບັນດາສະຫະພັນກິລາແຫ່ງຊາດ ຈັດການແຂ່ງຂັນກິລາປະຈໍາປີ, ຈັດການແຂ່ງ ຂັນຊີງຂັນລາງວັນທ່ານຜູ້ນໍາພັກ-ລັດ, ວັນສໍາຄັນຕ່າງໆ ຂອງຊາດ ແລະ ຮັບເປັນເຈົ້າພາບຈັດການແຂ່ງຂັນຊີງແຊ້ມລະດັບນາໆຊາດເຊັ່ນ: ລະດັບອາຊຽນ, ລະດັບອາຊີ ແລະ ລະດັບໂລກ ຊຶ່ງປະກອບມີປະເພດກິລາບານເຕະ, ດອກປີກໄກ່, ເປຕັງ, ຍິງປືນ;

14) ໄດ້ເປັນໃຈກາງປະສານງານດ້ານເຕັກນິກຈັດການແຂ່ງຂັນ ກັບແຂວງຊຽງຂວາງ ຈັດງານມະຫາກໍາກິລາແຫ່ງຊາດ ຄັ້ງທີ XI, ໄດ້ສໍາເລັດການສ້າງ ແລະ ຈັດພິມກົດລະບຽບການແຂ່ງຂັນຈໍານວນ 28 ປະເພດກິລາ ແລະ ໄດ້ນໍາໃຊ້ລະບົບໄອທີທີ່ທັນສະໄໝຮັບໃຊ້ການຈັດການແຂ່ງຂັນ;

15) ຊຸກຍູ້ ແລະ ສົມທົບກັບແຂວງຊຽງຂວາງກະກຽມຄວາມພ້ອມດ້ານເຕັກນິກຈັດການແຂ່ງຂັນງານມະຫາກໍາກິລາແຫ່ງຊາດ ຄັ້ງທີ XI;

16) ສໍາເລັດປັບປຸງຄືນ ການຈັດຕັ້ງຂອງບັນດາສະຫະພັນກິລາແຫ່ງຊາດຈໍານວນໜຶ່ງ ເພື່ອໃຫ້ມີຄວາມເໝາະສົມ ແລະ ແທດເໝາະກັບສະພາບການເຄື່ອນໄຫວວຽກງານພັດທະນາກິລາ-ກາຍຍະກໍາໃນປະຈຸບັນ;

17) ສໍາເລັດການສ້າງເຄື່ອງມືຕິດຕາມ ແລະ ປະເມີນຜົນວຽກງານກິລາລະດັບສູງ ພ້ອມໄດ້ຮັບຮອງຕົວຊີ້ບອກຂັ້ນພື້ນຖານກິລາລະດັບສູງຈໍານວນ 27 ຕົວຊີ້ບອກ;

18) ໄດ້ບູລະນະສ້ອມແປງອາຄານສະຖານທີ່ ຂອບເຂດສະໜາມກິລາແຫ່ງຊາດ ຫຼັກ 16;

19) ນັກຮຽນກິລາພອນສະຫວັນ ໄດ້ເຂົ້າຮ່ວມການແຂ່ງຂັນກິລາ-ກາຍຍະກໍາ ລະດັບປະເທດ ສາມາດຍາດໄດ້ລາງວັນລວມ 30 ຫຼຽນຄໍາ, 23 ຫຼຽນເງິນ ແລະ 16 ຫຼຽນທອງ.

### 9.2.2. ບັນຫາ ແລະ ສິ່ງທ້າທາຍ

1) ການສະໜອງງົບປະມານ ຍັງບໍ່ທັນເໝາະສົມກັບວຽກງານຈຸດສຸມ, ກິດຈະກຳ ແລະ ໂຄງການທີ່ກຳນົດຕົວຈິງ ນອກນັ້ນ ການແຈ້ງຕົວເລກງົບປະມານມີຄວາມຊັກຊ້າ ເຮັດໃຫ້ການຈັດຕັ້ງປະຕິບັດບໍ່ຖືກຕາມກຳນົດໃນແຜນການທີ່ວາງໄວ້;
2) ບຸກຄະລາກອນກິລາ ຜູ້ຮັບຜິດຊອບຈັດຕັ້ງປະຕິບັດວຽກງານພັດທະນາກິລາ ຢູ່ບັນດາສະຫະພັນກິລາແຫ່ງຊາດບັນດາແຂວງ, ນະຄອນຫຼວງ ຍັງມີຈຳກັດດ້ານຈຳນວນ ແລະ ຄຸນນະພາບ;
3) ພື້ນຖານໂຄງລ່າງການກິລາ ແລະ ອຸປະກອນການກິລາທີ່ມີຢູ່ ມີສະພາບຊຸດໂຊມ ແລະ ບໍ່ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ;
4) ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ຫຼາຍກິດຈະກຳ ໂດຍສະເພາະກິດຈະກຳທີ່ເລື່ອນຈັດຕັ້ງໃນປີ 2019 ທີ່ຈະມາຈັດຕັ້ງໃນໄຕມາດ 1 ແລະ 2 ຂອງປີ 2020 ໄດ້ຖືກໂຈະ ແລະ ເລື່ອນການຈັດຕັ້ງປະຕິບັດ ເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມໄລຍະເວລາທີ່ກຳນົດໄວ້.

### 9.2.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

1) ສ້າງນິຕິກຳບໍລິຫານ-ຄຸ້ມຄອງວຽກງານກິລາລະດັບສູງ ເຊັ່ນ: ກອງທຶນພັດທະນາກິລາ, ດຳລັດວ່າດ້ວຍກິລາອາຊີບ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດການແຂ່ງຂັນ ແລະ ເຄື່ອງແບບກິລາ-ກາຍຍະກຳທີມຊາດ;
2) ພັດທະນາບຸກຄະລາກອນການກິລາ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ທັງພາຍໃນ ແລະ ຕ່າງປະເທດ;
3) ກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນກິລາໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ໂດຍສະເພາະການເຂົ້າຮ່ວມການແຂ່ງຂັນກິລາລະດັບສາກົນໃນນາມຂອງປະເທດ SEA Games ຄັ້ງທີ XXXI ປີ 2021 ທີ່ເມືອງຮາໂນຍ ສສ. ຫວຽດນາມ ແລະ ກິລາຫາດຊາຍຄັ້ງທີ XI ເມືອງໄຮນານ, ປະເທດ ສປ.ຈີນ;
4) ຈັດການແຂ່ງກິລາພາຍໃນ ໃຫ້ເປັນລະບົບທຽບເທົ່າໄດ້ມາດຕະຖານສາກົນ;
5) ປະກອບອຸປະກອນການຝຶກຊ້ອມ ແລະ ແຂ່ງຂັນຕາມມາດຕະຖານຂອງສະຫະພັນ ຫຼື ສະມາຄົມກິລາຂອງສາກົນກຳນົດ;
6) ໂຄງການສ້າງສູນຝຶກກິລາຢູ່ແຂວງທີ່ມີສະໜາມກິລາແລ້ວ ແລະ ສ້າງໂຮງຮຽນພອນສະຫວັນກິລາ 2 ແຫ່ງ ຢູ່ພາກເໜືອ ແລະ ພາກໃຕ້;
7) ບູລະນະ, ປົກປັກຮັກສາ ແລະ ນຳໃຊ້ສະໜາມກິລາທີ່ມີແລ້ວໃຫ້ເກີດປະໂຫຍດສູງສຸດ;
8) ສ້າງຮູບແບບການບໍລິຫານໃຫ້ກັບອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດວຽກງານກິລາລະດັບສູງ;
9) ສ້າງລະບົບຖານຂໍ້ມູນກິລາລະດັບສູງ;
10) ປະກອບບຸກຄະລາກອນປະຕິບັດງານປະຈຳ ໃນສະຫະພັນກິລາທີ່ເປັນປະເພດກິລາຫຼັກ ແລະ ກິລາປາຍແຫຼມ;
11) ສະໜັບສະໜູນງົບປະມານບໍລິຫານໃຫ້ກັບສະຫະພັນກິລາແຫ່ງຊາດ ທີ່ເປັນປະເພດກິລາປາຍແຫຼມ;
12) ເພີ່ມທະວີການພົວພັນຮ່ວມມືກັບປະເທດເພື່ອມິດສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ;
13) ຮ່ວມມືກັບສາກົນເພື່ອຍາດແຍ່ງທຶນການຊ່ວຍເຫຼືອ;
14) ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານກິລາລະດັບສູງ.

## 9.3. ກິລາໃນໂຮງຮຽນ

### 9.3.1. ຜົນສຳເລັດ:

1) ໄດ້ສົມທົບກັບພະແນກສຶກສາທິການ ແລະ ກິລາ ແຂວງ ສາລະວັນ ໃນການຢັ້ງຢືນການເປັນເຈົ້າພາບກິລາ ນັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ 7 ແລະ ໄດ້ແຈ້ງການໃຫ້ບັນດາແຂວງຊາບກ່ຽວກັບການເລື່ອນ ການຈັດງານຈາກປີ 2020 ເປັນປີ 2022;
2) ສຳເລັດເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 11 ທີ່ປະເທດອິນໂດເນເຊຍ, ມີ 5 ປະເພດກິລາຄື: ແລ່ນ-ລານ, ລອຍນໍ້າ, ກະຕໍ້, ດອກປີກໄກ່ ແລະ ປັນຈັກສີລັດ ຜົນການເຂົ້າຮ່ວມສາມາດຍາດໄດ້ 1 ຫຼຽນເງິນ ແລະ 7 ຫຼຽນທອງ, ຈັດຢູ່ອັນດັບທີ 8 ໃນ 10 ປະເທດເຂົ້າຮ່ວມ;
3) ຊຸກຍູ້ສົ່ງເສີມການສ້າງຂະບວນການຈັດກິດຈະກຳການແຂ່ງຂັນພະລະສຶກສາ-ກິລາ ພາຍໃນໂຮງຮຽນ ແລະ ສະຖາບັນການສຶກສາຕ່າງໆ ເພື່ອສົ່ງເສີມການຮຽນ-ການສອນ ພະລະສຶກສາ ແລະ ຂໍ່ານັບຮັບຕ້ອນວັນສຳ ຄັນຕ່າງໆຂອງຊາດ ຢ່າງມີບັນຍາກາດຟົດຟື້ນມ່ວນຊື່ນ;
4) ສຳເລັດຈັດການແຂ່ງຂັນກິລາບານເຕະເຍົາວະຊົນ ແລະ ງານບຸນວັນເດັກນ້ອຍລະດັບນັກຮຽນປະຖົມສຶກສາ ທົ່ວປະເທດ ໂດຍການສະໜັບໜຸນຈາກອົງການໂລກອອຍພອນ. ຜົນການເຂົ້າຮ່ວມແຂ່ງຂັນ ແຂວງສະຫວັນ ນະເຂດ ສາມາດຍາດໄດ້ອໍາດັບ 1, ແຂວງ ອັດຕະປື ອັນດັບ 2, ອັນດັບ 3 ແຂວງ ຄໍາມ່ວນ ແລະ ອັນດັບ 4 ແຂວງ ຫົວພັນ;
5) ສົມທົບກັບ ວິທະຍາໄລພະລະສຶກສາ ປະຕິບັດໂຄງການທົດສອບຄວາມສົມບູນທາງກາຍຍະພາບຂອງນັກ ຮຽນ ອາຍຸ 7-14 ປີ ໃນ 4 ໂຮງຮຽນຂອງເມືອງຈັນທະບູລີ ແລະ ເມືອງສັງທອງ ນະຄອນຫຼວງວຽງຈັນ;
6) ສຳເລັດຈັດກອງປະຊຸມປຶກສາຫາລືຮຽນໂຄງການບານເຕະສຳລັບໂຮງຮຽນມັດທະຍົມຕອນຕົ້ນ 36 ແຫ່ງໃນ ສປປລາວ ເພື່ອນຳສະເໜີຂໍທຶນສະໜັບສະໜູນນຳ ສະຫະພັນບານເຕະນາໆຊາດຂອງຟີຟ່າ;
7) ສຳເລັດການແຂ່ງຂັນກິລາມິດຕະພາບ ແລະ ສິລະປະ-ວັນນະຄະດີ 5 ແຂວງພາກເໜືອ (ຫຼວງນໍ້າທາ, ອຸດົມໄຊ , ຜົ້ງສາລີ, ຫຼວງພະບາງ, ບໍ່ແກ້ວ) ແລະ ແຂວງດຽນບຽນ ສສ.ຫວຽດນາມ ໂດຍການເປັນເຈົ້າພາບຂອງແຂວງ ບໍ່ແກ້ວ ມີຄະນະນຳ, ຄູຝຶກ ແລະ ນັກກິລາເຂົ້າຮ່ວມທັງໝົດ 238 ຄົນ, ຍິງ 54 ຄົນ;
8) ຮ່ວມກັບ ບໍລິສັດ ນິວຈິບເຊັງ ຈຳກັດ ລົງແນະນຳເຕັກນິກການຝຶກຊ້ອມແລ່ນ 31 ຂາສາມັກຄີ ພ້ອມທັງມອບ ອຸປະກອນ ແລະ ງົບປະມານບໍລິຫານທີມ ໃຫ້ແກ່ໂຮງຮຽນທີ່ເຂົ້າຮ່ວມກິດຈະກຳ ມີ 4 ໂຮງຮຽນຄື: ປະຖົມ ບ້ານທົ່ງ, ປະຖົມປາກເຊ, ມັດທະຍົມຕົ້ນ ແກ້ວສຳພັນ ແລະ ມັດທະຍົມສົມບູນ ບ້ານກາງ ແຂວງຈຳປາສັກ.

### 9.3.2. ບັນຫາ ແລະ ສິ່ງທ້າທາຍ

1) ການຈັດການແຂ່ງຂັນກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ແມ່ນບໍ່ສາມາດຈັດໄດ້ຕາມວາລະຂອງການ ຈັດງານ ອັນເນື່ອງມາຈາກບັນຫາລວມຫຼາຍດ້ານ;
2) ໃນການເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຍັງເປັນບັນຫາທີ່ແກ້ໄຂບໍ່ທັນໄດ້ເປັນຕົ້ນແມ່ນດ້ານງົບປະ ມານຮັບໃຊ້ພົບຄວາມຫຍຸ້ງຍາກ, ຊັກຊ້າບໍ່ທ່ວງທັນກັບການຄັດເລືອກ ແລະ ການເກັບຕົວຝຶກຊ້ອມຂອງນັກ ກິລາ;
3) ການເຄື່ອນໄຫວກິດຈະກຳແຂ່ງຂັນກິລາ ຢູ່ບາງທ້ອງຖິ່ນຍັງບໍ່ທັນເປັນຂະບວນໃຫຍ່ ແລະ ກວ້າງຂວາງ ເນື່ອງ ຈາກງົບປະມານຮັບໃຊ້ບໍ່ພຽງພໍ.

**9.3.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021**

1) ສືບຕໍ່ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງສາລະວັນ ກະກຽມທາງດ້ານວິຊາການ, ການກໍ່ ສ້າງພື້ນຖານໂຄງລ່າງສະໜາມຝຶກຊ້ອມ ແລະ ສະໜາມແຂ່ງຂັນ ເພື່ອກຽມຈັດງານມະຫາກໍາກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ 7 ທີ່ຄາດວ່າຈະຈັດຂຶ້ນໃນປີ 2022;
2) ຈັດກອງປະຊຸມກະກຽມວຽກກິລານັກຮຽນມັດທະຍົມສຶກສາທົ່ວປະເທດຄັ້ງທີ 7 ຮ່ວມກັບແຂວງສາລະວັນ ໃນແຜນປີ 2021;
3) ກະກຽມເຂົ້າຮ່ວມແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 12 ທີ່ປະເທດຟີລິບປິນ ຈະຈັດຂຶ້ນໃນເດືອນກໍລະກົດ ປີ 2020 ແລະ ສືບຕໍ່ກະກຽມເຂົ້າຮ່ວມການແຂ່ງຂັນກິລານັກຮຽນອາຊຽນ ຄັ້ງທີ 13 ໃນປີ 2021;
4) ຄົ້ນຄວ້າຂຽນໂຄງການກະກຽມສະເໜີຮັບເປັນເຈົ້າພາບກິລານັກຮຽນອາຊຽນ ຄັ້ງທີ 16 ປີ 2024;
5) ຊຸກຍູ້ສົ່ງເສີມບັນດາແຂວງ ສ້າງຂະບວນການເຄື່ອນໄຫວກິດຈະກຳແຂ່ງຂັນພະລະສຶກສາ-ກິລາໃນໂຮງຮຽນໃນລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
6) ສົ່ງເສີມການສ້າງສະໂມສອນກິລາ-ກາຍຍະກໍາ ໃນໂຮງຮຽນສາມັນສຶກສາ ທັງພາກລັດ ແລະ ເອກະຊົນ;
7) ລົງສໍາຫຼວດ ແລະ ເກັບກໍາສະຖິຕິສະໜາມກິລາໃນໂຮງຮຽນມັດທະຍົມສຶກສາທົ່ວປະເທດ;
8) ຈັດກອງປະຊຸມຖອດຖອນບົດຮຽນຂອງຄະນະບໍລິຫານງານສະຫະພັນກິລານັກຮຽນສາມັນລາວ.

## 9.4. ວຽກງານ ກິລາໂອລິມປິກ

**9.4.1. ຜົນສຳເລັດ**

1) ສຳເລັດການສົມທົບກັບຄະນະກໍາມະການໂອແລມປິກແຫ່ງຊາດລາວ ໃນການນໍາສະເໜີສ້າງຕັ້ງຫ້ອງການປະສານງານຕ້ານສານຕ້ອງຫ້າມໃນກິລາ ທີ່ສັງກັດຢູ່ຫ້ອງການ ລອລ;
2) ຜູ້ບໍລິຫານກິລາ-ກາຍຍະກໍາຢູ່ຂັ້ນທ້ອງຖິ່ນ ແລະ ຜູ້ບໍລິຫານສະຫະພັນກິລາແຫ່ງຊາດ ຈໍານວນ 230 ຄົນ ໄດ້ເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນ ໃນວຽກງານການພັດທະນາບຸກຄະລາກອນ;
3) ສຳເລັດການເຜີຍແຜ່ຄວາມຮູ້ທົ່ວໄປກ່ຽວກັບຜົນຮ້າຍຂອງການໃຊ້ສານຕ້ອງຫ້າມໃນກິລາ ໃຫ້ບັນດາສະຫະພັນກິລາແຫ່ງຊາດ ແລະ ນັກກິລາທີມຊາດກ່ອນການເຂົ້າຮ່ວມກິລາຊີເກມ ຄັ້ງທີ 31 ທີ່ປະເທດຟີລິບປິນ;
4) ສຳເລັດການຈັດຝຶກອົບຮົມວຽກງານການພັດທະນາບຸກຄະລາກອນກິລາ-ກາຍຍະກໍາ ລະດັບຊາດ ແລະ ລະດັບທ້ອງຖິ່ນໄດ້ທັງໝົດ 110 ຄົນ;
5) ສຳເລັດການຈັດກິດຈະກໍາແລ່ນ-ຍ່າງ ເພື່ອສຸຂະພາບ ສະເຫຼີມສະຫຼອງວັນໂອແລມປິກສາກົນ ຄົບຮອບ 125 ປີ ມີມວນຊົນເຂົ້າຮ່ວມທັງໝົດ ປະມານ 4.000 ກວ່າຄົນ;
6) ສຳເລັດການຈັດການແຂ່ງຂັນ ເຕັ້ນເຊຍລິດດິ້ງ (ມີລິນດ້າ ລີດດິ້ງ ຄອນເທດສ) ຊີງຂັນປະທານ ຄອລ ປະຈໍາປີ 2019 ໃນວັນທີ 29 ພະຈິກ 2019 ທີ່ສູນການຄ້າລາວໄອເຕັກມໍ ມີ 10 ທີມເຂົ້າຮ່ວມການແຂ່ງຂັນ ແລະ ມີຜູ້ຊົມປະມານ 3 ພັນກວ່າຄົນ.

**9.4.2. ບັນຫາ ແລະ ສິ່ງທ້າທາຍ**

1) ຄວາມຮັບຮູ້ ແລະ ເຂົ້າໃຈຂອງບັນດານັກສໍາມະນາກອນ ຕໍ່ກັບກົດໝາຍກິລາ-ກາຍຍະກໍາ ແລະ ຍຸດທະສາດການພັດທະນາກິລາ-ກາຍຍະກໍາ ຍັງບໍ່ເລິກເຊິ່ງເທົ່າທີ່ຄວນ. ອີກຢ່າງໜຶ່ງ ຄາດໝາຍໃນການວາງມາດຖານ ແລະ ຕົວຊີ້ວັດຂ້ອນຂ້າງສູງ ຈຶ່ງເຮັດໃຫ້ການພັດທະນາກິລາ ບັນລຸໄດ້ຍາກ ໃນປີ 2020;
2) ຄະນະນໍາຂັ້ນທ້ອງຖິ່ນ, ຂັ້ນເມືອງ ແລະ ຂັ້ນແຂວງ ຍັງຖືວຽກງານການພັດທະນາກິລາ-ກາຍຍະກໍາ ບໍ່ເປັນບັນຫາສໍາຄັນເທົ່າທີ່ຄວນ, ບໍ່ເຂົ້າໃຈໃນວຽກງານການພັດທະນາກິລາ-ກາຍຍະກໍາຢ່າງແທ້ຈິງ;

3) ໂຄງຮ່າງການຈັດຕັ້ງບາງສະຫະພັນກິລາແຫ່ງຊາດຍັງບໍ່ທັນສົມບູນ ຂາດຄວາມຊຳນານໃນການບໍລິຫານ, ຂາດພະນັກງານປະຈຳການ ແລະ ພະນັກງານຍັງຂາດຄວາມຮູ້ທາງດ້ານພາສາຕ່າງປະເທດ, ການຍາດແຍ່ງເອົາທຶນຊ່ວຍເຫຼືອຈາກສາກົນເພື່ອມາພັດທະນາກິລາ-ກາຍຍະກຳຍັງບໍ່ໄດ້ເທົ່າທີ່ຄວນ;

4) ບັນຫາການອະນຸມັດງົບປະມານບໍ່ເປັນໄປຕາມການກຳນົດໄວ້ ເຮັດໃຫ້ຈັດຕັ້ງປະຕິບັດຊັກຊ້າ;

5) ດ້ານວຽກງານຕ້ານສານຕ້ອງຫ້າມໃນກິລາ ແມ່ນຍັງຂາດບຸກຄະລາກອນທີ່ພົວພັນກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໂດຍສະເພາະກັບສາກົນ ຍັງມີບຸກຄະລາກອນບໍ່ພຽງພໍ ແລະ ພາລະບົດບາດເປັນບ່ອນອີງໃນການ ເຄື່ອນໄຫວ ຍັງບໍ່ທັນຖືກຮັບຮອງ ຈຶ່ງເຮັດໃຫ້ການເຄື່ອນໄຫວມີຄວາມຫຍຸ້ງຍາກ.

### 9.4.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ຈັດຕັ້ງປະຕິບັດກອງປະຊຸມກ່ຽວກັບການສະເໜີໂຄງການ, ການດຳເນີນເອກະສານ ແລະ ຂັ້ນຕອນໃຫ້ຜູ້ບໍລິຫານສະຫະພັນກິລາແຫ່ງຊາດ ປະເພດໂອແລມປິກ ແລະ ການຈັດຕັ້ງກິລາອື່ນໆທີ່ກ່ຽວຂ້ອງ;

2) ສືບຕໍ່ຈັດຕັ້ງປະຕິບັດກິດຈະກຳຮ່ວມມືກັບຕ່າງປະເທດ 2 ກິດຈະກຳຄື: ຕ້ອນຮັບຄະນະຜ ູແທນຈາກປະເທດ ສະຫະພາບມຽນມາດ, ໄປເຄື່ອນໄຫວແລກປ່ຽນບົດຮຽນດ້ານວຽກງານຕ້ານສານຕ້ອງໃນກິລາ ທີ່ກົມໃຫຍ່ກິລາ ກະຊວງວັດທະນະທຳ, ທ່ອງທ່ຽວ ແລະ ກິລາ (ຮ່າໂນ້ຍ), ສສ. ຫວຽດນາມ ໃຫ້ສຳເລັດ;

3) ຕິດຕາມ ແລະ ປະເມີນຜົນດ້ານການບໍລິຫານຈັດການໃຫ້ພະນັກງານວິຊາການວຽກງານກິລາ-ກາຍຍະກຳຂັ້ນແຂວງ, ຂັ້ນເມືອງ 9 ແຂວງພາກກາງ ແລະ ພາກໃຕ້;

4) ໄປແລກປ່ຽນບົດຮຽນໃນການກະກຽມເປັນ ເຈົ້າພາບ ກິລາຊີເກມ ໃນປີ 2021 ທີ່ຄະນະກຳມະການໂອແລມປິກແຫ່ງ ສສ.ຫວຽດນາມ ແລະ ປະເທດກຳປູເຈຍ.

# X. ຂະແໜງການຍ່ອຍ ການບໍລິຫານ ແລະ ຄຸ້ມຄອງການສຶກສາ

## 10.1. ວຽກງານຈັດຕັ້ງ ແລະ ພະນັກງານ

### 10.1.1. ຜົນສຳເລັດ

1) ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ແລະ ປະກາດໃຊ້ 21 ສະບັບ;
2) ໃນສົກຮຽນ 2020 ຂະແໜງການສຶກສາທິການ ແລະ ກິລາ ໄດ້ຮັບຕົວເລກລັດຖະກອນຄູ ແລະ ບໍລິຫານທັງໝົດ 1.040 ຕົວເລກ ໃນນີ້ ມີບໍລິຫານຈຳນວນ 30 ຕົວເລກ, ໃນຂະນະດຽວມີພະນັກງານ, ລັດຖະກອນທີ່ສູນເສຍໃນຮູບການຕ່າງໆ ຈຳນວນ 2.195 ຄົນ;
3) ພະນັກງານໄດ້ຮັບການສັບຊ້ອນ ແລະ ຍົກລະດັບ ພາຍໃນ ແລະ ຕ່າງປະເທດ ປະຈຳປີ 2020 ຄື: ຍົກລະດັບພາຍໃນປະເທດ 108 ຄົນ, ຍິງ 44 ຄົນ; ຍົກລະດັບຕ່າງປະເທດ 29 ຄົນ, ຍິງ 12 ຄົນ; ສັບຊ້ອນພາຍໃນປະເທດ 24 ຄົນ, ຍິງ 7 ຄົນ; ສັບຊ້ອນຕ່າງປະເທດ 70 ຄົນ, ຍິງ 3 ຄົນ; ເຄື່ອນໄຫວວຽກຢູ່ຕ່າງປະເທດ: 135 ຄົນ, ຍິງ 53 ຄົນ;
4) ສຳເລັດການສ້າງແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ ຮອດປີ 2025 ໄດ້ຮັບຮອງ ແລະ ປະກາດໃຊ້;
5) ສຳເລັດການສ້າງແຜນການກໍ່ສ້າງຄູ ຮອດປີ 2025 ເພື່ອໃຫ້ສອດຄ່ອງຕາມຄວາມຕ້ອງການຄູຕົວຈິງ;
6) ສຳເລັດການສັບຊ້ອນ ແລະ ຈັດສັນຄູ ໂດຍເລັ່ງໃສ່ 40 ເມືອງເປົ້າໝາຍ ຂອງໂຄງການຍົກສູງຄຸນນະພາບການສຶກສາໃນເຂດຫ່າງໄກສອກຫຼີກ;
7) ສຳເລັດຂໍ້ຕົກລົງ ແລະ ປະກອບຄຳເຫັນໃສ່ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຈຳນວນ 23 ສະບັບ ແລະ ຄົ້ນຄວ້າ ປະກອບຄຳເຫັນໃສ່ບັນດາສະມາຄົມ ແລະ ມູນນິທິ ຈຳນວນ 10 ສະບັບ;
8) ສຳເລັດການປັບປຸງ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນກິລາ-ກາຍຍະກຳ.

- **ການຈັດສັນຄູ ແລະ ການຄິດໄລ່ດັດຊະນີຄວາມສະເໝີພາບໃນການຈັດສັນຄູໃນຊັ້ນປະຖົມ ($R^2$)**

ໃນສະພາບທີ່ການບັນຈຸຄູໃໝ່ມີຈຳກັດນັ້ນ, ການຈັດສັນ ແລະ ນຳໃຊ້ບຸກຄະລາກອນທາງການສຶກສາ ທີ່ມີຢູ່ຢ່າງມີປະສິດທິພາບ ຈຶ່ງເປັນວຽກງານໜຶ່ງທີ່ມີຄວາມຈຳເປັນ ແລະ ຮີບດ່ວນ. ດັ່ງນັ້ນ, ພາຍໃຕ້ການສະໜັບສະໜູນຂອງສະຫະພາບເອີຣົບທາງດ້ານວິຊາການ ແລະ ງົບປະມານ ໃນການສ້າງເຄື່ອງມືຊ່ວຍໃນວຽກງານດັ່ງກ່າວນີ້ ຈຶ່ງໄດ້ມີການຄິດໄລ່ດັດຊະນີຄວາມສະເໝີພາບໃນການຈັດສັນຄູໃນຊັ້ນປະຖົມຂຶ້ນ ເພື່ອຊ່ວຍຜູ້ບໍລິຫານໃນຂັ້ນເມືອງຕັດສິນໃຈໃນການຈັດສັນຄູ ໃຫ້ມີຄວາມສະເໝີພາບລະຫວ່າງໂຮງຮຽນພາຍໃນເມືອງຂອງຕົນ. ໃນນີ້, ດັດຊະນີຄວາມສະເໝີພາບໃນການຈັດສັນຄູ ຫຼື $R^2$ ແມ່ນຕົວຊີ້ບອກເຖິງ ການພົວພັນກັນລະຫວ່າງ ຈຳນວນນັກຮຽນ ແລະ ຄູສອນ. ຍິ່ງເມືອງໃດມີຄ່າດັ່ງກ່າວໃກ້ 1 ນັ້ນໝາຍຄວາມວ່າ ເມືອງນັ້ນໆມີການຈັດສັນຄູໃນແຕ່ລະໂຮງຮຽນພາຍໃນເມືອງຢ່າງມີຄວາມສະເໝີພາບກັນທີ່ສຸດ. ໃນປີ 2017-18, ມີທັງໝົດ 44 ເມືອງໃນ 148 ທີ່ມີຄ່າ $R^2$ ສູງກວ່າ 0,8. ມາຮອດສົກຮຽນ 2018-19, ແມ່ນເພີ່ມຂຶ້ນມາເປັນ 56 ເມືອງ (ຈາກຄາດໝາຍ 50 ເມືອງ) ແລະ ໃນປີ 2019-20 ເພີ່ມມາເປັນ 83 ເມືອງ (ຈາກຄາດໝາຍ 60 ເມືອງ). ເຊິ່ງໃນນັ້ນກໍ່ເຫັນວ່າ ມີຫຼາຍເມືອງທີ່ປະຕິບັດໄດ້ດີຂຶ້ນ ໃນຂະນະທີ່ບາງເມືອງກໍ່ຫຼຸດລົງ. ຈາກຜົນສຳເລັດດັ່ງກ່າວ ເຮົາເຫັນໄດ້ວ່າພາຍໃຕ້ການລົງຊຸກຍູ້ຂອງຂັ້ນສູນກາງ ແລະ ພະແນກສຶກສາທິການ ແລະ ກິລາແຂວງນັ້ນ, ຫ້ອງການສຶກສາທິການ ແລະ ກິລາເມືອງໃນທົ່ວປະເທດ ແມ່ນມີຄວາມເຂົ້າໃຈຫຼາຍຂຶ້ນຕໍ່ກັບວິທີການຈັດສັນຄູ ໃຫ້ມີຄວາມສະເໝີພາບ ເຊິ່ງນັ້ນເປັນບາດກ້າວໃໝ່ອັນສຳຄັນໃນການນຳໃຊ້ບຸກຄະລາກອນທີ່ມີຢູ່ຢ່າງຈຳກັດ ໃຫ້ເກີດປະສິດທິພາບ ແລະ ປະສິດທິຜົນສູງສຸດ.

### 10.1.2. ບັນຫາ ແລະ ສິ່ງທ້າທາຍ

1) ການບັນຈຸລັດຖະກອນໃໝ່ ພົບບັນຫາຫຍຸ້ງຍາກ ເນື່ອງຈາກຕົວເລກ (ໂກຕ້າ) ທີ່ລັດຖະບານອະນຸມັດ ມີຈຳນວນໜ້ອຍ, ຈຳນວນຄູທີ່ຈົບໃໝ່ ແລະ ຄູອາສາສະໝັກມີຈຳນວນຫຼາຍ, ຄູທີ່ຈົບໃໝ່ບໍ່ທັນໄດ້ຮັບການບັນຈຸຫຼາຍເທົ່າທີ່ຄວນ ຍ້ອນວ່າ ແຕ່ລະພາກສ່ວນສຸມໃສ່ບັນຈຸຄູອາສາສະໝັກທີ່ສອນໄດ້ຫຼາຍປີ;
2) ການລົງຕິດຕາມການສັບຊ້ອນ ແລະ ຈັດສັນຄູ ຍັງປະຕິບັດບໍ່ທັນໄດ້ທົ່ວເຖິງ ເນື່ອງຈາກງົບປະມານມີຈຳກັດ;
3) ການສ້າງ ແລະ ປັບປຸງນິຕິກຳຍັງມີລັກສະນະຊັກຊ້າ ແກ່ຍາວ ເນື່ອງຈາກວ່າງົບປະມານມີຈຳກັດ ພ້ອມທັງບຸກຄະລາກອນ ຍັງຂາດປະສົບການໃນວຽກງານດັ່ງກ່າວ.

### 10.1.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ຕິດຕາມການຈັດສັນຄູຈາກບ່ອນເຫຼືອໄປບ່ອນທີ່ບໍ່ພໍ ໂດຍເລັ່ງໃສ່ 40 ເມືອງເປົ້າໝາຍ ຂອງໂຄງການຍົກສູງຄຸນນະພາບການສຶກສາ ໃນເຂດຫ່າງໄກສອກຫຼີກ ແລະ ຂະຫຍາຍທົ່ວປະເທດ;
2) ປັບປຸງຄັງຂໍ້ສອບເສັງຄັດເລືອກລັດຖະກອນຂອງຂະແໜງການສຶກສາທິການ ແລະ ກິລາ ຄັ້ງທີ II;
3) ປະເມີນລັດຖະກອນທົ່ວສຳນັກ ແລະ ພາກສ່ວນອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ;
4) ສ້າງ ແລະ ປັບປຸງນິຕິກຳຂອງຂະແໜງການສຶກສາທິການ ແລະ ກິລາ ທີ່ຖືກຮັບຮອງ ຈຳນວນ 41 ສະບັບ;
5) ຄົ້ນຄວ້າປະກອບຄຳເຫັນໃສ່ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ, ສະມາຄົມ, ມູນນິທິ ແລະ ອື່ນໆ;
6) ປັບປຸງກົງຈັກການຈັດຕັ້ງ ແລະ ກຳນົດຕຳແໜ່ງງານ ຂະແໜງການສຶກສາທິການ ແລະ ກິລາ ໃຫ້ສຳເລັດຕາມແຜນທີ່ກຳນົດໄວ້;
7) ປັບປຸງລະບົບຖານຂໍ້ມູນ PMIS ແລະ ອັບເດດຂໍ້ມູນພະນັກງານ-ລັດຖະກອນທົ່ວຂະແໜງການສຶກສາ.

## 10.2. ວຽກງານການພັດທະນາການບໍລິຫານການສຶກສາ

### 10.2.1. ຜົນສຳເລັດ

1) ສຳເລັດການສ້າງຫຼັກສູດ, ສື່ການຝຶກອົບຮົມ ການສ້າງແຜນພັດທະນາຂະແໜງການສຶກສາ ແລະ ໄດ້ຈັດການຝຶກອົບຮົມໃຫ້ແກ່ຄະນະກົມ, ຫົວໜ້າພະແນກບໍລິຫານຂອງກົມ ແລະ ຄະນະພະແນກສຶກສາທິການ ແລະ ກິລາແຂວງ 3 ຄັ້ງ ຈຳນວນ 70 ທ່ານ;
2) ສຳເລັດການຝຶກອົບຮົມຄູຝຶກຮ່ວມກັບ SEAMEO RETRAC ກ່ຽວກັບພາວະຄວາມເປັນຜູ້ນຳ ແລະ ການບໍລິຫານໂຮງຮຽນຈຳນວນ 32 ຄົນ;
3) ສຳເລັດການຝຶກອົບຮົມໃຫ້ແກ່ຜູ້ບໍລິຫານໂຮງຮຽນມັດທະຍົມຕົວແບບ ໃນທົ່ວປະເທດ ຮ່ວມກັບ SEAMEO INNOTEC ກ່ຽວກັບພາວະຄວາມເປັນຜູ້ນຳທາງດ້ານການສິດສອນ (ດ້ານວິຊາການ) ຈຳນວນ 31 ຄົນ;
4) ສຳເລັດການຝຶກອົບຮົມໃຫ້ກຸ່ມໂຮງຮຽນປະຖົມ 40 ເມືອງເປົ້າໝາຍສາມສ້າງ ຈຳນວນ 47 ທ່ານ;
5) ສຳເລັດການຝຶກອົບຮົມໃຫ້ຜູ້ອຳນວຍການໂຮງຮຽນອະນຸບານ 40 ເມືອງເປົ້າໝາຍສາມສ້າງ ທີ່ຕິດພັນກັບວຽກງານສາມສ້າງໃນ 18 ແຂວງ ຈຳນວນ 59 ຄົນ;
6) ສຳເລັດການລົງຊຸກຍູ້ ແລະ ແນະນຳຜູ້ອຳນວຍການໂຮງຮຽນປະຖົມສຶກສາ ແລະ ຄພສບ ໃນການສ້າງແຜນພັດທະນາໂຮງຮຽນ ກ່ຽວກັບການຄຸ້ມຄອງທີ່ເນັ້ນໃຫ້ໂຮງຮຽນເປັນຫຼັກ ຈຳນວນ 19 ເມືອງ ໃນຈຳນວນ 9 ແຂວງ;
7) ສຳເລັດການຕິດຕາມ-ປະເມີນຜົນ ຜູ້ບໍລິຫານການສຶກສາຂັ້ນເມືອງ 148 ເມືອງ ທີ່ຜ່ານການຝຶກອົບຮົມ ການບໍລິຫານທີ່ເນັ້ນໃສ່ໂຮງຮຽນເປັນຫຼັກ (SBM) ໃນປີ 2017;

8) ສຳເລັດການລົງເກັບກຳຂໍ້ມູນເພື່ອເຮັດການວິໄຈ ຮູບແບບການສອນຂອງຄູປະຖົມ ແລະ ມັດທະຍົມໃນທົ່ວປະເທດ;
9) ສຳເລັດການລົງເກັບກຳຂໍ້ມູນຕິດຕາມ-ປະເມີນຜົນ ຜູ້ທີ່ຜ່ານການຝຶກອົບຮົມວຽກງານການບໍລິຫານການສຶກສາຂັ້ນເມືອງ ໃນ 03 ແຂວງພາກກາງ ຄື: ນະຄອນຫຼວງ, ແຂວງວຽງຈັນ ແລະ ແຂວງ ໄຊສົມບູນ;
10) ຈັດກອງປະຊຸມຂຽນເນື້ອໃນປະຫວັດການສຶກສາແຕ່ລະໄລຍະ ຮ່ວມກັບຄະນະນຳອາວຸດໂສກະຊວງສຶກສາທິການ ແລະ ກິລາ ແລະ ສຳເລັດກອງປະຊຸມຜ່ານເນື້ອໃນພາກທີ່ 1 ໂດຍໄດ້ຮັບເງິນສະໜັບສະໜູນຊ່ວຍເຫລືອຈາກພາກສ່ວນເອກະຊົນຈຳນວນໜຶ່ງ.

### 10.2.2. ບັນຫາ ແລະ ສິ່ງທ້າທາຍ

1) ການສ້າງນິຕິກຳມາດຕະຖານເງື່ອນໄຂຂອງຜູ້ບໍລິຫານການສຶກສາແຕ່ລະລະດັບ, ມາດຖານເງື່ອນໄຂຄູຝຶກມືອາຊີບ, ມາດຖານເງື່ອນໄຂຄັດເລືອກຜູ້ທີ່ຈະເຂົ້າຮັບການຝຶກອົບຮົມ ແລະ ເຄື່ອງມືປະເມີນຜູ້ບໍລິຫານການສຶກສາຍັງບໍ່ທັນໄດ້ສຳເລັດ ແລະ ບໍ່ທັນໄດ້ຖືກຮັບຮອງຈາກກະຊວງ;
2) ຂີດຄວາມສາມາດຂອງຄູຝຶກຫຼັກຂອງ ສພບ ຍັງຈຳກັດ, ດັ່ງນັ້ນ ຈິ່ງໄດ້ນຳໃຊ້ວິທະຍາກອນທີ່ມາຈາກພາກສ່ວນອື່ນທີ່ມີປະສົບການໃນການເຮັດວຽກຕົວຈິງ ຫລື ຮຽນຈົບໃນຫົວຂໍ້ດັ່ງກ່າວ.

### 10.2.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ຝຶກອົບຮົມການສ້າງແຜນພັດທະນາຂະແໜງການສຶກສາ ໃຫ້ແກ່ຫົວໜ້າຂະແໜງສະຖິຕິ-ແຜນການ, ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຫົວໜ້າໜ່ວຍງານສະຖິຕິ-ແຜນການໃນທົ່ວປະເທດ;
2) ສືບຕໍ່ສ້າງນິຕິກຳມາດຕະຖານເງື່ອນໄຂຂອງຜູ້ບໍລິຫານການສຶກສາແຕ່ລະລະດັບ, ມາດຖານເງື່ອນໄຂຂອງຄູຝຶກມືອາຊີບ, ມາດຖານເງື່ອນໄຂຄັດເລືອກຜູ້ທີ່ຈະເຂົ້າຮັບການຝຶກອົບຮົມ ແລະ ເຄື່ອງມືປະເມີນຜູ້ບໍລິຫານການສຶກສາ;
3) ຝຶກອົບຮົມວຽກງານຄຸ້ມຄອງ-ບໍລິຫານໂຮງຮຽນໃຫ້ແກ່ຜູ້ອຳນວຍການໂຮງຮຽນອະນຸບານ, ປະຖົມ ແລະ ມັດທະຍົມຕອນຕົ້ນໃນທົ່ວປະເທດ;
4) ຝຶກອົບຮົມວຽກງານບໍລິຫານ-ຄຸ້ມຄອງ ໃຫ້ຫົວໜ້າໜ່ວຍງານຂອງຫ້ອງການສຶກສາທິການ ແລະ ກິລາເມືອງໃນ 18 ແຂວງ 148 ເມືອງ, 3 ຊຸດ (ພາກເໜືອ, ພາກກາງ ແລະ ພາກໃຕ້);
5) ຝຶກອົບຮົມຜູ້ອຳນວຍການວິທະຍາໄລຄູ ແລະ ຜູ້ອຳນວຍການໂຮງຮຽນວິຊາຊີບ, ຄູຝຶກ ແລະ ຜູ້ຈັດການຝຶກອົບຮົມສຳລັບສູນພັດທະນາຄູ ແລະ ຜູ້ບໍລິຫານການສຶກສາ;
6) ລົງຊຸກຍູ້ຕິດຕາມຫົວໜ້າກຸ່ມໂຮງຮຽນປະຖົມສຶກສາ 40 ເມືອງທີ່ຕິດພັນກັບວຽກ 3 ສ້າງ ພາຍຫຼັງທີ່ໄດ້ຜ່ານການຝຶກອົບຮົມວຽກງານຄຸ້ມຄອງ-ບໍລິຫານໂຮງຮຽນ;
7) ສ້າງຄວາມເຂັ້ມແຂງໃຫ້ແກ່ຄູຝຶກ ຂອງສະຖາບັນພັດທະນາການບໍລິຫານການສຶກສາ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານໂຮງຮຽນ ໂດຍການຮ່ວມມືກັບສະຖາບັນຂອງປະເທດສິງກະໂປ, ຊີເມວລີແທກ SEAMEO RETRAC ແລະ SEAMEO INNOTEC;
8) ສືບຕໍ່ຄົ້ນຄວ້າເຊັນບົດບັນທຶກຄວາມເຂົ້າໃຈ ການຮ່ວມມືທາງດ້ານວິຊາການຮ່ວມກັບມະຫາວິທະຍາໄລສິນັກຄະລິນວິໂຣດ SEAMEO INNOTECH ແລະ NIEM;
9) ສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ສ້າງແຜນຍົກລະດັບຂີດຄວາມສາມາດຂອງຜູ້ບໍລິຫານການສຶກສາ;
10) ປັບປຸງຫຼັກສູດຝຶກອົບຮົມຜູ້ບໍລິຫານການສຶກສາຂັ້ນປະຖົມ ແລະ ອະນຸບານສຶກສາ;

11) ພັດທະນາ ຫຼັກສູດ ແລະ ສື່ ການຝຶກອົບຮົມໃໝ່ ກ່ຽວກັບວຽກງານກວດກາ ແລະ ປະເມີນຜົນ, ວຽກງານຈັດຕັ້ງ-ພະນັກງານ ແລະ ຫຼັກສູດການຄຸ້ມຄອງການເງິນ, ຫຼັກສູດຝຶກອົບຮົມໃຫ້ແກ່ຜູ້ບໍລິຫານການສຶກສາຂັ້ນວິທະຍາໄລ ແລະ ມະຫາວິທະຍາໄລ;
12) ສ້າງຫຼັກສູດຝຶກອົບຮົມພະນັກງານເຂົ້າສັງກັດລັດຖະກອນໃໝ່.

## 10.3. ວຽກງານສະຖິຕິ ແລະ ແຜນການ

### 10.3.1. ຜົນສຳເລັດ

1) ຮ່ວມເຮັດວຽກກັບ ສພບ ໃນການສ້າງຄວາມເຂັ້ມແຂງວຽກງານການສ້າງແຜນ ໃຫ້ແກ່ພະນັກ ງານບໍລິຫານຂັ້ນຄະນະກົມ, ຄະນະພະແນກສຶກສາທິການ ແລະ ກິລາແຂວງ;
2) ສຳເລັດການສ້າງເຄື່ອງມືໃນການສ້າງແຜນ ແລະ ງົບປະມານ ຂອງຂະແໜງການສຶກສາ ແລະ ກິລາ;
3) ສຳເລັດການເຜີຍແຜ່ແຜນຍຸດທະສາດການພັດທະນາລະບົບຂໍ້ມູນຂ່າວສານຄຸ້ມຄອງການສຶກສາ ແລະ ກິລາ 2018-2022 (LESMIS), ມາດຕະຖານການຄຸ້ມຄອງຂໍ້ມູນຂະແໜງການສຶກສາທິການ ແລະ ກິລາ ແລະ ນິຕິກຳທີ່ກ່ຽວຂ້ອງ ດ້ວຍຫຼາຍຮູບແບບ;
4) ສຳເລັດການເຜີຍແຜ່ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຍຸດທະສາດ ໃຫ້ແກ່ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
5) ປັບປຸງຖານຂໍ້ມູນຕິດຕາມການນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໂດຍພື້ນຖານ;
6) ສຳເລັດການປັບປຸງ ແລະ ຮັບຮອງ ໂຄງສ້າງວຽກງານຄະນະປະສານງານແຜນງານ (FG) ຂອງໜ່ວຍງານວິຊາການຂະແໜງການສຶກສາ;
7) ສຳເລັດການຈັດກອງປະຊຸມ ຄັ້ງທີ VIII ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ປະຈຳປີ 2020 ພ້ອມທັງເຜີຍແຜ່ມະຕິ, ຊຸກຍູ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ແກ່ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂັ້ນສູນກາງ ແລະ ທ້ອງຖິ່ນ;
8) ສຳເລັດການສ້າງຖານຂໍ້ມູນ ການຄຸ້ມຄອງແຜນການ ແລະ ການເງິນ (PBMIS) ລວມທັງ ໂມດູນ ການສ້າງແຜນປະຈຳປີທີ່ມີການຄິດໄລ່ມູນຄ່າ (ACSEP).

### 10.3.2. ບັນຫາ ແລະ ສິ່ງທ້າທາຍ

1) ພະນັກງານທີ່ຮັບຜິດຊອບວຽກງານສະຖິຕິ-ແຜນການຂັ້ນແຂວງ ແລະ ຂັ້ນເມືອງມີການຍົກຍ້າຍ ແລະ ຊັບຊ້ອນໄປຢູ່ ຂະແໜງການອື່ນ ຫຼື ຮັບໜ້າທີ່ໃໝ່ ຈຶ່ງເຮັດໃຫ້ການເຮັດວຽກງານບໍ່ຕໍ່ເນື່ອງ;
2) ຂີດຄວາມສາມາດຂອງພະນັກງານສະຖິຕິຢູ່ຂັ້ນເມືອງ ແລະ ໂຮງຮຽນຍັງຈຳກັດເຮັດໃຫ້ຄວາມຊັດເຈນຂອງຂໍ້ມູນມີໜ້ອຍ;
3) ຂີດຄວາມສາມາດຂອງພະນັກງານທີ່ຮັບຜິດຊອບວຽກສະຖິຕິ ແລະ ແຜນການ ຂັ້ນສູນກາງ ແລະ ທ້ອງຖິ່ນຍັງຈຳກັດ;
4) ຄະນະຮັບຜິດຊອບວຽກງານການພັດທະນາຊັບພະຍາກອນມະນຸດແຕ່ລະຂະແໜງການ, ແຕ່ລະແຂວງ/ນະຄອນຫຼວງ ຍັງບໍ່ມີຄວາມຮັບຮູ້ ແລະ ເຂົ້າໃຈເລິກເຊິ່ງ ໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບ ພະຍາກອນມະນຸດແຫ່ງຊາດ ຮອດປີ 2025;
5) ແຜນກິດຈະກຳຂອງບາງໜ່ວຍຈັດຕັ້ງປະຕິບັດຂອງໂຄງການ ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນ ຍ້ອນຂາດການວາງແຜນທີ່ດີ.

### 10.3.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ສ້າງຄວາມເຂັ້ມແຂງວຽກງານການສ້າງແຜນໃຫ້ແກ່ຜູ້ບໍລິຫານ ແລະ ພະນັກງານວິຊາການ ທັງລະດັບສູນກາງ ແລະ ທ້ອງຖິ່ນ;
2) ເຜີຍແຜ່ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີຄັ້ງທີ 9 (2021-2025) ແລະ ແຜນວຽກຈຸດສຸມແຜນພັດທະນາຂອງຂະແໜງການສຶກສາ ແລະ ກິລາ ປະຈໍາສົກຮຽນ 2020-2021, ລວມທັງມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາປີ 2019-2020;
3) ສືບຕໍ່ພັດທະນາຖານ ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA);
4) ສ້າງຄວາມເຂັ້ມແຂງທາງດ້ານການວິເຄາະຂໍ້ມູນທີ່ມາຈາກຫຼາຍແຫຼ່ງ ແລະ ການເຜີຍແຜ່ຂໍ້ມູນ;
5) ປັບປຸງລະບົບຂໍ້ມູນການສຶກສາ ແລະ ກິລາ ໂດຍການສົມທົບກັບຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງສົມທົບ ແລະ ຊຸກຍູ້ກຸ່ມໂຮງຮຽນ ແລະ ໂຮງຮຽນ ໃນການເກັບກໍາຂໍ້ມູນປະຈໍາປີ;
6) ສືບຕໍ່ຈັດກອງປະຊຸມ ຄັ້ງທີ VIII ຂອງຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດປະຈໍາປີ 2020, ພ້ອມທັງເຜີຍແຜ່, ຊຸກຍູ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ແກ່ຄະນະກໍາມະການພັດທະນາຊັບພະຍາກອນມະນຸດ ຂັ້ນສູນກາງ ແລະ ທ້ອງຖິ່ນ;
7) ສືບຕໍ່ຍາດແຍ່ງການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາຕ່າງໆ ພ້ອມທັງປັບປຸງກົນໄກການປະສານງານຕ່າງໆ.

## 10.4. ວຽກງານການເງິນ

### 10.4.1. ຜົນສໍາເລັດ

1) ສໍາເລັດການສ້າງ ແລະ ຮັບຮອງນໍາໃຊ້ປຶ້ມຄູ່ມືການປະກອບເອກະສານຂໍເບີກຈ່າຍ ແລະ ສະຫຼຸບລາຍຈ່າຍການເງິນຂອງຂະແໜງການສຶກສາ ແລະ ກິລາ;
2) ສໍາເລັດໂດຍພື້ນຖານການປັບປຸງຂໍ້ຕົກລົງ ວ່າດ້ວຍການແບ່ງຂັ້ນຄຸ້ມຄອງການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງຂະແໜງການສຶກສາ ແລະ ກິລາ ໃຫ້ສອດຄ່ອງກັບກົດໝາຍ ແລະ ຄໍາແນະນໍາປະຕິບັດກົດໝາຍສະບັບໃໝ່;
3) ສໍາເລັດການຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານການຄຸ້ມຄອງງົບປະມານ, ການກວດກາການເງິນ, ການບັນຊີ, ການຄຸ້ມຄອງ-ນໍາໃຊ້ຊັບສິນ, ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ການກໍ່ສ້າງສ້ອມແປງໃຫ້ພະນັກງານການເງິນພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ເມືອງ/ນະຄອນ ໃນທົ່ວປະເທດ ແລະ ໄດ້ລົງຕິດຕາມ, ຊຸກຍູ້, ແນະນໍາ, ວຽກງານກວດກາຫຼັງການຈ່າຍ ຢູ່ແຂວງ ແລະ ເມືອງຕາມເປົ້າຫມາຍທີ່ໄດ້ກໍານົດ;
4) ຊຸກຍູ້, ແນະນໍາ, ຝຶກອົບຮົມຄືນ ໃນການນໍາໃຊ້ປຶ້ມຄູ່ມືວິທີການຄິດໄລ່ຈັດສັນງົບປະມານ ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ສໍາລັບພາກລາຍຈ່າຍບໍລິຫານປົກກະຕິ (ພາກ 62) ແລະ ພາກດັດສົມສິ່ງເສີມ ແລະ ບໍາລຸງ (ພາກ 63) ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃຫ້ມີຄວາມເປັນເອກະພາບ ແລະ ຍຸດຕິທໍາ;
5) ສໍາເລັດການສ້າງໂປຼແກຼມສໍາເລັດຮູບ, ລະບົບຖານຂໍ້ມູນການສ້າງແຜນ ແລະ ງົບປະມານ (PBMIS) ຕາມສາລະບານງົບປະມານ ແລະ ແຍກຕາມຂະແໜງການຍ່ອຍຂອງຂະແໜງການສຶກສາທິການ ແລະ ກິລາ;
6) ສໍາເລັດການຄົ້ນຄວ້າ ຈັດສັນແຜນງົບປະມານ ເງິນບໍລິຫານໂຮງຮຽນທຸກຂັ້ນ, ທຸກສາຍ ຕາມແຜນດັດແກ້ງົບປະມານທີ່ໄດ້ຮັບ ແລະ ຄົ້ນຄວ້າ ນໍາສະເໜີ ເພື່ອຂໍນໍາໃຊ້ງົບປະມານໂຄງການ GPE II ເພີ່ມຕື່ມໃຫ້ການສຶກສາຂັ້ນພື້ນຖານພາກບັງຄັບ;

7) ຝຶກອົບຮົມເພີ່ມຕື່ມໃນການນຳໃຊ້ໂປຼແກມສ້າງບັນຊີເງິນເດືອນ ຕາມການສະເໜີຂອງບາງແຂວງ ເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານການເງິນຂັ້ນແຂວງ ແລະ ເມືອງ ໃນການປະຕິບັດຕົວຈິງໃຫ້ມີຄວາມເອກະພາບໃນທົ່ວຂະແໜງການ;
8) ລົງຕິດຕາມ, ຊຸກຍູ້ ບັນດາ 35 ຫົວໜ່ວຍການເງິນທີ່ຂຶ້ນກັບ ໃນວຽກງານການຈັດຕັ້ງປະຕິບັດບັນຊີແຫ່ງລັດໃຫ້ ມີຄວາມເຂັ້ມແຂງ ດຳເນີນການບັນທຶກບັນຊີຢ່າງຖືກຕ້ອງ ຄົບຖ້ວນຕາມລະບຽບຫຼັກການທີ່ໄດ້ກຳນົດ;
9) ສຳເລັດການສັງລວມບັນຊີຊັບສິນຂອງລັດ ທີ່ສູນກາງຄຸ້ມຄອງ ສົ່ງໃຫ້ກະຊວງການເງິນ ຕາມແຈ້ງການສະບັບເລກທີ 0010/ກງ ລົງວັນທີ 03 ມັງກອນ 2020;
10) ລົງຕິດຕາມຊຸກຍູ້ ການປະຕິບັດໜ້າທີ່ວຽກງານຂອງ ພະນັກງານວິຊາການ ທີ່ລົງເຄື່ອນໄຫວວຽກງານສ້າງຢູ່ພະແນກສຶກສາທິການ ແລະ ກິລານະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງສັງທອງ.

### 10.4.2. ບັນຫາ ແລະ ສິ່ງທ້າທາຍ

1) ເນື່ອງຈາກສະພາບວິກິດຂອງພະຍາດ COVID-19 ເຮັດໃຫ້ການອະນຸມັດລາຍຈ່າຍງົບປະມານມີຄວາມຫຍຸ້ງຍາກ, ຊັກຊ້າ ແລະ ບໍ່ສາມາດປະຕິບັດໄດ້ຕາມແຜນທີ່ໄດ້ກຳນົດ; ການດັດແກ້ແຜນງົບປະມານ 6 ເດືອນທ້າຍປີ ແລະ ງົບປະມານໃນພາກ 62 ແລະ ພາກ 63 ໄດ້ຖືກຕັດລົງ 30% ຂອງແຜນການປີ ທີ່ກະຊວງການເງິນອະນຸມັດໃຫ້;
2) ການປະຕິບັດແຜນການຈັດຊື້ ວັດຖຸອຸປະກອນ, ການຈັດພິມປຶ້ມແບບຮຽນ, ສື່ການຮຽນການສອນ ມີຄວາມຊັກຊ້າ ເນື່ອງຈາກມີການຕັດແຜນງົບປະມານ ແລະ ອວ່າຍມານຳໃຊ້ງົບປະມານຂອງໂຄງການ GPE Covid-19 ເພື່ອດຳເນີນການຈັດພິມ;
3) ການຈັດສັນງົບປະມານ ເພື່ອໂອນເງິນບໍລິຫານສະຖານການສຶກສາປະຈຳປີ 2020 ມີຄວາມຊັກຊ້າກວ່າແຜນການທີ່ໄດ້ກຳນົດ ບໍ່ສາມາດໂອນໃຫ້ໂຮງຮຽນກ່ອນໄລຍະໄຂສົກຮຽນ 2020-2021, ຍ້ອນຖືກຕັດແຜນງົບປະມານລົງ ແລະ ການອະນຸມັດງົບປະມານຍັງມີຄວາມຊັກຊ້າ;
4) ການຕິດຕາມ, ກວດກາ ທາງດ້ານຄຸນນະພາບສຳລັບວຽກງານການປຸກສ້າງຂອງຂະແໜງການສຶກສາ ແລະ ກິລາ ເຫັນວ່າຍັງມີຊ່ອງຫວ່າງ, ບໍ່ທັນເຂັ້ມງວດ ແລະ ການລາຍງານຄວາມຄືບໜ້າຂອງວຽກງານກໍ່ສ້າງ ຍັງບໍ່ເປັນລະບົບ ບາງແຂວງລາຍງານ ບາງແຂວງຍັງບໍ່ທັນລາຍງານ ເຮັດໃຫ້ພະແນກຄຸ້ມຄອງອອກແບບກໍ່ສ້າງ-ສ້ອມແປງ ຕິດຕາມໄດ້ຍາກ;
5) ການສະຫຼຸບສັງລວມບັນຊີທີ່ດິນ ເພື່ອລາຍງານໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຍັງບໍ່ທັນສຳເລັດ ເນື່ອງຈາກການສັງລວມທີ່ດິນຈາກສູນກາງ ແລະ ທ້ອງຖິ່ນຂອງຂະແໜງການສຶກສາ ແລະ ກິລາ ຍັງບໍ່ໄດ້ຄົບຖ້ວນ.

### 10.4.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ຄົ້ນຄວ້າ ສ້າງແຜນພັດທະນາວຽກງານງົບປະມານ-ການເງິນ ການບັນຊີ, ການຄຸ້ມຄອງຊັບສິນ ແລະ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ການກໍ່ສ້າງສ້ອມແປງຂອງຂະແໜງການສຶກສາ ແລະ ກິລາ ໃຫ້ສອດຄ່ອງຕາມແຜນພັດທະນາການສຶກສາ ແລະ ກິລາ ທີ່ຖືກຮັບຮອງຢ່າງມີປະສິດທິຜົນ;
2) ຄົ້ນຄວ້າລະດົມຄວາມຄິດເຫັນ ແລະ ນຳສະເໜີ ການປັບປຸງປຶ້ມຄູ່ມື ການນຳໃຊ້ເງິນບໍລິຫານສະຖານການສຶກສາ ແລະ ການແຈກຢາຍເງິນ ໃຫ້ມີຄວາມສອດຄ່ອງ ແລະ ຍຸດຕິທຳ;

3) ຕິດຕາມ, ຊຸກຍູ້ ໃຫ້ຂັ້ນພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນເຈົ້າການນຳສົ່ງແຜນຂໍງົບປະມານເງິນບໍລິຫານສະຖານການສຶກສາໃຫ້ກົມການເງິນໄດ້ຕາມກຳນົດເວລາ ໂດຍຜ່ານການນຳໃຊ້ລະບົບໂປຼແກມ ເງິນ SBG ທີ່ໄດ້ຝຶກອົບຮົມໃຫ້ແລ້ວ;
4) ຝຶກອົບຮົມກ່ຽວກັບການນຳໃຊ້ລະບົບໂປຼແກມການສ້າງແຜນຄາດຄະເນງົບປະມານ (PBMIS) ໃຫ້ພະນັກງານວິຊາການການເງິນຂອງພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ເມືອງ/ນະຄອນ, ມະຫາວິທະຍາໄລ ແລະ ບັນດາຫົວໜ່ວຍການເງິນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ;
5) ລົງຊຸກຍູ້, ແນະນຳ ແລະ ຕິດຕາມການນຳໃຊ້ລະບົບໂປແກຣມເງິນບໍລິຫານສະຖານການສຶກສາ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ໃນຂອບເຂດທົ່ວປະເທດ;
6) ລົງກວດກາການຈ່າຍງົບປະມານ ການບັນຊີໃຫ້ຫົວໜ່ວຍການເງິນທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ;
7) ສ້າງຄວາມເຂັ້ມແຂງ ໃຫ້ຫົວໜ່ວຍການເງິນຕ່າງໆ ທາງດ້ານວຽກງານງົບປະມານ, ການກວດກາການເງິນ, ການບັນຊີ, ການຄຸ້ມຄອງ-ນຳໃຊ້ຊັບສິນ, ການປະມູນຈັດຊື້ ຈັດຈ້າງດ້ວຍທຶນຂອງລັດ ແລະ ການກໍ່ສ້າງສ້ອມແປງ ໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການຕ່າງໆ ທີ່ໄດ້ກຳນົດຢ່າງເປັນລະບົບຕໍ່ເນື່ອງ;
8) ສືບຕໍ່ໃນການສ້າງປຶ້ມຄູ່ມືລະບົບບັນຊີອີງການຈັດຕັ້ງລັດ ຂອງຂະແໜງການສຶກສາ ແລະ ກິລາ ແລະ ຄູ່ມືຄຸ້ມຄອງການເງິນ-ການບັນຊີ ສຳລັບບັນດາໂຄງການທີ່ເປັນເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກທະນາຄານພັດທະນາອາຊີ (ADB) ໃຫ້ສຳເລັດຕາມຄາດໝາຍ;
9) ສືບຕໍ່ການປັບປຸງນິຕິກຳ ແລະ ການສ້າງປຶ້ມຄູ່ມື ກ່ຽວກັບວຽກງານການຄຸ້ມຄອງອອກແບບ, ການກໍ່ສ້າງ ແລະ ສ້ອມແປງ ຂອງຂະແໜງການສຶກສາ ແລະ ກິລາ ໃຫ້ສຳເລັດຕາມລະດັບຄາດໝາຍ;
10) ຕິດຕາມຊຸກຍູ້ວຽກງານການເຄື່ອນໄຫວວຽກງານສາມສ້າງ ຕາມການແບ່ງຄວາມຮັບຜິດຊອບໃນແຂວງ/ນະຄອນຫຼວງ, ເມືອງເປົ້າໝາຍ ແລະ ກຸ່ມໂຮງຮຽນ.

### 10.5. ວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນ

#### 10.5.1. ຜົນສຳເລັດ

1) ສຳເລັດຈັດກອງປະຊຸມວຽກງານກວດກາຂອງອົງຄະນະພັກກະຊວງສຶກສາທິການ ແລະ ກິລາ ປະຈຳປີ 2019;
2) ໄດ້ຕິດຕາມ, ກວດກາ ການບໍລິຫານຄຸ້ມຄອງ ຕໍ່ກັບການນຳພາວຽກງານກວດກາ ຈຳນວນ 9 ແຂວງ;
3) ໄດ້ຮັບຄຳຮ້ອງຄຳສະເໜີຈຳນວນ 27 ສະບັບ, ແກ້ໄຂແລ້ວ 10 ສະບັບ, ມອບໃຫ້ພາກສ່ວນອື່ນດຳເນີນການແກ້ໄຂ 12 ສະບັບ, ກຳລັງຄົ້ນຄວ້າ 5 ສະບັບ;
4) ດຳເນີນການຄົ້ນຄວ້າວຽກງານຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດການຮຽນ-ການສອນ ສາຍສ້າງຄູ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໄດ້ຈັດກອງປະຊຸມຈຳນວນ 2 ຄັ້ງ ເພື່ອປຶກສາຫາລືຂັ້ນຕອນ, ວິທີການ ແລະ ງົບປະມານຕ່າງໆ;
5) ລົງຕິດຕາມ ກວດກາການປະຕິບັດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳສົກຮຽນ 2018 ຂອງບັນດາຫົວໜ່ວຍການເງິນ 35 ຫົວໜ່ວຍ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ສຳເລັດ 15 ເປົ້າໝາຍ;
6) ສຳເລັດປັບປຸງເຄື່ອງມືກວດກາພັກ, ກວດກາລັດ ແລະ ໄດ້ພັດທະນາ, ປັບປຸງເຄື່ອງມືເກັບກຳຂໍ້ມູນ, ວິເຄາະ ແລະ ລາຍງານຜົນການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 5 ປີ 2016-2020 ຕາມ 10 ຂະແໜງການຍ່ອຍ;

7) ສ້າງຄວາມເຂັ້ມແຂງໃນການນຳໃຊ້ເຄື່ອງມືກວດກາ, ຕິດຕາມ ແລະ ປະເມີນຜົນ ໃຫ້ແກ່ຂັ້ນແຂວງ ແລະ ຂັ້ນເມືອງທົ່ວປະເທດ ຈຳນວນ 226 ທ່ານ, ຍິງ 43 ທ່ານ;
8) ສຳເລັດການຕິດຕາມຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດ ປະຈຳປີ 2018 ແລະ ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ວຽກຈຸດສຸມຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈຳໄຕມາດ ທີ 3 ແລະ 4 ຂອງສົກຮຽນ 2019-2020 ສຳລັບຂັ້ນກະຊວງ ແລະ ຂັ້ນແຂວງ;
9) ສຳເລັດສ້າງບົດວິພາກ ລະບົບຖານຂໍ້ມູນຕິດຕາມ ແລະ ປະເມີນຜົນ ແລະ ສ້າງເຄື່ອງມືຕິດຕາມ ແລະ ປະເມີນຜົນຄວາມຄືບໜ້າການຈັດຕັ້ງປະຕັ້ງປະຕິບັດຍຸດທະສາດ ແລະ ວຽກຈຸດສຸມປະຈຳໄຕມາດ ໂດຍນຳໃຊ້ໂປຣແກຣມ KOBO;
10) ສຳເລັດສ້າງເຄື່ອງມືຕິດຕາມ ແລະ ປະເມີນຜົນ ຕົວຊີ້ບອກແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020 ສຳລັບຂະແໜງການຍ່ອຍ ບໍລິຫານ ແລະ ຄຸ້ມຄອງ;
11) ສຳເລັດຝຶກອົບຮົມ ແລະ ທົດລອງນຳໃຊ້ເຄື່ອງມືຕິດຕາມ ແລະ ປະເມີນຜົນ ຕົວຊີ້ບອກແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020 ສຳລັບຂະແໜງການຍ່ອຍ ການສຶກສາຄູ, ອາຊີວະສຶກສາການສຶກສາຊັ້ນສູງ ແລະ ກິລາ-ກາຍຍະກຳ;
12) ສຳເລັດກຳນົດແຜນປະຕິບັດງານ ປະຈຳປີ 2020 ຂອງຄະນະປະສານງານ ແລະ ສະໜັບສະໜູນການຄຸ້ມຄອງບໍລິຫານ, ແຜນການ, ການເງິນ ແລະ ຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຂອງຂະແໜງການສຶກສາ ແລະ ກິລາ ຮ່ວມກັບ EU ແລະ JICA;
13) ສຳເລັດໂດຍພື້ນຖານ ການດຳເນີນການປະເມີນສະພາບການຈັດຕັ້ງປະຕິບັດວຽກງານຕິດຕາມ ແລະ ປະເມີນຜົນສຳລັບຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ.

### 10.5.2. ບັນຫາ ແລະ ສິ່ງທ້າທາຍ

1) ຂະບວນການຂໍຖອນງົບປະມານຊັກຊ້າ ມີຫຼາຍກິດຈະກຳຍັງບໍ່ທັນໄດ້ຮັບງົບປະມານ; ບາງກິດຈະກຳທີ່ໄດ້ຮັບງົບປະມານແລ້ວ ແຕ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ ເນື່ອງຈາກການລະບາດຂອງພະຍາດໂຄວິດ 19;
2) ນິຕິກຳກ່ຽວກັບວຽກງານກວດກາຍັງບໍ່ທັນຄົບຖ້ວນ, ອັນທີ່ມີແລ້ວຈຳນວນໜຶ່ງເນື້ອໃນບໍ່ທັນຮັດກຸມ, ການຄົ້ນຄວ້າເຊື່ອຊຶມບໍ່ທັນເລິກເຊິ່ງ, ການຈັດຕັ້ງປະຕິບັດບໍ່ເຂັ້ມງວດ; ການຜັນຂະຫຍາຍນິຕິກຳຍັງຊັກຊ້າ ແລະ ບໍ່ທັນແທດເໝາະຕົວຈິງ;
3) ພະນັກງານກວດກາ ຈຳນວນໜຶ່ງ ຄວາມຮູ້-ຄວາມສາມາດ ດ້ານວຽກງານຕິດຕາມ, ກວດກາ ແລະ ປະເມີນຜົນຍັງຈຳກັດ, ຍັງບໍ່ທັນເປັນມືອາຊີບ, ສ່ວນຫລາຍແມ່ນທັງຮຽນທັງເຮັດຕົວຈິງ;
4) ຍັງມີໜ້າວຽກຈຳນວນໜຶ່ງ ທີ່ຈັດຕັ້ງປະຕິບັດຍັງບໍ່ທັນສຳເລັດ ເຊັ່ນ: ການສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຕິດຕາມ, ກວດກາ, ປະເມີນຜົນ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນຂະແໜງການສຶກສາ ແລະ ກິລາ; ການສ້າງຄວາມເຂັ້ມແຂງໃຫ້ຜູ້ບໍລິຫານ ແລະ ພະນັກງານກວດກາ; ຮັບແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນອ້ອມຂ້າງກະຊວງ.

### 10.5.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ປັບປຸງຄູ່ມືວິທີເຮັດວຽກຂອງກົມ, ນິຕິກຳກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ-ແກ້ໄຂປະກົດການຫຍໍ້ທໍ້ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານກວດກາທຸກຂັ້ນ ໃຫ້ສອດຄ່ອງກັບລະບຽບການ;

2) ຕິດຕາມກວດກາ ປະເມີນຜູ້ບໍລິຫານການສຶກສາອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ;
3) ກວດກາການປະຕິບັດພາລະບົດບາດ, ໜ້າທີ່ ແລະ ສິດ ຂອງຜູ້ບໍລິຫານການສຶກສາ ພະແນກສຶກສາທິການ ແລະ ກິລາແຂວງ 9 ແຂວງ;
4) ກວດກາການບໍລິຫານ-ຄຸ້ມຄອງວິທະຍາໄລຄູ 08 ແຫ່ງ; ແລະ ວິທະຍາໄລເຕັກນິກ 4 ແຫ່ງ;
5) ສະຫຼຸບ ແລະ ຖອດຖອນບົດຮຽນວຽກງານກວດກາລັດ ແລະ ວຽກງານຕ້ານສະກັດກັ້ນວຽກງານຫຍໍ້ທໍ້ໃນຂະແໜງການສຶກສາ ແລະ ກິລາທົ່ວປະເທດ;
6) ລົງຕິດຕາມຊຸກຍູ້ ພະນັກງານລົງກໍ່ສ້າງພື້ນຖານທີ່ຕິດພັນວຽກງານສາມສ້າງໃນຂະແໜງການສຶກສາ ແລະ ກິລາ;
7) ປັບປຸງລະບົບຖານຂໍ້ມູນຂ່າວສານເພື່ອການຕິດຕາມ ແລະ ປະເມີນຜົນ;
8) ກວດສອບພາຍໃນ 35 ຫົວໜ່ວຍການເງິນ ທີ່ຂຶ້ນກັບກະຊວງສຶກສທິການ ແລະ ກິລາ;
9) ຕິດຕາມກວດກາຜົນຂອງການກວດສອບຂອງອົງການກວດສອບແຫ່ງລັດ ແລະ ຜົນການກວດສອບພາຍໃນ;
10) ກອງປະຊຸມປຶກສາຫາລື ແລະ ຜ່ານບົດລາຍງານການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈໍາປີ ແລະ 5 ປີ (2016-2020);
11) ສືບຕໍ່ສັງລວມຜົນການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ວຽກຈຸດສຸມ ຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປະຈໍາໄຕມາດ;
12) ສັງລວມຜົນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈໍາສົກຮຽນ 2019;
13) ແນະນໍາການນໍາໃຊ້ລະບົບຖານຂໍ້ມູນຂ່າວສານ ແລະ ວິທີການກວດກາການສຶກສາໃຫ້ຂັ້ນແຂວງ ແລະ ຂັ້ນເມືອງ ທົ່ວປະເທດ;
14) ທົດລອງ ແລະ ປັບປຸງເຄື່ອງມືຕິດຕາມ ແລະ ປະເມີນຜົນຕົວຊີ້ບອກແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020 ສໍາລັບຂະແໜງການຍ່ອຍ ບໍລິຫານ ແລະ ຄຸ້ມຄອງ;
15) ທົບທວນເຄື່ອງມືຕິດຕາມ ແລະ ປະເມີນຜົນຕົວຊີ້ບອກຂອງຂະແໜງການສຶກສາກ່ອນໄວຮຽນ.

### 10.6. ວຽກງານພົວພັນຕ່າງປະເທດ

#### 10.6.1. ຜົນສໍາເລັດ

1) ສໍາເລັດການອໍານວຍຄວາມສະດວກໃນການຈັດສອນພາສາຫວຽດຂັ້ນພື້ນຖານ ໃຫ້ນັກສຶກສາກ່ອນໄປສຶກສາຕໍ່ ທີ່ ສສ.ຫວຽດນາມ;
2) ສໍາເລັດການຮ່ວມມືກັບຍີ່ປຸ່ນ ໃນການຍາດແຍ່ງທຶນ JDS (2021 ຈົນເຖິງ 2024) ແລະ ທຶນຊ່ວຍເຫຼືອໂຄງການປັບປຸງສະພາບແວດລ້ອມຂອງໂຮງຮຽນຢູ່ພາກກາງ ແລະ ພາກໃຕ້ຈໍານວນ 37 ແຫ່ງ;
3) ສໍາເລັດການສ້າງແຜນຮ່ວມມືກັບ ສ ເກົາຫຼີ ໃນການສ້າງຫຼັກສູດພາສາເກົາຫຼີ ເຂົ້າໃນການສິດສອນໃນຊັ້ນມັດທະຍົມ ໄລຍະເວລາ 04 ປີ (2019-2023);
4) ສໍາເລັດການຮ່ວມມືກັບ ສປ.ຈີນ ຮັບເອົາໂຄງການສະໜອງອຸປະກອນຫໍສະໝຸດໃຫ້ແກ່ໂຮງຮຽນ 3 ແຫ່ງ ທີ່ແຂວງຊຽງຂວາງ;
5) ຮ່ວມມືກັບອົງການ SEAMEO, ASEAN, ASEM, GMS, ACMECS, CLV, CLMV, LMI ແລະ ຂອບການຮ່ວມມື ອາຊີ-ອາເມລິກາລາຕິນ (FEALAC), ການຮ່ວມມືໃນຂອບລຸ່ມແມ່ນໍ້າຂອງ, ແມ່ນໍ້າລ້ານຊ້າງ ແລະ ອື່ນໆ ໄດ້ຮັບທຶນການສຶກສາ ລະດັບປະລິນຍາເອກ 1 ທຶນ, ໂທ 6 ທຶນ, ໄດ້ຮັບທຶນຝຶກອົບຮົມດ້ານການສິດສອນຄະນິດສາດ, ວິທະຍາສາດທໍາມະຊາດ, ດ້ານເຕັກໂນໂລຊີ ແລະ ວິຊາຊີບ ຢູ່ໃນ ບັນດາສູນຊີແມວ

ຕ່າງໆ ໃຫ້ແກ່ຄູອາຈານ ຈຳນວນ 56 ທ່ານ, ພະນັກງານ ແລະ ຄູ 9 ທ່ານ ໄດ້ຮັບການຝຶກອົບຮົມດ້ານພາວະການເປັນຜູ້ນຳ;

6) ຍາດແຍ່ງໄດ້ທຶນແລກປ່ຽນ ນັກຮຽນ-ນັກສຶກສາ JENESSYs ຈຳນວນ 58 ທຶນ ແລະ ຮັບນັກສຶກສາ ໂຄງການ YSS ປະເທດມະເລເຊຍ ມາແລກປ່ຽນຈັດກິດຈະກຳພັດທະນາຊຸມຊົນ ຈຳນວນ 80 ຄົນ;
7) ໄດ້ເຊັນສັນຍາຮ່ວມມື ໃນຂອບຮ່ວມມື ຫຼາຍຝ່າຍ 1 ສະບັບ ກ່ຽວກັບ ໂຄງການສຸຂະອານາໄມໃນໂຮງຮຽນ ໂດຍຮ່ວມມືກັບ ຊີແມວ INNOTECH ແລະ GIZ FIT for School.

### 10.6.2. ບັນຫາ ແລະ ສິ່ງທ້າທາຍ

1) ງົບປະມານສຳລັບການເຂົ້າຮ່ວມປະຊຸມ, ສຳມະນາ ແລະ ຝຶກອົບຮົມ ຢູ່ພາກພື້ນ ແລະ ສາກົນ ແມ່ນຈຳກັດ ເຮັດໃຫ້ການຍາດແຍ່ງເອົາການຊ່ວຍເຫຼືອຈາກສາກົນ ແມ່ນໄດ້ຈຳກັດ;
2) ຄວາມຮູ້ຄວາມສາມາດທາງດ້ານພາສາຕ່າງປະເທດຂອງພະນັກງານ, ລັດຖະກອນ ຈຳນວນໜຶ່ງ ແມ່ນມີຈຳ ກັດ ເຮັດໃຫ້ບໍ່ສາມາດປະກອບຄຳເຫັນ ແລະ ຍາດແຍ່ງເອົາການຊ່ວຍເຫຼືອ ມາພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
3) ການສະຫຼຸບລາຍງານການຈັດຕັ້ງປະຕິບັດ ສັນຍາ ຂອງບາງອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານແມ່ນບໍ່ທັນຕາມກຳນົດເວລາ ເຮັດໃຫ້ບໍ່ສາມາດສະຫຼຸບສັງລວມ ໃຫ້ຂັ້ນເທິງໄດ້ທັນເວລາ.

### 10.6.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ເຂົ້າຮ່ວມກອງປະຊຸມຕ່າງໆຕາມການເຊີນ ເຊັ່ນ: ກອງປະຊຸມລັດຖະມົນຕີສຶກສາອາຊຽນຄັ້ງ 11 ແລະ ກອງປະຊຸມປິ່ນອ້ອມ ທີ່ປະເທດ ສິງກະໂປ; ກອງປະຊຸມເຈົ້າໜ້າທີ່ອາວຸໂສກິລາອາຊຽນຄັ້ງທີ 10 ທີ່ປະເທດ ສິງກະໂປ ແລະ ກອງປະຊຸມຜູ້ບໍລິຫານສູນຊີແມວຕ່າງໆ;
2) ຈັດກອງປະຊຸມສະຫຼຸບລາຍງານປະຈຳປີຂະແໜງການສຶກສາ-ກິລາ ໃນຂອບການຮ່ວມມື ສອງຝ່າຍ, ຫຼາຍຝ່າຍ (ອາຊຽນ-ຊີມອ); ກອງປະຊຸມກິລາອາຊຽນ ( ASEAN Sports SEA Forum );
3) ເຜີຍແຜ່ວຽກງານໃນກອບຮ່ວມມືຊີແມວ ເພື່ອສະເຫຼີມສະຫຼອງວັນຄົບຮອບການສ້າງຕັ້ງອົງການຊີແມວ ຄົບຮອບ 55 ປີ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງອາຊຽນຄົບຮອບ 53 ປີ ແລະ ວັນສ້າງຕັ້ງກິລາອາຊຽນ, ກອງປະຊຸມຖອດຖອນບົດຮຽນການຮຽນ-ການສອນພາສາຝຣັ່ງ ໃນຂະແໜງການສຶກສາຂອງລາວໃນອະນາຄົດ;
4) ເຜີຍແຜ່ນິຕິກຳວຽກງານອົງການ, ສະມາຄົມ ແລະ ມູນນິທິ ທີ່ໃຫ້ການຊ່ວຍເຫຼືອໃນຂະແໜງການສຶກສາ ແລະ ກິລາ; ຝຶກອົບຮົມໃຫ້ແກ່ບຸກຄະລາກອນຂະແໜງການການສຶກສາ ແລະ ກິລາ ຂັ້ນແຂວງ ທີ່ເຮັດວຽກຮ່ວມມືກັບຕ່າງປະເທດ ກ່ຽວກັບການເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມື;
5) ທົບທວນຄືນບັນດາຂັ້ນຕອນໃນການຂໍອະນຸມັດວິຊາ, ອານຸມັດໄປຕ່າງປະເທດ ຂອງພະນັກງານລັດຖະກອນອ້ອມຂ້າງ ຂະແໜງການສຶກສາ ແລະ ກິລາ ແລະ ຂັ້ນຕອນຂໍອະນຸມັດເຊັນ MOU;
6) ກະກຽມຕ້ອນຮັບຄະນະຜູ້ແທນກະຊວງສຶກສາ ແລະ ກໍ່ສ້າງຫວຽດນາມ ເພື່ອກະກຽມເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມື; ຄະນະຜູ້ແທນຈາກພະແນກສຶກສາແຂວງ ຈຸງຈອງນາມ, ສ.ເກົາຫຼີ ມາຝຶກອົບຮົມ ICT; ຄະນະຜູ້ແທນໃນການແລກປ່ຽນທາງດ້ານວິຊາການ ຈາກປະເທດໄທ;
7) ສືບຕໍ່ເຊັນສັນຍາວ່າດ້ວຍການຮ່ວມມື ລະຫວ່າງ ກະຊວງສຶກສາທິການ ແລະ ກິລາ ສປປ ລາວ ກັບ ກະຊວງສຶກສາຂອງ ສປ.ຈີນ, ພະແນກສຶກສາແຂວງຢຸນນານ ແລະ ພາກສ່ວນຕ່າງໆຂອງ ສປ.ຈີນ;

8) ຊຸກຍູ້ ແລະ ເກັບກຳຂໍ້ມູນຄູຫວຽດນາມສອນຢູ່ 11 ແຂວງໃນທົ່ວປະເທດ, ການຈັດຕັ້ງປະຕິບັດສັນຍາ ແລະ ການຈັດຕັ້ງປະຕິບັດໂຄງການຂອງອົງການການບໍ່ສັງກັດລັດຖະບານ ເພື່ອສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ.

## 10.7. ວຽກງານພັດທະນາຊຸມຊົນເຂດອາຊີຕາເວັນອອກສ່ຽງໃຕ້

### 10.7.1. ຜົນສຳເລັດ

1) ສຳເລັດຈັດກອງປະຊຸມສາກົນ ເພື່ອວາງແຜນພັດທະນາໂຮງຮຽນທີ່ ຕັ້ງຢູ່ເຂດຊາຍແດນລະຫວ່າງປະເທດສະມາຊິກຊີແມວໃນຫົວຂໍ້ "ແກ້ໄຂອຸປະສັກເພື່ອຮ່ວມກັນພັດທະນາ";
2) ສຳເລັດການລົງປະເມີນຄວາມຕ້ອງການແບບມີສ່ວນຮ່ວມຂອງຄູ, ໂຮງຮຽນ ແລະ ຊຸມຊົນທີ່ແຂວງຫົວພັນ, ບໍ່ແກ້ວ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ;
3) ສຳເລັດທົດສອບກິດຈະກຳປູກຈິດສຳນຶກນັກຮຽນ ໃນການຮັກການຮຽນ ຢູ່ໂຮງຮຽນມັດທະຍົມຕອນຕົ້ນບ້ານ ນ້ຳສັງ, ເມືອງສັງທອງ, ນະຄອນຫຼວງວຽງຈັນ;
4) ສຳເລັດຈັດກອງປະຊຸມຝຶກອົບຮົມໃນຫົວຂໍ້: ການນຳໃຊ້ໂປຼແກມ CSPro ເພື່ອເຂົ້າໃນການເກັບກຳຂໍ້ມູນວຽກງານວິທະຍາສາດທາງດ້ານປະລິມານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານພາຍໃນສູນ, ນັກຄົ້ນຄວ້າຈາກຄະນະວິທະຍາສາດສັງຄົມ, ວິທະຍາສາດ ທຳມະຊາດ ຂອງມະຫາວິທະຍາໄລແຫ່ງຊາດ ແລະ ນັກຄົ້ນຄວ້າຈາກສະຖາບັນກະສິກຳ ເພື່ອໃຫ້ເຂົ້າໃຈວິທີການເກັບກຳຂໍ້ມູນໂດຍການນຳໃຊ້ໂປຼແກມເຂົ້າມາຊ່ວຍເພື່ອໃຫ້ທັນການ ແລະ ທັນສະໄໝ;
5) ສຳເລັດລົງໄປເກັບກຳຂໍ້ມູນກ່ຽວກັບວຽກງານ ຂອງໂຄງການ STEM ທີ່ມະຫາວິທະຍາໄລຈຳປາສັກ ແລະໂຮງຮຽນຕິດຊາຍແດນຕ່າງປະເທດທີ່ ແຂວງ ຈຳປາສັກ;
6) ສຳເລັດຈັດກອງປະຊຸມໃນຫົວຂໍ້: "ການສ້າງຄວາມເຂັ້ມແຂງໃນການເປັນຄູ່ຮ່ວມງານ ລະຫວ່າງ ໂຮງຮຽນ ແລະ ຊຸມຊົນ ເພື່ອການສຶກສາທີ່ມີຄຸນນະພາບ ແລະ ການຮຽນຮູ້ຕະຫຼອດຊີວິດ ທີ່ SEAMEO CED, ນະຄອນ ຫຼວງວຽງຈັນ ມີຜູ້ແທນເຂົ້າຮ່ວມທັງໝົດ 26 ຄົນ.

### 10.7.2. ບັນຫາ ແລະ ສິ່ງທ້າທາຍ

1) ງົບປະມານຍັງຈຳກັດ ເພື່ອຈະສາມາດເຄື່ອນໄຫວໃນລະດັບພາກພື້ນ; ບາງກອງປະຊຸມບໍ່ສາມາດເຂົ້າຮ່ວມຕາມການເຊີນຈາກບັນດາສູນຊີແມວ;
2) ຊັບພະຍາກອນມະນຸດບໍ່ພຽງພໍ ແລະ ບໍ່ທັນຄົບຕາມພາລະບົດບາດຂອງສູນ.

### 10.7.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

1) ລົງຈັດຕັ້ງປະຕິບັດກິດຈະກຳ ລະຫວ່າງ ນັກສຶກສາຈາກມະຫາວິທະຍາໄລແຫ່ງຊາດ ກັບນັກຮຽນຢູ່ໂຮງຮຽນທີ່ເປັນເປົ້າໝາຍ ຂອງໂຄງການພັດທະນາການສຶກສາ ທີ່ຢູ່ໃກ້ຊາຍແດນປະເທດສະມາຊິກຊີແມວ;
2) ລົງເກັບກຳຂໍ້ມູນກ່ຽວກັບໂຄງການ ການນຳໃຊ້ອຸປະກອນເອເລັກໂທຣນິກ ໃນໄວໜຸ່ມອາຊີ-ປາຊີຟິກ ຢູ່ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ, ແລະ ແຂວງສະຫວັນນະເຂດ;
3) ປະສານງານ ແລະ ຂຶ້ນແຜນຝຶກອົບຮົມຮ່ວມກັບສູນ SEAMEO QITEP in Mathematics, SEAMEO QITEP in Science ໃຫ້ແກ່ຄູອາຈານທີ່ຢູ່ໃນໂຄງການພັດທະນາການສຶກສາຢູ່ໂຮງຮຽນໃກ້ຊາຍແດນຕ່າງປະເທດ;

4) ຈັດຝຶກອົບຮົມໂຄງການ ໂຮງຮຽນຕິດຊາຍແດນ, ອອກແບບການຝຶກອົບຮົມນຳບັນດາສູນພາກພື້ນ ແລະ ກະກຽມບົດສະເໜີໂຄງການຕໍ່ກອງເລຂາ SEAMEO;
5) ຂຽນແຜນໂຄງການວິໄຈ ການຮຽນຮ່ວມ ເພື່ອສະເໜີຕໍ່ກອງປະຊຸມທີ່ຈະຈັດຂຶ້ນທີ່ ບາງກອກ ປະເທດໄທ ປີ 2020;
6) ກະກຽມສະຫຼຸບຜົນການເກັບກຳຂໍ້ມູນເບື້ອງຕົ້ນຂອງໂຄງການ Digital Kid ໃນການທົດລອງແບບສອບຖາມ, ຈັດກອງປະຊຸມເພື່ອລາຍງານຕໍ່ບັນດາສະມາຊິກ ສູນ SEAMEO CED;
7) ເຂົ້າຮ່ວມກອງປະຊຸມຄົ້ນຄວ້າດ້ານນະໂຍບາຍຂອງສູນຊີແມວ, ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ແລະ ກອງປະຊຸມວິຊາການນຳບັນດາປະເທດສະມາຊິກຊີແມວ ແລະ ກອງເລຂາຊີແມວ ປະຈຳປີ 2020;
8) ເຂົ້າຮ່ວມກອງປະຊຸມສະພາຜູ້ບໍລິຫານ ອົງການລັດຖະມົນຕີອາຊີຕາເວັນອອກສ່ຽງໃຕ້;
9) ຈັດກອງປະຊຸມຜູ້ບໍລິຫານສູນຊີແມວ ຊີອີດີ ຄັ້ງທີ 3 ປະຈຳປີ 2020;
10) ເຂົ້າຮ່ວມກອງປະຊຸມເຈົ້າໜ້າທີ່ຜູ້ອາວຸໂສ ຄັ້ງທີ 42 (HOM);
11) ຈັດກອງປະຊຸມວາງແຜນພັດທະນາໂຮງຮຽນທີ່ຕັ້ງຊາຍແດນຕ່າງປະເທດ;
12) ເກັບກຳຂໍ້ມູນກ່ຽວກັບການມີສ່ວນຮ່ວມ ຂອງຄະນະພັດທະນາການສຶກສາ ເຂົ້າໃນວຽກງານພັດທະນາການສຶກສາຢູ່ຕາມໂຮງຮຽນທີ່ຕິດຢູ່ຊາຍແດນ;
13) ຈັດກອງປະຊຸມປະຈຳປີຂອງສູນຊີແມວ ຊີອີດີ ຮ່ວມກັບຄະນະຮັບຜິດຊອບໂຄງການໂຮງຮຽນທີ່ຕິດຊາຍແດນຕ່າງປະເທດ;
14) ລົງຈັດຕັ້ງເຄື່ອນໄຫວກິດຈະກຳຢູ່ໂຮງຮຽນຕິດຊາຍແດນຮ່ວມກັບບັນດາມະຫາວິທະຍາໄລແຫ່ງຊາດ, ກັບບັນດາສະມາຊິກຊີແມວ;
15) ລົງເກັບກຳຂໍ້ມູນການສຶກສາຢູ່ຊຸມຊົນຊົນນະບົດ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອປະເມີນຄວາມຕ້ອງການພັດທະນາດ້ານການສຶກສາ, ຄວາມຮູ້ທາງພູມປັນຍາທ້ອງຖິ່ນ.

**10.8. ວຽກງານຫ້ອງການເລຂາຄະນະກຳມາທິການ ແຫ່ງຊາດລາວເພື່ອອຸຍແນັດສະໂກ**

**10.8.1. ຜົນສຳເລັດ**

1) ສຳເລັດການຮ່ວມເຮັດວຽກກັບຫ້ອງການອຸຍແນສໂກພາກພື້ນ ປະຈຳບາງກອກ ກ່ຽວກັບການປະກອບຄຳເຫັນໃສ່ຮ່າງຍຸດທະສາດ ຂອງອົງການອຸຍແນສໂກ ສຳລັບ ສປປ ລາວ ໄລຍະປີ 2020-2021;
2) ສຳເລັດການຊຳລະປະກອບສ່ວນເຂົ້າໃນພັນທະສະມາຊິກ ແລະ ສົນທິສັນຍາຕ່າງໆ ປະຈຳປີ 2019;
3) ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ ແລະ ໃນກອງປະຊຸມໃຫຍ່ຄັ້ງທີ 40, ເຊິ່ງໄດ້ລາຍງານສະພາບ ການຂອງ ສປປລາວ ພ້ອມທັງຮັບຟັງ ແລະ ປຶກສາຫາລື ບັນດາຍຸດທະສາດ, ແຜນງານ ແລະ ກິດຈະກຳຕ່າງໆ ໃນຂົງ ເຂດວຽກງານອຸຍແນສໂກ;
4) ສຳເລັດການປະສານງານກັບສູນມໍລະດົກໂລກ ໃນການນຳສະເໜີຄືນ "ພູມປັນຍາສີລະປະລາຍນາກຂອງເຊື້ອຊາດລາວ" ເຂົ້າເປັນມໍລະດົກວັດທະນະທຳທີ່ບໍ່ເປັນວັດຖຸ ໃນປີ 2021;
5) ໄດ້ໃຫ້ຄຳແນະນຳ ແລະ ສະໜອງຂໍ້ມູນ ກ່ຽວກັບການປະສານງານວຽກວັດທະນະທຳ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງກັບອຸຍແນສໂກ ໃຫ້ແກ່ຜູ້ຈະໄປປະຈຳການຢູ່ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ປາຣີ, ປະເທດຝຣັ່ງ;

6) ຊຸກຍູ້ບັນດາໂຮງຮຽນເຄືອຂ່າຍ ເພື່ອຄວາມເຂົ້າໃຈລະຫວ່າງຊາດ ASPnet ເຂົ້າຮ່ວມກອງປະຊຸມອອນລາຍ ໃນຫົວຂໍ້ຕ່າງໆ ທີ່ອົງການອຸຍແນສໂກຈັດຂຶ້ນໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສົ່ງຕໍ່ຂໍ້ມູນຂ່າວສານ ແລະ ຄວາມຮູ້ຕ່າງໆ ທີ່ກ່ຽວຂ້ອງກັບອຸຍແນສໂກ ໃຫ້ແກ່ໂຮງຮຽນເຄືອຂ່າຍ;
7) ລົງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກິດຈະກຳຂອງໂຮງຮຽນເຄືອຂ່າຍ ເພື່ອຄວາມເຂົ້າໃຈລະຫວ່າງຊາດ ASPnet 33 ແຫ່ງ ໃນ 5 ແຂວງ: ແຂວງຫົວພັນ, ຊຽງຂວາງ, ຫລວງພະບາງ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ.

### 10.8.2. ບັນຫາ ແລະ ສິ່ງທ້າທາຍ

1) ກົນໄກໃນການຕິດຕາມເອົາບົດລາຍງານກັບບັນດາພະນັກງານຈາກພາກສ່ວນຕ່າງໆ ທີ່ທາງຫ້ອງການ ຄລອ ໄດ້ນຳສົ່ງໄປຮ່ວມກອງປະຊຸມ ຫຼື ຝຶກອົບຮົມໃນລະດັບພາກພື້ນ ແລະ ສາກົນ ຍັງບໍ່ທັນຄ່ອງຕົວ ເຮັດໃຫ້ບໍ່ສາມາດສັງລວມຂໍ້ມູນ ແລະ ເນື້ອໃນຂອງແຕ່ລະກອງປະຊຸມ ເພື່ອລາຍງານໃຫ້ຂັ້ນເທິງຊາບ;
2) ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆທີ່ຮັບໃຊ້ວຽກງານ ແມ່ນບໍ່ພຽງພໍກັບຄວາມຕ້ອງການ ເຊັ່ນ: Internet (ຊ້າ) ແລະ ໂຕະຕັ່ງພະນັກງານ;
3) ຫຼາຍພາກສ່ວນຍັງບໍ່ທັນເຂົ້າໃຈ ແລະ ກຳໄດ້ພາລະບົດບາດຂອງຫ້ອງການ ຄລອ ຈຶ່ງເຮັດໃຫ້ການປະສານງານກັບ ພາກສ່ວນຕ່າງໆ ບາງຄັ້ງກໍ່ຍັງມີຄວາມຫຍຸ້ງຍາກ ແລະ ຊັກຊ້າ;
4) ບັນດາກະຊວງຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງວິຊາສະເພາະຂອງອຸຍແນສໂກ ຍັງບໍ່ເຫັນຄວາມສຳຄັນເທົ່າທີ່ຄວນ ໃນການຂຶ້ນແຜນງົບປະມານ ເພື່ອເຂົ້າຮ່ວມກອງປະຊຸມລະດັບພາກພື້ນ ແລະ ສາກົນ ທີ່ອົງການອຸຍແນສໂກຈັດຂຶ້ນໃນທຸກໆປີ;
5) ການຈັດຕັ້ງປະຕິບັດກິດຈະກຳບໍ່ໄປຕາມແຜນການທີ່ກຳນົດໄວ້ ເນື່ອງຈາກທຸກໆປີແມ່ນແຈ້ງເພດານງົບປະມານຊັກຊ້າ ເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳພົບຄວາມຫຍຸ້ງຍາກ;
6) ພະນັກງານຈຳນວນໜຶ່ງຍັງມີຂີດຈຳກັດດ້ານພາສາຕ່າງປະເທດ ໂດຍສະເພາະພາສາຝຣັ່ງ;
7) ບຸກຄະລາກອນບໍ່ເຄີຍໄດ້ຮັບທຶນຝຶກອົບຮົມຈາກກະຊວງ, ຈຶ່ງເຮັດໃຫ້ບຸກຄະລາກອນສ່ວນໜຶ່ງມີຄວາມຮູ້ຄວາມສາມາດພຽງພໍກັບວຽກງານ.

### 10.8.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ປະສານງານ ແລະ ຮ່ວມເຮັດວຽກກັບຫ້ອງການອຸຍແນສໂກພາກພື້ນ ປະຈຳບາງກອກ ເພື່ອປັບປຸງຄູ່ມື ກ່ຽວກັບຂອບແຜນງານຂອງໂຮງຮຽນຜາສຸກ “Happy School” ແລະ ສືບຕໍ່ຂະຫຍາຍໂຄງການໂຮງຮຽນຜາສຸກ ໄປຍັງໂຮງຮຽນເຄື່ອຂ່າຍ ເພື່ອຄວາມເຂົ້າໃຈລະຫວ່າງຊາດ ທີ່ຍັງບໍ່ທັນເຂົ້າຮ່ວມໂຄງການດັ່ງກ່າວ;
2) ລົງຕິດຕາມການຈັດຕັ້ງປະຕິບັດກິດຈະກຳຂອງໂຮງຮຽນເຄືອຂ່າຍ ເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ ASPnet ໃນ ສປປ ລາວ (5 ແຂວງ);
3) ຈັດກອງປະຊຸມເຜີຍແຜ່ແນວຄວາມຄິດ ກ່ຽວກັບການສຶກສາພົນລະເມືອງໂລກ (GCED) ໃຫ້ແກ່ຜູ້ອຳນວຍການ ແລະ ຄູສອນແຂວງວຽງຈັນ ແລະ ບໍລິຄຳໄຊ;
4) ຈັດກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາສວນທໍລະນີສາດ (Geopark) ໃນ ສປປ ລາວ;
5) ຈັດກອງປະຊຸມຝຶກອົບຮົມການມີສ່ວນຮ່ວມຂອງຊາວໜຸ່ມ ໃນການປົກປັກຮັກສາມໍລະດົກ ໃນ ສປປ ລາວ;

6) ຈັດກອງປະຊຸມຝຶກອົບຮົມການນຳໃຊ້ຄູ່ມື ການເປັນສະມາຊິກໂຮງຮຽນເຄືອຂ່າຍ ເພື່ອຄວາມເຂົ້າໃຈລະຫວ່າງຊາດ ASPnet ແລະ ປຶ້ມຄູ່ມືນິລະດົກໃນມືຊາວໜຸ່ມ ໃຫ້ແກ່ຜູ້ອຳນວຍການ ແລະ ຄູສອນຈາກໂຮງຮຽນ ASPnet ໃນ ສປປ ລາວ;
7) ຈັດກອງປະຊຸມຖອດຖອນບົດຮຽນປະຈຳປີ ຂອງໂຮງຮຽນເຄືອຂ່າຍ ເພື່ອຄວາມເຂົ້າໃຈລະຫວ່າງຊາດ ASPnet ໃນ ສປປ ລາວ, ທີ່ ນະຄອນຫຼວງວຽງຈັນ;
8) ຄຸ້ມຄອງ ແລະ ຕິດຕາມ ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການຮ່ວມມືລະຫວ່າງ ຄະນະກຳມາທິການແຫ່ງຊາດ ເພື່ອອຸຍແນສໂກ ລາວ-ເກົາຫຼີ: ສົ່ງເສີມເປົ້າໝາຍການສຶກສາແບບຍືນຍົງ-ເປົ້າໝາຍທີ 4 (Bridge Laos Project);
9) ດຳເນີນໂຄງການສຳຫຼວດເບື້ອງຕົ້ນ ກ່ຽວກັບສະພາບລວມ, ເປົ້າໝາຍ ແລະ ບູລິມະສິດຂອງຄະນະກຳມາທິການແຫ່ງຊາດ ເພື່ອອຸຍແນສໂກ ໃນບັນດາປະເທດອາຊີຕາເວັນອອກ ແລະ ອາຊີຕາເວັນອອກສຽງໃຕ້ ພາຍໃຕ້ການສະໜັບສະໜູນ ຂອງຄະນະກຳມາທິການແຫ່ງຊາດເກົາຫຼີ ເພື່ອອຸຍແນສໂກ ປະຈຳປີ 2020-2021.

## 10.9. ວຽກງານ ໄອຊີທີ

### 10.9.1. ຜົນສຳເລັດ

1) ສຳເລັດການປັບປຸງລະບົບເຄືອຂ່າຍຂອງຂະແໜງການສຶກສາທິການ ແລະ ກິລາ ເພື່ອເຊື່ອມຈອດອາຄານອ້ອມຂ້າງສຳນັກກະຊວງ 9 ຈຸດ, ສູນໄອຊີທີ 18 ແຂວງ, ໂຮງຮຽນມັດທະຍົມອ້ອມຂ້າງ 26 ແຫ່ງ ແລະ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ ແລະ ແຂວງ 18 ແຂວງ ໃນທົ່ວປະເທດ ໂດຍໄດ້ຕໍ່ສັນຍາການຊົມໃຊ້ອິນເຕີເນັດ ແລະ ສາຍເຊົ່າ ກັບບໍລິສັດ ສະກາຍໂທລະຄົມ ແລະ ເຊັນສັນຍາການນຳໃຊ້ອິນເຕີເນັດໃໝ່ເພີ່ມໜຶ່ງສາຍ ກັບບໍລິສັດ ສະຕາໂທລະຄົມ (ຢູນິເທວ);
2) ສຳເລັດການປັບປຸງ ແລະ ພັດທະນາລະບົບຖານຂໍ້ມູນຂອງຂະແໜງການສຶກສາ ແລະ ກິລາ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ ແລະ ທົ່ວເຖິງ ທັງຢູ່ໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເຊັ່ນ: ລະບົບຖານຂໍ້ມູນສ້າງແຜນ ແລະ ງົບປະມານ (PBMIS), ລະບົບຈັດເກັບເອກະສານແບບເອເລັກໂຕຼນິກ (EDOCS), ລະບົບຖານຂໍ້ມູນກ່ຽວກັບຄວາມສ່ຽງຕໍ່ໄພພິບັດ (RISKRAPPS);
3) ສຳເລັດການສະເໜີ ແລະ ເປີດນຳໃຊ້ ອີເມວ ຂອງລັດຖະບານ (mail.gov.la) ສຳລັບຜູ້ບໍລິຫານການສຶກສາ ແລະ ກິລາ ຂອງກະຊວງສຶກສາທິການ ແລະ ກິລາ ຂັ້ນກົມຂຶ້ນໄປ ຈຳນວນທັງໝົດ 120 ຜູ້ຊົມໃຊ້;
4) ສຳເລັດການປັບປຸງເວັບໄຊຂອງຂະແໜງການສຶກສາ ແລະ ກິລາ (www.moes.edu.la) ພ້ອມທັງນຳເອົາຂ່າວສານ ແລະ ຂໍ້ມູນ ທີ່ເປັນປະໂຫຍດລົງໃສ່ເວັບໄຊ ເພື່ອໃຫ້ຜູ້ຊົມໃຊ້ສາມາດເຂົ້າເຖິງ ໄດ້ຢ່າງສະດວກ ແລະ ວ່ອງໄວ; ປະຈຸບັນມີເວັບໄຊລວມ ແລະ ຍ່ອຍຂອງບັນດາກົມ, ຫ້ອງການ, ສະຖາບັນ, ສູນ ແລະ ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ທົ່ວປະເທດ ລວມ 69 ເວັບໄຊ;
5) ສຳເລັດການລິເລີ່ມຈັດຕັ້ງປະຕິບັດໂຄງການພັດທະນາການສຶກສາ ໂດຍນຳໃຊ້ນະວັດຕະກຳໄອຊີທີ ເພື່ອສົ່ງເສີມການອ່ານພາສາລາວ, ການຂຽນ, ການຟັງ ແລະ ການຮຽນຮູ້ຂ່າວສານອື່ນໆ ໂດຍການຮ່ວມມືກັບອົງການ Aide Et Action Laos ຢູ່ 18 ໂຮງຮຽນ ໃນ 5 ເມືອງຂອງແຂວງວຽງຈັນ ແລະ 7 ໂຮງຮຽນ ໃນ 2 ເມືອງຂອງແຂວງອຸດົມໄຊ;

6) ສໍາເລັດການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າວິໃຈ ແລະ ການສະໜອງຫ້ອງຄອມພິວເຕີ ແລະ ລະບົບການຮຽນແບບທັນສະໄໝ 1 ຫ້ອງໃຫ້ແກ່ໂຮງຮຽນມັດທະຍົມສົມບູນ ຈັນສະຫວ່າງ ໂດຍການຮ່ວມມືລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ບໍລິສັດສະກາຍຄອມ ສ. ເກົາຫຼີ;
7) ສໍາເລັດການຝຶກອົບຮົມ ການນໍາໃຊ້ລະບົບຈັດເກັບເອກະສານແບບເອເລັກໂຕຣນິກ (edocs) ໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາເມືອງ 40 ເມືອງ ເປົ້າໝາຍ 3 ສ້າງ;
8) ສໍາເລັດການພັດທະນາ ແລະ ສະເໜີຕໍ່ອົງການກອຍກາ ປະຈໍາ ສປປ ລາວ ໂດຍຜ່ານ ກະຊວງແຜນການ ແລະ ການລົງທຶນ, ໂຄງການສະໜອງຫ້ອງຮຽນຄອມພິວເຕີ ແລະ ລະບົບໄອຊີທີ ທີ່ທັນສະໄໝໃຫ້ແກ່ໂຮງຮຽນລັດໃນ ສປປ ລາວ ຮ່ວມກັບ ບໍລິສັດສະກາຍຄອມ ສ. ເກົາຫຼີ.

### 10.9.2. ບັນຫາ ແລະ ສິ່ງທ້າທາຍ

1) ການໃຫ້ການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ ໂດຍສະເພາະການພັດທະນາເນື້ອຫາແບບເອເລັກໂຕຼນິກ ລົງໃສ່ລະບົບ ແລະ ລວມໄປເຖິງການນໍາໃຊ້ລະບົບ E-learning ທີ່ໄດ້ພັດທະນາຂຶ້ນມາແລ້ວ;
2) ການຝຶກອົບຮົມການຊົມໃຊ້ລະບົບໄອຊີທີຕ່າງໆທີ່ພັດທະນາຂຶ້ນ ຍັງບໍ່ໄດ້ເຕັມເມັດເຕັມໜ່ວຍເນື່ອງຈາກຂາດງົບປະມານສະໜັບສະໜູນ;
3) ທັກສະຄວາມສາມາດ ຂອງພະນັກງານວິຊາການທາງດ້ານໄອຊີທີ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ສູງ, ບໍ່ທັນມີຄວາມຊ່ຽວຊານ, ເຮັດໃຫ້ການປະຕິບັດໜ້າທີ່ຍັງພົບຄວາມຫຍຸ້ງຍາກ ແລະ ບາງຄັ້ງບໍ່ສາມາດແກ້ໄຂບັນຫາເອງໄດ້ ຕ້ອງອາໄສ ບໍລິສັດທີ່ປຶກສາທາງນອກ;
4) ຂາດງົບປະມານໃນການບໍາລຸງຮັກສາຢ່າງເປັນປົກກະຕິ ບັນດາພື້ນຖານໂຄງລ່າງໄອຊີທີ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ (ງົບປະມານສ້ອມແປງ-ປ່ຽນຖ່າຍອຸປະກອນໄອຊີທີທີ່ຈໍາເປັນ).

### 10.9.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ກະກຽມຈັດຕັ້ງປະຕິບັດ ໂຄງການສຶກສາທາງໄກ ໂດຍທຶນຊ່ວຍເຫຼືອລ້າຂອງ ສປ.ຈີນ;
2) ສືບຕໍ່ປັບປຸງ ແລະ ພັດທະນາ ລະບົບເວັບໄຊ ຂອງຂະແໜງການສຶກສາ ແລະ ກິລາ ໃຫ້ມີປະສິດທິພາບຂຶ້ນຕື່ມໂດຍສະເພາະ ການປັບປຸງທາງດ້ານເນື້ອໃນທີ່ເປັນປະໂຫຍດໃຫ້ແກ່ຜູ້ຊົມໃຊ້ໃຫ້ຫຼາຍທີ່ສຸດ;
3) ສືບຕໍ່ຈັດຕັ້ງປະຕິບັດ ພ້ອມທັງຕິດຕາມ ແລະ ປະເມີນຜົນ ລະບົບການຮຽນການສອນ ແລະ ການຄຸ້ມຄອງບໍລິຫານໂຮງຮຽນແບບເອເລັກໂຕຼນິກ ທີ່ພັດທະນາພາຍໃຕ້ໂຄງການປັບປຸງລະບົບ ການຮຽນ-ການສອນແບບເອເລັກໂຕຼນິກ ທຶນກູ້ຢືມບໍ່ມີດອກເບ້ຍ ຈາກປະເທດໂອຖຼິດ ໃຫ້ສໍາເລັດ ແລະ ມີປະສິດທິຜົນ;
4) ສືບຕໍ່ສ້າງທັກສະ ແລະ ຄວາມຮູ້ພື້ນຖານ ທາງດ້ານໄອຊີທີ ໃຫ້ແກ່ຄູສອນ ແລະ ຜູ້ບໍລິຫານການສຶກສາ ແລະ ສ້າງວິຊາການໄອຊີທີ ຂອງຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນຜູ້ຊ່ຽວຊານທາງດ້ານໄອຊີທີ;
5) ສືບຕໍ່ຈັດຕັ້ງປະຕິບັດໂຄງການພັດທະນາການສຶກສາ ໂດຍນໍາໃຊ້ນະວັດຕະກໍາໄອຊີທີ ເພື່ອສົ່ງເສີມການອ່ານພາສາລາວ, ການຂຽນ, ການຟັງ ແລະ ການຮຽນຮູ້ຂ່າວສານອື່ນໆ ໄລຍະທີ 2 ໂດຍການຮ່ວມມືກັບອົງການ Aide Et Action Laos;
6) ສືບຕໍ່ພັດທະນານິຕິກໍາທີ່ຈໍາເປັນສໍາລັບການພັດທະນາ ແລະ ນໍາໃຊ້ໄອຊີທີ ສໍາລັບການສຶກສາ ແລະ ກິລາ ໃຫ້ສໍາເລັດ ໂດຍສະເພາະແມ່ນ ນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາໄອຊີທີ ສໍາລັບການສຶກສາ ແລະ ກິລາ.

### 10.10. ວຽກງານສາມສ້າງ

#### 10.10.1. ຜົນສຳເລັດ

1) ສຳເລັດການເຜີຍແຜ່ມາດຕະຖານ 3 ສ້າງ ຂອງຂະແໜງການສຶກສາ ແລະ ກິລາ ໃຫ້ຜູ້ບໍລິຫານ, ພະນັກງານ, ຄູ-ອາຈານສອນ ຢູ່ບັນດາແຂວງ/ນະຄອນຫຼວງ, ຮ່າງເຄື່ອງມືປະເມີນມາດຕະຖານ 3 ສ້າງ;
2) ສຳເລັດການສົ່ງພະນັກງານລົງກໍ່ສ້າງຮາກຖານຢູ່ຂັ້ນແຂວງ/ນະຄອນຫຼວງໄລຍະ 02 ປີ 18 ທ່ານ, ຖືກແຕ່ງຕັ້ງເປັນຮອງຫືອໜ້າພະແນກ 18 ທ່ານ, ເມືອງ ແລະ ກຸ່ມໂຮງຮຽນ ໄລຍະ 09 ເດືອນ 120 ທ່ານ;
3) ໄດ້ລົງຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານຂັ້ນແຂວງ, ຂັ້ນເມືອງ, ຂັ້ນກຸ່ມໂຮງຮຽນ ພ້ອມທັງສະໜອງວັດຖຸ-ອຸປະກອນໃຫ້ແກ່ຫ້ອງການສຶກສາທິການ ແລະ ກິລາ 40 ເມືອງເປົ້າໝາຍ ພາຍໃຕ້ໂຄງການຍົກສູງຄຸນນະພາບການສຶກສາ ແລະ ກິລາ ເຂດຫ່າງໄກສອກຫຼີກ;
4) ສຳເລັດການຈັດກອງປະຊຸມຖອດຖອນບົດຮຽນການຫັນເອົາພະນັກງານລົງກໍ່ສ້າງຮາກຖານ 2 ຄັ້ງຕໍ່ປີ;
5) ສຳເລັດການປະເມີນ ແລະ ຍ້ອງຍໍ ການປະຕິບັດໜ້າທີ່ຂອງພະນັກງານລົງກໍ່ສ້າງຮາກຖານ ໄລຍະ 09 ເດືອນ ຜົນການປະເມີນມີ 62 ສະຫາຍ ຖືກປະເມີນໄດ້ປະເພດດີຫຼາຍ ແລະ ອີກ 58 ສະຫາຍ ແມ່ນປະເພດດີ, ບໍ່ມີປະເພດກາງ ແລະ ປະເພດອ່ອນ.

#### 10.10.2. ບັນຫາ ແລະ ສິ່ງທ້າທາຍ

1) ການລົງຊຸກຍູ້ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດມາດຕະຖານ 3 ສ້າງ ແລະ ການລົງຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ ເນື່ອງຈາກວ່າງົບປະມານຍັງມີຈຳກັດ;
2) ງົບປະມານຮັບໃຊ້ການຝຶກອົບຮົມ ແລະ ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງທີ່ເອື້ອອຳນວຍໃຫ້ແກ່ການຮຽນການສອນ ຍັງບໍ່ພຽງພໍ ເຊັ່ນ: ອຸປະກອນການຮຽນ-ການສອນ, ອາຄານ ແລະ ຫ້ອງຮຽນບໍ່ໄດ້ມາດຕະຖານ, ບໍ່ມີຫ້ອງສະໝຸດ, ບໍ່ມີຫ້ອງນໍ້າທີ່ສະອາດ ແລະ ອື່ນໆ;
3) ການສະໜອງງົບປະມານອັດຕາກິນ ແລະ ນໍ້າມັນລົດ ໃຫ້ພະນັກງານລົງກໍ່ສ້າງຮາກຖານຍັງຊັກຊ້າ, ບໍ່ສາມາດຈັດຕັ້ງປະຕິບັດງົບປະມານທີ່ໄດ້ຮັບອະນຸມັດໄດ້ 100% ເນື່ອງຈາກ ການຂຶ້ນແຜນຝຶກອົບຮົມຂັ້ນແຂວງ, ເມືອງ ແລະ ກຸ່ມໂຮງຮຽນ ຍັງຊັກຊ້າ ບໍ່ທ່ວງທັນເວລາປິດສົກງົບປະມານ;
4) ສະພາບການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການຈັດສົ່ງພະນັກງານລົງກໍ່ສ້າງຮາກຖານ ຊຸດທີ 2 ໄລຍະ 01 ປີ ຊັກຊ້າ ແລະ ເຮັດໃຫ້ການສືບຕໍ່ວຽກງານບໍ່ຕໍ່ເນື່ອງ.

#### 10.10.3. ແຜນວຽກບູລິມະສິດ ໃນສົກຮຽນ 2020-2021

1) ສືບຕໍ່ສ້າງເຄື່ອງມື ແລະ ຝຶກອົບຮົມການນຳໃຊ້ເຄື່ອງມືປະເມີນມາດຕະຖານ 3 ສ້າງຂອງຂະແໜງການສຶກສາ ແລະ ກິລາ ໃຫ້ຄະນະຮັບຜິດຊອບໂຄງການຍົກສູງຄຸນນະພາບການສຶກສາ ແລະ ກິລາ 40 ເມືອງເຂດຫ່າງໄກສອກຫຼີກ, ໃນຂັ້ນ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ;
2) ສືບຕໍ່ຈັດກິດຈະກຳຍາມພັກໂຮງຮຽນ ແລະ ກິດຈະກຳຊຸກຍູ້ການຮຽນ-ການສອນຕ່າງໆ ທີ່ຕິດພັນກັບການແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ໂດຍປະສານສົມທົບກັບສະຖານການສຶກສາ, ຜູ້ປະກອບການ, ສະມາຄົມການສຶກສາພາກເອກະຊົນ ສົມທົບກັບອົງການປົກຄອງແຂວງ ແລະ ເມືອງ ເພື່ອຍ້ອງຍໍພາກສ່ວນທີ່ເຂົ້າຮ່ວມຂະບວນການຮັກຊາດ ແລະ ພັດທະນາ ຢູ່ແຕ່ລະກຸ່ມໂຮງຮຽນ, ເມືອງ ແລະ ແຂວງ;

3) ສືບຕໍ່ລົງຕິດຕາມຊຸກຍູ້ ການຮຽນ - ການສອນ ຂອງຄູຢູ່ໂຮງຮຽນພາຍໃນກຸ່ມຢ່າງເປັນປົກກະຕິ, ໂຄສະນາປຸກລະດົມຂົນຂວາຍ ແລະ ປະສານສົມທົບລະຫວ່າງໂຮງຮຽນກັບຄະນະພັດທະນາການສຶກສາຂັ້ນບ້ານ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ປົກຄອງ ໃຫ້ເຂົ້າໃຈຄວາມໝາຍຄວາມສຳຄັນຂອງການສຶກສາ ໂດຍການຕິດຕາມເກັບກຳສະຖິຕິເດັກໃນເກນອາຍຸເຂົ້າຮຽນ, ອັດຕາການປະລະ, ຄ້າງຫ້ອງ;

4) ສືບຕໍ່ຊຸກຍູ້ຕິດຕາມການນຳໃຊ້ງົບປະມານການຄຸ້ມຄອງ ແລະ ບໍລິຫານຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນຕ່າງໆ ໃຫ້ຖືກຕາມຈຸດປະສົງເປົ້າໝາຍ, ຊຸກຍູ້ຕິດຕາມການຂຶ້ນແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບລາຍງານແຜນງົບປະມານຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ພະນັກງານບໍລິຫານ ຄູ-ອາຈານຂັ້ນແຂວງ, ເມືອງ ແລະ ກຸ່ມໂຮງຮຽນ ໃຫ້ທ່ວງທັນຕາມກຳນົດເວລາ;

5) ສືບຕໍ່ເກັບກຳຂໍ້ມູນບັນດາໂຮງຮຽນ ເພື່ອສ້າງຕັ້ງກຸ່ມໂຮງຮຽນປະຖົມ ແລະ ມັດທະຍົມ ຕາມມາດຕະຖານທີ່ວາງອອກ;

6) ສືບຕໍ່ສ້າງຄວາມເຂັ້ມແຂງດ້ານວິຊາການໃຫ້ພະນັກງານໄອທີໃຫ້ແກ່ໜ່ວຍງານສະຖິຕິ ແລະ ແຜນການ ກໍ່ຄືຫ້ອງການສຶກສາທິການ ແລະ ກິລາເມືອງ ເພື່ອໃຫ້ສາມາດສ້າງແຜນທີ່ການສຶກສາໄດ້;

7) ສືບຕໍ່ຝຶກອົບຮົມກຽມຄວາມພ້ອມໃຫ້ພະນັກງານລົງກໍ່ສ້າງຮາກຖານຊຸດ ທີ 2 ໄລຍະ 01 ປີ ໃຫ້ມີປະສິດທິຜົນກວ່າເກົ່າໂດຍເນັ້ນການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ;

8) ລົງຊຸກຍູ້ຕິດຕາມພະນັກງານລົງກໍ່ສ້າງຮາກຖານຢູ່ຂັ້ນແຂວງ, ເມືອງ ແລະ ກຸ່ມໂຮງຮຽນ 1 ຄັ້ງຕໍ່ປີ ;

9) ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການຫັນເອົາພະນັກງານລົງກໍ່ສ້າງຮາກຖານ 02 ຄັ້ງຕໍ່ປີ, ປະເມີນ ແລະ ຍ້ອງຍໍພະນັກງານລົງກໍ່ສ້າງຮາກຖານ ໄລຍະ 2 ປີ ຊຸດທີ 1 ແລະ ໄລຍະ 1 ປີ ຊຸດທີ 2;

10) ຄັດເລືອກພະນັກງານລົງກໍ່ສ້າງຮາກຖານ ຊຸດທີ 3 ໄລຍະ 1 ປີ ແລະ 2 ປີ.

# XI. ການສຶກສາຮຽນຮ່ວມ

## 11.1. ຜົນສຳເລັດ

ໃນສົກຮຽນ 2019-2020 ມີໂຮງຮຽນສາມັນກິນນອນຊົນເຜົ່າທັງໝົດ 23 ແຫ່ງ ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ 02 ແຫ່ງ, ຂຶ້ນກັບແຂວງ 15 ແຫ່ງ ແລະ ຂຶ້ນກັບເມືອງ 06 ແຫ່ງ. ມີນັກຮຽນທັງໝົດ 8.874 ຄົນ ຍິງ 3.987 ຄົນ. ໂຮງຮຽນສຶກສາພິເສດ 2 ແຫ່ງ ມີນັກຮຽນທັງໝົດ 169 ຄົນ; ນັກຮຽນພິການຕາເຂົ້າຮຽນຮ່ວມໃນໂຮງ ຮຽນມັດທະຍົມສົມບູນເພຍວັດ ທັງໝົດຈຳນວນ 4 ຄົນ ແລະ ມະຫາວິທະຍາໄລແຫ່ງຊາດໃນຄະນະສຶກສາສາດ, ຄະນະອັກສອນສາດ, ຄະນະວິສະວະກຳສາດ ພາກວິຊາໄອທີ (IT) ແລະ ຄະນະນິຕິສາດ ແລະ ລັດຖະສາດ ຈຳນວນ 9 ຄົນ; ໄດ້ສຳເລັດການຈັດກອງປະຊຸມຖອດຖອນບົດຮຽນປະຈຳປີ 2019 ໃນກອງປະຊຸມດັ່ງກ່າວ ຜູ້ອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ຜູ້ອຳນວຍການໂຮງຮຽນສຶກສາ ພິເສດ.

## 11.2. ບັນຫາ ແລະ ສິ່ງທ້າທາຍ

1) ອັດຕາການເຂົ້າຮຽນຂອງເດັກທີ່ດ້ອຍໂອກາດ ໂດຍສະເພາະແມ່ນເດັກຍິງ, ເດັກຊົນເຜົ່າ ແລະ ເດັກພິການ ໃນເຂດຊົນນະບົດຫ່າງໄກສອກຫຼີກຕາມເກນອາຍຸ ໄດ້ເຂົ້າຮຽນໃນໂຮງຮຽນສາຍສາມັນສຶກສາ ແລະ ໂຮງ ຮຽນສຶກສາພິເສດມີຈຳກັດ ໃນນັ້ນ ກຸ່ມເດັກພິການເບົາ-ໜັກໄດ້ເຂົ້າຮຽນຮ່ວມ ແລະ ເຂົ້າຮຽນໃນໂຮງຮຽນສຶກສາພິເສດມີຈຳນວນໜ້ອຍກວ່າໝູ່;
2) ຜູ້ບໍລິຫານ, ພະນັກງານວິຊາການ ໃນຂັ້ນທ້ອງຖິ່ນ ແລະ ຜູ້ອຳນວຍການໂຮງຮຽນຍັງຈຳນວນຫຼາຍ ບໍ່ໄດ້ຮັບການຝຶກອົບຮົມວຽກງານການການສຶກສາຮຽນຮ່ວມ ແລະ ການສຶກສາສະເພາະດ້ານ (ການສຶກສາພິເສດ);
3) ຜູ້ບໍລິຫານໂຮງຮຽນ ແລະ ຄູສອນ ຍັງມີຄວາມກັງວົນໃຈທີ່ຈະຮັບເອົາເດັກພິການ ເຂົ້າຮຽນໃນໂຮງຮຽນ ເນື່ອງຈາກສ່ວນໃຫຍ່ບໍ່ມີປະສົບການ ແລະ ບໍ່ໄດ້ຮັບການຝຶກອົບຮົມວຽກງານນີ້ມາກ່ອນ ຈຶ່ງເຮັດໃຫ້ມີເດັກພິການໄດ້ເຂົ້າຮຽນມີຈຳນວນຈຳກັດ, ເດັກພິການໄດ້ເຂົ້າຮຽນເປັນຈຳນວນຫຼາຍ ແມ່ນເຂດທີ່ໄດ້ຮັບການຊ່ວຍເຫຼືອຈາກສາກົນເທົ່ານັ້ນ;
4) ສະພາບແວດລ້ອມ ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກແກ່ເດັກພິການໃນສະຖານການສຶກສາມີຈຳກັດ;
5) ການໃຫ້ນະໂຍບາຍຕໍ່ເດັກທີ່ດ້ອຍໂອກາດ, ເດັກພິການ ໃນລະດັບນະໂຍບາຍ ຫຼື ນິຕິກຳ ຍັງບໍ່ທັນມີການກຳ ນົດຈະແຈ້ງ ແລະ ກວ້າງຂວາງ;
6) ປະສົບການ ແລະ ຂີດຄວາມສາມາດຂອງພະນັກງານທຸກຂັ້ນ ຕໍ່ວຽກງານການສຶກສາຮຽນຮ່ວມ ແລະ ການສຶກສາສະເພາະດ້ານ (ການສຶກສາພິເສດ) ຍັງບໍ່ທັນກວ້າງຂວາງ ຍ້ອນທັງຮຽນ-ທັງປະຕິບັດ;
7) ການຮັບຮູ້ສິດ ແລະ ຄວາມເຂົ້າໃຈເຖິງຄວາມສາມາດຂອງຄົນພິການ ແລະ ຄວາມສຳຄັນຂອງການສຶກສາຮຽນຮ່ວມ ແລະ ການສຶກສາສະເພາະດ້ານ (ການສຶກສາພິເສດ) ຂອງບຸກຄົນ, ຄອບຄົວ, ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ແລະ ສັງຄົມ ຍັງບໍ່ເລິກເຊິ່ງ;
8) ນັກຮຽນຊົນເຜົ່າຈຳນວນບໍ່ໜ້ອຍ ທີ່ໄດ້ຮັບທຶນຂອງລັດຖະບານ ໃຫ້ເຂົ້າຮຽນໃນຂັ້ນ ມ.1 (ໃໝ່) ໃນໂຮງ ຮຽນສາມັນກິນນອນຊົນເຜົ່າ ບໍ່ສາມາດເວົ້າ ແລະ ອ່ານພາສາລາວໄດ້ດີ ເຮັດໃຫ້ການຮຽນການສອນຂອງຄູໃນໂຮງຮຽນສາມັນກິນນອນຊົນເຜົ່າພົບຄວາມຫຍຸ້ງຍາກ.

**11.3. ແຜນວຽກບຸລິມະສິດ ໃນສົກຮຽນ 2020-2021**

1) ປະຊຸມຖອດຖອນບົດຮຽນປະຈຳປີ 2021 ໃນການຄຸ້ມຄອງ-ບໍລິຫານໂຮງຮຽນສາມັນກິນນອນຊົນເຜົ່າ, ໂຮງຮຽນສຶກສາພິເສດ ແລະ ວຽກງານອາຫານໃນໂຮງຮຽນ;
2) ສືບຕໍ່ ກຳນົດພາລະບົດບາດຂອງຄະນະເຄືອຂ່າຍການສຶກສາຮຽນຮ່ວມ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ;
3) ສືບຕໍ່ພັດທະນາຫຼັກສູດ ແລະ ເນື້ອໃນບົດຮຽນ ສຳລັບນັກຮຽນພິການຫູ-ປາກ;
4) ທົບທວນ ແລະ ປັບປຸງຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດການສຶກສາຮຽນຮ່ວມຂອງນັກຮຽນພິການ;
5) ພັດທະນາປື້ມຄູ່ມືເກັບກຳຂໍ້ມູນສະຖິຕິຂອງນັກຮຽນພິການ;
6) ພັດທະນາຄູ່ມືແນະນຳການນຳໃຊ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງບໍລິຫານໂຮງຮຽນສຶກສາພິເສດ; ເຜີຍແຜ່ກ່ຽວກັບຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງບໍລິຫານໂຮງຮຽນສຶກສາພິເສດ ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ໂຮງຮຽນສຶກສາພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
7) ຝຶກອົບຮົມສ້າງແຜນພັດທະນາໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນສຶກສາພິເສດ ໃຫ້ກາຍເປັນໂຮງຮຽນຕົວແບບ ດ້ານການຄຸ້ມຄອງ-ບໍລິຫານ, ດ້ານວິຊາການ ແລະ ດ້ານວັດທະນາທຳຂອງຊົນເຜົ່າ;
8) ສ້າງຄວາມເຂັ້ມແຂງ ໃຫ້ແກ່ ຄູສອນນັກຮຽນພິການຕາ ສຳລັບໂຮງຮຽນສຶກສາພິເສດ ແຂວງຫຼວງພະບາງ;
9) ຖອດຖອນບົດຮຽນ ປະຈຳປີ 2021 ໃນການຄຸ້ມຄອງ-ບໍລິຫານໂຮງຮຽນ ວຽກງານສົ່ງເສີມອາຫານ ແລະ ໂພຊະນາການໃນໂຮງຮຽນ (ສູນກາງ, ແຂວງ ແລະ ເມືອງ);
10) ສ້າງກົນໄກ ການປະສານງານພາຍໃນຂະແໜງການສຶກສາ, ລະຫວ່າງ ຂະແໜງການ ແລະ ຄູ່ຮ່ວມພັດທະນາ ຕາມຮູບແບບກົນໄກໜຶ່ງດຽວຂອງຫຼາຍຂະແໜງການ ໂດຍສະເພາະຕາມຍຸດທະສາດແຫ່ງຊາດດ້ານໂພຊະນາການ (4 ມາດຕະການຂອງຂະແໜງການສຶກສາ);
11) ລົງຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ ການຄຸ້ມຄອງ-ບໍລິຫານ ວຽກງານອາຫານທ່ຽງໃນໂຮງຮຽນ ແລະ ການສົ່ງເສີມການຜະລິດກະສິກຳໃນສະຖານສຶກສາຂັ້ນປະຖົມສຶກສາ;
12) ຈັດກອງປະຊຸມວິທະຍາສາດກ່ຽວກັບການຮຽນ-ການສອນ ວຽກງານໂພຊະນາການໃນສະຖາບັນສ້າງຄູ ຊຽງຂວາງ, ປາກເຊ ແລະ ຫຼວງນ້ຳທາ.

# ພາກທີ III: ການເງິນຂອງຂະແໜງການສຶກສາ ແລະ ກິລາ

## I. ສະພາບການເງິນສໍາລັບຂະແໜງການສຶກສາ ແລະ ກິລາ ປີ 2020

ໃນປີ 2020 ສະພາແຫ່ງຊາດ ໄດ້ອະນຸມັດງົບປະມານໃຫ້ແກ່ຂະແໜງການສຶກສາ ແລະ ກິລາ ທັງໝົດ ຈໍານວນ 4.098,10 ຕື້ກີບ (ອີງໃສ່ມະຕິຂອງສະພາແຫ່ງຊາດສະບັບເລກທີ 22/ສພຊ, ລົງວັນທີ 18/11/2019). ໃນຂະນະດຽວກັນ ກະຊວງສຶກສາທິການ ແລະ ກິລາ ໄດ້ມີແຜນລາຍຮັບວິຊາການອີກ ຈໍານວນ 95,01 ຕື້ກີບ ຈຶ່ງເຮັດໃຫ້ມີງົບປະມານ ເບື້ອງຕົ້ນທັງໝົດ 4.192,88 ຕື້ກີບ ຊຶ່ງເທົ່າກັບ 2,36% ທຽບໃສ່ GDP ແລະ ເທົ່າກັບ 11,74% ທຽບກັບລາຍຈ່າຍລັດຖະບານ. ໃນນີ້, ງົບປະມານບໍລິຫານປົກກະຕິ: 3.484,91 ຕື້ກີບ ແລະ ງົບປະມານການລົງທຶນ: 707,96 ຕື້ກີບ (ງົບປະມານລົງທຶນພາຍໃນ: 152,26 ຕື້ກີບ ແລະ ລົງທຶນຕ່າງປະເທດ: 555,70 ຕື້ກີບ). ງົບປະມານທັງໝົດນີ້ ສູນກາງຄຸ້ມຄອງ: 1.310,55 ຕື້ກີບ (ກະຊວງສຶກສາທິການ ແລະ ກິລາ, ມະຫາວິທະຍາໄລແຫ່ງຊາດ) ແລະ ທ້ອງຖິ່ນຄຸ້ມຄອງ 2.882,70 ຕື້ກີບ (ພະແນກສຶກສາທິການ ແລະ ກິລາແຂວງ ແລະ 3 ມະຫາວິທະຍາໄລ).

ຍ້ອນການແຜ່ລະບາດຂອງພະຍາດ ໂຄວິດ 19 ໃນປີ 2020 ນີ້, ດັ່ງນັ້ນ ລັດຖະບານຈຶ່ງໄດ້ສຸມງົບປະມານເຂົ້າໃສ່ໃນການແກ້ບັນຫາດັ່ງກ່າວ. ໃນຂະນະດຽວກັນສະພາບເສດຖະກິດກໍ່ຝືດເຄືອງ ເຮັດໃຫ້ລັດຖະບານຕັດສິນໃຈປັບປຸງແຜນງົບປະມານປະຈໍາປີ ໂດຍໄດ້ຫຼຸດລາຍຈ່າຍຂອງບັນດາຂະແໜງການຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ. ດັ່ງນັ້ນ, ແຜນງົບປະມານຂອງຂະແໜງການສຶກສາ ແລະ ກິລາ ຈຶ່ງໄດ້ປັບປຸງຫຼຸດລົງຈາກ 4.192,88 ຕື້ ກີບ ເປັນ 3.744,06 ຕື້ກີບ ຊຶ່ງເທົ່າກັບ 11,3% ທຽບໃສ່ລາຍຈ່າຍລັດຖະບານ (ອີງໃສ່ມະຕິຂອງສະພາແຫ່ງຊາດສະບັບເລກທີ 02/ສພຊ, ລົງວັນທີ 25/6/2020). ເບິ່ງລາຍລະອຽດໃນຕາຕະລາງລຸ່ມນີ້:

| ປະເພດລາຍຈ່າຍ (ຫົວໜ່ວຍ ຕື້ ກີບ) | ແຜນງົບປະມານເບື້ອງຕົ້ນ | ແຜນງົບປະມານທີ່ໄດ້ປັບປຸງແລ້ວ | ງົບປະມານທີ່ຖືກຕັດລົງ |
|---|---|---|---|
| ງົບປະມານທັງໝົດ | 4.192,88 | 3.744,06 | 448,82 |
| ງົບປະມານບໍລິຫານ | 3.484,91 | 3.065,40 | 419,51 |
| ເງິນເດືອນ (ພາກ 60) | 2.630,74 | 2.312,84 | 317,90 |
| ເງິນອຸດໜູນ (ພາກ 61) | 362,80 | 348,49 | 14,31 |
| ເງິນບໍລິຫານ ແລະ ຊື້ໃໝ່ (ພາກ 62 ແລະ 66) | 336,89 | 287.16 | 49,74 |
| ເງິນດັດສົມ-ສົ່ງເສີມ (ພາກ 63) | 154,48 | 116,92 | 37,56 |
| ງົບປະມານລົງທຶນ **(**ພາກ 67**)** | 707,96 | 678,66 | 29,30 |

- **ການສະໜອງເງິນບໍລິຫານໂຮງຮຽນ**

ເງິນບໍລິຫານໂຮງຮຽນ ແມ່ນງົບປະມານສ່ວນໜຶ່ງທີ່ຢູ່ໃນບ້ວງເງິນບໍລິຫານປົກກະຕິທີ່ບໍ່ແມ່ນເງິນເດືອນຂອງຂະແໜງການສຶກສາ ແລະ ກິລາ, ເຊິ່ງໃນແຕ່ລະປີ ກະຊວງສຶກສາທິການ ແລະ ກິລາໄດ້ມີການສະໜອງເງິນດັ່ງກ່າວໃຫ້ແກ່ສະຖານການສຶກສາໃນຊັ້ນຕ່າງໆ ນັບແຕ່ການສຶກສາກ່ອນໄວຮຽນຮອດຊັ້ນອາຊີວະສຶກສາ ຕາມມູນຄ່າຫົວໜ່ວຍທີ່ກໍານົດ. ໃນປີ 2020, ອີງຕາມແຜນອະນຸມັດເບື້ອງຕົ້ນຂອງງົບປະມານບໍລິຫານໂຮງຮຽນ ແມ່ນ 115.378.810.000 ກີບ. ແຕ່ເນື່ອງຈາກຂໍ້ຈໍາກັດທາງດ້ານການເງິນ ຍ້ອນຜົນກະທົບຈາກການລະບາດຂອງພະຍາດ

ໂຄວິດ 19, ລັດຖະບານຈຶ່ງໄດ້ອອກແຈ້ງການດັດແກ້ງົບປະມານ ສະບັບເລກທີ 1918/ກງ, ລົງວັນທີ 17/07/2020 ໂດຍໃຫ້ຕັດງົບປະມານອອກ 30% ຂອງມູນຄ່າທີ່ອະນຸມັດໃນເບື້ອງຕົ້ນ. ດັ່ງນັ້ນ ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ພິຈາລະນາຕັດມູນຄ່າຫົວໜ່ວຍຂອງເງິນບໍລິຫານໂຮງຮຽນລົງໃນແຕ່ລະຊັ້ນການສຶກສາດັ່ງລາຍລະອຽດລຸ່ມນີ້:

| ຫົວໜ່ວຍ ກີບ | ຈຳນວນ ນັກຮຽນ | ມູນຄ່າຫົວ ໜ່ວຍເກົ່າ | ມູນຄ່າຫົວ ໜ່ວຍ ປັບປຸງໃໝ່ | ແຜນອະນຸມັດປີ 2020 | ມູນຄ່າລວມ |
|---|---|---|---|---|---|
| | 1.585.454 | | | 115.378.810.000 | 75.883.970.000 |
| ການສຶກສາກ່ອນໄວຮຽນ | 136.663 | 50.000 | 30.000 | 6.833.150.000 | 4.099.890.000 |
| ຊັ້ນກຽມປະຖົມ | 45.984 | 50.000 | 30.000 | 2.299.200.000 | 1.379.520.000 |
| ການສຶກສາຊັ້ນປະຖົມ | 737.484 | 70.000 | 50.000 | 51.623.880.000 | 36.874.200.000 |
| ການສຶກສາຊັ້ນມັດທະຍົມ ຕອນຕົ້ນ | 432.880 | 80.000 | 50.000 | 34.630.400.000 | 21.644.000.000 |
| ການສຶກສາຊັ້ນມັດທະຍົມ ຕອນປາຍ | 216.264 | 70.000 | 40.000 | 15.138.480.000 | 8.650.560.000 |
| ການສຶກສາຊັ້ນອາຊີວະ (ອາຊີວະທີ່ຂຶ້ນກັບແຂວງ) | 16.179 | 300.000 | 200.000 | 4.853.700.000 | 3.235.800.000 |

## II. ຄວາມຕ້ອງການດ້ານການເງິນສຳລັບປີ 2021

ອີງໃສ່ນະໂຍບາຍ ແລະ ຍຸດທະສາດ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ແລະ ແຜນງານບູລິມະສິດ ປະຈຳສົກຮຽນ 2020-2021. ໃນປີງົບປະມານ 2021 ທົ່ວຂະແໜງການສຶກສາ ແລະ ກິລາ ມີຄວາມຕ້ອງການງົບປະມານທັງໝົດ 4.277.149 ລ້ານກີບ[9] ຊຶ່ງມີລາຍລະອຽດດັ່ງນີ້:

| ປະເພດລາຍຈ່າຍ | ມູນຄ່າ (ລ້ານກີບ) |
|---|---|
| **ງົບປະມານທັງໝົດ** | 4.277.149 |
| ເງິນເດືອນ (ພາກ 60) | 2.645.180 |
| ເງິນອຸດໜູນ (ພາກ 61) | 364.350 |
| ເງິນບໍລິຫານ (ພາກ 62) | 336.244 |
| ເງິນດັດສົມ-ສົ່ງເສີມ (ພາກ 63) | 206.423 |
| ເງິນຊື້ໃໝ່ (ພາກ 66) | 16.580 |
| ງົບປະມານລົງທຶນ (ພາກ 67) | 708.372 |

[9] ແຜນການເງິນຂອງແຜນພັດທະນາຂະແໜງການສຶກສາ: ສົມມຸດຖານງົບປະມານເທົ່າເດີມ

# ພາກທີ IV: ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ

## I. ມາດຕະການໃນການຈັດຕັ້ງປະຕິບັດ

1) ໃຫ້ແຕ່ລະພາກສ່ວນ/ແຕ່ລະຂະແໜງການຍ່ອຍ ນໍາເອົາວຽກງານຈຸດສຸມນີ້ໄປຜັນຂະຫຍາຍເປັນແຜນ ປະຕິບັດງານລະອຽດໂດຍກໍານົດກິດຈະກໍາ, ຜົນໄດ້ຮັບ, ໄລຍະຈັດຕັ້ງປະຕິບັດ, ຜູ້ຮັບຜິດຊອບ ແລະ ງົບປະມານຮັບໃຊ້;
2) ໃຫ້ແຕ່ລະກົມ/ຂະແໜງການຍ່ອຍ ຈັດກອງປະຊຸມພາຍໃນທຸກໆເດືອນ ແລະ ທຸກໆສາມເດືອນ, 6 ເດືອນ ເພື່ອຕິດຕາມ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນກິດຈະກໍາຂອງຕົນ;
3) ໃຫ້ບັນດາບັນດາກົມ/ຂະແໜງການຍ່ອຍ ເອົາໃຈໃສ່ຊີ້ນໍາພະແນກສຶກສາທິການ ແລະ ກິລາ ເພື່ອແນະນໍາບັນດາເມືອງ ແລະ ໂຮງຮຽນໃນການຫັນເອົາກິດຈະກໍາໄປຈັດຕັ້ງປະຕິບັດ;
4) ໃຫ້ບັນດາບັນດາກົມ/ຂະແໜງການຍ່ອຍ ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ບໍລິຫານ ການສຶກສາ ແລະ ກິລາ ປະຈໍາປີ 2019 - 2020 ດ້ວຍຄວາມຮັບຜິດຊອບສູງ;
5) ໃຫ້ກົມແຜນການ ແລະ ກົມກວດກາ ເອົາໃຈໃສ່ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດມະຕິສະພາແຫ່ງຊາດ ແລະ ຄາດໝາຍສູ້ຊົນຂອງແຕ່ລະແຂວງ ໂດຍອີງໃສ່ມະຕິສະພາປະຊາຊົນຂັ້ນແຂວງ.

## II. ການຕິດຕາມ ແລະ ປະເມີນ

1) ໃຫ້ແຕ່ລະຂະແໜງການຍ່ອຍ, ແຕ່ລະກົມ, ຫ້ອງການ, ສູນ, ສະຖາບັນ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາຂອງຕົນ ໃນທຸກໆ 3 ເດືອນ ໃຫ້ແກ່ຫ້ອງການກະຊວງ, ກົມແຜນການ ແລະ ກົມກວດກາ. ພ້ອມດຽວກັນນັ້ນ, ໃຫ້ກົມກວດກາ ສົມທົບກັບເຄືອຂ່າຍຕິດຕາມ ແລະ ປະເມີນຜົນໃນແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນປະຕິບັດງານປະຈໍາປີ ພ້ອມທັງ ຕິດຕາມຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020 ແລະ ລາຍງານໃຫ້ແກ່ການນໍາກະຊວງສຶກສາທິການ ແລະ ກິລາ ທຸກໆ 6 ເດືອນ;
2) ໃຫ້ກົມແຜນການ ສັງລວມຜົນການຈັດຕັ້ງປະຕິບັດແຜນຂອງແຕ່ລະພາກສ່ວນ ເພື່ອລາຍງານໃຫ້ແກ່ການນໍາຂອງກະຊວງຮັບຊາບ ພ້ອມທັງລາຍງານໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ແລະ ສະພາບແຫ່ງຊາດຮັບຊາບເປັນແຕ່ລະໄລຍະ;
3) ໃຫ້ກົມແຜນການສົມທົບກັບກົມກວດກາ ກະກຽມສະຫຼຸບ ແລະ ຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາປະຈໍາສົກຮຽນ 2020-2021 ເພື່ອລາຍງານຢູ່ກອງປະຊຸມຜູ້ບໍລິຫານການສຶກສາປະຈໍາປີ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ເລກທີ 4 0 9 9 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 14 SEP 2020

# ມະຕິ
# ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2019-2020

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມກອງປະຊຸມຜູ້ບໍລິຫານ ການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020, ສະບັບເລກທີ 2934/ສສກ, ລົງວັນທີ 21 ກໍລະກົດ 2020.
- ອີງຕາມ ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2018-2019 ສະບັບເລກທີ 4259/ສສກ, ລົງວັນທີ 26 ສິງຫາ 2019.

ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈຳສົກຮຽນ 2019-2020 ໄດ້ຈັດຂຶ້ນໃນວັນທີ 27-28 ສິງຫາ 2020 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ລັດຖະມົນຕີກະຊວງ ສຶກສາທິການ ແລະ ກິລາ ແລະ ບັນດາທ່ານຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານຮ່ວມ, ມີຜູ້ແທນເຂົ້າຮ່ວມທັງໝົດ 121 ທ່ານ, ຍິງ 35 ທ່ານ.

ກອງປະຊຸມໄດ້ຮັບຟັງບົດລາຍງານຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ສົກຮຽນ 2019-2020, ຄາດໝາຍສູ້ຊົນ ແລະ ແຜນວຽກບູລິມະສິດສຳລັບສົກຮຽນ 2020-2021, ແຜນວຽກຈຸດສຸມ 4 ເດືອນ (ເດືອນກັນຍາ-ທັນວາ 2020), ຮັບຟັງບົດລາຍງານໂດຍຫຍໍ້ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025), ຜົນການປະເມີນຜົນການຮຽນຂອງນັກຮຽນຂັ້ນ ມ.4, ຜົນການຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດປະຈຳສົກຮຽນ 2018-2019 ແລະ ຫົວຂໍ້ທີ່ສຳຄັນອື່ນໆອີກຈຳນວນໜຶ່ງ.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຕໍ່ເນື້ອໃນຂອງເອກະສານຕ່າງໆ ທີ່ໄດ້ສະເໜີ ກອງປະຊຸມໄດ້ຕົກລົງເຫັນດີຮັບຮອງເອົາເປັນມະຕິຂອງກອງປະຊຸມ ດັ່ງນີ້:

**1. ເຫັນດີເປັນເອກະພາບຕໍ່ບົດລາຍງານ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈຳສົກຮຽນ 2019-2020. ຊຶ່ງໃນສົກຮຽນ 2019-2020 ການຈັດຕັ້ງປະຕິບັດບັນດາ 15 ຄາດ ໝາຍຫຼັກທີ່ກຳນົດໃນມະຕິສະພາແຫ່ງຊາດ ເລກທີ 20/ສພຊ ລົງວັນທີ 18 ພະຈິກ 2019 ເຫັນວ່າ ມີ 6 ຄາດໝາຍທີ່ສາມາດບັນລຸໄດ້ຕາມ**

**ແຜນ, ມີ 3 ຄາດໝາຍທີ່ມີຄວາມກ້າວໜ້າເມື່ອທຽບໃສ່ສົກຮຽນຜ່ານມາ, ແຕ່ມີ 6 ຄາດໝາຍທີ່ບໍ່ສາມາດບັນລຸໄດ້ ທັງມີລັກສະນະທົດຖອຍ. ກອງປະຊຸມເຫັນດີຮັບຮອງເອົາຄາດໝາຍສູ້ຊົນສຳລັບສົກຮຽນ 2020-2021 ຊຶ່ງມີທັງໝົດ 15 ຄາດໝາຍ ທີ່ສອດຄ່ອງກັບຄາດໝາຍຫຼັກຂອງແຜນພັດທະນາຂະແໜງການສຶກສາ ແລະ ກິ ລາ 5 ປີ ຄັ້ງທີ IX (2021-2025).**

2. **ເຫັນດີເປັນເອກະພາບຮັບຮອງເອົາແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ພ້ອມທັງມອບໃຫ້ກົມແຜນການນຳໄປປັບປຸງບາງເນື້ອໃນ, ພາຍຫຼັງປັບປຸງສຳເລັດແລ້ວຈຶ່ງນຳໄປຈັດພິມ, ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ທົ່ວເຖິງ. ໃຫ້ແຕ່ລະພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ ນຳເອົາເນື້ອໃນຈິດໃຈແຜນດັ່ງກ່າວ ໄປຜັນຂະຫຍາຍເປັນແຜນປະຕິບັດງານ/ເປັນໂຄງການ ປະຈຳປີຂອງຕົນໃຫ້ລະອຽດ.**

3. **ເຫັນດີຮັບຮອງເອົາຜົນການປະເມີນ ຜົນການຮຽນຂອງນັກຮຽນ ຂັ້ນ ມ.4 (ASLO 2019), ພ້ອມທັງມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສືບຕໍ່ເຜີຍແຜ່ຜົນການປະເມີນດັ່ງກ່າວ ໃຫ້ກວ້າງຂວາງ ເພື່ອໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງນຳເອົາຂໍ້ແນະນຳຈາກຜົນການປະເມີນ ໄປສ້າງເປັນແຜນບູລິມະສິດຂອງຕົນ ໃນການປັບປຸງຜົນການຮຽນຂອງນັກຮຽນ.**

4. **ເຫັນດີຮັບຮອງເອົາບາງວຽກງານໃນການປ້ອງກັນ ແລະ ຕອບໂຕ້ກັບການລະບາດພະຍາດອັກເສບປອດ ຈາກເຊື້ອຈຸລະໂຣກສາຍພັນໃໝ່ (Covid-19) ດັ່ງນີ້:**
   - 4.1 ໃຫ້ແຕ່ລະພາກສ່ວນ ໂດຍສະເພາະຢູ່ຂັ້ນໂຮງຮຽນ ເອົາໃຈໃສ່ປະຕິບັດວຽກງານສຸຂະອະນາໄມ, ປະຕິບັດຕາມຄຳແນະນຳຂອງຄະນະສະເພາະກິດໃນການລ້າງມື, ໃສ່ໜ້າກາກອະນາໄມ ແລະ ປະຕິບັດໄລຍະຫ່າງ;
   - 4.2 ໃຫ້ແຕ່ລະແຂວງ ແລະ ເມືອງສົ່ງເສີມການນຳໃຊ້ຊ່ອງທາງການຮຽນ-ການສອນ ຜ່ານຊ່ອງໂທລະພາບສຶກສາ ແລະ ກິລາ ຊ່ອງ 8 (Lao ESTV) ລວມທັງ ທາງສື່ອອນລາຍ;
   - 4.3 ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ສືບຕໍ່ພັດທະນາສື່ການຮຽນ-ການສອນ ເອເລັກໂຕຣນິກ ແລະ ຜະລິດລາຍການໂທລະພາບສຶກສາ ແລະ ກິລາ;
   - 4.4 ມອບໃຫ້ກົມການສຶກສາຊັ້ນສູງ ແລະ ກົມອາຊີວະສຶກສາ ສົມທົບກັບມະຫາວິທະຍາໄລ ແລະ ວິທະຍາໄລຕ່າງໆ ພິຈາລະນາເພີ່ມການຮັບນັກສຶກສາເຂົ້າຮຽນໃນລະດັບຕ່າງໆ ໂດຍສະເພາະໃນຄະນະວິຊາທີ່ມີຄວາມພ້ອມດ້ານບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮອງຮັບກັບນັກຮຽນທີ່ບໍ່ສາມາດໄປສຶກສາຢູ່ທີ່ຕ່າງປະເທດ.

5. **ເຫັນດີຮັບຮອງເອົາວຽກງານການຂະຫຍາຍການສຶກສາກ່ອນໄວຮຽນ ດັ່ງນີ້:**
   - 5.1 ມອບໃຫ້ກົມການສຶກສາກ່ອນໄວຮຽນ ສົມທົບກັບອົງການປົກຄອງທ້ອງຖິ່ນ ສຸມໃສ່ຂະຫຍາຍຫ້ອງກຽມປະ ຖົມຢູ່ບັນດາເມືອງທຸກຍາກ ແລະ ເຂດຊົນນະບົດຫ່າງໄກສອກຫຼີກ ພ້ອມທັງສືບຕໍ່ສະໜອງກຸ່ມຫຼິ້ນໃນຊຸມຊົນ ແລະ ການສອນຄວບອາຍຸ ເພື່ອກຽມຄວາມພ້ອມໃຫ້ເດັກດັ່ງກ່າວກ່ອນເຂົ້າຮຽນຊັ້ນປະຖົມສຶກສາ;
   - 5.2 ມອບໃຫ້ກົມການສຶກສາກ່ອນໄວຮຽນ ສືບຕໍ່ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງ ການສຶກສາທິການ ແລະ ກິລາເມືອງ ສືບຕໍ່ຈັດຕັ້ງປະຕິບັດໂຮງຮຽນອະນຸບານຕົວແບບຢູ່ບັນດາເມືອງທີ່ມີເງື່ອນໄຂ.

6. **ເຫັນດີຮັບຮອງເອົາວຽກງານການສ້າງຕັ້ງ ແລະ ພັດທະນາກຸ່ມໂຮງຮຽນ ດັ່ງນີ້:**

6.1 ມອບໃຫ້ກົມສາມັນສຶກສາ ສືບຕໍ່ພັດທະນານິຕິກຳກ່ຽວກັບການສ້າງຕັ້ງກຸ່ມໂຮງຮຽນ ພ້ອມທັງເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ແລະ ຖືກຕ້ອງຕາມຫຼັກວິຊາການ;

6.2 ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ສືບຕໍ່ເຜີຍແຜ່ ແລະ ຝຶກອົບຮົມ ກ່ຽວກັບວຽກງານການສ້າງຕັ້ງ ແລະ ພັດທະນາກຸ່ມໂຮງຮຽນ ຢ່າງກວ້າງຂວາງ;

6.3 ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ຈັດຕັ້ງກຸ່ມໂຮງຮຽນປະຖົມ ແລະ ກະກຽມຈັດຕັ້ງກຸ່ມໂຮງຮຽນມັດທະຍົມ ທີ່ມີການເຄື່ອນໄຫວເຕັມຮູບແບບ ແລະ ຖືກຕ້ອງຕາມຫຼັກການທີ່ກຳນົດ ຢ່າງໜ້ອຍໃຫ້ໄດ້ເມືອງລະ 1 ກຸ່ມ, ພ້ອມທັງໃຫ້ລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ.

**7. ເຫັນດີຮັບຮອງເອົາວຽກງານການປະເມີນຄູສອນ ແລະ ຜູ້ອຳນວຍການໂຮງຮຽນ ດັ່ງນີ້:**

7.1 ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ທົບທວນຄືນ ມາດຖານ/ຄູ່ມື ການປະເມີນຄູ ແລະ ຜູ້ອຳນວຍການໂຮງຮຽນ ໃຫ້ເນັ້ນໃສ່ຜົນການຮຽນຂອງນັກຮຽນເປັນຫຼັກ, ພ້ອມທັງເຜີຍແຜ່ ແລະ ຈັດຕັ້ງປະຕິບັດໃຫ້ທົ່ວເຖິງ;

7.2 ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການປະເມີນການປະຕິບັດໜ້າທີ່ຂອງຄູ ແລະ ອຳນວຍການໂຮງຮຽນ ໂດຍອີງໃສ່ມາດຕະຖານ/ຄູ່ມືສະບັບປັບປຸງໃໝ່ ໂດຍໃຫ້ເລີ່ມທົດລອງຢູ່ 40 ເມືອງເປົ້າໝາຍ.

**8. ເຫັນດີຮັບຮອງເອົາວຽກງານການປັບປຸງຄຸນນະພາບໃນການສຶກສາຂັ້ນພື້ນຖານ ດັ່ງນີ້:**

8.1 ມອບໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສົມທົບກັບກົມສາມັນສຶກສາ ຄົ້ນຄວ້າຄືນກ່ຽວກັບການຈັດເວລາໃສ່ວິຊາຮຽນໃນຂັ້ນ ປ. 1 ແລະ ປ. 2 ໂດຍສະເພາະວິຊາພາສາລາວ ແລະ ຄະນິດສາດ, ພ້ອມທັງອອກຂໍ້ແນະນຳລະອຽດ ເພື່ອໃຫ້ຄູສອນສຸມໃສ່ການສອນທັກສະການອ່ານອອກຂຽນໄດ້ ແລະ ການຄິດໄລ່ເລກຂັ້ນພື້ນຖານ.

8.2 ໃຫ້ແຕ່ລະເມືອງ ສົມທົບກັບອຳນວຍການໂຮງຮຽນປະຖົມ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອສັບຊ້ອນຄູທີ່ມີປະສົບການ ສອນດີ-ສອນເກັ່ງ ໄປສິດສອນຢູ່ ປ. 1 ແລະ ປ. 2.

8.3 ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ຄົ້ນຄວ້າສ້າງຕັ້ງໂຄງການທົດລອງ "ອ້າຍ/ເອື້ອຍຊ່ວຍນ້ອງໃນການສອນໜັງສື" ແນໃສ່ປັບປຸງຜົນການອ່ານອອກຂຽນໄດ້ຂອງນັກຮຽນປະຖົມສຶກສາ ໃຫ້ໄດ້ຢ່າງໜ້ອຍ ເມືອງລະໂຄງການ.

8.4 ມອບໃຫ້ກົມສາມັນສຶກສາ ຄົ້ນຄວ້າ ແລະ ປັບປຸງ ນິຕິກຳກ່ຽວກັບການຈັດຕັ້ງປະຕິບັດການເລື່ອນຂັ້ນແບບຕໍ່ເນື່ອງ ພ້ອມທັງເຜີຍແຜ່ນິຕິກຳດັ່ງກ່າວໃຫ້ທົ່ວເຖິງ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດຖືກຕ້ອງຕາມຫຼັກການ ແລະ ຜົນການຮຽນຂອງນັກຮຽນມີຄຸນນະພາບ;

8.5 ມອບໃຫ້ກົມສ້າງຄູ ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບນິເທດການສຶກສາໃນແຕ່ລະຊັ້ນການສຶກສາ ໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃຫມ່ໂດຍມອບໃຫ້ຄະນະສຶກສາສາດ ແລະ ວິທະຍາໄລຄູຕ່າງໆ ໃນທົ່ວປະເທດເປັນຜູ້ໃຫ້ບໍລິການ;

8.6 ມອບໃຫ້ກົມສ້າງຄູ, ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຝຶກອົບຮົມໃຫ້ແກ່ຄູສອນຊັ້ນປະຖົມສຶກສາ ໃນການນຳໃຊ້ຫຼັກສູດໃໝ່ ແລະ ຈັດຝຶກອົບຮົມວິທີສິດສອນໃຫ້ແກ່ຄູອາສາສະໝັກ;

8.7 ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບ ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ສຸມໃສ່ການຕິດຕາມ, ຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອໃນການປະຕິບັດໜ້າທີ່ຂອງຜູ້ອຳນວຍການໂຮງຮຽນ ແລະ ການສິດສອນຂອງຄູ ໂດຍໃຫ້ມີການລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ແກ່ຂັ້ນຄຸ້ມຄອງຂອງຕົນ ຢ່າງເປັນປົກກະຕິ;

**9. ເຫັນດີຮັບຮອງເອົາວິທີການແກ້ໄຂການປະລະການຮຽນຂອງນັກຮຽນ ດັ່ງນີ້:**

9.1 ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານເກັບກຳຂໍ້ມູນນັກຮຽນທີ່ມີຄວາມສ່ຽງທີ່ຈະອອກໂຮງຮຽນ ແລະ ນັກຮຽນທີ່ປະລະການຮຽນ ເພື່ອປຸກລະດົມ ແລະ ຊຸກຍູ້ ໃຫ້ພວກດັ່ງກ່າວໄດ້ສືບຕໍ່ເຂົ້າຮຽນຈົນຈົບການສຶກສາພາກບັງຄັບ;

9.2 ໃຫ້ຜູ້ອຳນວຍການໂຮງຮຽນ ສົມທົບກັບຄະນະພັດທະນາການສຶກສາຂັ້ນບ້ານ ລົງຕິດຕາມ ແລະ ລະດົມນັກຮຽນຜູ້ທີ່ຍັງບໍ່ທັນມາລົງທະບຽນຮຽນ ໃຫ້ມາລົງທະບຽນ ແລະ ສືບຕໍ່ຮຽນຈົນຈົບ, ພ້ອມດຽວກັນນັ້ນ ກໍ່ມອບໃຫ້ຄູສອນເອົາໃຈໃສ່ສອນບຳລຸງໃຫ້ພວກດັ່ງກ່າວ ເພື່ອໃຫ້ຮຽນທັນກັບໝູ່ເພື່ອນພາຍໃນຫ້ອງ.

**10. ເຫັນດີຮັບຮອງເອົາວຽກງານການປັບປຸງຄຸນນະພາບຂອງສຶກສາຫຼັງຂັ້ນພື້ນຖານ ດັ່ງນີ້:**

10.1 ມອບໃຫ້ກົມສ້າງຄູ ຮ່ວມກັບບັນດາສະຖາບັນສ້າງຄູຕ່າງໆ ແລະ ຄະນະສຶກສາສາດຂອງມະຫາວິທະຍາໄລຄົ້ນ ຄວ້າການຮັບນັກຮຽນເຂົ້າຮຽນຄູໂດຍໃຫ້ເນັ້ນໃສ່ສາຍທີ່ຍັງຂາດເຂີນຄູ ແລະ ຮັບປະກັນໃຫ້ໄດ້ນັກຮຽນເກັ່ງໄດ້ເຂົ້າຮຽນໃນສະຖາບັນສ້າງຄູ ພ້ອມປັບປຸງການປະສານງານລະຫວ່າງສະຖາບັນສ້າງຄູ ແລະຄະນະສຶກສາສາດຂອງມະຫາວິທະຍາໄລຕ່າງໆ;

10.2 ມອບໃຫ້ກົມອາຊີວະສຶກສາ ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະໜອງການສຶກສາສາຍອາຊີວະສຶກສາທີ່ມີຄຸນນະພາບ ແລະ ຫຼາກຫຼາຍ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ໃຊ້ແຮງງານ ແລະຜູ້ປະກອບການໃນແຕ່ລະທ້ອງຖິ່ນ;

10.3 ມອບໃຫ້ກົມການສຶກສາຊັ້ນສູງ ສົມທົບກັບມະຫາວິທະຍາໄລຕ່າງໆ ເອົາໃຈໃສ່ຍົກສູງຄຸນນະພາບຂອງການສຶກສາລະດັບມະຫາວິທະຍາໄລ ໂດຍຖືເອົາວຽກງານປະກັນຄຸນນະພາບເປັນສຳຄັນ;

10.4 ມອບໃຫ້ມະຫາວິທະຍາໄລຕ່າງໆ ເອົາໃຈໃສ່ຄົ້ນຄວ້າວິທະຍາສາດ ແລະ ໃຫ້ບໍລິການດ້ານວິຊາການ ໂດຍສອດຄ່ອງກັບຄວາມອາດສາມາດ ແລະ ຄວາມຕ້ອງການຂອງສັງຄົມ.

**11. ເຫັນດີຮັບຮອງເອົາວຽກງານຝຶກອົບຮົມວິຊາຊີບ ດັ່ງນີ້:**

11.1 ມອບໃຫ້ກົມການສຶກສານອກໂຮງຮຽນ ສົມທົບກັບ ກົມອາຊີວະສຶກສາ ໃຫ້ເຂົ້າເຖິງກຸ່ມເປົ້າໝາຍທີ່ຢູ່ເຂດຫ່າງໄກສອກຫຼີກ ໂດຍສະເພາະຊາວໜຸ່ມຜູ້ຕົກຫຼົ່ນ ແລະ ດ້ອຍໂອກາດໄດ້ເຂົ້າເຖິງການສຶກສາຫຼາຍຂຶ້ນ ໂດຍສະເພາະແມ່ນການຝຶກອົບຮົມວິຊາຊີບທີ່ແທດເໝາະກັບທ້ອງຖິ່ນ;

11.2 ມອບໃຫ້ສູນການສຶກສານອກໂຮງຮຽນຂັ້ນແຂວງ ແລະ ຂັ້ນເມືອງ ສົມທົບກັບສະຖາບັນອາຊີວະສຶກສາພາຍໃນແຂວງ ຈັດຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ຊາວໜຸ່ມ ແລະ ຜູ້ທີ່ສົນໃຈອື່ນໆ ໂດຍນຳໃຊ້ກຸ່ມໂຮງຮຽນ ເປັນບ່ອນຝຶກອົບຮົມ.

**12. ເຫັນດີຮັບຮອງເອົາວຽກງານການຄຸ້ມຄອງໂຮງຮຽນເອກະຊົນ ດັ່ງນີ້:**

12.1 ມອບໃຫ້ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງສະມາຄົມການສຶກສາພາກເອກະຊົນ ທົບທວນ, ປັບປຸງລະບຽບການ ແລະ ນິຕິກຳຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ ແລະ ເໝາະສົມ ທີ່ກ່ຽວຂ້ອງກັບການອະນຸມັດການສ້າງຕັ້ງ, ການຄຸ້ມຄອງໂຮງຮຽນເອກະຊົນ ແລະການຄຸ້ມຄອງຄູສອນ ໂດຍສະເພາະຄູຕ່າງປະເທດ.

**13. ເຫັນດີຮັບຮອງເອົາວຽກງານກິລາ-ກາຍະກຳ ດັ່ງນີ້:**

13.1 ມອບໃຫ້ກົມກິລາລະດັບສູງ ສົມທົບກັບແຂວງຊຽງຂວາງ ຈັດກອງປະຊຸມລະດັບຊາດ ເພື່ອຄົ້ນຄວ້າປຶກສາຫາລື ວັນເວລາ ໃນການຈັດງານມະຫາກຳກິລາແຫ່ງຊາດຄັ້ງທີ XI ເພື່ອສະເໜີຕໍ່ລັດຖະບານ;

13.2 ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສົມທົບກັບບັນດາສະຫະພັນກິລາພາຍໃນແຂວງ/ນະຄອນຫຼວງ ກະກຽມຄວາມພ້ອມເພີ່ມເຕີມ ເພື່ອເຂົ້າຮ່ວມການແຂ່ງຂັນມະຫາກຳກິລາແຫ່ງຊາດທີ່ຄາດວ່າຈະສາມາດເປີດຂຶ້ນໃນ ທ້າຍປີ 2020 ນີ້;

13.3 ມອບໃຫ້ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ ຈັດກອງປະຊຸມ ເພື່ອຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບວັນເວລາໃນການຈັດການແຂ່ງຂັນກິລາຄົນພິການທົ່ວປະເທດຄັ້ງທີ III, ພ້ອມທັງມອບໃຫ້ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສືບຕໍ່ກະກຽມນັກກິລາເພື່ອເຂົ້າຮ່ວມການແຂ່ງຂັນດັ່ງກ່າວ;

13.4 ມອບໃຫ້ກົມແຜນການ ພິຈາລະນາຈັດສັນງົບປະມານລົງທຶນຂອງລັດບ້ວງສູນກາງຄຸ້ມຄອງ ເພື່ອສົມທົບໃສ່ການກໍ່ສ້າງສະໜາມເປີດ-ປິດງານກິລານັກຮຽນ ທີ່ແຂວງສາລະວັນ.

**14. ເຫັນດີຮັບຮອງເອົາວຽກງານການບໍລິຫານ ແລະ ຄຸ້ມຄອງ ດັ່ງນີ້:**

14.1. ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ ສືບຕໍ່ອົບຮົມການເມືອງແນວຄິດດ້ວຍຫຼາຍວິທີ, ຫຼາຍຮູບແບບ ໃຫ້ແກ່ພະນັກງານ, ຄູອາຈານ, ນັກຮຽນ, ນັກສຶກສາ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ໂດຍຖືເອົາການເຜີຍແຜ່ບັນດາມະຕິຄຳສັ່ງ ແລະ ລະບຽບການຕ່າງໆ ທີ່ທາງກະຊວງ ກໍ່ຄືທາງລັດຖະບານວາງອອກ ໃຫ້ເລິກເຊິ່ງ ແລະ ທົ່ວເຖິງ;

14.2. ມອບໃຫ້ສູນສະຖິຕິການສຶກສາ ແລະ ກິລາ ສືບຕໍ່ປັບປຸງລະບົບຂໍ້ມູນການສຶກສາ ແລະ ກິລາ ໂດຍໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ລົງສົມທົບ ແລະ ຊຸກຍູ້ກຸ່ມໂຮງຮຽນ ແລະ ໂຮງຮຽນ ໃນການເກັບກຳຂໍ້ມູນປະຈຳປີ ໃຫ້ທັນເວລາ ພ້ອມຮັບປະກັນຄວາມຖືກຕ້ອງຊັດເຈນ;

14.3. ມອບໃຫ້ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຕາມແຜນທີ່ວາງໄວ້ ພ້ອມທັງເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ທົ່ວເຖິງ ທັງລະດັບສູນກາງ ແລະ ທ້ອງຖິ່ນ, ທັງພາຍໃນຂະແໜງການສຶກສາ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ;

14.4. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະ ປັບປຸງຕໍາແໜ່ງງານ ໃນແຕ່ລະຂັ້ນໃຫ້ສອດຄ່ອງກັບຄວາມເປັນຈິງ;

14.5. ມອບໃຫ້ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ກິລາ ສົມທົບກັບສົມທົບກັບກົມຈັດຕັ້ງ ແລະ ພະນັກງານ ແລະ ກົມວິຊາການທີ່ກ່ຽວຂ້ອງ ພັດທະນາແຜນສ້າງຂີດຄວາມສາມາດຂອງພະນັກງານວິຊາການ ແລະ ຜູ້ບໍລິຫານການສຶກສາ ແລະ ກິລາ ໃນທຸກລະດັບ;

14.6. ມອບໃຫ້ສະຖາບັນພັດທະນາການບໍລິຫານການສຶກສາ ແລະ ກິລາ ສົມທົບກັບກົມວິຊາການທີ່ກ່ຽວຂ້ອງ ສືບຕໍ່ປັບປຸງຫຼັກສູດຝຶກອົບຮົມທີ່ມີໃນປັດຈຸບັນ ໂດຍເນັ້ນໃສ່ພາກຕົວຈິງເປັນຫຼັກ ແລະ ສ້າງຫຼັກສູດໃໝ່ທີ່ເຫັນວ່າມີຄວາມຈໍາເປັນ ໃຫ້ສອດຄ່ອງກັບຕົວຈິງ ພາຍຫຼັງຝຶກອົບຮົມໄປແລ້ວ ໃຫ້ສາມາດປະຕິບັດໄດ້, ພ້ອມທັງສືບຕໍ່ດໍາເນີນການການຝຶກອົບຮົມຕາມແຜນດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

14.7. ມອບໃຫ້ຫ້ອງການກະຊວງ, ກົມແຜນການ ແລະ ຂະແໜງການຍ່ອຍທີ່ກ່ຽວຂ້ອງ ລົງເຜີຍແຜ່ ແລະ ເຊື່ອມຊຶມຜັນຂະຫຍາຍມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດ ປະຈໍາສົກຮຽນ 2019-2020 ນີ້ ໃຫ້ແກ່ບັນດາແຂວງ ແລະ ສະຖານການສຶກສາທີ່ຂຶ້ນກັບ; ພ້ອມທັງມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສືບຕໍ່ລົງເຜີຍແຜ່ໃຫ້ແກ່ເມືອງ ແລະ ໂຮງຮຽນໃຫ້ທົ່ວເຖິງ ແລະ ເລິກເຊິ່ງ. ພ້ອມດຽວກັນນັ້ນ ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງນໍາເອົາມະຕິດັ່ງກ່າວ ໄປຜັນຂະຫຍາຍໃຫ້ເປັນແຜນການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

**15. ມອບໃຫ້ກົມກວດກາ ສົມທົບກັບເຄືອຂ່າຍຕິດຕາມ ແລະ ປະເມີນຜົນໃນແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນປະຕິບັດງານປະຈໍາປີ ພ້ອມທັງ ຕິດຕາມຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈໍາສົກຮຽນ 2019-2020 ແລະ ລາຍງານໃຫ້ແກ່ການນໍາກະຊວງສຶກສາທິການ ແລະ ກິລາ ທຸກໆ 6 ເດືອນ.**

ກອງປະຊຸມໄດ້ຮັບກຽດກ່າວປິດ ໂດຍ ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໃນເວລາ 13:00 ໂມງ ຂອງວັນທີ 28 ສິງຫາ 2020.

**ລັດຖະມົນຕີ**

ນ.ແສງເດືອນ ຫຼ້າຈັນທະບູນ

ສະໜັບສະໜູນການຈັດພິມໂດຍ ສະຫະພາບເອີຣົບ

EUROPEAN UNION

mswordcoverpages.com